

# ການລຸກຂຶ້ນມາຮັບໃຊ້



ສະຖາບັນຮູຣີ





ເຫຼັ້ມ 2

# ການລຸກຂຶ້ນມາຮັບໃຊ້

ສະຖາບັນຣູອີ

**ບັນດາປື້ມທີ່ຢູ່ໃນຊຸດ:**

ທາງລຸ່ມນີ້ແມ່ນລາຍຊື່ປື້ມໃນຊຸດທີ່ມີຢູ່ໃນປະຈຸບັນ ຊຶ່ງໄດ້ຮັບການອອກແບບໂດຍສະຖາບັນຣູຮີ. ປື້ມເລົ່ານີ້ແມ່ນມີຄວາມຕັ້ງໃຈວ່າຈະຖືກນຳໃຊ້ເປັນຫຼັກສູດຫຼັກ ໃນຄວາມພະຍາຍາມທີ່ເປັນລະບົບເພື່ອຍົກສູງຄວາມອາດສາມາດຂອງຊາວໜຸ່ມ ແລະ ຜູ້ໃຫຍ່ທີ່ຮັບໃຊ້ຊຸມຊົນຂອງຕົນ. ທາງສະຖາບັນຣູຮີກຳລັງພັດທະນາຊຸດຫຼັກສູດແຕກອອກຈາກປື້ມຫົວທີສາມ ໃນຊຸດປື້ມສຳລັບການຝຶກອົບຮົມຄູສອນຊັ້ນຮຽນເດັກນ້ອຍ, ແລະ ຊຸດປື້ມອີກຊຸດໜຶ່ງຈາກປື້ມຫົວທີ 5 ເພື່ອເພີ່ມຈຳນວນຜູ້ຊຸກຍູ້ກຸ່ມເຍົາວະຊົນ. ສິ່ງເລົ່ານີ້ໄດ້ຮັບການບົ່ງຊີ້ຄືກັນຢູ່ໃນລາຍການຂ້າງລຸ່ມນີ້. ຂໍໃຫ້ຈົດຈຳໄວ້ວ່າລາຍການຂ້າງລຸ່ມອາດຈະຜ່ານການປ່ຽນແປງ ອີງຕາມປະສົບການດ້ານຄວາມກ້າວໜ້າຈາກພາກສະໜາມ, ແລະ ຫົວຂໍ້ສິ່ງໃໝ່ໆຈະໄດ້ຮັບການເພີ່ມພູນ ໃນຈຳນວນທີ່ເພີ່ມຂຶ້ນຂອງອົງປະກອບຕ່າງໆໃນຫຼັກສູດ ເຊິ່ງຢູ່ພາຍໃຕ້ການພັດທະນາທີ່ດຳເນີນໄປຮອດຂັ້ນຕອນທີ່ຫຼັກສູດດັ່ງກ່າວສາມາດສ້າງໃຫ້ມີໄວ້ຢ່າງກວ້າງຂວາງ.

| | |
|---|---|
| ປື້ມຫົວທີ 1: | ການໄຕ່ຕອງກ່ຽວກັບຊີວິດແຫ່ງຈິດວິນຍານ |
| ປື້ມຫົວທີ 2: | ການລຸກຂຶ້ນມາຮັບໃຊ້ |
| ປື້ມຫົວທີ 3: | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 1 |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 2 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 3 (ຫຼັກສູດທີເຊື່ອມໂຍງ) |
| | ການສອນຊັ້ນຮຽນເດັກນ້ອຍ, ລະດັບທີ 4 (ຫຼັກສູດທີເຊື່ອມໂຍງ) |
| ປື້ມຫົວທີ 4: | ການປະກົດຂອງພຣະສາສະດາຄູ່ |
| ປື້ມຫົວທີ 5: | ການປົດປ່ອຍພະລັງຂອງເຍົາວະຊົນ |
| | ການລິເລີ່ມແຮງບັນດານໃຈ: ຫຼັກສູດທີ່ເຊື່ອມໂຍງຂັ້ນທຳອິດຂອງປື້ມຫົວທີ 5 |
| | ການຂະຫຍາຍວົງກວ້າງ: ຫຼັກສູດທີ່ເຊື່ອມໂຍງຂັ້ນທີສອງຂອງປື້ມຫົວທີ 5 |
| ປື້ມຫົວທີ 6: | ການເຜີຍແຜ່ສາສະໜາ |
| ປື້ມຫົວທີ 7: | ການຍ່າງກ້າວໄປດ້ວຍກັນໃນເສັ້ນທາງແຫ່ງການຮັບໃຊ້ |
| ປື້ມຫົວທີ 8: | ພຣະປະຕິນຍາຂອງພຣະບາຮາອຸລລາຫ໌ |
| ປື້ມຫົວທີ 9: | ການຮັບຮູ້ມຸມມອງທາງປະຫວັດສາດ |
| ປື້ມຫົວທີ 10: | ການສ້າງຊຸມຊົນທີ່ມີຊີວິດຊີວາ |
| ປື້ມຫົວທີ 11: | ປັດໃຈທາງດ້ານວັດຖຸ |
| ປື້ມຫົວທີ 12: | (ກຳລັງຈະມາເຖິງ) |
| ປື້ມຫົວທີ 13: | ການມີສ່ວນຮ່ວມກັບພຶດຕິກຳທາງສັງຄົມ |
| ປື້ມຫົວທີ 14: | (ກຳລັງຈະມາເຖິງ) |

Copyright © 2016, 2021 by the Ruhi Foundation, Colombia
All rights reserved. Edition 2.1.2.PE published in November 2021
Printed in Laos

Originally published in Spanish as *Levantémonos a servir*
Copyright © 1987, 1996, 2020 by the Ruhi Foundation, Colombia
ISBN 978-958-52941-0-3

Permission for a limited printing of this book in Lao has been granted to the Spiritual Assembly of the Bahá'ís of Lao PDR by the Ruhi Institute.

Ruhi Institute
Cali, Colombia;
Email: instituto@ruhi.org
Website: www.ruhi.org

Spiritual Assembly of the Bahais of Lao PDR
Nonsavanh Village, Saysettha District,
Vientiane Capital, Lao PDR; Tel: +856 21 216996
Email: nsa@bahailao.org
Website: www.bahailao.org

# ສາລະບານ

ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ ........ v

ຄວາມສຸກທັນສາທີ່ໄດ້ຈາກການເຜີຍແຜ່ສາສະໜາ ........ 1

ຍົກລະດັບການສົນທະນາ ........ 19

ຫົວຂໍ້ຫຼັກໃນການສຶກສາທັມມະເລີກເຊີ່ງ ........ 45

# ຂໍ້ຄິດບາງປະການສຳລັບຜູ້ອຳນວຍຄວາມສະດວກ

ປຶ້ມເຫຼັ້ມນີ້, ເປັນເຫຼັ້ມທີສອງໃນຫຼັກສູດຫຼັກ ທີ່ຖືກນຳສະເໜີໂດຍສະຖາບັນຣູຮີ, ເປັນປຶ້ມກ່ຽວກັບແບບຄວາມສາມາດທີ່ຊ່ວຍໃຫ້ເຮົາ ປະກອບສ່ວນເຂົ້າໃນການສົນທະນາແບບມີຄວາມໝາຍ ແລະ ໃຫ້ແຮງບັນດານໃຈ. ພາກປະຕິບັດສະເພາະການຮັບໃຊ້ ທີ່ປຶ້ມເຫຼັ້ມນີ້ສຸມໃສ່ນັ້ນ ຖືກບັນລະຍາຍໄວ້ໃນພາກ ທີ 3. ໃນໂລກທີ່ແຮງຊັກຈູງອັນຊົງພະລັງ ກຳລັງຈີກຂາດເຍື່ອໃຍໃນຊຸມຊົນ, ກິດຈະວັດຂອງການໄປຢ້ຽມຢາມໝູ່ເພື່ອນ ແລະ ຂ້າງບ້ານໃນເຮືອນຂອງພວກເຂົາ ເພື່ອສົນທະນາຄົ້ນຄວ້າຫົວຂໍ້ຕ່າງໆ ທີ່ເປັນໃຈກາງຂອງຊີວິດສັງຄົມ, ຖ້າຫາກກິດຈະວັດນີ້ກາຍເປັນວັດທະນະທັມອັນພົ້ນເດັ່ນແລ້ວ, ສາມາດປິ່ນປົວຄວາມເຈັບປ່ວຍ ທີ່ມີເຫດມາຈາກຄວາມໂດດດ່ຽວອັນນັບມື້ນັບເພີ່ມຂຶ້ນ. ຄວາມສຳພັນແຫ່ງມິດຕະພາບທີ່ຖືກສ້າງຂຶ້ນ, ຈະເພີ່ມຄວາມແຂງແກ່ນ ໃນຂະບວນການສ້າງຊຸມຊົນທີ່ມີຊີວິດຊີວາ ແລະ ປອງດອງ.

ໃນແຜນການທີ່ຕໍ່ເນື່ອງ ຂອງການລົງຢ້ຽມຢາມຄົວເຮືອນ ໃນເຂດອ້ອມແອ້ມຫຼືເຂດໝູ່ບ້ານ ຈຳເປັນຕ້ອງມີການຈັດລະບຽບໃນລະດັບໜຶ່ງ, ໃນໝູ່ແກນກາງຂອງກຸ່ມເພື່ອນຜູ້ອຸທິດຕົນ ຊຶ່ງໄດ້ຮັບການຊຸກຍູ້ຈາກສະຖາບັນພາກບໍລິຫານ ແລະ ໜ່ວຍງານທີ່ກ່ຽວຂ້ອງ. ໃນການນຳພາກຸ່ມຮຽນກຸ່ມໜຶ່ງຮຽນຜ່ານປຶ້ມນີ້, ຜູ້ອຳນວຍຄວາມສະດວກຄວນຈຳໄວ້ວ່າ ຜູ້ເຂົ້າຮ່ວມກຳລັງຖືກກຽມພ້ອມ ເຂົ້າໃນຄວາມພະຍາຍາມຢ່າງຕໍ່ເນື່ອງນີ້. ການລົງຢ້ຽມຢາມທີ່ນັດໝາຍໄວ້ໃຫ້ພວກເຂົາ ເຊິ່ງເປັນສ່ວນໜຶ່ງຂອງບົດຮຽນຂອງເຂົານັ້ນ ຄວນນຳໄປສູ່ຄວາມມຸ່ງໝັ້ນປະກອບສ່ວນ ໃນຄວາມພະຍາຍາມນີ້ປີແລ້ວປີເລົ່າ, ນີ້ເປັນປັດໃຈສຳຄັນໃນຊີວິດການຮັບໃຊ້.

ກິດຈະວັດການລົງຢ້ຽມຢາມ ໂດຍມີຈຸດປະສົງຈະແຈ້ງ ເຊິ່ງແມ່ນເພື່ອການສົນທະນາຄົ້ນຄວ້າຫົວຂໍ້ຕ່າງໆທີ່ມີຄວາມສຳຄັນທາງຈິດວິນຍານແລະສັງຄົມ ເຫັນໄດ້ຊັດເຈນວ່າຊ່ວຍເສີມສ້າງວັດທະນະທັມຂອງຊຸມຊົນ. ສິ່ງທີ່ສຳຄັນບໍ່ດ້ອຍກວ່າກັນໃນແງ່ນີ້ ຄືການປຶກສາຫາລືທົ່ວໄປ ຢູ່ເຮືອນ, ບ່ອນເຮັດວຽກ, ຢູ່ໂຮງຮຽນແລະຢູ່ຕະຫຼາດ. ການນຳສະເໜີແບບແນວຄິດທາງຈິດວິນຍານ ເຂົ້າໃນການສົນທະນາແຕ່ລະວັນເປັນບາງຄັ້ງຄາວ, ເຊິ່ງຄວາມສາມາດນີ້ຍ່ອມຕ້ອງໄດ້ຮັບຄວາມສົນໃຈ. ການພັດທະນາຄວາມສາມາດນີ້ເປັນຈຸດສຸມຂອງບົດຮຽນພາກທີ 2, ແລະຕາມວິທີນີ້ຈຶ່ງປູພື້ນຖານສຳລັບການຮຽນຕໍ່ໃນພາກທີ 3.

ຖ້າຈະໃຫ້ການສົນທະນາກັບໝູ່ເພື່ອນແລະເພື່ອນບ້ານ ມີແຮງບັນດານໃຈ, ເຮົາຈະຕ້ອງສາມາດນຳຄວາມເບີກບານ ເຂົ້າໃນການພົບປະກັບພວກເຂົາ. ນີ້ແມ່ນຫົວຂໍ້ທີ່ກ່າວເຖິງໃນພາກທີ 1, "ຄວາມສຸກຫັນສາໃນການເຜີຍແຜ່ສາສະໜາ". ກິດຈະກຳການຮັບໃຊ້ທັງໝົດ ທີ່ສະຖາບັນຣູຮີແນະນຳນັ້ນລວມມີ, ການແບ່ງປັນໄຂ່ມຸກແຫ່ງພູມປັນຍາສັກສິດກັບຜູ້ອື່ນ ທີ່ເຮົາຄົ້ນພົບໃນມະຫາສະໝຸດ ແຫ່ງການເປີດເຜີຍ

ຂອງພຣະບາຮາອຸລລາຫ໌. ການຮຽນພາກທີ 1 ມີຈຸດມຸ່ງໝາຍເພື່ອເພີ່ມຄວາມຮັບຮູ້ ເຖິງຄວາມ ສຸກຫັນສາທີ່ເກີດມາຈາກການເດີນເສັ້ນທາງນີ້ໂດຍທຳມະຊາດ. ຜູ້ເຂົ້າຮ່ວມຈະໄດ້ຖືກໄຖ່ຖາມໃນຫຼາຍໆບົດຕອນ ໃຫ້ໄຕ່ຕອງເຖິງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ແລະ ເປັນພອນອັນປະເສີດເທົ່າໃດ ທີ່ໄດ້ມາແບ່ງປັນກັບຄົນອື່ນ. ພາກທີ່ 1 ສະເໜີວ່າ ຈາກກິດຈະກຳນີ້ ຈະເກີດຄວາມສຸກຫັນສາທີ່ເຮັດບາດ ກ້າວຂອງເຮົາວ່ອງໄວຂຶ້ນ ໃນເສັ້ນທາງແຫ່ງການຮັບໃຊ້. ຫາກແຕ່ວ່າ, ເຖິງແມ່ນວ່າເຮົາຈະມີຄວາມເຊື່ອຢ່າງແທ້ຈິງ ໃນສັດຈະທັມທາງຈິດວິນຍານອັນເລີກເຊິ່ງນີ້ກໍ່ຕາມ, ເຮົາກໍ່ອາດສູນເສຍຄວາມສຸກຫັນສາໃນການເຜີຍແຜ່ສາສະໜາໄດ້ ຖ້າຫາກເຮົາບໍ່ຄິດເຖິງຄຸນສົມບັດ ແລະ ທັດສະນະຄະຕິ ທີ່ເຮັດໃຫ້ການຮັບໃຊ້ພົ້ນເດັ່ນ. ເຫຼົ່ານີ້ເປັນຫົວຂໍ້ການປຶກສາຫາລື ໃນປຶ້ມເຫຼັ້ມຕໍ່ໆໄປອີກຫຼາຍເຫຼັ້ມໃນຊຸດນີ້, ແລະ ມີພຽງສອງເຖິງສາມຢ່າງເທົ່ານັ້ນ ທີ່ຈະໄດ້ກ່າວເຖິງໃນເຫຼັ້ມນີ້, ເລີ່ມຕົ້ນດ້ວຍ ການປ່ອຍວາງ ໃນຕອນທີ 7. ພຣະວັດຈະນະບາຮາຍ ທີ່ຄັດເລືອກໄວ້ຈຳນວນໜຶ່ງ ຖືກໃຊ້ເປັນພື້ນຖານຕໍ່ການໄຕ່ຕອງເຖິງຄຸນສົມບັດນີ້ (ຄຸນສົມບັດຂອງການປ່ອຍວາງ), ຊຶ່ງເປັນຄຸນສົມບັດທີ່ຂາດບໍ່ໄດ້ ຫາກເຮົາຈະບໍ່ໃຫ້ປັດໄຈພາຍນອກມາເຮັດໃຫ້ ຄວາມເບີກບານນີ້ເສົ້າໝອງ. ສິ່ງທີ່ສຳຄັນຄືຜູ້ເຂົ້າຮ່ວມ ຈະຕ້ອງບໍ່ເລີກຮຽນໄປດ້ວຍຄວາມເຂົ້າໃຈທີ່ຜິດພາດທີ່ວ່າ ການປ່ອຍວາງ ໝາຍເຖິງການຄວາມຫ່າງເຫີນ ຫຼື ຂາດການເອົາໃຈໃສ່. ເຮົາຕ້ອງພະຍາຍາມຢ່າງຕໍ່ເນື່ອງໃນການອອກແຮງຢ່າງເຂັ້ມຂຸ້ນ ແລະ ເພື່ອເພີ່ມປະສິດ ທິພາບຂອງການຮັບໃຊ້ຂອງເຮົາ ໃນຂະນະທີ່ເຮົາໃຊ້ຄວາມມຸມານະທີ່ຈະສ້າງຜົນຮັບທີ່ດີຂຶ້ນເລື້ອຍໆ. ສິ່ງນີ້ຕ້ອງການຄວາມເຂົ້າໃຈຢ່າງພຽງພໍ ກ່ຽວກັບລັກສະນະຂອງຄວາມພະຍາຍາມ, ຊຶ່ງເປັນຫົວຂໍ້ໜຶ່ງທີ່ໄດ້ພິຈາລະນາໃນຕອນທີ 8. ການເບິ່ງໂລກໃນແງ່ດີ ແລະ ຄວາມຮູ້ບຸນຄຸນ, ເປັນສອງທັດສະນະພື້ນຖານ ໃນເສັ້ນທາງຂອງການຮັບໃຊ້, ຈະໄດ້ຫາລືສັ້ນໆໃນຕອນຕໍ່ໄປ ເຊິ່ງເປັນຕອນສຸດທ້າຍ.

ພາກທີ 2, "ຍົກລະດັບການສົນທະນາ" ສຸມໃສ່ຄວາມສາມາດໃນການຍົກລະດັບການສົນທະນາທີ່ເປັນກັນເອງ ໂດຍການອ້າງເຖິງຫຼັກທັມເມື່ອມີໂອກາດທີ່ເໝາະສົມ. ປະກອບດ້ວຍຂໍ້ຄວາມສັ້ນໆຈຳນວນໜຶ່ງໃນຫຼາຍຫົວຂໍ້, ເຊິ່ງອາດບໍ່ແມ່ນພຣະວັດຈະນະໂດຍກົງ, ແຕ່ເປັນການອ້າງອີງຈາກຄຳເວົ້າຂອງ "ພຣະອັບດຸລບາຮາ" ແລະ ລວມເຖິງຄຳເວົ້າຕ່າງໆທີ່ທ່ານໄດ້ກ່າວໄວ້. ທ່ານເວົ້າເຖິງແຮງບັນດານໃຈ ແລະ ຄວາມກັງວົນຂອງຜູ້ຄົນຈາກທຸກພື້ນເພ. ຫວັງວ່າຈາກການສຶກສາຂໍ້ຄວາມດັ່ງກ່າວ, ຜູ້ເຂົ້າຮ່ວມຈະໄດ້ຮັບແຮງບັນດານໃຈຈາກລັກສະນະທີ່ "ພຣະອັບດຸບາຮາ" ໄດ້ອະທິບາຍເຖິງຫຼັກການທາງຈິດວິນຍານ ແລະ ຈະໄດ້ຮັບຄວາມຊື່ນເຕີຍໃນການເບິ່ງພຣະອັບດຸລບາຮາ ໃນຂະນະທີ່ພວກເຂົາພະຍາ ຍາມທີ່ຈະຄົ້ນພົບໄຂ່ມຸກທີ່ຢູ່ໃນມະຫາສະໝຸດຂອງການເປີດເຜີຍຂອງ ພຣະບາຮາອຸລລາຫ໌, ເຂົ້າໃຈຄວາມໝາຍ ແລະ ຜົນສະທ້ອນຕ່າງໆຈາກຄຳສອນຂອງພຣະບິດາຂອງທ່ານ ແລະ ແບ່ງປັນສິ່ງເລົ່ານີ້ກັບຜູ້ອື່ນຢ່າງມີນ້ຳໃຈ.

ເພື່ອໃຫ້ບັນລຸຈຸດມຸ່ງໝາຍຂອງພາກຮຽນນີ້, ຜູ້ເຂົ້າຮ່ວມຄວນໄດ້ຮັບໂອກາດ ໃນການອ່ານຂໍ້ຄວາມແຕ່ລະຂໍ້ຫຼາຍໆຄັ້ງ, ຈັບໃຈຄວາມໃຫ້ໄດ້ ແລ້ວຝຶກເວົ້າຈົນກວ່າພວກເຂົາຈະເຂົ້າໃຈຢ່າງເຖິງຖອງ ຈົນສາມາດບັນລະຍາຍໄດ້ຢ່າງເປັນທັມມະຊາດ. ໃນຕອນທຳອິດບາງຄົນອາດພຽງແຕ່ທ່ອງຈຳຂໍ້ຄວາມທີ່ອ່ານມາ ແລະ ເລົ່າອອກມາຕາມບົດຂຽນໃນປຶ້ມ. ນີ້ເປັນເລື່ອງທຳມະດາທີ່ເຮົາຄາດໄວ້ແລ້ວ. ເມື່ອຄວາມຮູ້ກ່ຽວກັບສາສະໜາເລິກເຊິ່ງຂຶ້ນ ແລະ ປະສົບການຂອງພວກເຂົາເພີ່ມຂຶ້ນ, ພວກເຂົາຈະສາມາດເຂົ້າເຖິງເນື້ອຫາທີ່ຫຼາກຫຼາຍຂຶ້ນ ແລະ ຮຽນຮູ້ຄຳສັບທີ່ຫຼາກຫຼາຍຍິ່ງຂຶ້ນ, ນີ້ຈະສະແດງອອກເວລາເຂົາສົນທະນາກັບຜູ້ອື່ນ. ຜູ້ອຳນວຍຄວາມສະດວກຄວນຮັບຮູ້ວ່າ, ໃນຂັ້ນຕອນນີ້, ສິ່ງທີ່ກຳລັງຊອກຫາແມ່ນສອງທົບ ນັ້ນຄື: ຄວາມສາມາດໃນການອະທິບາຍຄຳສອນໄດ້ຢ່າງບໍ່ຂ້ອງຄາ ແລະ ການປັບແນວທາງໃຫ້ສອດຄ່ອງກັບຄວາມຄິດຂອງ "ພຣະອັບດຸລບາຮາ".

ຫຼັງຈາກສະມາຊິກໃນກຸ່ມ ຮຽນຮູ້ວິທີນຳສະເໜີເນື້ອຫາຂອງແຕ່ລະບົດຄວາມ, ພວກເຂົາກໍ່ໄປເຮັດກິດຈະກຳອື່ນ ທີ່ເຂົາຈະໄດ້ຮັບການຊຸກຍູ້ ໃຫ້ເຊື່ອມໂຍງແນວຄວາມຄິດທີ່ຮຽນມາ ກັບປະເດັນຕ່າງກັບຄອບຄົວ, ໝູ່ເພື່ອນ ແລະ ຜູ້ຮ່ວມງານ. ມາຮອດນີ້, ພວກເຂົາຈະໄດ້ໃຫ້ຄິດເຖິງຫົວຂໍ້ ແລະ ຄຳຖາມບາງຢ່າງ ທີ່ຖືກຍົກຂຶ້ນມາໃນການສົນທະນາ ແລະ ຕັດສິນໃຈວ່າໂຕໄດແດ່ທີ່ເປີດໂອກາດໃຫ້ເຂົາ ນຳສະເໜີແນວຄວາມຄິດ (ທາງທັມມະທີ່ຮຽນມາ) ເຂົ້າໃນການສົນທະນາ. ສຳລັບບົດຄວາມບາງອັນ, ການກ່າວເຖິງໜຶ່ງຫຼືສອງຕົວຢ່າງ ເພື່ອສະແດງໃຫ້ເຫັນວ່າຫຼັກທັມມະ ທີ່ບັນຍັດໄວ້ໂດຍພຣະອັບດຸລບາຮາ ໃຫ້ຄວາມກະຈ່າງໃນເລື່ອງທີ່ຜູ້ຄົນທຸກທົນທຸກແທ່ງກັງວົນຢູ່. ແບບເຝິກຫັດນີ້ຈະໃຫ້ຜົນດີກວ່າຫາກວ່າ ໃນຂະນະທີ່ການສຶກສາປຶ້ມຣູຮີກຳລັງດຳເນີນຢູ່, ຜູ້ອຳນວຍຄວາມສະດວກ ສາມາດຊ່ວຍສະມາຊິກແຕ່ລະຄົນ ໃນການເລືອກບົດຄວາມໃດໜຶ່ງ ແລະ ຄົນສອງສາມຄົນ ທີ່ຈະສົນທະນາກ່ຽວກັບແນວຄວາມຄິດໃນບົດຄວາມນັ້ນ. ດ້ວຍວິທີນີ້, ຜູ້ເຂົ້າຮ່ວມສາມາດຈັດສັນເວລາໄວ້, ເມື່ອໄດ້ພົບປະກັນ, ເພື່ອແລກ ປ່ຽນກັນ ກ່ຽວກັບປະສົບການການສົນທະນາທີ່ເຂົາໄດ້ມີມາ.

ທຸກບົດຄວາມໃນພາກ, ຈະມີພຣະວັດຈະນະ ຂອງພຣະບາຮາອຸລາຫ໌ ສຳລັບການທ່ອງຈຳ. ຈຸດເນັ້ນໜັກທີ່ທາງສະຖາບັນຣູຮີ ໃຫ້ກັບການທ່ອງຈຳ, ເຊິ່ງປະກົດເຫັນມາແລ້ວໃນປຶ້ມເຫຼັ້ມທຳອິດ, ເພີ່ມຄວາມເດັ່ນຊັດຫຼາຍຂຶ້ນໃນເຫຼັ້ມທີ 2. ອາດເວົ້າໄດ້ວ່າ, ມາຮອດຕອນນີ້, ຜູ້ເຂົ້າຮ່ວມໄດ້ສຳນຶກເຖິງການໄດ້ຮັບອາຫານທາງຈິດວິນຍານ ທີ່ມາຈາກການນຳພຣະວັດຈະນະ ເຂົ້າສູ່ຈິດໃຈຢູ່ເລື້ອຍໆ. ໃນປຶ້ມເຫຼັ້ມນີ້, ພວກເຂົາຈະໄຕ່ຕອງເພີ່ມເຕີມ ເຖິງຜົນກະທົບຂອງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ທີ່ມີຕໍ່ຫົວໃຈຂອງມະນຸດ, ແລະໃນພາກທີ່ສາມ ເຊັ່ນດຽວກັນໃນພາກທີ່ສອງ, ພວກເຂົາຈະຮຽນຮູ້ ການນຳສະເໜີ ຫຼັກທັມ ແລະ ແນວຄິດທີ່ມີໃນຄຳສອນ ເຂົ້າໃນການເວົ້າລົມແລະ ອ້າງອີງບົດຄວາມພຣະວັດຈະນະໂດຍກົງຕາມຄວາມເໝາະສົມ. ເພື່ອໃຫ້ອະທິບາຍຄຳສອນໄດ້ຢ່າງຖືກຕ້ອງ, ໂດຍການມອບໃຫ້ຜູ້ອື່ນໃນຮູບແບບທີ່ບໍລິສຸດທ່ອງແທ້,

ເປັນຄວາມສາມາດທີ່ເຮົາທຸກຄົນພະຍາຍາມພັດທະນາ ໃນຂະນະທີ່ເຮົາເດີນໄປໃນເສັ້ນທາງແຫ່ງການຮັບໃຊ້. ຈຸດເລີ່ມຕົ້ນທີ່ດີເລີດ ແມ່ນການສຶກສາຄໍາອະທິບາຍ ຂອງພຣະອັບດຸລບາຮາ ແລະ ພະຍາຍາມບັນລະຍາຍອອກມາ ໃນລັກສະນະທີ່ທ່ານບັນລະຍາຍ ແມ່ນແບບຮຽນຮາກຖານຂອງພາກທີສອງ.

ຕາມທີ່ຊີ້ໃຫ້ເຫັນຂ້າງເທິງ, ພາກທີສາມທີ່ມີຊື່ວ່າ "ຫົວຂໍ້ຫຼັກໃນການສຶກສາທັມມະເລິກເຊິ່ງເພີ່ມ", ຫັນໄປເບິ່ງການຮັບໃຊ້ທີ່ໄດ້ກ່າວເຖິງໃນປຶ້ມເຫຼັ້ມນີ້ - ນັ້ນກໍ່ຄື, ການຢ້ຽມຢາມໝູ່ເພື່ອນ ແລະ ຂ້າງບ້ານ ເພື່ອຈຸດປະສົງອັນຊັດເຈນ ຂອງການເຂົ້າສົນທະນາໂອ້ລົມແລກປ່ຽນ ທີ່ສໍາຄັນຕໍ່ຊີວິດຂອງຊຸມຊົນ. ສາມປະເພດການສົນທະນາ ແມ່ນຖືກມະໂນພາບໄວ້ໃນພາກຮຽນນີ້, ແລະ ໃນແຕ່ລະປະເພດ ກໍ່ມີເນື້ອຫາແນະນໍາສະເພາະ. ປະເພດທໍາອິດ ກ່ຽວຂ້ອງກັບໝວດຫົວຂໍ້ໜຶ່ງ ເພື່ອການຄົ້ນຄວ້າ ໃນໝູ່ຜູ້ອາໃສຢູ່ໃນໝູ່ບ້ານຫຼືລະແວກບ້ານ ຕາມແຜນການການຢ້ຽມຢາມຢ່າງເປັນລະບົບ. ເຖິງແມ່ນວ່າເນື້ອຫາທີ່ສະເໜີໄວ້ ຈະສາມາດແບ່ງປັນກັບຜູ້ຄົນທີ່ສົນໃຈໄດ້ຫຼາຍວິທີກໍ່ຕາມ, ແຕ່ຄວາມຕັ້ງໃຈເດີມ ຂອງຫົວຂໍ້ເຫຼົ່ານັ້ນຍັງຕົງເປົ້າ - ເຊິ່ງແມ່ນຄວາມຕັ້ງໃຈ ໃຫ້ສະມາຊິກໃນຄອບຄົວ ມີໂອກາດໄດ້ເພີ່ມເລິກເຊິ່ງໃນຄວາມຮູ້ ກ່ຽວກັບສາສະໜາ. ສ່ວນທີ່ເຫຼືອໃນພາກນີ້ ແມ່ນເຮົາຈະໃຊ້ເວລາກັບການສົນທະນາປະເພດດັ່ງກ່າວ.

ແຕ່ເຖິງຢ່າງນັ້ນ, ກິດຈະວັດການລົງຢ້ຽມຢາມ ໄດ້ເປີດມິຕິໃໝ່ໆ ໃນຊ່ວງບໍ່ເທົ່າໃດປີທີ່ຜ່ານມາ, ໂດຍສະເພາະຢ່າງຍິ່ງ ໃນຄະນະທີ່ກຸ່ມພາກພື້ນທີ່ນ້ອຍລົງເລື້ອຍໆ, ລົງໄປເຖິງຂັ້ນບ້ານແລະລະແວກບ້ານ, ໄດ້ປາກົດເຫັນຫຼາຍຂຶ້ນຈໍານວນບຸກຄົນ ຜູ້ທີ່ສາມາດເປັນຜູ້ອໍານວຍຄວາມສະດວກ, ເປັນຜູ້ກະຕຸ້ນຊຸກຍູ້ກຸ່ມເຍົາວະຊົນ, ແລະ ເປັນຄູສອນຊັ້ນຮຽນເດັກ. ທີ່ເຫັນໄດ້ຊັດແມ່ນ, ກິດຈະວັດນີ້ ໄດ້ສະແດງໂຕໃຫ້ເຫັນ ເປັນອົງປະກອບສໍາຄັນ ບໍ່ພຽງແຕ່ເພື່ອການກະຈາຍຄວາມຮູ້ທາງສາສະໜາ, ມັນຍັງເປັນອົງປະກອບທີ່ຈໍາເປັນຕໍ່ຄວາມສໍາເລັດຂອງການເປັນໄປຂອງກິດຈະກໍາ ສໍາລັບການເພີ່ມພະລັງຈິດວິນຍານເຍົາວະຊົນ ແລະ ເພື່ອການສຶກສາທັມມະຂອງເດັກນ້ອຍ. ດັ່ງນີ້, ສິ່ງທີ່ປະຈັກເຫັນ ແມ່ນການຢ້ຽມຢາມເປັນປະຈໍາ ເປັນສິ່ງຈໍາເປັນຂອງຜູ້ຊຸກຍູ້ເຍົາວະຊົນ ແລະຄູສອນຊັ້ນຮຽນເດັກ ເພື່ອຢ້ຽມຢາມຜູ້ປົກຄອງ ໃນສອງກິດຈະກໍາ ເພື່ອປຶກສາຫາລືແນວຄວາມຄິດ ແລະ ວິທີທາງຕ່າງໆໃຫ້ເປັນຮູບເປັນຮ່າງ. ການປຶກສາຫາລືດັ່ງກ່າວ ຖືເປັນການສົນທະນາປະເພດທີສອງ, ຊຶ່ງຈະໄດ້ລົງເລິກໃນຕອນທີ 14 ແລະ 15. ເນື້ອຫາທີ່ນໍາສະເໜີໃນນີ້ບໍ່ແມ່ນໝົດເທົ່ານີ້, ເພາະຜູ້ເຂົ້າຮ່ວມຈະໄດ້ທໍາຄວາມຄຸ້ນເຄີຍ ກັບສອງກິດຈະກໍາການສຶກສານີ້ອີກ ໃນບົດຮຽນໃນອານາຄົດ. ແຕ່ເພື່ອໃຫ້ພວກເຂົາສໍານຶກເຖິງຄວາມສໍາຄັນຂອງການສົນທະນາປະເພດນີ້ ແລະ ການໄດ້ຕິດຕາມຄູສອນເດັກ ແລະ ຜູ້ຊຸກຍູ້ກຸ່ມເຍົາວະຊົນ ຕອນໄປຢ້ຽມຢາມຜູ້ປົກຄອງ ກໍ່ເປັນຜົນດີຢ່າງສູງໃນຂັ້ນຕົ້ນ.

ການສົນທະນາປະເພດທີສາມ ໃນພາກນີ້ມີຈຸດປະສົງທີ່ພິເສດຫຼາຍ. ໜຸ່ມສາວຈຳນວນຫຼວງຫຼາຍກຳລັງຊອກຫາຊ່ອງທາງເພື່ອສະແດງອອກເຖິງ ຄວາມປາຖະໜາອັນແຮງກ້າໃນການປະກອບສ່ວນສ້າງໂລກໃຫ້ດີຂຶ້ນ. ພວກເຂົາເປັນແຫຼ່ງຄວາມສາມາດອັນມະຫາສານ ເພື່ອການປ່ຽນແປງສິ່ງຄົນ ທີ່ກຳລັງລໍຄອຍ, ຫຼືຄອງຄອຍໃຫ້ເອົາໄປນຳໃຊ້. ການສົນທະນາໃນໝູ່ເພື່ອນ ພວກເຂົາໄຕ່ຕອງເຖິງໂອກາດ ແລະຄວາມຮັບຜິດຊອບ ທີ່ມີຄວາມພິເສດສະເພາະໃນຊ່ວງເວລາຂອງໄວໜຸ່ມສາວ, ດ້ວຍເຫື່ອແຮງ ແລະສັກກະຍະພາບທີ່ບໍ່ທຳມະດາ, ສາມາດນຳໄປສູ່ການປຶກສາຫາລື ກ່ຽວກັບການຮັບໃຊ້ ແລະ ກະຕຸ້ນຄວາມສົນໃຈ ໃນວຽກທີ່ກຳລັງດຳເນີນຢູ່ໃນໝູ່ບ້ານ ແລະ ລະແວກບ້ານໃນທົ່ວໂລກ. ຜູ້ຄົນຫຼວງ ຫຼາຍ, ຈະຍິນດີຕ້ອນຮັບຄຳເຊື້ອເຊີນ ໃຫ້ເຂົ້າຮ່ວມຫຼັກສູດສະຖາບັນ ເພື່ອເປັນຊ່ອງທາງໃນສ້າງຄວາມສາມາດ ໃນການໃຫ້ການສຶກສາທາງຈິດວິນຍານແກ່ຄົນລຸ້ນໃໝ່ ໃນຖານະຂອງຄູສອນຊັ້ນຮຽນເດັກ ແລະ ຜູ້ຊຸກຍູ້ກຸ່ມເຍົາວະຊົນ. ໃນຕອນທີ 9 ແລະ 10 ໄດ້ກຳນົດບາງແນວຄວາມຄິດ ທີ່ສາມາດຫາລືກັນໄດ້ກ່ຽວກັບການສົນທະນາປະເພດນີ້.

ເພື່ອເສີມສ້າງຄວາມສາມາດຕ່າງໆ ທີ່ຊ່ວຍໃຫ້ແຕ່ລະບຸກຄົນລິເລີ່ມ ແລະ ຮັກສາການສົນທະນາທີ່ມີຄວາມໝາຍໄດ້ຢ່າງຕໍ່ເນື່ອງ, ແນ່ນອນວ່າພາກຮຽນນີ້, ຈຳຕ້ອງໄປໄກກວ່າການແນະນຳຫົວຂໍ້ລວມ ແລະເນື້ອຫາທີ່ກ່ຽວຂ້ອງ. ນອກຈາກຄວາມສາມາດ ໃນການສື່ຄວາມຄິດຢ່າງຊັດເຈນແລ້ວ, ຜູ້ເຂົ້າຮ່ວມຍັງຕ້ອງພັດທະນາ ທັດສະນະຄະຕິ ແລະ ຄຸນສົມບັດທາງຈິດວິນຍານທີ່ຈຳເປັນ. ສິ່ງເລົ່ານີ້ເປັນພື້ນຖານຂອງເລື່ອງລາວທີ່ດຳເນີນໄປໃນພາກນີ້, ແຕ່ຄວາມສຳຄັນຂອງສິ່ງເລົ່ານີ້ ຕໍ່ຄວາມສາມາດດັ່ງກ່າວ ຈະຖືກອະທິບາຍຢ່າງຈະແຈ້ງໃນຕອນທີ 4, ເປັນຕອນທີ່ຜູ້ເຂົ້າຮ່ວມ ຈະນຶກເຖິງຄວາມຮູ້ສຶກ ແລະ ຄວາມຄິດປະເພດໃດ ທີ່ຄວນເຕີມໃສ່ໃນແນວຄິດຈິດໃຈ ເພື່ອການກະກຽມການລົງຢ້ຽມຢາມ ແລະ ໃນຕອນທີ 5, ພວກເຂົາຈະໄດ້ໄຕ່ຕອງ ເຖິງຄຸນສົມບັດຂອງຄວາມອ່ອນນ້ອມຖ່ອມຕົນ. ຜູ້ອຳນວຍຄວາມສະດວກ ຈະຕ້ອງກວດສອບໃຫ້ແນ່ໃຈວ່າ ບົດຕອນເລົ່ານີ້ໄດ້ຮັບຄວາມສົນໃຈຈາກຜູ້ເຂົ້າຮ່ວມຢ່າງພຽງພໍ, ເພາະວ່າເຖິງແມ່ນເຮົາຈະໄດ້ຮັບຄວາມຮູ້ຫຼາຍພຽງໃດ, ບໍ່ວ່າເຮົາຈະສາມາດສື່ຄວາມຄິດໄດ້ດີພຽງໃດ, ປະສິດທິພາບຂອງການສົນທະນາຂອງເຮົາຈະຂຶ້ນຢູ່ກັບຄຸນສົມບັດ ແລະ ທັດສະນະຄະຕິທີ່ເຮົານຳມາໃຫ້ພວກເຂົາ.

ເຮົາຄວນຮັບຮູ້ວ່າ ການຮັບໃຊ້ທີ່ອະທິບາຍໄວ້ໃນປຶ້ມຊຸດນີ້, ເຖິງແມ່ນວ່າຈະເປັນຫົວໃຈສຳຄັນຂອງການເຕີບໂຕ ແລະ ການພັດທະນາຂອງຊຸມຊົນ, ແຕ່ການຮັບໃຊ້ນີ້ ກ່ອນອື່ນໝົດເປັນຂັ້ນຕອນທີ່ຊ່ວຍຍົກລະດັບຂີດຄວາມສາມາດຂອງແຕ່ລະບຸກຄົນ ຜ່ານການສຶກສາ ແລະ ການລົງມືປະຕິບັດ. ສິ່ງທີ່ຜູ້ອຳນວຍສະດວກທຸກຄົນຄວນສຳນຶກໄດ້ ແມ່ນກິດຈະກຳຮັບໃຊ້ເລົ່ານີ້ສ້າງພື້ນຖານໃຫ້ກິດຈະກຳອື່ນ, ເພີ່ມຄວາມຊັບຊ້ອນຂຶ້ນເລື້ອຍໆຈາກເຫຼັ້ມໜຶ່ງໄປສູ່ອີກເຫຼັ້ມໜຶ່ງ. ການຮຽນຮູ້ໃນການດຳເນີນກິດຈະກຳຮັບໃຊ້ແຕ່ລະກິດຈະກຳຢ່າງມີປະສິດທິຜົນ ເຫັນໄດ້ວ່າມີຄວາມສຳຄັນຢ່າງຍິ່ງ ຕໍ່ຄວາມສາມາດທີ່ຈຳເປັນໃນການດຳເນີນກິດ

ຈະກຳຕໍ່ໄປ. ເພື່ອຮັກສາການສົນທະນາຢ່າງຕໍ່ເນື່ອງຕະຫຼອດການລົງຢ້ຽມຢາມ, ຕາມທີ່ສະເໜີໄວ້ໃນປື້ມເຫຼັ້ມນີ້, ເຫັນໄດ້ວ່າຕ້ອງມີຄວາມເອົາໃຈໃສ່ຫຼາຍກວ່າກິດຈະກຳທີ່ໄດ້ສະເໜີໄວ້ໃນເຫຼັ້ມ 1, ນັ້ນຄືການເປັນເຈົ້າພາບໃນການຈັດສວດມົນເປັນປະຈຳ, ບໍ່ວ່າຈະດ້ວຍຕົວເອງ ຫຼື ຮ່ວມກັບເພື່ອນອື່ນໆ. ແລະບໍ່ຍາກທີ່ຈະເບິ່ງເຫັນວ່າ, ຖ້າຈະດຳເນີນກິດຈະກຳຮັບໃຊ້ທີ່ຊັບຊ້ອນຫຼາຍຂຶ້ນໄປໃນຕໍ່ໜ້າໄດ້, ຜູ້ເຂົ້າຮ່ວມຈະຕ້ອງພັດທະນາຂີດຄວາມສາມາດທີ່ກ່າວເຖິງໃນນີ້.

ຕາມທີ່ໄດ້ກ່າວໄວ້ໃນບົດນຳຂອງເຫຼັ້ມ 1, ຜູ້ເຂົ້າຮ່ວມໃນຫຼັກສູດຂອງສະຖາບັນທົ່ວໂລກ ມາຈາກເບື້ອງຫຼັງທີ່ຫຼາກຫຼາຍ ແລະ, ໃນຂັ້ນຕົ້ນມີລະດັບຄວາມຄຸ້ນເຄີຍກັບຄຳສອນບາຮາຍທີ່ແຕກຕ່າງກັນ. ເມື່ອເຖິງເວລາທີ່ພວກເຂົາເລີ່ມປື້ມເຫຼັ້ມທີສອງນີ້, ພວກເຂົາແນ່ນອນວ່າໄດ້ເລີ່ມຕົ້ນໃນເສັ້ນທາງຂອງການຮັບໃຊ້ທີ່ເລີ່ມຂຶ້ນຕາມຫຼັກສູດຕ່າງໆ. ແຕ່ຄວາມແຕກຕ່າງບາງຢ່າງຍັງຄົງຢູ່. ໃນກໍລະນີຂອງຊາວໜຸ່ມ ເປັນຕົວຢ່າງ, ນອກຈາກວ່າພວກເຂົາໄດ້ຜ່ານການສຶກສາຊັ້ນຮຽນເດັກ ແລະ ກຸ່ມເຍົາວະຊົນແລ້ວ, ບົດຂໍ້ຄວາມ ແລະສາລະສຳຄັນຫຼາຍຢ່າງທີ່ນຳສະເໜີໃນປື້ມເຫຼັ້ມນີ້ຈະເປັນເລື່ອງໃໝ່ສຳລັບເຂົາ ແລະ ການຮຽນປື້ມນີ້ຈະເປັນຊ່ອງທາງ ໃຫ້ເຂົາໄດ້ເພີ່ມຄວາມຮູ້ເລິກເຊິ່ງກ່ຽວກັບສາສະໜາ. ຜູ້ອຳນວຍຄວາມສະດວກຄວນກຽມພ້ອມໃນດ້ານນີ້ ເພື່ອໃຫ້ຄວາມໂຍະຍານ ແລະ ຄວາມຄິດສ້າງສັນທີ່ຈຳເປັນ ໃນການເສີມສ້າງຄວາມເຂົ້າໃຈ ໃຫ້ກັບສະມາຊິກທຸກຄົນໃນກຸ່ມ, ໃນຂະນະດຽວກັນກໍ່ຕ້ອງແນ່ໃຈວ່າຈະບັນລຸເຖິງວັດຖຸປະສົງຫຼັກຂອງຫຼັກສູດເຊິ່ງແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມມີສ່ວນຮ່ວມໃນການສົນທະນາທີ່ມີຄວາມໝາຍ ແລະ ມີແຮງບັນດານໃຈ. ຍິ່ງໄປກວ່ານັ້ນ, ຢູ່ໃນຫຼາຍພັນທ້ອງຖິ່ນທີ່ມີການນຳໃຊ້ປື້ມນີ້, ຂະບວນການ ການສ້າງຊຸມຊົນ ທີ່ທັງສາມພາກສຸມໃສ່ປະກອບສ່ວນ ແມ່ນບໍ່ໄດ້ຢູ່ໃນລະດັບການພັດທະນາດຽວກັນ. ການນຳສິ່ງທີ່ກຳລັງຮຽນຮູ້ ໄປສູ່ການປະຕິບັດ ຈຶ່ງອາດມີຮູບຮ່າງທີ່ແຕກຕ່າງກັນລະຫວ່າງທ້ອງຖິ່ນໜຶ່ງກັບອີກທ້ອງຖິ່ນໜຶ່ງ ແລະ ນີ້ກໍ່ບົ່ງບອກເຖິງຄວາມເອົາໃຈໃສ່ ແລະ ຄວາມລະອຽດຖີ່ຖ້ວນ ເຊິ່ງຜູ້ອຳນວຍຄວາມສະດວກຈະຕ້ອງມີ ເມື່ອຕອບສະໜອງຄວາມຕ້ອງການຂອງສະມາຊິກທຸກຄົນ ໃນລະຫວ່າງການນຳພາພວກເຂົາຜ່ານແຕ່ລະໜ້າໃນປື້ມ.



# ຄວາມສຸກທັນສາທີ່ໄດ້ ຈາກການເຜີຍແຜ່ສາສະໜາ

ຈຸດປະສົງ

ເພື່ອໃຫ້ເຂົ້າໃຈວ່າ ຄວາມສຸກທັນສາໃນການເຜີຍແຜ່ສາສະໜານັ້ນແມ່ນໄດ້ມາຈາກ ທຸກໆການກະທຳໃນການແບ່ງປັນ ພຣະວັດຈະນະຂອງພຣະຜູ້ເປັນເຈົ້າກັບຄົນອື່ນ ເປັນຄວາມສຸກທີ່ໄດ້ມາໂດຍບໍ່ຂຶ້ນກັບຜົນໄດ້ຮັບໃນເວລານັ້ນ

## ຕອນທີ 1

*ການລຸກຂຶ້ນມາຮັບໃຊ້* ເປັນຫຼັກສູດທີສອງໃນລໍາດັບຂອງຫຼັກສູດທີ່ເປີດສອນໂດຍສະຖາບັນຣູຮີ ທີ່ພະຍາຍາມປະສົມປະສານການຮຽນ ແລະ ການລົງມືກະທໍາ. ເປົ້າໝາຍຄືການຊ່ວຍໃຫ້ເຈົ້າກ້າວໄປຂ້າງໜ້າ ໃນເສັ້ນທາງຂອງການຮັບໃຊ້ທີ່ເຈົ້າໄດ້ເຂົ້າມາ ໃນຂະນະທີ່ເຈົ້າພະຍາຍາມເຮັດຕາມວັດຖຸປະສົງສອງປະການນັ້ນຄື ການຕິດຕາມການເຕີບໂຕທາງຈິດວິນຍານ ແລະ ສະຕິປັນຍາຂອງເຈົ້າເອງ ແລະ ເພື່ອນໍາໄປສູ່ການປ່ຽນແປງຂອງສັງຄົມ. ຈາກການເຂົ້າຮ່ວມຫຼັກສູດທໍາອິດ, ເຈົ້າຕ້ອງຄໍານຶງຢູ່ແລ້ວວ່າເສັ້ນທາງທີ່ເຮົາກ່າວເຖິງນັ້ນ ຖືກກໍານົດໂດຍຊຸດຂອງການໃຫ້ການຮັບໃຊ້ການກະທໍາ ທີ່ເຮົາດໍາເນີນການດ້ວຍສາຍຕາຂອງເຮົາ ຈັບຈ້ອງໄປທີ່ເປົ້າໝາຍຂອງລະບຽບໂລກໃໝ່ ຕາມທີ່ຈິນຕະນາການໄວ້ໃນພຣະວັດຈະນະຂອງພຣະບາຮາອຸລລາຫ໌. ດັ່ງນັ້ນ, ສິ່ງທີ່ເຮົາເອີ້ນວ່າ: "ການຍ່າງໄປສູ່ເສັ້ນທາງແຫ່ງການຮັບໃຊ້" ສ່ວນໃຫຍ່ຈຶ່ງປະກອບດ້ວຍຄວາມພະຍາຍາມຂອງເຮົາ ທີ່ຈະປະຍຸກໃຊ້ຄໍາສອນຂອງພຣະອົງກັບຊີວິດຂອງເຮົາເອງ ແລະ ກັບຊີວິດຂອງມະນຸດຊາດ. ພຣະອົງເອງໄດ້ຊົງກ່າວເຖິງການເປີດເຜີຍຂອງພຣະອົງໃນເງື່ອນໄຂເຫຼົ່ານີ້ວ່າການເປີດເຜີຍອາດປຽບໄດ້ກັບ:

> **"ໂອ ຄົນຮັບໃຊ້ຂອງເຮົາ! ພຣະທັມສັກສິດທີ່ຖືກເປີດເຜີຍໂດຍບັນຊາຈາກສະຫວັນຂອງເຮົາປຽບເໝືອນມະຫາສະໝຸດອັນລໍ້າເລີກ, ໃນຄວາມເລິກນັ້ນໄດ້ເຊື່ອງໄຂ່ມຸກອັນລໍ້າຄ່າທີ່ສ່ອງແສງແວວວາວເປັນຈໍານວນມະຫາສານໄວ້. ເປັນໜ້າທີ່ຂອງຜູ້ສະແຫວງຫາທຸກຄົນທີ່ຈະຕ້ອງກະຕຸ້ນເຕືອນຕົນເອງ ແລະ ພາກພຽນພະຍາຍາມໄປໃຫ້ເຖິງຝັ່ງມະຫາສະໝຸດແຫ່ງນີ້, ເພື່ອວ່າເຂົາຈະໄດ້ຮັບສ່ວນແບ່ງຈາກປະໂຫຍດທີ່ໄດ້ລິຂິດໄວ້ລ່ວງໜ້າໃນສານອັນລີ້ລັບ ແລະ ປ່ຽນແປງບໍ່ໄດ້ຂອງ ພຣະຜູ້ເປັນເຈົ້າ ຕາມສ່ວນຂອງຄວາມກະຕືລືລົ້ນທີ່ສະແຫວງຫາ ແລະ ຕາມລໍາດັບຄວາມພາກພຽນທີ່ເຂົາທຸ້ມເທໃຫ້."[1]**

ໃນພາກການຮຽນຮູ້ທໍາອິດນີ້, ຄວາມຄິດຂອງເຮົາປ່ຽນເປັນຄວາມສຸກທີ່ເຕີມເຕັມຫົວໃຈຂອງເຮົາເມື່ອເຮົາຄົ້ນພົບໄຂ່ມຸກແຫ່ງປັນຍາ ທີ່ຢູ່ໃນມະຫາສະໝຸດໃນຍຸກສະໃໝ່ຂອງພຣະບາຮາອຸລາຫ໌ ແລະແບ່ງປັນໃຫ້ຜູ້ອື່ນ. ຈາກການສຶກສາເຫຼັ້ມ 1 ຂອງເຈົ້າ, ເຈົ້າໄດ້ເຫັນແລ້ວວ່າໄຂ່ມຸກແຫ່ງການນໍາທາງຈາກສະຫວັນທີ່ພົບໃນພຣະວັດຈະນະຂອງພຣະອົງນັ້ນງົດງາມພຽງໃດ. ຂໍໃຫ້ເຮົາໄຕ່ຕອງໃນບາງສ່ວນເພີ່ມເຕີມ:

> **"ດ້ວຍວາທະຂອງພຣະຜູ້ເປັນເຈົ້າປຽບດັ່ງປະທີບ ຊຶ່ງເປັນຄວາມສະຫວ່າງຂອງວັດຈະນະເຫຼົ່ານີ້: ເຈົ້າເປັນໝາກໄມ້ຂອງຕົ້ນໄມ້ດຽວກັນ ແລະ ໃບໄມ້ຂອງກິ່ງກ້ານດຽວກັນ."[2]**

"ສິ່ງທີ່ເປັນທີ່ຮັກຍິ່ງໃນສາຍຕາຂອງເຮົາຄືຄວາມຍຸຕິທັມ, ຈົ່ງຢ່າໄດ້ຫັນໜ້າໜີໄປຈາກສິ່ງນັ້ນ ຫາກເຈົ້າປາຖະໜາໃນຕົວເຮົາ ແລະ ຈົ່ງຢ່າລະເລີຍສິ່ງນັ້ນເພື່ອທີ່ເຮົາຈະໄດ້ໄວ້ວາງໃຈໃນຕົວເຈົ້າ."[3]

"ຈົ່ງກັງວົນສົນໃຈກັບຄວາມຮຽກຮ້ອງຕ້ອງການໃນຍຸກທີ່ເຈົ້າອາໄສຢູ່ນີ້ ແລະ ມຸ່ງເນັ້ນການພິຈາລະນາຂອງເຈົ້າກ່ຽວກັບຄວາມຈຳເປັນ ແລະ ຄວາມຕ້ອງການທີ່ໄດ້ກຳນົດໄວ້ແລ້ວ."[4]

"ມະນຸດທຸກຄົນໄດ້ຖືກສ້າງຂຶ້ນມາເພື່ອສານຕໍ່ອາລິຍະທັມທີ່ກ້າວໜ້າຕະຫຼອດການ."[5]

"ໂລກໄດ້ໝູນຜ່ານໄປ ແລະ ສິ່ງທີ່ເປັນນິລັນດອນຄືຄວາມຮັກຂອງພຣະຜູ້ເປັນເຈົ້າ."[6]

"ເຈົ້າຄືຕະກຽງຂອງເຮົາ ແລະ ແສງຂອງເຮົາຢູ່ໃນຕົວເຈົ້າ. ຈົ່ງສ່ອງລັດສະໝີຂອງເຈົ້າຈາກຕະກຽງ ແລະ ຢ່າໄດ້ສະແຫວງຫາຜູ້ໃດນອກຈາກເຮົາ. ເພາະວ່າເຮົາສ້າງເຈົ້າຂຶ້ນມາຢ່າງອຸດົມສົມບູນ ແລະ ມອບສິດພິເສດໃຫ້ແກ່ເຈົ້າຢ່າງຫຼວງຫຼາຍ."[7]

## ຕອນທີ 2

ໃນການເລີ່ມຕົ້ນການພິຈາລະນາຂອງເຈົ້າກ່ຽວກັບຫົວຂໍ້ຫຼັກຂອງພາກນີ້, ຂໍໃຫ້ອ່ານພຣະວັດ ຈະນະຂໍ້ທຳອິດທີ່ກ່າວເຖິງໃນຕອນກ່ອນໜ້າ ແລະ ຈົ່ງເຮັດແບບຝຶກຫັດຕໍ່ໄປນີ້:

1. ຈົ່ງເຕີມຄຳລົງໃນຊ່ອງວ່າງຂ້າງລຸ່ມນີ້:
   ກ. ແມ່ນເປັນໜ້າທີ່ຂອງຜູ້ສະແຫວງຫາທຸກຄົນທີ່ຈະຕ້ອງ ____________________ ຕົວເອງ ແລະ ______________________ ໄປໃຫ້ເຖິງ _________ ຂອງມະຫາສະໝຸດແຫ່ງນີ້.
   ຂ. ເຮົາຄວນຈະພຽນພະຍາຍາມໄປໃຫ້ເຖິງຝັ່ງຂອງມະຫາສະໝຸດແຫ່ງການເປີດເຜີຍພຣະທັມຂອງພຣະບາຮາອຸລລາຫ໌ ເພື່ອວ່າເຮົາຈະໄດ້ຮັບ ________________ ຈາກ ____________________________ທີ່ໄດ້ລິຂິດໄວ້ລ່ວງໜ້າໃນສານອັນລີ້ລັບ ແລະ ປ່ຽນແປງບໍ່ໄດ້ຂອງພຣະຜູ້ເປັນເຈົ້າຕາມ ____________________________ ທີ່ຈະສະແຫວງຫາ ແລະ ຕາມລຳດັບ ___________________________ທີ່ເຂົາຫຸ້ມເທໃຫ້.
   ຄ. ຜົນປະໂຫຍດທີ່ເຮົາໄດ້ຮັບຈາກມະຫາສະໝຸດແຫ່ງຍຸກສະໄໝຂອງພຣະບາຮາອຸລລາຫ໌ ຈະໄດ້ຮັບສ່ວນແບ່ງຈາກປະໂຫຍດ ______________________________________________

2. "ການກະຕຸ້ນເຕືອນຕົນເອງ" ໝາຍຄວາມວ່າແນວໃດ?

______________________________________________

______________________________________________

3. "ຄວາມພະຍາຍາມໃຫ້ໄດ້ມາໃນບາງສິ່ງບາງຢ່າງ" ໝາຍຄວາມວ່າແນວໃດ?

______________________________________________

______________________________________________

4. ຜູ້ສະແຫວງຫາທຸກຄົນຄວນພະຍາຍາມໄປໃຫ້ເຖິງສິ່ງໃດ?

______________________________________________

______________________________________________

5. ການທີ່ "ສິ່ງໜຶ່ງຢູ່ໃນພາກສ່ວນຂອງອີກສິ່ງໜຶ່ງ" ໝາຍຄວາມວ່າແນວໃດ?

______________________________________________

______________________________________________

6. ພຣະບາຮາອຸລລາຫ໌ຊົງກ່າວວ່າ: ເຮົາຄວນຈະໄດ້ຮັບປະໂຫຍດຈາກມະຫາສະໝຸດແຫ່ງການເປີດເຜີຍພຣະທັມຂອງພຣະອົງຕາມພາກສ່ວນແຫ່ງຄວາມພະຍາຍາມທີ່ເຮົາທຸ້ມເທໃຫ້.

ກ. ຈົ່ງຍົກຕົວຢ່າງເຖິງຄວາມພຽນພະຍາຍາມທີ່ເຮົາທຸ້ມເທເພື່ອໃຫ້ໄດ້ມາຊຶ່ງປະໂຫຍດດັ່ງກ່າວ:

______________________________________________

______________________________________________

______________________________________________

______________________________________________

______________________________________________

ຂ. ຈົ່ງຍົກຕົວຢ່າງເຖິງປະໂຫຍດທີ່ເຮົາຈະໄດ້ຮັບຈາກຄວາມພຽນພະຍາຍາມຂອງເຮົາ:

______________________________________________

______________________________________________

______________________________________________

______________________________________________

______________________________________________

## ຕອນທີ 3

ເມື່ອເຮົາຮູ້ວ່າພຣະທັມທີ່ຖືກເປີດເຜີຍໂດຍພຣະບາຮາອຸລລາຫ໌ ປຽບໄດ້ກັບມະຫາສະໝຸດທີ່ມີໄຂ່ມຸກອັນລ້ຳຄ່າເຊື່ອງຢູ່ພາຍໃຕ້ຄວາມລ້ຳເລິກ. ເຮົາແຕ່ລະຄົນຕ່າງກໍທຸ້ມເທຄວາມພະຍາຍາມຢ່າງທີ່ສຸດເພື່ອທີ່

ຈະໄດ້ຮັບປະໂຫຍດ ແລະ ເພື່ອຊ່ວຍຄົນອື່ນໄປໃຫ້ເຖິງຝັ່ງ. ແຕ່ການເດີນທາງເພື່ອໄປໃຫ້ເຖິງຝັ່ງມະຫາສະໝຸດນີ້ຈະໄກພຽງໃດ? ພຣະບາຮາອຸລລາຫ໌ຊົງກ່າວວ່າ:

> **"ໂອ ຄົນຮັບໃຊ້ຂອງເຮົາ! ຂໍພຣະຜູ້ເປັນເຈົ້າ, ພຣະຜູ້ຊົງທ່ຽງແທ້ຈິ່ງເປັນພະຍານ! ມະຫາສະໝຸດອັນຍິ່ງໃຫຍ່ລ້ຳເລີກສຸດທີ່ຈະຢັ່ງເຖິງ ແລະ ກຳລັງເໜັງຕີງຢູ່ນີ້ຢູ່ໃກ້ກັບເຈົ້າ, ຢູ່ໃກ້ຢ່າງໜ້າປະຫຼາດໃຈ. ຈົ່ງເບິ່ງມະຫາສະໝຸດນີ້ຢູ່ໃກ້ກັບເຈົ້າຫຼາຍກວ່າເສັ້ນໂລຫິດທີ່ຫຼໍ່ລ້ຽງຊີວິດຂອງເຈົ້ານັ້ນອີກ! ຫາກເຈົ້າປາດຖະໜາຈະໄປໃຫ້ເຖິງ, ເຈົ້າກໍສາມາດຈະໄປເຖິງໄດ້ພາຍໃນຊົ່ວພິບຕາດຽວ ແລະ ຮັບເອົາພຣະກະລຸນາຈາກພຣະອົງຢ່າງບໍ່ມີວັນໝົດສິ້ນ, ຮັບເອົາພຣະກະລຸນາຂອງພຣະຜູ້ເປັນເຈົ້າທີ່ຊົງປະທານມາໃຫ້ນີ້, ຮັບເອົາຂອງຂວັນອັນບໍລິສຸດນີ້, ຮັບເອົາພຣະກະລຸນາອັນຊົງພະລານຸພາບ ແລະ ຄວາມຮຸ່ງເຮືອງທີ່ສຸດ ທີ່ບໍ່ສາມາດຫາຄຳເວົ້າອື່ນໃດມາບັນຍາຍໄດ້."[8]**

1. ວະລີທີ່ວ່າ "ມະຫາສະໝຸດອັນຍິ່ງໃຫຍ່ລ້ຳເລີກສຸດທີ່ຈະຢັ່ງໄດ້ ແລະ ກຳລັງເໜັງຕີງຢູ່" ໝາຍເຖິງຫຍັງ?

   ________________________________________

   ________________________________________

2. ມະຫາສະໝຸດນີ້ຢູ່ໃກ້ກັບເຮົາພຽງໃດ?

   ________________________________________

   ________________________________________

3. ເຮົາສາມາດຈະໄປໃກ້ມະຫາສະໝຸດນີ້ໄດ້ໄວປານໃດ?

   ________________________________________

   ________________________________________

4. ຈົ່ງເຕີມຄຳລົງໃນຊ່ອງວ່າງຂອງປະໂຫຍກຕໍ່ໄປນີ້ໃຫ້ສົມບູນ:

   ກ. ມະຫາສະໝຸດອັນຍິ່ງໃຫຍ່ແຫ່ງການເປີດເຜີຍພຣະທັມຂອງພຣະບາຮາອຸລລາຫ໌ ຢູ່ໃກ້ກັບເຮົາໃກ້ຢ່າງໜ້າ ____________________________

   ຂ. ມະຫາສະໝຸດແຫ່ງການເປີດເຜີຍພຣະທັມຂອງພຣະບາຮາອຸລລາຫ໌ຢູ່ _________ກັບເຈົ້າຫຼາຍກວ່າເສັ້ນໂລຫິດທີ່ຫຼໍ່ລ້ຽງຊີວິດຂອງເຈົ້າ.

   ຄ. ພາຍໃນ __________________ຖ້າພຽງແຕ່ເຮົາປາດຖະໜາເຮົາກໍສາມາດຈະ ______________ ແລະຮັບ ______________________________

   ງ. ພາຍໃນຊົ່ວພິບຕາດຽວຖ້າພຽງແຕ່ເຮົາ ________________________ ໄປເຖິງ ແລະ ຮັບເອົາພຣະກະລຸນາຈາກພຣະອົງຢ່າງບໍ່ມີວັນໝົດສິ້ນ.

## ຕອນທີ 4

ຫຼັງຈາກທີ່ເຮົາຍອມຮັບຄວາມຍິ່ງໃຫຍ່ຂອງພຣະບາຮາອຸລລາຫ໌ ແລະ ຮູ້ແຈ້ງເຖິງຄວາມໃກ້ຊິດຂອງເຮົາກັບມະຫາສະໝຸດແຫ່ງການເຜີຍພຣະທັມ ທີ່ມີໄຂ່ມຸກອັນລ້ຳຄ່າສຸດຈະປະມານໄດ້ຢູ່ໃນມະຫາສະໝຸດນັ້ນແລ້ວ, ພວກເຮົາກໍໄດ້ເພີ່ມພະລັງໃຫ້ແກ່ຈິດວິນຍານຂອງເຮົາດ້ວຍແຮງສັດທາ ແລະ ເຮົາແບ່ງປັນໄຂ່ມຸກແຫ່ງການນຳທາງສະຫວັນນັ້ນແກ່ຜູ້ອື່ນ, ໄຂ່ມຸກທີ່ເຮົາຄົ້ນພົບຢ່າງຕໍ່ເນື່ອງດ້ວຍການສຶກສາ, ສູດອະທິດຖານ ແລະ ທຳສະມາທິ. ໃນການປະຕິບັດດັ່ງກ່າວແມ່ນໄດ້ໃຊ້ອຳນາດແຫ່ງພຣະວັດ ຈະນະທີ່ມາຈາກພຣະອົງ. ດ້ວຍເຫດນັ້ນ, ຈຶ່ງເປັນສິ່ງສຳຄັນທີ່ເຮົາຈະຕ້ອງຕັ້ງສະມາທິກ່ຽວກັບພະລັງ ອຳນາດຂອງພຣະຜູ້ເປັນເຈົ້າ ແລະ ຜົນຂອງພະລັງນັ້ນທີ່ມີຕໍ່ຫົວໃຈຂອງມະນຸດ. ພຣະທັມຂອງພຣະບາຮາອຸລລາຫ໌ທີ່ຕັດຕອນມານີ້ ຈະຊ່ວຍໃຫ້ເຮົາມີຄວາມຊາບຊຶ້ງກັບພະລັງອຳນາດອັນຍິ່ງໃຫຍ່ນັ້ນ:

> **"ໂອ ຜູ້ທີ່ດຳເນີນໄປໃນຫົນທາງຂອງພຣະຜູ້ເປັນເຈົ້າ! ຈົ່ງຮັບສ່ວນຂອງເຈົ້າຈາກມະຫາສະໝຸດແຫ່ງພຣະມະຫາກະລຸນາທິຄຸນຂອງພຣະອົງ, ແລະ ຈົ່ງຢ່າຍອມພາກຕົນເອງອອກຈາກສິ່ງຕ່າງໆທີ່ເຊື່ອງຊ້ອນຢູ່ໃນຄວາມລ້ຳເລີກນັ້ນ. ຈົ່ງເປັນໜຶ່ງໃນບັນດາ ຜູ້ທີ່ມີສ່ວນໄດ້ຮັບສົມບັດຈາກມະຫາສະໝຸດນັ້ນ. ນ້ຳຈາກມະຫາສະໝຸດນີ້ພຽງແຕ່ເທົ່າຢອດນ້ຳໝອກ ຫາກກະຈາຍໄປທົ່ວສະຫວັນ ແລະ ແຜ່ນດິນ, ກໍພຽງພໍທີ່ຈະອຳນວຍຄວາມອຸດົມແກ່ສິ່ງເຫຼົ່ານັ້ນ ດ້ວຍພຣະກະລຸນາຂອງພຣະຜູ້ເປັນເຈົ້າ , ພຣະຜູ້ຊົງອຳນາດ, ພຣະຜູ້ຊົງຕັດສະຮູ້, ພຣະຜູ້ຊົງປີຊາຍານ. ດ້ວຍມືທີ່ສະຫຼະແລ້ວຊຶ່ງທຸກສິ່ງທຸກຢ່າງທາງໂລກ, ຈົ່ງຕັກນ້ຳທີ່ປະສິດປະສາດຊີວິດຈາກມະຫາສະໝຸດແຫ່ງນັ້ນແລ້ວພົມນ້ຳໃສ່ສັບພະສິ່ງທັງປວງ, ເພື່ອວ່າສິ່ງເຫຼົ່ານັ້ນຈະຖືກຊຳລະລ້າງຈາກຄວາມຈຳກັດທີ່ມະນຸດສ້າງຂຶ້ນ ແລະ ຈະໄດ້ເຂົ້າໃກ້ບັນລັງອັນຊົງອຳນາດຂອງພຣະຜູ້ເປັນເຈົ້າ, ກໍຄືພຣະຣາຊະຖານອັນສັກສິດ ແລະ ສ່ອງປະກາຍແສງຮຸ່ງເຫຼື້ອມ."[9]**

## ຕອນທີ 5

ເມື່ອເຮົາກ້າວຜ່ານຫຼັກສູດຂອງສະຖາບັນການສຶກສາ ແລະ ການດຳເນີນການຕາມທີ່ຕ້ອງການ, ຄວາມສາມາດໃນການຮັບໃຊ້ຂອງເຮົາຈະເພີ່ມຂຶ້ນ ແລະ ເຮົາຈະສາມາດເຮັດໜ້າທີ່ໃນການຮັບໃຊ້ທີ່ນຳຄວາມສຸກອັນຍິ່ງໃຫຍ່ມາສູ່ຫົວໃຈຂອງເຮົາ ແລະ ຊ່ວຍໃຫ້ເຮົາບັນລຸຈຸດມຸ່ງໝາຍສອງປະການ-ເຮັດໜ້າທີ່ຕ່າງໆ ເຊັ່ນ ການສອນຊັ້ນຮຽນສຳລັບການສຶກສາທາງຈິດວິນຍານຂອງເດັກ, ການໃຫ້ຊາວໜຸ່ມລຸ້ນເຍົາໄວມີສ່ວນຮ່ວມໃນໂຄງການເສີມພະລັງທາງຈິດວິນຍານ ແລະ ຊ່ວຍກຸ່ມເພື່ອນໆສຶກສາປຶ້ມລຳດັບຂອງຫຼັກສູດ. ຕະຫຼອດການເດີນທາງນີ້, ພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ຊຶ່ງເຮົາຈະແບ່ງປັນກັບຜູ້ອື່ນທັງເດັກນ້ອຍ

ແລະ ຜູ້ໃຫຍ່ ຈະເປັນແຫຼ່ງທີ່ມາຂອງແຮງບັນດານໃຈຢ່າງຕໍ່ເນື່ອງຂອງເຮົາ. ດັ່ງນັ້ນ ຈຶ່ງເປັນເລື່ອງທີ່ເໝາະສົມເທົ່ານັ້ນທີ່ເຮົາຄວນໄຕ່ຕອງເລື້ອຍໆກ່ຽວກັບພະລັງ ແລະ ຜົນກະທົບຂອງພຣະວັດຈະນະຕໍ່ຫົວໃຈຂອງມະນຸດ, ໃນພຣະວັດຈະນະຕໍ່ໄປນີ້ພຣະບາຮາອຸລລາຫ໌ໄດ້ຊົງກ່າວເຖິງພະລັງນີ້:

> **"ພຣະວັດຈະນະຂອງພຣະຜູ້ເປັນເຈົ້າອາດປຽບໄດ້ກັບເບ້ຍໄມ້ ທີ່ມີຮາກຢັ່ງເລິກລົງໄປໃນຫົວໃຈຂອງມະນຸດ. ເປັນໜ້າທີ່ຂອງເຈົ້າທີ່ຈະຕ້ອງຮັກສາດູແລ ການຈະເລີນເຕີບໂຕດ້ວຍນ້ຳແຫ່ງຊີວິດຂອງພູມປັນຍາ, ຖ້ອຍຄຳອັນປະກອບດ້ວຍຄວາມສັດທາ ແລະ ຄວາມສັກສິດ, ເພື່ອວ່າຮາກໄມ້ນັ້ນຈະຍຶດແໜ້ນ ແລະ ກິ່ງກ້ານສາຂາຈະຂະຫຍາຍຂຶ້ນສູງຫຼຽມສະຫວັນ ແລະ ພົບທີ່ຢູ່ ເໜືອກວ່ານັ້ນ."**[10]

1. ພຣະວັດຈະນະຂອງພຣະຜູ້ເປັນເຈົ້າປຽບທຽບໄດ້ຄືກັບຫຍັງ? ______________________

   ______________________________________________

2. ຮາກຂອງຕົ້ນໄມ້ແຫ່ງພຣະວັດຈະນະຂອງພຣະຜູ້ເປັນເຈົ້າຢັ່ງຮາກເລິກຢູ່ບ່ອນໃດ? ________

   ______________________________________________

3. ເຮົາຄວນຈະດູແລຮັກສາການຈະເລີນເຕີບໂຕຂອງຕົ້ນໄມ້ນັ້ນໄດ້ຢ່າງໃດ? ______________

   ______________________________________________

4. ຕົ້ນໄມ້ຕົ້ນນີ້ສາມາດສູງໄດ້ຮອດໃສ? ______________________________________

   ______________________________________________

5. ຈົ່ງອະທິບາຍເຖິງປະໂຫຍກທີ່ວ່າ ເປັນຫຍັງການແບ່ງປັນພຣະວັດຈະນະຂອງພຣະຜູ້ເປັນເຈົ້າຈຶ່ງມີຄວາມສຳຄັນຢ່າງຍິ່ງ.

   ______________________________________________

   ______________________________________________

   ______________________________________________

   ______________________________________________

   ______________________________________________

   ______________________________________________

## ຕອນທີ 6

ໃຫ້ເຮົານຶກເຖິງກິດຈະກຳຕ່າງໆທີ່ເຮົາກະທຳໃນຊີວິດປະຈຳວັນ. ເຮົາບຳລຸງຮ່າງກາຍ, ເຮົາສຶກສາເພື່ອຮັບຄວາມຮູ້ໃໝ່ ແລະ ເພື່ອຂະຫຍາຍຂີດຄວາມສາມາດທາງຈິດວິນຍານຂອງເຮົາ. ເຮົາເຮັດວຽກ

ແລະ ພັດທະນາທັກສະທີ່ເຮັດໃຫ້ເຮົາສາມາດດຳເນີນຊີວິດໃນຖານະສະມາຊິກທີ່ມີປະສິດທິພາບຂອງສັງຄົມ. ເຮົາມີສ່ວນຮ່ວມໃນກິລາ ແລະ ກິດຈະກຳສ້າງສັນຢ່າງຫຼວງຫຼາຍເຊັ່ນນີ້ ລ້ວນມີຄວາມສຳຄັນຕໍ່ຄວາມກ້າວໜ້າທາງສະຕິປັນຍາ ແລະ ຄວາມເປັນຢູ່ທີ່ດີທາງວັດຖຸ, ຖືວ່າເປັນຊ່ວງເວລາສ່ວນໃຫຍ່ຂອງເຮົາ. ແຕ່ວ່າໃນແຕ່ລະວັນມີຊ່ວງເວລາທີ່ພິເສດເຫຼົ່ານັ້ນ ໄດ້ນຳໃຊ້ກັບກິດຈະກຳທາງຈິດວິນຍານ, ເມື່ອເຮົາມີສ່ວນຮ່ວມໃນການອະທິຖານ, ເມື່ອເຮົາຮຽນຮູ້ເລິກເຊິ່ງຂຶ້ນຕາມລຳພັງ ຫຼື ຮ່ວມກັບເພື່ອນໆ, ຄວາມຮູ້ກ່ຽວກັບຄຳສອນຂອງພຣະຜູ້ເປັນເຈົ້າ ຫຼື ໃນຍາມທີ່ຮຽນຮູ້ດ້ວຍວິທີໃດໜຶ່ງຈາກຈຳນວນທີ່ຫຼວງຫຼາຍ, ເຮົາຊ່ວຍຄົນອ້ອມຂ້າງໃຫ້ຄົ້ນພົບໄຂ່ມຸກທີ່ເຊື່ອງຊ້ອນຢູ່ໃນມະຫາສະໝຸດແຫ່ງການເປີດເຜີຍຂອງພຣະບາຮາອຸລລາຫ໌. ຊ່ວງເວລາເຫຼົ່ານີ້ມີຄ່າເກີນກວ່າຈະວັດແທກໄດ້ແມ່ນບໍ່? ຈະມີຄວາມສຸກໃດທີ່ຍິ່ງໃຫຍ່ໄປກວ່າການໄດ້ຮັບພອນຈາກສະຫວັນເຫຼົ່ານີ້ບໍ່?

ເຮົາຄວນຈຳໄວ້ສະເໝີວ່າ ພຣະອັບດຸລບາຮາ ສະໜັບສະໜູນໃຫ້ເຮົາອຸທິດຕົນເອງ ເພື່ອຍົກລະດັບມະນຸດຊາດຢ່າງໃດ:

> **"ເຮົາທຸກຄົນຮ່ວມເປັນນ້ຳໜຶ່ງໃຈດຽວກັນໃນຈຸດປະສົງອັນສັກສິດ, ບໍ່ມີແຮງຈູງໃຈທາງວັດຖຸເປັນຂອງເຮົາ ແລະ ຄວາມປາຖະໜາອັນສູງສຸດຂອງເຮົາຄືການເຜີຍແຜ່ຄວາມຮັກຂອງພຣະຜູ້ເປັນເຈົ້າໄປທົ່ວໂລກ!"**[11]

ສົມມຸດວ່າເຈົ້າມີໂອກາດທີ່ຈະແບ່ງປັນພຣະວັດຈະນະຈາກພາກທີ 1 ທີ່ເຈົ້າຈົດຈຳໃຫ້ກັບເພື່ອນຂອງເຈົ້າ. ຄວາມສຸກທີ່ເຈົ້າຮູ້ສຶກໃນໃຈແມ່ນໄດ້ມາແຕ່ໃສ? ໂດຍປົກກະຕິເຈົ້າຫວັງວ່າເພື່ອນຂອງເຈົ້າຈະໄດ້ຮັບການຍົກລະດັບຂຶ້ນຈາກພຣະວັດຈະນະຂອງ ພຣະບາຮາອຸລລາຫ໌. ແຕ່ຖ້າຫາກເຂົາບໍ່ໄດ້ສະແດງອອກເຖິງຄວາມກະຕືລືລົ້ນດັ່ງທີ່ເຈົ້າຄາດຫວັງໄວ້, ຄວາມສຸກໃນໃຈຂອງເຈົ້າຈະຫາຍໄປຫຼືບໍ່? ເປັນຫຍັງຈຶ່ງບໍ່ຫາຍໄປ?

________________________________________

________________________________________

________________________________________

________________________________________

________________________________

## ຕອນທີ 7

ເມື່ອເຮົາຄຳນຶງວ່າ ທຸກສິ່ງທີ່ເຮົາກະທຳໃນຊີວິດ ຂະນະທີ່ເຮົາໃຊ້ເວລາໃນການແບ່ງປັນພຣະວັດຈະນະຂອງພຣະຜູ້ເປັນເຈົ້າກັບຄົນອື່ນແມ່ນເຮົາໄດ້ຮັບພອນອັນພິເສດ, ເຮົາມາເຖິງຂໍ້ສະຫຼຸບທີ່ສຳຄັນທີ່ສຸດນັ້ນ ຄືຄວາມສຸກທີ່ເຮົາໄດ້ຮັບຈາການຮັບໃຊ້ຊຶ່ງແມ່ນຢູ່ໃນຕົວຂອງເຮົາ. ແນ່ນອນທີ່ສຸດ, ເຮົາຫວັງວ່າການຮັບໃຊ້ຂອງເຮົາຈະໃຫ້ຜົນໄດ້ຮັບທີ່ມີຄ່າ, ແຕ່ຖ້າເຮົາຢຶດຕິດກັບຜົນໄດ້ຮັບຫຼາຍເກີນໄປ, ຫາກເຮົາໄດ້ຮັບຜົນກະທົບຈາກການສັນລະເສີນ ຫຼື ການຕິຊົມຫຼາຍເກີນໄປ, ເຮົາຈະສູນເສຍຄວາມສຸກໃນການສອນ. ສິ່ງທີ່ຄວນສ້າງແຮງບັນດານໃຈໃຫ້ເຮົາຮັບໃຊ້ຄື ຄວາມຮັກຂອງພຣະຜູ້ເປັນເຈົ້າບໍ່ແມ່ນຄວາມປາດຖະໜາທີ່ຈະປະສົບຄວາມສຳເລັດ, ຮັບປະໂຫຍດ ຫຼື ໄດ້ຮັບການຍອມຮັບ. ການປ່ອຍວາງສິ່ງຕ່າງໆທັງໝົດນີ້ເປັນສິ່ງຈຳເປັນ ໃນການຮັບໃຊ້ຢ່າງສຸກທັນສາ. ການສຶກສາໃນພຣະວັດຈະນະຕໍ່ໄປນີ້ຈະຊ່ວຍໃຫ້ເຈົ້າໄຕ່ຕອງຫົວຂໍ້ນີ້:

> "ໂອ ມະນຸດຜູ້ມີສອງຕາ! ຈົ່ງປິດຕາເບື້ອງໜຶ່ງ ແລະ ເປີດຕາອີກເບື້ອງໜຶ່ງ. ຈົ່ງປິດຕາເບື້ອງທີ່ເບິ່ງໂລກ ແລະ ທຸກສັບພະສິ່ງໃນໂລກ ແລະ ຈົ່ງເປີດຕາເບື້ອງທີ່ເບິ່ງຄວາມງາມອັນບໍລິສຸດຂອງພຣະຜູ້ເປັນທີ່ຮັກຍິ່ງ."[12]

> "ໂອ ສະຫາຍ! ຈົ່ງຢ່າໄດ້ປະຖິ້ມຄວາມງາມນິລັນດອນ ເພື່ອຄວາມງາມທີ່ຈະຕ້ອງສູນສິ້ນໄປ ຈົ່ງຕັດຄວາມສະເໜ່ຫາຈາກໂລກແຫ່ງທຸລີນັ້ນເສຍ."[13]

> "ໂອ ບຸດແຫ່ງວາທະ! ຈົ່ງຫັນໜ້າມາຫາເຮົາ ແລະ ສະຫຼະຈາກທຸກສິ່ງນອກຈາກເຮົາ; ເພາະອານາຈັກຂອງເຮົານັ້ນຍືນຍົງ ແລະ ບໍ່ຮູ້ສິ້ນ. ຫາກເຈົ້າສະແຫວງຫາສິ່ງອື່ນໃດນອກຈາກເຮົາແລ້ວ , ເຖິງແມ່ນວ່າຄົ້ນຫາທົ່ວຈັກກະວານໄປຕະຫຼອດການກໍໄຮ້ປະໂຫຍດ."[14]

> "ໂອ ຄົນແປກໜ້າທີ່ໄດ້ມາເປັນເພື່ອນ! ທຽນໃນຫົວໃຈຂອງເຈົ້າຖືກໄຕ້ໃຫ້ສະຫວ່າງຂຶ້ນດ້ວຍ ພຣະຫັດອັນຊົງອານຸພາບຂອງເຮົາ, ຈົ່ງຢ່າໃຫ້ທຽນນັ້ນດັບມອດດ້ວຍອາຍຸແຫ່ງອັດຕາ ແລະ ກິເລດ. ຢາທີ່ຮັກສາໂລກໄພທັງໝົດຂອງເຈົ້າຄືການລະນຶກເຖິງເຮົາ, ຈົ່ງຢ່າລືມສິ່ງນີ້. ຈົ່ງໃຫ້ຄວາມຮັກຂອງເຮົາເປັນສົມບັດອັນລ້ຳຄ່າຂອງເຈົ້າ."[15]

> "ການປະຖິ້ມກິເລດປຽບໄດ້ດັ່ງດວງອາທິດ; ບໍ່ວ່າຈະສ່ອງໄປຍັງຫົວໃຈດວງໃດກໍຈະດັບມອດໄຟແຫ່ງຄວາມໂລບ ແລະ ອັດຕາ. ຜູ້ທີ່ມີສາຍຕາສະຫວ່າງສະໄຫວດ້ວຍແສງແຫ່ງຄວາມເຂົ້າໃຈຈະ

**ທັນຕົນເອງອອກຈາກໂລກ ແລະ ສິ່ງອັນໄຮ້ສາລະໃນໂລກຢ່າງແນ່ນອນ. ຈົ່ງຢ່າຍອມໃຫ້ໂລກ ແລະ ສິ່ງອັນໄຮ້ສາລະນັ້ນເຮັດໃຫ້ເຈົ້າໂສກເສົ້າ. ຄວາມສຸກຈົ່ງບັງເກີດແກ່ຄົນຮັ່ງມີທີ່ບໍ່ເຕັມໄປດ້ວຍຄວາມອວດອົ່ງທະນົງຕົວ, ຄວາມສຸກສະບາຍຈົ່ງບັງເກີດແກ່ຄົນຍາກຈົນ ທີ່ບໍ່ມີຄວາມໂສກເສົ້າເສຍໃຈ.”**[16]

1. ການປະລະຈາກເລື່ອງທາງໂລກໝາຍຄວາມວ່າຕ້ອງຢູ່ຢ່າງສັນໂດດແມ່ນບໍ່? ________________
2. ເປັນໄປໄດ້ບໍ່ທີ່ເຮົາຈະຈາກເລື່ອງທາງໂລກ ແຕ່ເຮົາຍັງຄອບຄອງສິ່ງຕ່າງໆໄດ້ໃນເວລາດຽວກັນ?

   ________________________________________________________________
3. ບຸກຄົນທີ່ອຸທິດຕົນໃຫ້ແກ່ວຽກງານຕະຫຼອດເວລາ ໄດ້ຊື່ວ່າເປັນຜູ້ທີ່ປະລະຈາກສິ່ງຕ່າງໆໃນໂລກແມ່ນບໍ່?

   __________________________________________________________
4. ບຸກຄົນທີ່ເຮັດວຽກພຽງແຕ່ໃຫ້ພໍລ້ຽງຊີບ ແລະ ບໍ່ໃຊ້ເວລາທີ່ເຫຼືອກະທຳອັນໃດເລີຍໄດ້ຊື່ວ່າເປັນຜູ້ທີ່ປະລະທາງໂລກແລ້ວແມ່ນບໍ່? ____________________________________________
5. ບຸກຄົນຜູ້ທີ່ບໍ່ສາມາດທົນຕໍ່ຄວາມຮູ້ສຶກບໍ່ສະດວກສະບາຍທາງດ້ານວັດຖຸໃນການຮັບໃຊ້ໄດ້ຊື່ວ່າເປັນຜູ້ປະລະທາງໂລກແລ້ວແມ່ນບໍ່? ____________________________________________
6. ຍັງມີອີກຫຼາຍສິ່ງນອກເໜືອຈາກວັດຖຸທີ່ເຮົາສາມາດຈະຢຶດຕິດໄດ້. ຖ້າຫາກວ່າເຈົ້າເປັນບຸກຄົນດັ່ງຕໍ່ໄປນີ້ເຈົ້າຈະຢຶດຕິດຢູ່ກັບສິ່ງໃດ?
   - ເຈົ້າຕ້ອງການທີ່ຈະລົ້ມເລີກການຮັບໃຊ້ໃນເມື່ອບໍ່ມີຜູ້ໃດຮັບຊາບ? ____________________

     ____________________________________________________________
   - ເຈົ້າສູນເສຍຂວັນ ແລະ ກຳລັງໃຈເມື່ອມີຄົນບໍ່ຍອມຮັບຄວາມຄິດທີ່ເຈົ້ານຳສະເໜີ? _________

     ____________________________________________________________
   - ເຈົ້າເຊື່ອງຄວາມເຊື່ອຂອງເຈົ້າໄວ້ເພາະຢ້ານຄົນອື່ນປະຕິເສດ? ____________________

     ____________________________________________________________
7. ການປ່ອຍວາງບໍ່ໄດ້ໝາຍຄວາມວ່າຫ່າງເຫີນ ຫຼື ຂາດການດູແລ. ຂໍ້ໃດຕໍ່ໄປນີ້ອາດເປັນສັນຍານວ່າຄົນຜູ້ນັ້ນບໍ່ມີການປ່ອຍວາງ?
   _____ ໄດ້ມາຊຶ່ງຄວາມສຸກຈາກການໄດ້ເຫັນຜູ້ອື່ນມີຄວາມກ້າວໜ້າ.
   _____ ຢຸດການສອນຊັ້ນຮຽນເດັກເມື່ອເຫັນວ່າເດັກສອງສາມຄົນປະພຶດຕົນບໍ່ເໝາະສົມ.
   _____ ການໂອ້ອວດກ່ຽວກັບຄວາມສຳເລັດຂອງຕົນ.
   _____ ການຮຽນຢ່າງໜັກ ແລະ ຮູ້ສຶກເພິ່ງພໍໃຈກັບຄວາມກ້າວໜ້າທີ່ຕົນກະທຳ.
   _____ ການເຮັດວຽກຢ່າງໜັກເພື່ອພັດທະນາຂີດຄວາມສາມາດເພື່ອຮັບໃຊ້ຜົນປະໂຫຍດສ່ວນລວມ
   _____ ມຸ່ງໝັ້ນໃຫ້ໄດ້ມາຊຶ່ງຄວາມດີເລີດໃນການປະກອບອາຊີບ.

_____ ເພື່ອເປັນການຝຶກຝົນການອະນາໄມ ແລະ ການດູແລບ້ານໃຫ້ສະອາດຮຽບຮ້ອຍ.
_____ ການດູແລຊັບສິນຂອງຕົນເອງ.
_____ ການດູແລຄວາມເປັນຢູ່ຂອງຜູ້ອື່ນ.
_____ ທໍ້ຖອຍເມື່ອບໍ່ໄດ້ຮັບການຍ້ອງຍໍໃນຄວາມພະຍາຍາມຂອງຕົນ.

8. ດັ່ງນັ້ນ, ສິ່ງທີ່ສຳຄັນຄືໃຫ້ທຸກຄົນມີການປ່ອຍວາງ, ຂໍ້ແນະນຳໃຫ້ເຈົ້າທ່ອງຈຳພຣະວັດຈະນະທັງໝົດທີ່ຢູ່ໃນຕອນນີ້.

**ຕອນທີ 8**

ເພື່ອໃຫ້ໄດ້ຮັບຊີວິດທີ່ເບີກບານໃນການຮັບໃຊ້ມະນຸດຊາດ, ເຮົາຕ້ອງເຕັມໃຈອອກແຮງ ແລະ ໃຊ້ຄວາມພະຍາຍາມຂອງເຮົາ ຊຶ່ງອາດຕ້ອງໃຊ້ຄວາມເສຍສະຫຼະໃນລະດັບໜຶ່ງ. ເຮົາໃຊ້ຄຳວ່າ "ເສຍສະຫຼະ" ເລື້ອຍໆໃນຊີວິດປະຈຳວັນຂອງເຮົາ. ຫາກເພື່ອນກຳລັງກັບຈາກການເດີນທາງໃນຕອນເຊົ້າ,ເຮົາອາດຈະຕື່ນແຕ່ເຊົ້າເພື່ອໄປຮັບລາວ. ເຮົາອາດເວົ້າໄດ້ວ່າເຮົາໄດ້ສະຫຼະເວລານອນພຽງບໍ່ພໍເທົ່າໃດຊົ່ວໂມງ. ມີຄົນທີ່ເຮົາຮັກເກີດເຈັບເປັນ; ເຮົາລະຖິ້ມງານສັງສັນທີ່ເຮົາມັກໄປສອງສາມຊົ່ວໂມງ ເພື່ອເບິ່ງແຍງລາວ. ມີຫຼາຍຄັ້ງໃນຊີວິດທີ່ເຮົາຕ້ອງເຮັດວຽກໜັກ ແລະ ເຮົາອາດຄິດວ່າເຮົາເສຍສະຫຼະຄວາມສະດວກສະບາຍເພື່ອບັນລຸເປົ້າໝາຍ.

ເຮົາທຸກຄົນມີຄວາມປາດຖະໜາສູງສຸດທີ່ຈະຮັບໃຊ້ສາສະໜາ ໂດຍໃຫ້ທັງເວລາ ແລະ ພະລັງ ງານຂອງເຮົາ ແລະ ຄວາມເປັນໄປໄດ້ຕ່າງໆ, ຊັບພະຍາກອນດ້ານວັດຖຸບາງສ່ວນຂອງເຮົາເທົ່າທີ່ຈະເຮັດໄດ້. ເມື່ອເຮົາເຮັດແນວນັ້ນ, ເຮົາຄວນຈົດຈຳໄວ້ວ່າ, ໃນຫົນທາງແຫ່ງການຮັບໃຊ້, ເຮົາອາດຈະປະຖິ້ມສິ່ງຕ່າງໆໃນໂລກນີ້, ແຕ່ສິ່ງທີ່ເຮົາໄດ້ຮັບຄືຄວາມສຸກທີ່ແທ້ຈິງ ເມື່ອເຮົາເຕີບໂຕທາງວິນຍານ. ເຮົາຈະມີໂອກາດໄຕ່ຕອງຫຼາຍຂຶ້ນກ່ຽວກັບທຳມະຊາດຂອງການເສຍສະຫຼະທີ່ຢູ່ໃນຫຼັກສູດໃນອະນາຄົດ. ສິ່ງສຳຄັນທີ່ຕ້ອງຮັບຮູ້ຕັ້ງແຕ່ເລີ່ມຕົ້ນຄືການປະຖິ້ມສິ່ງທີ່ຕ່ຳກວ່າເພື່ອສິ່ງທີ່ສູງກວ່າ, ເຊັ່ນດຽວກັບເມັດພືດທີ່ເສຍສະຫຼະຕົນເອງເພື່ອໃຫ້ຕົ້ນໄມ້ໄດ້ເກີດ. ຄວາມເສຍສະລະເປັນສິ່ງທີ່ສະແດງເຖິງຄວາມປິຕິຍິນດີ ແລະ ຄວາມສຸກນີ້ຈະບໍ່ເປັນຂອງເຮົາ ເວັ້ນແຕ່ເຮົາເຕັມໃຈທີ່ຈະໃຊ້ຄວາມພະຍາຍາມຢ່າງສະໝ່ຳ ສະເໝີ.

ພຣະບາຮາອຸລລາຫ໌ຊົງກ່າວວ່າ:

> **"ກຳລັງແຮງເປັນສິ່ງຈຳເປັນ, ຫາກເຮົາສະແຫວງຫາພຣະອົງ; ຈຳເປັນຕ້ອງມີຄວາມກະຕືລືລົ້ນ, ຫາກເຮົາຈະດື່ມນ້ຳທິບ ແຫ່ງການກັບຄືນມາພົບກັນກັບພຣະອົງ; ແລະ ຖ້າເຮົາໄດ້ຊີມລົດຊາດຈາກຈອກນີ້ແລ້ວ, ເຮົາຈະປະຖິ້ມໂລກນີ້ໄປ."**[17]

ແລະ ພຣະອັບດຸລບາຮາແນະນຳເຮົາວ່າ:

**"...ຈົ່ງຢ່າພັກຜ່ອນ; ຈົ່ງຢ່າສະແຫວງຫາຄວາມສະຫງົບນີ້ງ, ຈົ່ງຢ່າຍຶດຕິດກັບຄວາມຫຼູຫຼາຟຸ້ມເຟືອຍຂອງໂລກທີ່ບໍ່ຖາວອນນີ້, ຈົ່ງປົດປ່ອຍຕົວເຈົ້າເອງຈາກການຍຶດຕິດທຸກສິ່ງ ແລະ ມຸ່ງໝັ້ນດ້ວຍໃຈ ແລະ ຈິດວິນຍານເພື່ອຈະໄດ້ຮັບການສະຖາປະນາຢ່າງສົມບູນໃນອານາຈັກຂອງພຣະຜູ້ເປັນເຈົ້າ. ຈົ່ງຮັບເອົາສົມບັດແຫ່ງສະຫວັນ. ນັບມື້ເຈົ້າຈະມີແສງສະຫວ່າງຫຼາຍຂຶ້ນ. ຈົ່ງເຂົ້າໃກ້ ແລະ ເຂົ້າໃກ້ປະຕູທາງເຂົ້າແຫ່ງຄວາມເປັນອັນໜຶ່ງອັນດຽວກັນ."**[18]

ເຮົາທຸກຄົນເຊື່ອວ່າ, ເພື່ອໃຫ້ບັນລຸເປົ້າໝາຍ, ເຮົາຕ້ອງໃຊ້ຄວາມພະຍາຍາມ. ແຕ່ຄວາມເຊື່ອທີ່ລຽບງ່າຍນີ້ມີຜົນໃນທາງປະຕິບັດທີ່ເຮົາບໍ່ຄວນລືມ. ປະການທຳອິດ, ຈຳເປັນຕ້ອງຈົດຈຳໄວ້ວ່າມີຄວາມສອດຄ່ອງກັນລະຫວ່າງປະລິມານພະລັງງານທີ່ຕ້ອງການ ແລະ ລະດັບຄວາມຍາກງ່າຍຂອງເປົ້າໝາຍ ຫຼື ວຽກໃນຄວາມຮັບຜິດຊອບຂອງເຮົາ. ເຮົາກຳລັງຫຼອກຕົວເອງວ່າມັນຈະສຳເລັດໄດ້ໜ້ອຍ. ແຕ່ຂະໜາດຂອງການອອກແຮງ ບໍ່ແມ່ນປັດໃຈດຽວທີ່ຕ້ອງນຳມາພິຈາລະນາ. ຈຳເປັນຕ້ອງມີຄວາມສະໝ່ຳສະເໝີ ແລະ ຄວາມພຽນພະຍາຍາມ. ຕ້ອງມີຄວາມເອົາໃຈໃສ່. ນິໄສໃນການເຮັດວຽກງານໃຫ້ສຳເລັດ, ບໍ່ເຕັ້ນໂຕນຈາກວຽກໜຶ່ງໄປຫາອີກວຽກໜຶ່ງ ແລະ ປະວຽກໄປໂດຍບໍ່ໄດ້ເຮັດໃຫ້ສຳເລັດ, ນີ້ແມ່ນສິ່ງສຳຄັນ. ຄວາມພະຍາຍາມຢ່າງບໍ່ເຕັມໃຈຈະບໍ່ເກີດຜົນ. ລອງນຶກເຖິງພາບຊັ້ນຮຽນປະຈຳອາທິດສຳລັບການສຶກສາທາງຈິດວິນຍານຂອງເດັກ. ຄູຕ້ອງອຸທິດເວລາຈຳນວນໜຶ່ງເພື່ອກະກຽມຄວາມພ້ອມສຳລັບແຕ່ລະຊັ້ນຮຽນ, ໂດຍມຸ່ງເນັ້ນຢ່າງເຕັມທີ່ຕະຫຼອດໄລຍະເວລາໃນການຊ່ວຍໃຫ້ນັກຮຽນເຂົ້າໃຈເນື້ອຫາຂອງບົດຮຽນ, ຢ້ຽມຢາມຜູ້ປົກຄອງຂອງເຍົາວະຊົນ-ຊາວໜຸ່ມເປັນປະຈຳ ແລະ ຕິດຕາມຄວາມກ້າວໜ້າຂອງແຕ່ລະຄົນແບບອາທິດຕໍ່ອາທິດ. ສະພາບຂອງຊັ້ນຮຽນທີ່ຄູຈັດກຽມເປັນຄັ້ງຄາວເຮັດໃຫ້ຫຼັກສູດຈົບໄວ ແລະ ສິ້ນສຸດໃນທັນທີທີ່ມີຄວາມອິດເມື່ອຍ ແລະ ລົ້ມເລີກໃນການອຸທິດເວລາທີ່ຈຳເປັນໃນການຄິດເຖິງເດັກແຕ່ລະຄົນ ແລະ ສົນທະນາກ່ຽວກັບຄວາມກ້າວໜ້າຂອງເຂົາກັບຜູ້ປົກຄອງແມ່ນບໍ່? ແລ້ວຈະເກີດຫຍັງຂຶ້ນຖ້າຊັ້ນຮຽນຖືກຍົກເລີກເມື່ອໃດກໍຕາມທີ່ຄູຕ້ອງການເຂົ້າຮ່ວມພາລະໜ້າທີ່ອື່ນໆ ເຊັ່ນ: ຢູ່ກັບໝູ່ເພື່ອນທີ່ມາຢາມຈາກຕ່າງເມືອງ?

ຄຳເວົ້າເລັກໆໜ້ອຍໆເຫຼົ່ານີ້ຄືການໂນ້ມນ້າວໃຈເຮົາວ່າ ເຮົາຕ້ອງໃຫ້ຄວາມສົນໃຈທັງປະລິມານ ແລະ ຄຸນນະພາບຂອງຄວາມພະຍາຍາມ, ໃນທຸກຄວາມພະຍາຍາມທີ່ເຮົາດຳເນີນການຕາມຄວາມຕ້ອງການ. ສິ່ງນີ້ຖືເປັນຄວາມຈິງບໍ່ພຽງແຕ່ສຳລັບການຮັບໃຊ້ທີ່ເຮົາມີສ່ວນຮ່ວມເທົ່ານັ້ນ; ເຮົານຳໄປໃຊ້ກັບການພັດທະນາຕົວເຮົາເອງໄດ້ຢ່າງເທົ່າທຽມກັນ. ແມ່ນແຕ່ນິໄສທາງຈິດວິນຍານທີ່ເຮົາພິຈາລະນາໃນເຫຼັ້ມທຳອິດຂອງຊຸດນີ້ - ການສູດອ້ອນວອນເປັນປະຈຳ, ການອ່ານພຣະວັດຈະນະສັກສິດທຸກວັນ, ການ

ໄຕ່ຕອງເພື່ອນໍາມາໃຊ້ໃນຊີວິດຂອງເຮົາໃຫ້ສອດຄ່ອງກັບຄໍາສອນ. ຢ່າງໃດກໍຕາມ, ເພື່ອເຂົ້າຮ່ວມການຊຸມນຸມຢ່າງບໍລິສຸດໃຈ - ຂຶ້ນຢູ່ກັບການອອກແຮງຢ່າງຕໍ່ເນື່ອງ. ຂ້າງລຸ່ມນີ້ຄືຂໍ້ຄວາມຈໍານວນໜຶ່ງທີ່ກ່ຽວຂ້ອງກັບຄວາມພະຍາຍາມ. ຂໍໃຫ້ເຈົ້າຕັດສິນໃຈວ່າຂໍ້ໃດເປັນຄວາມຈິງທີ່ຊ່ວຍໃຫ້ເຈົ້າໄຕ່ຕອງເລື່ອງນີ້:

______ ຖ້າເຈົ້າສະຫຼາດບໍ່ຈໍາເປັນຕ້ອງເຮັດວຽກໜັກ.
______ ໄປໄກເຮັດຫຍັງ; ຕ້ອງຊອກຫາທາງລັດສະເໝີ.
______ ບໍ່ມີຄວາມເຈັບປວດ ກໍຈະບໍ່ມີຜົນໄດ້ຮັບ.
______ ຝັນໃຫ້ໃຫຍ່; ຄວາມປາດຖະໜາຂອງເຈົ້າຈະເປັນຈິງ.
______ ຍິ່ງໄດ້ຮັບລາງວັນຫຼາຍເທົ່າໃດ, ຄວາມພະຍາຍາມກໍຍິ່ງຫຼາຍຂຶ້ນເທົ່ານັ້ນ.
______ ຍິ່ງພະຍາຍາມຫຼາຍເທົ່າໃດ, ລາງວັນທີ່ແສນຫອມຫວານກໍຫຼາຍຂຶ້ນເທົ່ານັ້ນ.
______ ຫາກໃນຕອນທໍາອິດເຈົ້າບໍ່ປະສົບຄວາມສໍາເລັດໃຫ້ລອງແລ້ວລອງອີກ.
______ ເປັນຫຍັງຕ້ອງເຮັດວຽກໃນເມື່ອເຈົ້າສາມາດໃຫ້ຄົນອື່ນເຮັດແທນເຈົ້າໄດ້?
______ ຫາກໃຊ້ຄວາມພະຍາຍາມຫຼາຍເກີນໄປ, ກໍບໍ່ໄດ້ໝາຍຄວາມວ່າຈະເປັນເຊັ່ນນັ້ນ.
______ ຂັ້ນຕອນນ້ອຍໆ-ເຮັດເລື້ອຍໆ ແລະ ສະໝໍ່າສະເໝີສາມາດໄປໄດ້ໄກ.
______ ບໍ່ມີຫຍັງທີ່ກຸ້ມຄ່າໄດ້ມາແບບງ່າຍໆ.
______ ຄວາມເປັນເລີດຕ້ອງການທຸ້ມເທຢ່າງສຸດຫົວໃຈ.
______ ການເດີນທາງພັນກິໂລເລີ່ມຕົ້ນດ້ວຍບາດກ້າວດຽວ.
______ ພຽງແຕ່ການຮັບຢ່າງດຽວບໍ່ດີພຽງພໍ.
______ ເຮົາບໍ່ຄວນລໍໃຫ້ສິ່ງຕ່າງໆເກີດຂຶ້ນເອງ, ເຮົາຄວນໄລ່ຕາມມັນ.
______ ຄວາມສໍາເລັດເປັນເລື່ອງຂອງໂຊກ.
______ ເຮົາຈະບໍ່ບັນລຸຈຸດປະສົງສອງດ້ານດ້ວຍເວດມົນ.
______ ເຮົາຕ້ອງຄິດບັນຊີຕົນເອງໃນແຕ່ລະວັນ.

ເຮົາຍ່າງໄປໃນຫົນທາງແຫ່ງການຮັບໃຊ້, ມຸ່ງໝັ້ນທີ່ຈະບັນລຸການເຕີບໂຕທາງຈິດວິນຍານ ແລະ ສະຕິປັນຍາຂອງເຮົາເອງ ແລະ ເພື່ອນໍາໄປສູ່ການປ່ຽນແປງຂອງສັງຄົມ, ເປັນທີ່ຊັດເຈນວ່າການສະແຫວງຫາຈຸດມຸ່ງໝາຍສອງດ້ານນີ້ ຕ້ອງໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍໃນສ່ວນຂອງເຮົາ. ພຣະບາຮາອຸລລາຫ໌ບອກເຮົາວ່າ:

> **"ພຣະຜູ້ສ້າງທີ່ຫາທີ່ປຽບບໍ່ໄດ້ ຊົງສ້າງມະນຸດທຸກຄົນຈາກສິ່ງດຽວກັນ ແລະ ຊົງຍົກຄວາມເປັນຈິງໃຫ້ເໜືອສິ່ງທີ່ມີຊີວິດອື່ນໆທີ່ພຣະອົງຊົງສ້າງ. ດັ່ງນັ້ນ, ຄວາມສໍາເລັດ ຫຼື ຄວາມລົ້ມເຫຼວ, ການໄດ້**

ຮັບ ຫຼື ການສູນເສຍ ຈຶ່ງຕ້ອງຂຶ້ນຢູ່ກັບຄວາມພະຍາຍາມຂອງມະນຸດເອງ. ຍິ່ງເຂົາພະຍາ ຍາມຫຼາຍເທົ່າໃດ, ຄວາມກ້າວໜ້າຂອງເຂົາກໍຍິ່ງຫຼາຍຂຶ້ນເທົ່ານັ້ນ."[19]

ເຈົ້າອາດປາດຖະໜາທ່ອງຈຳຂໍ້ຄວາມຂ້າງເທິງ ຖ້າຫາກເຈົ້າຍັງບໍ່ທັນໄດ້ທ່ອງຈຳເທື່ອ.

ຕອນທີ 9

ເພື່ອໃຫ້ໄດ້ຮັບຄວາມສຸກຈາກການຮັບໃຊ້, ເຮົາຄວນຮັກສາທັດສະນະຄະຕິບາງຢ່າງໃນຕົວເຮົາ. ຕົວຢ່າງເຊັ່ນ: ເຮົາຕ້ອງຂອບໃຈສຳລັບພຣະກະລຸນາຂອງການຮັບໃຊ້ ທີ່ພຣະຜູ້ເປັນເຈົ້າມອບໃຫ້ເຮົາ; ຄິດບໍ່ວ່າ ເຮົາກຳລັງເຮັດເພື່ອພຣະກະລຸນາຈາກພຣະຜູ້ເປັນເຈົ້າ ເມື່ອເຮົາຮັບໃຊ້ຕາມພຣະປະສົງຂອງ ພຣະອົງ. ເຮົາຕ້ອງຮຽນຮູ້ທີ່ຈະຫຼີກລ້ຽງການເບິ່ງໂລກໃນແງ່ຮ້າຍ ແລະ ເຂົ້າຫາຊີວິດດ້ວຍການເບິ່ງໂລກໃນແງ່ດີ. ອຸປະສັກໃນຫົນທາງແຫ່ງການຮັບໃຊ້ອາດກາຍເປັນກ້ອນຫີນໃຫ້ໄຕ່ຂຶ້ນໄປສູ່ຄວາມກ້າວໜ້າຕໍ່ໄປ, ພຽງທ່າມກາງຄວາມຍາກລຳບາກ ເຮົາເບິ່ງດ້ວຍສາຍຕາແຫ່ງສັດທາໄປສູ່ອະນາຄົດ. ຄຳເວົ້າຕໍ່ໄປນີ້ຂອງ "ພຣະອັບດຸລບາຮາ" ຊີ້ໃຫ້ເຫັນເຖິງຄວາມຫວັງ ແລະ ການເບິ່ງໂລກໃນແງ່ດີທີ່ຄວນບົ່ງບອກເຖິງຄວາມພະຍາຍາມຂອງເຮົາ:

"ໃນຕອນເລີ່ມຕົ້ນເມັດພືດນັ້ນນ້ອຍພຽງໃດ, ແຕ່ສຸດທ້າຍແລ້ວເມັດພືດກາຍເປັນຕົ້ນໄມ້ທີ່ຍິ່ງໃຫຍ່. ຈົ່ງຢ່າເບິ່ງພຽງໃນເມັດພືດ, ຂໍໃຫ້ເບິ່ງໄປທີ່ລຳຕົ້ນ, ດອກ, ໃບ ແລະ ໝາກຂອງຕົ້ນໄມ້."[20]

"ຮູ້ບໍ່ວ່າເມັດພືດນ້ອຍໆມີຄວາມສຳຄັນຍິ່ງຕໍ່ຊາວນາໂດຍແທ້ຈິງ, ດ້ວຍພຣະຫັດແຫ່ງຄວາມເມດຕາຂອງພຣະອົງ ທີ່ພຣະອົງຊົງຫວ່ານໃນທົ່ງທີ່ຊຸດໄຖຂອງພຣະຜູ້ເປັນເຈົ້າ ແລະ ຮົດນ້ຳດ້ວຍສາຍຝົນແຫ່ງການປະທານ ແລະ ລາງວັນ ແລະ ຕອນນີ້ໄດ້ຮັບການລ້ຽງດູໃນຄວາມອົບອຸ່ນ ແລະ ແສງສະຫວ່າງຂອງດວງອາທິດແຫ່ງສັດຈະທັມ."[21]

"ເມື່ອເຈົ້າເຫັນຕົ້ນໄມ້ເຕີບໂຕ ແລະ ພັດທະນາ, ຈົ່ງມີຄວາມຫວັງໃນຜົນລະປູກຂອງຕົ້ນໄມ້. ຕົ້ນໄມ້ຈະອອກດອກ ແລະ ເກີດຜົນໃນທີ່ສຸດ. ຖ້າເຈົ້າເຫັນໄມ້ແຫ້ງ ຫຼື ຕົ້ນໄມ້ເກົ່າໆ, ກໍບໍ່ຕັ້ງຄວາມຫວັງວ່າຈະເກີດຜົນຫຍັງ."[22]

"ດ້ວຍເຫດນີ້ຜູ້ທີ່ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ, ຈະຕ້ອງເຮັດວຽກໜັກ, ດ້ວຍນ້ຳແຫ່ງຄວາມມຸ່ງໝັ້ນ, ຈົ່ງເບິ່ງແຍງ ແລະ ບຳລຸງລ້ຽງ ແລະ ເສີມສ້າງຕົ້ນໄມ້ແຫ່ງຄວາມຫວັງນີ້."[23]

**"ຖ້າຈິດໃຈຫັນເຫໄປຈາກພຣະພອນ ທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້ແລ້ວ ຈະຄາດຫວັງເຖິງຄວາມສຸກໄດ້ແນວໃດ? ຫາກບໍ່ຕັ້ງຄວາມຫວັງ ແລະ ໄວ້ວາງໃຈໃນຄວາມເມດຕາຂອງພຣະຜູ້ເປັນເຈົ້າ, ຈະຫາທີ່ພັກພິງໄດ້ຈາກບ່ອນໃດ?"**[24]

ເພື່ອພິຈາລະນາໃນຂໍ້ຄວາມຂ້າງຕົ້ນໃຫ້ເຕີມປະໂຫຍກຕໍ່ໄປນີ້:

1. ໃນຕອນເລີ່ມຕົ້ນເມັດພືດມີຂະໜາດນ້ອຍພຽງໃດແຕ່ສຸດທ້າຍແລ້ວ____________________
   ________________________________________________________________
2. ເຮົາບໍ່ຄວນເບິ່ງໄປທີ່ເມັດພືດນ້ອຍໆ ແຕ່ເບິ່ງໄປທີ່______________________________
   ________________________________________________________________
3. ດັ່ງນັ້ນ, ເຮົາຄວນເອົາໃຈໃສ່, ເຖິງຄວາມສຳຄັນຂອງເມັດພືດນ້ອຍໆທີ່ພຣະຜູ້ເປັນເຈົ້າຊົງມີ, ດ້ວຍພຣະຫັດແຫ່ງພຣະເມດຕາຂອງພຣະອົງ__________________________________
   ________________________________________________________________
   ________________________________________________________________
   ____________________________________________________________
4. ເມື່ອເຮົາເຫັນຕົ້ນໄມ້ເຕີບໂຕ ແລະ ພັດທະນາ, ເຮົາຄວນຈະ________________________
   ________________________________________________________________
5. ເມື່ອເຮົາເຫັນຕົ້ນໄມ້ເຕີບໂຕ ແລະ ພັດທະນາ, ເຮົາຄວນມີຄວາມຫວັງວ່າມັນຈະ__________
   ________________________________________________________________
6. ດ້ວຍນ້ຳແຫ່ງຄວາມມຸ່ງໝັ້ນຂອງເຮົາ, ເຮົາຄວນ________________________________
   ________________________________________________________________
7. ຫາກຫົວໃຈຫັນເຫໄປຈາກພຣະພອນທີ່ພຣະຜູ້ເປັນເຈົ້າປະທານ______________________
   ___________________________________?
8. ຖ້າຫົວໃຈຫາກບໍ່ຝາກຄວາມຫວັງ ແລະ ໄວ້ວາງໃຈໃນພຣະເມດຕາຂອງພຣະຜູ້ເປັນເຈົ້າ,
   ___________________________________?

ຕອນນີ້, ເຮົາມາລອງໄຕ່ຕອງຈັກໜ້ອຍໜຶ່ງ: ເຈົ້າເຫັນດີນຳບໍ່ວ່າ ຈິດວິນຍານທີ່ສຸກຫັນສາ ແລະເຕັມໄປດ້ວຍຄວາມຫວັງຂອງເຮົາ, ລວມກັບທ່າທາງທີ່ສະແດງຄວາມຂອບໃຈຢ່າງອ່ອນນ້ອມຖ່ອມຕົນເປັນແຫຼ່ງທີ່ມາຂອງຄວາມຍິນດີສຳລັບຜູ້ອື່ນ? ແລະ ຂໍໃຫ້ເຮົາລະນຶກເຖິງສະເໝີວ່າ ການລຸກຂຶ້ນເພື່ອຮັບໃຊ້ສາສະ

ໜາ ເຮົານຳເອົາຂ່າວດີກ່ຽວກັບຮຸ່ງອາລຸນຂອງວັນໃໝ່, ວັນແຫ່ງການເຕົ້າໂຮມກັນຂອງມະນຸດຊາດ. ຂໍໃຫ້ຄຳເວົ້າຂອງພຣະບາຮາອຸລລາຫ໌ດັ່ງກ້ອງຢູ່ໃນໃຈເຮົາ:

> **“ຄວາມສຸກຈົ່ງມີແດ່ຜູ້ທີ່ກະທຳ; ຄວາມສຸກຈົ່ງມີແດ່ຜູ້ທີ່ມີຄວາມເຂົ້າໃຈ; ຄວາມສຸກຈົ່ງມີແດ່ມະນຸດທີ່ຍຶດໝັ້ນໃນຄວາມຈິງ, ແຍກຕົວອອກຈາກທຸກສິ່ງທີ່ຢູ່ໃນສະຫວັນ ແລະ ທຸກສິ່ງທັງໝົດທີ່ຢູ່ເທິງໂລກ.”**[25]

## ເອກະສານອ້າງອີງ


1. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CXXIX, ໜ້າ 279-80
2. ໃນປຶ້ມເຫຼັ້ມດຽວກັນ, CLIII, ໜ້າ 326
3. ໃນປຶ້ມເຫຼັ້ມດຽວກັນ, CLIII, ໜ້າ 326
4. ໃນປຶ້ມເຫຼັ້ມດຽວກັນ, XLIII, ໜ້າ 97
5. ພຣະອັບດຸລບາຮາ, ສານແຫ່ງແຜນການສັກສິດ, (ວິລເມັດ: ໂຮງພິມບາຮາຍ, 1993) ໜ້າ 41-42
6. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ, ພາສາເປີເຊຍ, ເຫຼັ້ມ 12, ໜ້າ 26
7. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ, ພາສາເປີເຊຍ, ເຫຼັ້ມ 14, ໜ້າ 26
8. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ, ພາສາອາຫຣັບ, ເຫຼັ້ມ 15, ໜ້າ 7
9. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ, ພາສາເປີເຊຍ, ເຫຼັ້ມ 32, ໜ້າ 33
10. ພຣະບາຮາອຸລລາຫ໌, ອ້າງອີງໃນປຶ້ມ ໂລກຂອງພຣະບ໊ອບ 1980, ເຫຼັ້ມ 1, ໜ້າ 42
11. ພຣະບາຮາອຸລລາຫ໌, ຮ່ອມພູທັງເຈັດ ແລະ ຮ່ອມພູທັງສີ່ 1986, ໜ້າ 7
12. ພຣະອັບດຸລບາຮາ, ສານແຫ່ງແຜນການສັກສິດ, ໜ້າ 87
13. ພຣະອັບດຸລບາຮາ, ຄັດຈາກພຣະທັມຂອງພຣະອັບດຸລບາຮາ (ໄຮຟ່າ: ສູນກາງບາຮາຍໂລກ, 1982) ເຫຼັ້ມ 6, ໜ້າ 76
14. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CLXI, ໜ້າ 339
15. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CXXIX, ໜ້າ 280
16. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CLVII, ໜ້າ 334
17. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CLXI, ໜ້າ 339
18. ພຣະບາຮາອຸລລາຫ໌, ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CL, ໜ້າ 319
19. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ, ພາສາອາຫຣັບ, ເຫຼັ້ມ 43, ໜ້າ 13



# ຍົກລະດັບການສົນທະນາ

## ຈຸດປະສົງ

ເພື່ອໃຫ້ມີຄວາມສາມາດໃນການແນະນໍາ
ຫຼັກຄວາມເຊື່ອທາງທັມຕ່າງໆເຂົ້າໄປໃນການສົນທະນາ

## ຕອນທີ 1

ໃນພາກທຳອິດຂອງຫຼັກສູດເຫຼັ້ມນີ້, ເຮົາໄດ້ກ່າວເຖິງຄວາມປິຕິຍິນດີຢ່າງມະຫາສານຈາກການທີ່ເຮົາໄດ້ແບ່ງປັນພຣະວັດຈະນະຂອງພຣະຜູ້ເປັນເຈົ້າໃຫ້ກັບຜູ້ອື່ນ. ໃນຂະນະທີ່ເຮົາກ້າວໄປຂ້າງໜ້າ ຕາມຫົນທາງຂອງການຮັບໃຊ້ສາສະໜາ, ໂອກາດຕ່າງໆໃນການແບ່ງປັນມະນີອັນລ້ຳຄ່າ ແຫ່ງອັດສະລິຍະພາບທີ່ຖືກຖະໜອມຢູ່ໃນສາສະໜາຂອງ ພຣະບາຮາອຸລລາຫ໌ ກັບເພື່ອນໆຈະມາເຖິງເຮົາໃນຫຼາຍໆຮູບແບບ. ທ່າມກາງຄວາມສາມາດຕ່າງໆ ທີ່ເຮົາຈຳເປັນທີ່ຈະຕ້ອງພັດທະນາຫຼາຍທີ່ສຸດກໍຄື ສິ່ງທີ່ສາມາດ ຊ່ວຍໃຫ້ເຮົາມີສ່ວນຮ່ວມເຂົ້າໃນການຍົກລະດັບສົນທະນາຢ່າງມີຄວາມໝາຍ. ໃນນີ້ທ່ານຈະຕ້ອງຄຳນຶງເຖິງວ່າ ຈະເຮັດຢ່າງໃດເພື່ອທີ່ຍົກລະດັບການສົນທະນາ ທີ່ກ່ຽວພັນກັບຫຼັກຄວາມເຊື່ອທາງທັມຕ່າງໆ ຫາກໂອກາດດັ່ງກ່າວນັ້ນໄດ້ມາເຖິງ. ໃນພາກຕໍ່ໄປ, ເຈົ້າຈະຕ້ອງຄິດກ່ຽວກັບການທີ່ຈະເຮັດຢ່າງໃດໃຫ້ການລິເລີ່ມ ແລະການປະຄັບປະຄອງຊຸດການສົນທະນາໃນຫົວຂໍ້ບາງຢ່າງ ທີ່ເປັນສ່ວນໜຶ່ງໃນຄວາມພະຍາຍາມຢ່າງເປັນລະບົບໃນການສ້າງຊຸມຊົນທີ່ມີຊີວິດຊີວາໃນໝູ່ບ້ານ ຫຼືໝູ່ບ້ານໃກ້ຄຽງຂອງເຈົ້າ.

ສິ່ງທີ່ເຮົາຈະເຮັດໃນຕອນຕໍ່ໆໄປນີ້ ແມ່ນຈະເປັນການພິຈາລະນາຂໍ້ຄວາມຕ່າງໆຈາກຫຼາຍໆຫົວຂໍ້, ເຖິງແມ່ນວ່າຈະບໍ່ແມ່ນພຣະວັດຈະນະ ທີ່ຄັດເລືອກມາໂດຍກົງ, ກໍ່ຈະເປັນຂໍ້ຄວາມທີ່ມີເຄົ້າມູນມາຈາກສູນທອນພິດ ແລະ ຈົດໝາຍຂອງ ພຣະອັບດຸລບາຮາ ເຊິ່ງລວມເຖິງຄຳກ່າວຫຼາຍໆຄຳທີ່ພຣະອົງເຄີຍກ່າວ. ເຈົ້າຄວນອ່ານແຕ່ລະຂໍ້ຄວາມເລົ່ານັ້ນຫຼາຍໆຄັ້ງ, ລະບຸລະດັບຄວາມຄິດ ແລະ ປຶກສາກັບເພື່ອນໃນກຸ່ມຂອງເຈົ້າອ່ານອອກສຽງ ຈົນກວ່າເຈົ້າຈະສາມາດເວົ້າໃນຄຳເວົ້າຂອງເຈົ້າເອງຢ່າງເປັນທຳມະຊາດ. ບົດເຝິກຫັດດັ່ງກ່າວນີ້ ຈະຊ່ວຍຕຽມພວກເຈົ້າໃຫ້ພ້ອມເມື່ອເວລາຂອງການສອນສາສະໜາໃນຂ້າງໜ້າໄດ້ມາເຖິງ.

ແນ່ນອນວ່າ ໃນພາກນີ້ເຈົ້າຈະສືບຕໍ່ທ່ອງຈຳຂໍ້ຄວາມຕ່າງໆຈາກພຣະທັມມະລິຂິດ, ເພາະມັນມີພະລັງອານຸພາບພິເສດ ທີ່ສາມາດຊຶມຊາບເຂົ້າໄປໃນຈິດໃຈ ແລະ ພະລັງຄວາມຄິດຂອງມະນຸດ ແລະໃນຂະນະທີ່ເຮົາເອົາໄປປະສານລວມກັບຄຳເວົ້າຂອງເຮົາ ມັນກໍ່ຈະມີຜົນອັນເລິກເຊິ່ງຕໍ່ຜູ້ຟັງ. ແຕ່ເຖິງຢ່າງນັ້ນ ການທີ່ຈະນຳເອົາພຣະວັດຈະນະຕອນໃດຕອນໜຶ່ງຈາກທັມມະລິຂິດ ມາກ່າວໃນຂະນະທີ່ສົນທະນານັ້ນຈຳເປັນຕ້ອງອາໄສສະຕິປັນຍາ. ສິ່ງທີ່ຈຳເປັນຕ້ອງມີກໍ່ຄື ຄວາມພໍປະມານ, ຕ້ອງມີຄວາມສົມດຸນລະຫວ່າງການຍົກເອົາທັມມະລິຂິດໂດຍກົງມາກ່າວ ກັບຄວາມພະຍາຍາມໃຊ້ຄຳເວົ້າຂອງເຈົ້າເອງ ໃນການອະທິບາຍກ່ຽວກັບ ສາສະໜາ. ໃນການບັນລຸເຖິງຄວາມສົມດຸນນີ້ໄດ້ ເຈົ້າຈຳເປັນຈະຕ້ອງອຸທິດເວລາ ແລະກຳລັງກາຍໃນການສຶກສາທັມມະລິຂິດຕ່າງໆ ຈົນກວ່າທັມມະລິຂິດເລົ່ານັ້ນຂັດເກົາແນວຄິດ ແລະ ຄວາມຮູ້ສຶກຕ່າງໆຂອງເຈົ້າ.

## ຕອນທີ 2

ຂໍ້ຄວາມທຳອິດທີ່ເຈົ້າຈະໄດ້ສຶກສານີ້ ແມ່ນເປັນເລື່ອງທີ່ກ່ຽວກັບຄວາມຈຳເປັນຂອງຜູ້ໃຫ້ການສຶກສາຈາກສະຫວັນ:

ເມື່ອເຮົາພິຈາລະນາເຖິງການດຳລົງຢູ່ຂອງຊີວິດ, ສັງເກດເບິ່ງແຮ່ທາດ, ພືດ, ສັດ ແລະມະນຸດ, ທຸກສິ່ງແລະທຸກຢ່າງ ລ້ວນແລ້ວແຕ່ຕ້ອງການຜູ້ໃຫ້ການສຶກສາ. ສວນ ກໍ່ຕ້ອງການຄົນດູແລສວນ. ເພື່ອທີ່ການເກັບກ່ຽວທີ່ອຸດົມສົມບູນ ດິນກໍ່ຕ້ອງການຊາວນາ. ຫາກມະນຸດຖືກປະຖິ້ມໄວ້ໃຫ້ຢູ່ໃນປ່າພຽງຜູ້ດຽວ ເຂົາກໍ່ຈະເອົາແບບຢ່າງຄືກັບສັດ. ແຕ່ຖ້າເຂົາໄດ້ຮັບການສຶກສາ ເຂົາຈະສາມາດສຳເລັດລະດັບສູງສຸດ. ຫາກບໍ່ມີຜູ້ໃຫ້ການສຶກສາແລ້ວ ອະລິຍະທຳກໍ່ຄົງຈະບໍ່ເກີດຂຶ້ນ.

ການສຶກສາມີສາມຊະນິດຄື: ການສຶກສາທາງວັດຖຸ, ການສຶກສາທາງມະນຸດ ແລະ ການສຶກສາທາງທຳ. ການສຶກສາທາງວັດຖຸກ່ຽວຂ້ອງກັບ ການພັດທະນາຂອງຮ່າງກາຍ. ການສຶກສາທາງມະນຸດກ່ຽວກັບອະລິຍະທຳ ແລະ ຄວາມກ້າວໜ້າ. ມັນກ່ຽວໂຍງເຖິງ ການປົກຄອງ, ການບໍລິຫານງານ, ການກຸສົນ, ການຄ້າ, ສິນລະປະ ແລະ ຫັດຖະກຳ, ວິທະຍາສາດ, ການປະດິດ ແລະ ການຄົ້ນພົບສິ່ງທີ່ຍິ່ງໃຫຍ່ທັງຫຼາຍ. ການສຶກສາທາງທັມ ກ່ຽວຂ້ອງກັບການບັນລຸເຖິງຄວາມສົມບູນແຫ່ງສະຫວັນ. ນີ້ເປັນການສຶກສາທີ່ແທ້ຈິງ, ເພາະໂດຍການຊ່ວຍເຫຼືອຂອງການສຶກສາຊະນິດນີ້ ທຳມະຊາດທີ່ສູງກວ່າທາງຈິດວິນຍານຂອງມະນຸດ ຈະໄດ້ຮັບການພັດທະນາ.

ໃນການທີ່ຈະກ້າວໜ້າໄປ, ມະນຸດຕ້ອງການຜູ້ໃຫ້ການສຶກສາ ຜູ້ທີ່ມີອຳນາດແຈ້ງຊັດໃນຖານະຜູ້ໃຫ້ການສຶກສາທາງວັດຖຸ, ທາງມະນຸດ ແລະ ທາງທັມ. ຫາກຜູ້ໃດຜູ້ໜຶ່ງຈະກ່າວວ່າ “ຂ້າພະເຈົ້າມີຄວາມເຂົ້າໃຈ ແລະ ສະຕິປັນຍາສົມບູນແລ້ວ ແລະ ບໍ່ຈຳເປັນຕ້ອງມີຜູ້ໃຫ້ການສຶກສາດັ່ງກ່າວ”, ເຂົາກຳລັງປະຕິເສດສິ່ງທີ່ປາກົດຊັດເຈນ. ມັນກໍຈະຄືກັນກັບເດັກນ້ອຍທີ່ກ່າວວ່າ “ຂ້າພະເຈົ້າບໍ່ຈຳເປັນຕ້ອງໄດ້ຮັບການສຶກສາ ຂ້າພະເຈົ້າຈະປະຕິບັດຕາມເຫດຜົນ ແລະ ປັນຍາຂອງຂ້າພະເຈົ້າເອງ.”

ມະນຸດຊາດຈຳເປັນຕ້ອງມີຜູ້ໃຫ້ການສຶກສາມາຕະຫຼອດ, ຜູ້ໃຫ້ການສຶກສານີ້ ຕ້ອງສາມາດຊ່ວຍໃຫ້ມະນຸດຈັດລະບຽບສິ່ງຕ່າງໆ ທີ່ກ່ຽວຂ້ອງກັບການບຳລຸງຮ່າງກາຍ ແລະ ສຸຂະພາບ, ຊ່ວຍບັນດານໃຈໃຫ້ພັດທະນາຄວາມຮູ້, ການປະດິດ ແລະ ຄົ້ນພົບ, ແລະ ທີ່ສຳຄັນທີ່ສຸດ ດົນບັນດານມະນຸດຊາດ ໃຫ້ມີການດຳລົງຢູ່ທີ່ແທ້ຈິງຂອງຈິດວິນຍານ. ບໍ່ມີມະນຸດທຳມະດາຄົນໃດ ສາມາດ

ປະຕິບັດພາລະກິດອັນໜ້າເກງຂາມເລົ່ານີ້ໄດ້. ມີແຕ່ພຣະສາສະດາຂອງພຣະຜູ້ເປັນເຈົ້າເທົ່ານັ້ນທີ່ມີອານຸພາບໃນການປະຕິບັດພາລະກິດເລົ່ານີ້ໃຫ້ລຸລ່ວງໄດ້. ພຣະວິນຍານທີ່ໄດ້ຮັບການຄັດເລືອກເລົ່ານີ້ ຖືກສົ່ງມາໂດຍພຣະຜູ້ເປັນເຈົ້າໃນທຸກຍຸກທຸກສະໄໝ ເພື່ອເປັນຜູ້ໃຫ້ການສຶກສາສາກົນແກ່ມະນຸດຊາດ.

1. ຈົ່ງອ່ານຂໍ້ຄວາມຂ້າງຕົ້ນຫຼາຍໆຄັ້ງໃນກຸ່ມຂອງເຈົ້າ ແລະຊ່ວຍກັນຮຽນຮູ້ເນື້ອຫາຈົນເປັນຢ່າງດີ. ເຈົ້າຄວນຖາມຄຳຖາມເຊິ່ງກັນແລະກັນກ່ຽວກັບຂໍ້ຄວາມນີ້ ແລະ ເຝິກອະທິບາຍດ້ວຍຄຳເວົ້າຂອງເຈົ້າເອງ.

2. ຕໍ່ໄປ, ຈົ່ງປຶກສາຫາລືໃນກຸ່ມຂອງເຈົ້າ ວ່າເຈົ້າຈະສາມາດນຳເອົາສິ່ງທີ່ເຈົ້າໄດ້ຮຽນຮູ້ຢູ່ນີ້ ໄປນຳໃຊ້ໃນການສົນທະນາໄດ້ຢ່າງໃດ. ເປັນທີ່ຊັດເຈນວ່າ ເຈົ້າຈະບໍ່ເລີ່ມບອກເພື່ອນໆຂອງເຈົ້າໂດຍທັນທີວ່າ ການສຶກສານັ້ນມີສາມປະເພດ. ດັ່ງນັ້ນ ຈຶ່ງເປັນສິ່ງທີ່ຄວນຄ່າ ທີ່ເຈົ້າຄວນຈະຄິດເຖິງຮູບແບບຕ່າງໆສຳລັບການປະຕິສຳພັນກັນ ໃນການນຳເອົາແນວຄວາມຄິດຂ້າງເທິງໄປໃຊ້ຢ່າງເໝາະສົມ. ບາງທີບັນຫາຕ່າງໆທີ່ເປັນທີ່ຖືກຖາມກັນອາດຈະເປັນ ຄວາມເສື່ອມຊາມຂອງຄຸນນະທັມໃນສັງຄົມ ຫຼື ການທີ່ຈະເຮັດຫຍັງແດ່ເພື່ອຄວາມຈະເລີນຂອງໂລກ. ຈົ່ງທົບທວນເຖິງຄວາມຫຼາກຫຼາຍຂອງບົດສົນທະນາຕ່າງໆທີ່ເຈົ້າມີຕໍ່ເພື່ອນໆ, ສະມາຊິກໃນຄອບຄົວ, ແລະຄົນຮູ້ຈັກ. ໃນບັນຫາຕ່າງໆເລົ່ານັ້ນທີ່ຢູ່ໃນຄວາມຄິດຂອງພວກເຂົາ ວ່າມີອັນໃດແດ່ທີ່ຈະສາມາດຊ່ວຍໃຫ້ເຈົ້ານຳໄປໃຊ້ໃນການປຶກສາຫາລືກັນ ເຖິງແນວຄວາມຄິດຈາກຂໍ້ຄວາມຂ້າງເທິງ ນັ້ນ.

__________________________________________________

__________________________________________________

__________________________________________________

__________________________________________________

______________________________

3. ຄຳຖາມມັກຖືກຍົກຂຶ້ນມາໃນການສົນທະນາເລື້ອຍໆ ກ່ຽວກັບຫົວຂໍ້ທີ່ທ່ານຫາກໍໄດ້ສຶກສາໄປ. ເຈົ້າຈະຕອບຢ່າງໃດຫາກມີໃຜບາງຄົນຖາມວ່າ: “ໃຜຄືຜູ້ໃຫ້ການສຶກສາຈາກສະຫວັນເລົ່ານັ້ນ ທີ່ເຈົ້າກຳລັງກ່າວເຖິງ?”

__________________________________________________

__________________________________________________

______________________________________

3. ຂ້າງລຸ່ມນີ້ແມ່ນທັມມະລິຂິດບາງຕອນຂອງ ພຣະບາຮາອຸລລາຫ໌ ທີ່ກ່ຽວກັບປະເດັນທີ່ເຮົາສຶກສາໄປແລ້ວຈາກຂໍ້ຄວາມຂ້າງຕົ້ນ. ຈົ່ງໄຕ່ຕອງ ແລະ ພະຍາຍາມຈົດຈຳທັມມະລິຂິດເລົ່ານີ້. ດ້ວຍວິທີການນີ້ ເຈົ້າຈະສາມາດສອດແຊກບາງຕອນຂອງທັມມະລິຂິດ ເຂົ້າໄປໃນການເວົ້າຂອງເຈົ້າ ເຊິ່ງຈະສາມາດມີອິດທິພົນຕໍ່ຫົວໃຈຂອງຜູ້ທີ່ຟັງເຈົ້າຢູ່ໄດ້.

**"ມະນຸດທຸກຄົນຖືກສ້າງຂຶ້ນມາ ເພື່ອສ້າງອະລິຍະທັມທີ່ກ້າວໜ້າໄປຕະຫຼອດເວລາ."[1]**

**"ຂໍຄວາມສູງສົ່ງຈົ່ງມີແດ່ຄວາມຮຸ່ງເຮືອງຂອງພຣະອົງ ຈຸດປະສົງຂອງພຣະຜູ້ເປັນເຈົ້າທີ່ແທ້ຈິງອົງດຽວ ໃນການເປີດເຜີຍພຣະອົງຕໍ່ມະນຸດ ຄືການເປີດເຜີຍບັນດາມະນີ ທີ່ເຊື່ອງຊ້ອນຢູ່ໃນບໍ່ແຮ່ແຫ່ງສາລະອັນແທ້ຈິງພາຍໃນຂອງມະນຸດ."[2]**

**"ຈຸດປະສົງທີ່ພຣະຜູ້ເປັນເຈົ້າສົ່ງພຣະສາສະດາມາຍັງມະນຸດມີສອງປະການ. ປະການທຳອິດຄື ເພື່ອປົດປ່ອຍມະນຸດໃຫ້ຫຼຸດພົ້ນຈາກຄວາມມືດມົນແຫ່ງອະວິຊາ, ແລະ ນຳທາງເຂົ້າໄປສູ່ແສງສະຫວ່າງແຫ່ງຄວາມເຂົ້າໃຈທີ່ແທ້ຈິງ. ປະການທີ່ສອງຄື ເພື່ອຮັບປະກັນສັນຕິພາບ ແລະ ຄວາມສະຫງົບຂອງມະນຸດຊາດ ແລະ ຈັດຫາວິທີການທັງໝົດໄວ້ໃຫ້ສຳລັບການສະຖາປະນາສິ່ງເລົ່ານີ້."[3]**

**"ທຸກເວລາ ແລະ ທຸກສະພາບການ ມະນຸດຈຳເປັນຕ້ອງມີຜູ້ທີ່ຄອຍແນະນຳ ຊີ້ແນະ ສັ່ງສອນ ແລະໃຫ້ຄວາມຮູ້ແກ່ພວກເຂົາ."[4]**

## ຕອນທີ 3

ຂໍ້ຄວາມຕໍ່ໄປນີ້ອະທິບາຍວ່າ ເປັນຫຍັງພຣະຜູ້ເປັນເຈົ້າຈຶ່ງຊົງເປັນທີ່ຮູ້ຈັກໄດ້ ໂດຍຜ່ານສາສະ ນະທູດຂອງພຣະອົງເທົ່ານັ້ນ ແລະ ມັນກໍ່ຈະເປັນປະໂຫຍດຕໍ່ເຈົ້າ ໃນເວລາທີ່ເຈົ້າໂອ້ລົມກັບເພື່ອນໆ ຂອງເຈົ້າ:

ຈົ່ງພິຈາລະນາເບິ່ງຈັກກະວານອັນບໍ່ມີທີ່ສິ້ນສຸດ. ເປັນໄປໄດ້ບໍ່ທີ່ມັນຈະຖືກສ້າງຂຶ້ນ ໂດຍບໍ່ມີພຣະຜູ້ສ້າງ? ຫຼືແທ້ຈິງແລ້ວ ພຣະຜູ້ສ້າງຈະສາມາດເຂົ້າໃຈໄດ້ໃນທຸກສິ່ງທີ່ພຣະອົງສ້າງຂຶ້ນ? ຫາກເຮົາສັງເກດການສ້າງສັນທັງໝົດ ເຮົາຈະເຫັນວ່າ ສິ່ງທີ່ຢູ່ໃນລະດັບຕໍ່າກວ່າ ບໍ່ອາດເຂົ້າໃຈເຖິງອຳນາດສິ່ງທີ່ຢູ່ໃນລະດັບສູງກວ່າ. ດັ່ງເຊັ່ນ ຕົ້ນໄມ້ ແລະ ກ້ອນຫີນ, ບໍ່ວ່າມັນຈະວິວັດ ທະນາການໄປໄດ້ຫຼາຍພຽງໃດ, ກໍ່ບໍ່ສາມາດຈິນຕະນາການໄດ້ ເຖິງພະລັງຂອງການມອງເຫັນ ແລະໄດ້ຍິນ. ສັດກໍ່ບໍ່ສາມາດເຂົ້າໃຈການດຳລົງຢູ່ຂອງມະນຸດ ແລະ ພະລັງອຳນາດຂອງຈິດວິນຍານຂອງມະນຸດໄດ້.

ດ້ວຍເຫດນີ້ ມະນຸດຜູ້ຖືກສ້າງຂຶ້ນມາ ຈະສາມາດເຂົ້າໃຈການດຳລົງຢູ່ຂອງພຣະຜູ້ເປັນເຈົ້າໄດ້ຢ່າງໃດ?

ແມ່ນວ່າຄວາມເຂົ້າໃຈຂອງມະນຸດ ຈະບໍ່ສາມາດຂຶ້ນໄປສູ່ລະດັບຂອງພຣະຜູ້ເປັນເຈົ້າໄດ້, ເຮົາກໍ່ບໍ່ໄດ້ຖືກພາກຈາກການຮູ້ຈັກພຣະອົງ. ໃນແຕ່ລະຍຸກສະໄໝສາສະນະທູດຂອງພຣະຜູ້ເປັນເຈົ້າ ຈະມາປະກົດຂຶ້ນບົນໂລກ. ຄວາມສົມບູນເລີດ ພຣະກະລຸນາທິຄຸນ ແລະ ຄວາມຮຸ່ງເຮືອງທັງໝົດທີ່ມາຈາກພຣະຜູ້ເປັນເຈົ້າ ຈະປະກົດແຈ້ງໃນພຣະສາສະດາຜູ້ຊົງຄວາມສັກສິດ, ເໝືອນ ດັ່ງເຊັ່ນແສງຂອງດວງອາທິດທີ່ສະຫວ່າງເຈີດຈ້າ ຢູ່ໃນກະຈົກທີ່ທຳຄວາມສະອາດແລ້ວ. ການ ກ່າວວ່າການສະທ້ອນຂອງດວງອາທິດໃນກະຈົກເລົ່ານີ້ ບໍ່ໄດ້ໝາຍຄວາມວ່າດວງອາທິດໄດ້ລົງ ມາຈາກລະດັບສູງ ແລະລວມຕົວເຂົ້າກັນກະຈົກນັ້ນໆ. ເຊັ່ນດຽວກັນ, ພຣະຜູ້ເປັນເຈົ້າກໍບໍ່ໄດ້ລົງມາຈາກສະຫວັນແຫ່ງຄວາມຮຸ່ງເຮືອງ ມາຍັງໂລກແຫ່ງການດຳລົງຢູ່ນີ້ ຫາກພຽງແຕ່ໝາຍ ຄວາມວ່າ ທຸກສິ່ງທີ່ມະນຸດຮູ້ ຄົ້ນພົບ ແລະ ເຂົ້າໃຈກ່ຽວກັບພຣະນາມ ແລະ ຄຸນລັກສະນະ ແລະ ຄວາມສົມບູນຂອງພຣະຜູ້ເປັນເຈົ້ານັ້ນ ກ່ຽວເນື່ອງໄປເຖິງບັນດາສາສະນະທູດຂອງພຣະ ອົງ.

1. ຈົ່ງອ່ານຂໍ້ຄວາມຂ້າງຕົ້ນຫຼາຍໆຄັ້ງ ໃນກຸ່ມຂອງເຈົ້າ ແລະ ຊ່ວຍກັນຮຽນຮູ້ເນື້ອຫາຈົນເປັນຢ່າງດີ. ເຈົ້າຄວນຖາມຄຳຖາມທີ່ກ່ຽວຂ້ອງກັບຂໍ້ຄວາມນີ້ແກ່ກັນແລະກັນ ແລະ ເຝິກອະທິບາຍດ້ວຍຄຳເວົ້າຂອງເຈົ້າເອງ.

2. ຈົ່ງປຶກສາຫາລືໃນກຸ່ມຂອງເຈົ້າວ່າ ຈະສາມາດນຳເອົາແນວຄວາມຄິດທີ່ໄດ້ຮຽນມາ ຊອດແຊກເຂົ້າໃນການສົນທະນາຢ່າງເປັນທຳມະຊາດໄດ້ຢ່າງໃດ. ນີ້ອາດຈະເປັນສິ່ງທີ່ເຮັດໄດ້ໂດຍງ່າຍ, ຕົວຢ່າງເຊັ່ນ, ປຶກສາຫາລືກ່ຽວກັບການດຳລົງຢູ່ຂອງພຣະຜູ້ເປັນເຈົ້າ ຫຼື ວັດຖຸປະສົງຂອງຊີວິດ. ມີຫົວຂໍ້ແລະຄຳຖາມໃດແດ່ ທີ່ມັກຖືກຍົກຂຶ້ນມາໃນການສົນທະນາກັນໃນຄອບຄົວ ແລະ ໝູ່ເພື່ອນຂອງເຈົ້າທີ່ຈະເປັນການເປີດໂອກາດ ໃຫ້ເຈົ້າໄດ້ແບ່ງປັນແນວຄວາມຄິດເລົ່ານີ້?

______________________________

______________________________

______________________________

______________________________

______________________________

3. ສົມມຸດວ່າໃນການສົນທະນາຂອງເຈົ້າກັບເພື່ອນ ເຈົ້າມີໂອກາດໂອລົມເຖິງເລື່ອງທີ່ເຈົ້າໄດ້ສຶກສາໄປ. ເຈົ້າຈະຕອບວ່າຢ່າງໃດຫາກມີຜູ້ໃດຜູ້ໜຶ່ງຖາມວ່າ "ມີຫຍັງແດ່ທີ່ເຮົາຮູ້ກ່ຽວກັບພຣະຜູ້ເປັນເຈົ້າໂດຍຜ່ານສາສະນະທູດຂອງພຣະອົງ?"

_______________________________________________

_______________________________________________

____________________________________

4. ເຈົ້າອາດຈະຕ້ອງການທ່ອງຈຳພຣະວັດຈະນະຕອນຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌ ເພື່ອວ່າເຈົ້າຈະສາມາດນຳໄປໃຊ້ໄດ້ໃນເວລາທີ່ເຈົ້າໂອລົມກັນກັບເພື່ອນຂອງເຈົ້າ:

**"ຄວາມຮູ້ຂອງພຣະອົງ ພຣະຜູ້ຊົງເປັນແຫຼ່ງກຳເນີດຂອງທຸກສັບພະສິ່ງ ແລະ ການບັນລຸເຖິງທີ່ປະທັບຂອງພຣະອົງ ເປັນສິ່ງທີ່ເປັນໄປບໍ່ໄດ້ ນອກຈາກຈະຜ່ານທາງຄວາມຮູ້ ແລະ ການເຂົ້າສູ່ທີ່ປະທັບ ຂອງບັນດາຜູ້ຊົງຄວາມຮຸ່ງເຮືອງເລົ່ານີ້ ຜູ້ມາຈາກດວງອາທິດແຫ່ງສັດຈະທັມ."[5]**

**"ສາສະນະທູດແຕ່ລະພຣະອົງເປັນຜູ້ແທນພຣະອົງ ແລະ ຜູ້ປະກາດພຣະປະສົງຂອງພຣະຜູ້ເປັນເຈົ້າ ໂດຍແທ້ຈິງແລ້ວ ພຣະອົງເປັນວັນໃໝ່ຂອງພຣະສາຍາ ອັນເປັນເລີດທັງຫຼາຍຂອງພຣະຜູ້ເປັນເຈົ້າ ແລະ ເປັນອາລຸນຮຸ່ງສະຖານຂອງບັນດາພຣະນາມ ອັນສູງສົ່ງຂອງພຣະຜູ້ເປັນເຈົ້າ."[6]**

**"ຍິ່ງໄປກວ່ານັ້ນ ເຈົ້າຈົ່ງວາງໃຈໄດ້ວ່າ ບໍ່ວ່າເປັນສິ່ງໃດທີ່ກ່ຽວຂ້ອງກັບພຣະອົງ ແລະ ສິ່ງໃດທີ່ຈະຊົງສະແດງໃຫ້ປາກົດໃນອານາຄົດ ຜົນງານ ແລະ ການກະທຳຂອງພຣະສາສະດາຂອງພຣະຜູ້ເປັນເຈົ້າແຕ່ລະພຣະອົງ ລ້ວນແລ້ວແຕ່ໄດ້ຖືກບັນທຶກໄວ້ ໂດຍພຣະຜູ້ເປັນເຈົ້າ ແລະ ຄືການສະທ້ອນພຣະປະສົງ ແລະ ເຈດຕະນາຂອງພຣະອົງ."[7]**

## ຕອນທີ 4

ຄວາມເປັນອັນໜຶ່ງອັນດຽວກັນຂອງສາສະໜາ ກໍເປັນປະເດັນໜຶ່ງທີ່ຫຼາຍຄົນສົນໃຈ, ແລະ ແນວຄວາມຄິດຕ່າງໆຕໍ່ໄປນີ້ຈະເປັນປະໂຫຍດຕໍ່ເຈົ້າໃນຫຼາຍໆໂອກາດ:

ເຮົາຕ້ອງເປັນຜູ້ຮັກແສງສະຫວ່າງບໍ່ວ່າແສງນັ້ນ ຈະມາຈາກຕະກຽງຊະນິດໃດກໍ່ຕາມ. ເຮົາຕ້ອງເປັນຜູ້ຮັກດອກກຸຫຼາບ ບໍ່ວ່າມັນຈະບານຂຶ້ນໃນສວນໃດກໍ່ຕາມ. ເຮົາຕ້ອງເປັນຜູ້ສະແຫວງຫາຄວາມຈິງບໍ່

ວ່າ ຄວາມຈິງນັ້ນຈະມາຈາກແຫຼ່ງໃດກໍ່ຕາມ. ການຍຶດຕິດຢູ່ກັບຕະກຸງຊະນິດໃດຊະນິດໜຶ່ງ ແມ່ນເປັນການກີດກັ້ນເຮົາບໍ່ໃຫ້ຍິນດີຕໍ່ແສງ ທີ່ສ່ອງມາຈາກຕະກຸງຊະນິດອື່ນໆ. ໃນການຊອກຫາຄວາມຈິງ, ເຮົາຕ້ອງລະຖິ້ມອະຄະຕິ ແລະ ຂະໜົບທຳນຽມປະເພນີທີ່ພົ້ນສະໄໝ. ຖ້າຫາກຖ້ວຍຂອງເຮົາເຕັມໄປດ້ວຍອັດຕະ ມັນກໍຈະບໍ່ເຫຼືອທີ່ຫວ່າງໄວ້ໃຫ້ກັບນ້ຳແຫ່ງຊີວິດ.

ສາສະໜາແມ່ນແສງສະຫວ່າງຂອງໂລກ. ມັນນຳທາງບາດກ້າວຍ່າງ ແລະ ເປີດປະຕູແຫ່ງຄວາມສຸກທັນສາອັນເປັນນິລັນ. ເມື່ອເຮົາຄົ້ນຄວ້າສຶກສາເຖິງຄຳສອນຕ່າງໆ ຂອງພຣະສາສະດາທັງຫຼາຍໂດຍປັດສະຈາກຂໍ້ຈຳກັດຂອງຫຼັກປະຕິບັດຂອງຄວາມເຊື່ອຕ່າງໆ ແລະເຮັດຕາມຢ່າງຄົນຕາບອດ, ເຮົາກໍຈະເຫັນວ່າຄຳສອນຕ່າງໆເລົ່ານັ້ນແມ່ນມາຈາກພື້ນຖານດຽວກັນ. ມັນໄດ້ສະແດງເຖິງອັດສະລິຍະພາບຂອງພຣະຜູ້ເປັນເຈົ້າ. ມັນນຳມາເຊິ່ງຄວາມກ້າວໜ້າຂອງໂລກແຫ່ງມະນຸດຊາດ.

ແນ່ນອນວ່າ, ມັນມີຄວາມແຕກຕ່າງລະຫວ່າງກົດທາງສັງຄົມ ແລະ ກົດທຳນຽມປະຕິບັດໃນແຕ່ລະສາສະໜາທີ່ອີງຕາມຄວາມແທດເໝາະຂອງເວລາແລະສະຖານທີ່. ແຕ່ພື້ນຖານຄວາມເປັນຈິງແລ້ວ ທຸກສາສະໜາແມ່ນເປັນໜຶ່ງດຽວກັນ. ສາສະໜາຍັງເປັນບ່ອນຊ່ວຍພັດທະນາຄວາມສັດທາ, ຄວາມຮູ້, ຄວາມແນ່ວແນ່, ຄວາມຍຸຕິທັມ, ຄວາມອຸທິດຕົນ, ການມີຄຸນນະທັມອັນສູງ ສົ່ງ, ຄວາມໄວ້ວາງໃຈ, ຄວາມຮັກຕໍ່ພຣະຜູ້ເປັນເຈົ້າ ແລະຄວາມເອື້ອເຟື້ອເພື່ອແຜ່. ທັງຍັງເປັນ ບ່ອນສອນຄວາມບໍລິສຸດ, ການປ່ອຍວາງ, ຄວາມອ່ອນນ້ອມຖ່ອມຕົນ, ຄວາມອົດທົນອົດກັ້ນ ແລະຄວາມຈົ່ງຮັກພັກດີ. ຄຸນນະທັມຕ່າງໆຂອງມະນຸດຊາດເລົ່ານີ້ ແມ່ນຈະຖືກຟື້ນຂຶ້ນມາໃໝ່ໃນທຸກໆຍຸກສະໄໝ.

ເປັນສິ່ງທີ່ໜ້າເສຍດາຍ ເພາະອະຄະຕິ ແລະ ການປະຕິບັດຕາມໆກັນຢ່າງຄົນຕາບອດ ເຮັດໃຫ້ຫຼາຍໆຄົນບໍ່ສາມາດມອງເຫັນ ເຖິງຄວາມເປັນອັນໜຶ່ງອັນດຽວກັນຂອງສາສະໜາ. ການນຳທາງຂອງພຣະຜູ້ເປັນເຈົ້າຕໍ່ມະນຸດຊາດເປັນເລື່ອງຈິງ, ແລະ ຄວາມຈິງກໍບໍ່ມີການແບ່ງແຍກ, ເພາະມັນເປັນໜຶ່ງດຽວ. ຖ້າເຮົາຊອກຫາຄວາມຈິງຢ່າງອິດສະຫຼະ, ປະໄວ້ເຊິ່ງອະຄະຕິ ມັນກໍ່ຈະນຳທາງເຮົາໄປສູ່ຄວາມສາມັກຄີ. ສາສະໜາຄວນສະໝັກສະໝານເຮົາທັງໝົດ, ຄວນສ້າງສາຍໄຍຮັກໃນກຸ່ມປະຊາຊົນ. ແຕ່ຖ້າສາສະໜາເປັນເຫດຂອງຄວາມກຽດຊັງ ແລະ ທະເລາະວິວາດ ການທີ່ບໍ່ມີຈະເປັນສິ່ງທີ່ດີກວ່າ.

1. ດັ່ງເຊັ່ນໃນຕອນທີ່ຜ່ານມາ ເຈົ້າຄວນອ່ານຂໍ້ຄວາມຂ້າງຕົ້ນຫຼາຍໆຄັ້ງໃນກຸ່ມຂອງເຈົ້າ ຖາມຄຳຖາມທີ່ກ່ຽວຂ້ອງກັບຂໍ້ຄວາມນີ້ແກ່ກັນແລະກັນ ແລະ ເຝິກອະທິບາຍດ້ວຍຄຳເວົ້າຂອງເຈົ້າເອງ.

2. ຈົ່ງພິຈາລະນາໃນກຸ່ມຂອງເຈົ້າ ວ່າເຈົ້າຈະສາມາດສານແນວຄວາມຄິດທີ່ໄດ້ສຶກສາມາ ເຂົ້າໃນການສົນທະນາໄດ້ຢ່າງໃດ, ຕົວຢ່າງເຊັ່ນຫົວຂໍ້ກ່ຽວກັບຄວາມຂັດແຍ້ງທາງສາສະໜາ ທີ່ມັກຈະຕິດຢູ່ໃນຄວາມຄິດຂອງຫຼາຍໆຄົນ. ແລະເຈົ້າເອງກໍອາດຈະຄົ້ນພົບວ່າຕົວເອງກໍເປັນໜຶ່ງໃນບັນດາເພື່ອນໆທີ່ປຶກສາຫາລືກັນ ກ່ຽວກັບຄວາມສຳຄັນຂອງການສະແຫວງຫາຄວາມຈິງ ແລະບໍ່ຍອມຕົກເປັນຫຸ່ນເຊີດໃຫ້ກັບການໂຄສະນາຊວນເຊື່ອ. ຈົ່ງຄິດທົບທວນອີກຄັ້ງເຖິງບົດສົນທະນາຕ່າງໆ ທີ່ເຈົ້າໄດ້ມີກັບເພື່ອນໆ ແລະ ເພື່ອນບ້ານຂອງທ່ານ, ເພື່ອນຮ່ວມງານ ແລະ ຄົນຮູ້ຈັກ. ມີບັນຫາໃດແດ່ທີ່ຢູ່ໃນຄວາມຄິດຂອງພວກເຂົາ ທີ່ຈະເປັນປະໂຫຍດຕໍ່ການປຶກສາຫາລືໃນແວດວົງແນວຄວາມຄິດເລົ່ານີ້?

3. ເຈົ້າຈະຕອບວ່າແນວໃດ, ຫາກພາຍຫຼັງການແບ່ງປັນແນວຄິດ ຈາກຂໍ້ຄວາມທີ່ເຈົ້າຫາກໍ່ສຶກສາມາ ແລ້ວມີຜູ້ໃດຜູ້ໜຶ່ງຖາມຂຶ້ນວ່າ "ມີສັດຈະທັມອັນໃດແດ່ທີ່ພົບໃນທຸກສາສະໜາ?"

4. ຂໍແນະນຳໃຫ້ເຈົ້າ ທ່ອງຈຳພຣະວັດຈະນະຕອນຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌ ເພື່ອວ່າເຈົ້າຈະສາມາດນຳເອົາບາງຕອນໄປໃຊ້ໃນການສົນທະນາຂອງເຈົ້າໄດ້.

   **"ບໍ່ມີຂໍ້ສົງໄສເລີຍວ່າ ປະຊາຊົນໃນໂລກ ບໍ່ວ່າເຊື້ອຊາດໃດຫຼືສາສະໜາໃດ ລ້ວນໄດ້ຮັບແຮງດົນໃຈຈາກແຫຼ່ງກຳເນີດດຽວກັນ ແລະ ຢູ່ພາຍໃຕ້ພຣະຜູ້ເປັນເຈົ້າດຽວກັນ."**[8]

   **"ຈົ່ງຄົບຫາສະມາຄົມກັບສາສະນິກະຊົນທຸກສາສະໜາ ດ້ວຍໄມຕີຈິດມິດຕະພາບ."**[9]

   **"ເຈດຕະນາມູນຖານທີ່ຂັບເຄື່ອນສາສະໜາຂອງ ພຣະຜູ້ເປັນເຈົ້າ ຄືການປົກປ້ອງປະໂຫຍດ ແລະ ສົ່ງເສີມເອກະພາບຂອງມະນຸດຊາດ…"**[10]

**"ສາສະໜາຂອງພຣະຜູ້ເປັນເຈົ້ານັ້ນເພື່ອຄວາມຮັກ ແລະ ຄວາມສາມັກຄີ; ຢ່າເຮັດໃຫ້ສາສະ ໜາ ເປັນເຫດແຫ່ງຄວາມແຕກແຍກ ແລະ ເປັນສັດຕູກັນ."**[11]

## ຕອນທີ 5

ຄວາມສຳພັນກັນລະຫວ່າງວິທະຍາສາດ ແລະ ສາສະໜາຄືຫົວຂໍ້ຕໍ່ໄປທີ່ເຈົ້າຈະໄດ້ສຶກສາ.

ສາສະໜາຄວນຈະສອດຄ່ອງກັບວິທະຍາສາດ. ພຣະຜູ້ເປັນເຈົ້າຊົງປະສິດປະສາດພວກເຮົາດ້ວຍເຫດ ຜົນ ເພື່ອທີ່ເຮົາຈະສາມາດຮັບຮູ້ວ່າແມ່ນຫຍັງຄືຄວາມຈິງ. ວິທະຍາສາດ ແລະ ສາສະໜາ ທັງສ ອງຢ່າງນີ້ ໄດ້ຖືກຄາດຫວັງໃຫ້ເປັນມາດຕະຖານຂອງເຫດຜົນ. ດັ່ງນັ້ນ ທັງສອງຢ່າງຄວນ ເຫັນພ້ອງ ຕ້ອງກັນ. ທັງສອງຢ່າງຄືປີກສອງຂ້າງ ທີ່ຈະພາມະນຸດບິນຂຶ້ນໄປສູ່ຈຸດສູງສຸດ, ເປັນປີກສອງຂ້າງທີ່ ຈະພາມະນຸດຊາດບິນໄດ້. ເພາະປີກຂ້າງດຽວມັນບໍ່ພຽງພໍ.

ວິທະຍາສາດຄື ຂອງຂວັນຂອງພຣະຜູ້ເປັນເຈົ້າ. ມັນຄົ້ນພົບກົດຕ່າງໆຂອງໂລກແຫ່ງກາຍະພາບ ແລະ ຊ່ວຍໃຫ້ເຮົາຫຼຸດພົ້ນ ຈາກຂໍ້ຈຳກັດຕ່າງໆທາງທຳມະຊາດທີ່ບັງຄັບເຮົາໄວ້. ດ້ວຍການຊ່ວຍເຫຼືອ ຂອງເຄື່ອງມືຕ່າງໆທາງວິທະຍາສາດ, ເຮົາສາມາດມອງເຫັນສິ່ງທີ່ບໍ່ສາມາດມອງເຫັນດ້ວຍຕາເປົ່າ ແລະ ສາມາດສື່ສານດ້ວຍໄລຍະທາງທີ່ໄກໆອີກດ້ວຍ. ວິທະຍາສາດ ຮວບຮວມປັດຈຸບັນ ແລະ ອະ ດີດ ແລະ ຊຶມຊາບເອົາຄວາມລຶກລັບຂອງອະນາຄົດ. ຄວາມກ້າວໜ້າຂອງມະນຸດ ແມ່ນຂຶ້ນຢູ່ກັບ ຄວາມສຳເລັດຂອງວິທະຍາສາດ.

ສາສະໜາ ຊ່ວຍສົ່ງເສີມສັດຈະທຳ, ສະໜັບສະໜູນຄວາມຮູ້ ແລະ ເປັນອາລິຍະທຳຂອງເຊື້ອຊາດມະ ນຸດ. ຫາກປາດສະຈາກສາສະໜາ ວິທະຍາສາດກໍຈະເປັນເຄື່ອງມືຂອງຄວາມກ້າວໜ້າທາງວັດຖຸນິຍົມ ແລະ ໃນທີ່ສຸດກໍຈະນຳໄປສູ່ຄວາມສິ້ນຫວັງ. ເມື່ອໃດທີ່ສາສະໜາຂັດແຍ້ງກັບວິທະຍາສາດ, ມັນກໍຈະ ກາຍເປັນພຽງແຕ່ຄວາມງົມງວາຍ. ແຕ່ຖ້າຫາກວິທະຍາສາດ ແລະ ສາສະໜາກ້າວໄປດ້ວຍກັນດ້ວຍ ຄວາມກົມກຽວ, ຄວາມກຽດຊັງ ແລະ ຄວາມຄົນຂື່ນທັງຫຼາຍທີ່ນຳຄວາມມືດໝອງມາໃຫ້ມະນຸດຊາດກໍ ຈະຢຸດຕິລົງ.

1. ດັ່ງເຊັ່ນທີ່ຜ່ານມາ ເຈົ້າຄວນອ່ານຂໍ້ຄວາມຂ້າງຕົ້ນຫຼາຍໆຄັ້ງໃນກຸ່ມຂອງເຈົ້າ, ປະໂຫຍກຕໍ່ປະໂຫຍກ, ແລະ ຖາມຄຳຖາມເຊິ່ງກັນແລະກັນ ຈົນກວ່າເຈົ້າຈະເຂົ້າໃຈເນື້ອໃນເປັນຢ່າງດີທີ່ຈະສາມາດກ່າວອອກ ມາໄດ້ຢ່າງເປັນທຳມະຊາດ.

2. ເຈົ້າຈະຕອບຢ່າງໃດຫາກມີຜູ້ໃດຜູ້ໜຶ່ງກ່າວກັບເຈົ້າວ່າ "ສາສະໜາເປັນພຽງສິ່ງໃນອາດີດ; ວິທະຍາສາດຈະແກ້ໄຂບັນຫາທັງໝົດຂອງມະນຸດຊາດ." ມັນຈະເປັນສິ່ງທີ່ເປັນປະໂຫຍດຫຼືບໍ່ ຫາກເຈົ້າຈະຊີ້ແຈງວ່າ ສາສະໜາບໍ່ຄືກັນກັບຄວາມງົມງວາຍ ແຕ່ມັນຈະກາຍເປັນຄວາມງົມງວາຍທັນທີ ຫາກປາດສະຈາກເຊິ່ງວິທະຍາສາດ, ແລະເຊັ່ນດຽວກັນ ວິທະຍາສາດ ຫາກປາດສະຈາກເຊິ່ງສາສະໜາ ກໍຈະນຳໄປສູ່ຄວາມສິ້ນຫວັງກໍ່ກຳເນີດວັດຖຸນິຍົມ? ເຈົ້າຈະສາມາດໃຫ້ຕົວຢ່າງໄດ້ຫຼືບໍ່ວ່າສິ່ງເລົ່ານີ້ເກີດຂຶ້ນໄດ້ແນວໃດ?

________________________________________

________________________________________

________________________________________

________________________________________

________________________

3. ຂໍແນະນຳໃຫ້ເຈົ້າທ່ອງຈຳພຣະວັດຈະນະຕໍ່ໄປນີ້ ຈາກທັມມະລິຂິດຂອງ ພຣະບາຮາອຸລລາຫ໌:

**"ສິ່ງທຳອິດ ແລະ ສຳຄັນທີ່ສຸດໃນບັນດາຄວາມໂປດປານເລົ່ານີ້, ເຊິ່ງພຣະຜູ້ຊົງຄວາມຍິ່ງໃຫຍ່ປະທານໃຫ້ແກ່ມະນຸດ, ຄືຂອງຂວັນ ແຫ່ງຄວາມເຂົ້າໃຈ.... ຂອງຂວັນນີ້ໃຫ້ພະລັງແກ່ມະນຸດໃນຄວາມສາມາດແຍກແຍະສັດຈະທັມຄວາມຈິງໃນທຸກສິ່ງ, ນຳພາມະນຸດໄປສູ່ສິ່ງທີ່ຖືກຕ້ອງ, ແລະຊ່ວຍໃຫ້ມະນຸດຄົ້ນພົບຄວາມລັບຂອງການສ້າງສັນ."**[12]

**"ຈົ່ງເບິ່ງໂລກ ແລະ ໄຕ່ຕອງເບິ່ງໄລຍະໜຶ່ງ. ໂລກໄດ້ເປີດເຜີຍໜັງສືຂອງຕົນເອງອອກຕໍ່ໜ້າເຈົ້າ ແລະ ເປີດເຜີຍສິ່ງທີ່ປາກກາຂອງພຣະຜູ້ເປັນເຈົ້າ, ພຣະຜູ້ຊົງອອກແບບ, ພຣະຜູ້ຊົງຮອບຮູ້ ໄດ້ຈາລຶກໄວ້ໃນນັ້ນ."**[13]

**"ຄວາມຮູ້ປຽບສະເໝືອນປີກຂອງຊີວິດມະນຸດ, ແລະ ເປັນຂັ້ນໄດເພື່ອກ້າວຂຶ້ນສູ່ຄວາມກ້າວໜ້າຂອງເຂົາ. ເຊິ່ງເປັນໜ້າທີ່ຂອງມະນຸດທຸກຄົນ."**[14]

## ຕອນທີ 6

ຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດຊາດ ເປັນຫົວຂໍ້ທີ່ສະທ້ອນໃນຫົວໃຈຂອງທຸກໆຄົນໃນທຸກທີ່ໃນປັດຈຸບັນ, ແລະ ຫຼາຍໆຄົນກໍມີຄວາມຍິນດີທີ່ຈະໂອ້ລົມກັບເຈົ້າ ກ່ຽວກັບແນວຄວາມຄິດທີ່ນຳສະເໜີຂ້າງລຸ່ມນີ້.

ສວນ ທີ່ມີດອກໄມ້ຫຼາກຫຼາຍສີ ແລະ ກິ່ນຕ່າງກັນປູກຢູ່ລວມກັນ ກໍຈະເປັນທີ່ໜ້າພໍໃຈແກ່ສາຍ ຕາ. ເຖິງແມ່ນວ່າມີຄວາມແຕກຕ່າງ ແຕ່ດອກໄມ້ແຕ່ລະດອກກໍ່ໄດ້ຮັບຄວາມສົດຊື່ນ ຈາກນ້ຳຝົນດຽວກັນ ແລະ ໄດ້ຮັບຄວາມອົບອຸ່ນຈາກດວງອາທິດດຽວກັນ. ນີ້ເປັນຄວາມຈິງສຳລັບມະນຸດຊາດເຊັ່ນກັນ. ມະນຸດຊາດປະກອບດ້ວຍເຊື້ອຊາດ ແລະ ສີຜິວທີ່ຫຼາກຫຼາຍ. ແຕ່ທຸກຄົນກໍ່ມາຈາກພຣະຜູ້ເປັນເຈົ້າອົງ ດຽວກັນ, ແລະ ມີແຫຼ່ງກຳເນີດອັນດຽວກັນ. ຄວາມຫຼາກຫຼາຍໃນຄອບຄົວມະນຸດຊາດ ຄວນຈະເປັນ ສາເຫດແຫ່ງຄວາມຮັກ ແລະ ຄວາມກົມກຽວກັນ, ເໝືອນດັ່ງເຊັ່ນດົນຕີທີ່ມີຕົວໂນ໊ດໃນລະດັບສຽງຕ່າງກັນ ປະສົມປະສານເຂົ້າດ້ວຍກັນເປັນທຳນອງເພງທີ່ມ່ວນຊື່ນອອນຊອນ.

ຄວາມສາມັກຄີ ເປັນສິ່ງຈຳເປັນສຳລັບການດຳລົງຢູ່. ຄວາມຮັກເປັນສາເຫດອັນແທ້ຈິງຂອງຊີວິດ. ໃນໂລກວັດຖຸ, ອະນຸພາກຂອງວັດຖຸຕ່າງໆ ແມ່ນຍຶດຢູ່ດ້ວຍກັນພາຍໃຕ້ກົດຂອງການດຶງດູດ. ກົດຂອງການດຶງດູດ ເຮັດໃຫ້ອະນຸພາກຈຳນວນໜຶ່ງລວມກັນເຂົ້າເປັນດອກໄມ້ທີ່ສວຍງາມ. ແຕ່ເມື່ອການດຶງດູດຫາຍໄປ ດອກໄມ້ກໍ່ເໜົ່າເປື່ອຍ ແລະ ບໍ່ຄົງຢູ່ອີກຕໍ່ໄປ. ມະນຸດຊາດກໍ່ເຊັ່ນດຽວກັນ ຄວາມດຶງດູດ, ຄວາມກົມກຽວກັນ, ແລະ ຄວາມສາມັກຄີ ເປັນພະລັງທີ່ຍຶດໜ່ຽວມະນຸດຊາດໄວ້ດ້ວຍກັນ.

ພຣະບາຮາອຸລລາຫ໌ ໄດ້ຊີ້ວາງຮູບແບບໃນການທ້ອນໂຮມມະນຸດເຂົ້າດ້ວຍກັນໄວ້. ພວກເຮົາຄວນພະຍາຍາມໃນທຸກວິທີທາງ ທີ່ຈະນຳພາພວກເຂົາມາສູ່ແວດວົງແຫ່ງຄວາມສາມັກຄີນີ້. ເມື່ອເຮົາພົບປະຜູ້ຄົນທີ່ມີເຊື້ອຊາດ, ສັນຊາດ, ສາສະໜາ, ແລະ ຄວາມເຫັນແຕກຕ່າງກັນ, ເຮົາບໍ່ຄວນປ່ອຍໃຫ້ຄວາມແຕກຕ່າງນັ້ນ ເປັນອຸປະສັກຂວາງກັ້ນລະຫວ່າງກັນແລະກັນ. ເຮົາຄວນຈະພິຈາລະນາພວກເຂົາ ເປັນຄືກັນກັບດອກກຸຫຼາບທີ່ມີສີແຕກຕ່າງກັນ ທີ່ເຕີບໂຕຢູ່ໃນສວນແຫ່ງມະນຸດຊາດ, ແລະ ຍິນດີ ທີ່ເຮົາໄດ້ເປັນໜຶ່ງໃນບັນດາດອກກຸຫຼາບເຫຼົ່ານັ້ນ.

1. ດັ່ງທີ່ເຄີຍໄດ້ກະທຳມາແລ້ວ ຫຼັງຈາກທີ່ໄດ້ສຶກສາຂໍ້ຄວາມຂ້າງຕົ້ນ ຈົ່ງຄິດເຖິງການສົນທະນາ ຕ່າງໆທີ່ເກີດຂຶ້ນອ້ອມຮອບຕົວເຈົ້າ. ມີບັນຫາໃດແດ່ທີ່ເກີດຂຶ້ນໃນຄວາມຄິດຂອງຄົນເຫຼົ່ານັ້ນ ທີ່ຈະສາມາດເປີດໂອກາດໃຫ້ເຈົ້າໄດ້ແບ່ງປັນແນວຄວາມຄິດນີ້ກັບພວກເຂົາ?

___

___

___

___

2. ການສົນທະນາກ່ຽວກັບຄວາມເປັນອັນໜຶ່ງອັນດຽວກັນຂອງມະນຸດຊາດ ອາດຈະນຳໄປສູ່ການປຶກສາຫາລືກ່ຽວກັບ ຄວາມສຳຄັນຂອງຄວາມສາມັກຄີໃນຊຸມຊົນຂອງບຸກຄົນນັ້ນໆໄດ້. ເຈົ້າສາມາດແບ່ງປັນໄດ້ຫຼືບໍ່ວ່າ ເຮົາສາມາດປະກອບສ່ວນເຂົ້າໃນນີ້ໄດ້ຢ່າງໃດ?

______________________________

______________________________

______________________________

3. ເຈົ້າອາດຈະຕ້ອງການທ່ອງຈຳພຣະວັດຈະນະຕໍ່ໄປນີ້ ເພື່ອວ່າເຈົ້າຈະສາມາດນຳໄປໃຊ້ໃນເວລາທີ່ເຈົ້າໂອ້ລົມ ກັບເພື່ອນຂອງເຈົ້າກ່ຽວກັບເລື່ອງນີ້:

**"ສັກກາລະສະຖານແຫ່ງເອກະພາບ ໄດ້ຖືກສະຖາປະນາຂຶ້ນແລ້ວ; ຈົ່ງຢ່າຖືກັນແລະກັນ ເປັນຄົນແປກໜ້າ. ພວກເຈົ້າຄືໝາກໄມ້ເທິງຕົ້ນດຽວກັນ, ແລະ ໃບໄມ້ເທິງກິ່ງກ້ານອັນດຽວກັນ."[15]**

**"ແສງແຫ່ງຄວາມສາມັກຄີນັ້ນມີອານຸພາບ ຈົນສາມາດສ່ອງທົ່ວພິພົບໃຫ້ສະຫວ່າງສະໄຫວ."[16]**

**"ຈົ່ງຫັນໜ້າໄປສູ່ຄວາມສາມັກຄີ ແລະ ໃຫ້ຄວາມຮຸ່ງເຮືອງຂອງແສງແຫ່ງຄວາມສາມັກຄີ ສາດສ່ອງມາຍັງເຈົ້າ. ຈົ່ງລວມຕົວກັນ ແລະ ເພື່ອເຫັນແກ່ພຣະຜູ້ເປັນເຈົ້າ ຈົ່ງມຸ່ງໝັ້ນທີ່ຈະກຳຈັດຮາກເຫງົ້າຂອງການຕໍ່ສູ້ໃນໝູ່ຂອງພວກເຈົ້າເອງ."[17]**

**"ເປັນສິ່ງຈຳເປັນ ທີ່ມະນຸດຈະຕ້ອງຍຶດໝັ້ນຢູ່ຢ່າງໝັ້ນຄົງ ໃນສິ່ງທີ່ຈະສົ່ງເສີມມິດຕະພາບ, ຄວາມເມດຕາ ແລະ ຄວາມສາມັກຄີ."[18]**

## ຕອນທີ 7

ຂໍ້ຄວາມຕໍ່ໄປນີ້ ຈະຊ່ວຍເຈົ້າໃນການແບ່ງປັນກ່ຽວກັບຄວາມຍຸຕິທັມ, ເຊິ່ງເປັນອີກເລື່ອງໜຶ່ງທີ່ໜ້າສົນໃຈຫຼາຍສຳລັບຄົນສ່ວນໃຫຍ່:

ຄວາມແຕກຕ່າງໃນຄວາມສາມາດຂອງແຕ່ລະບຸກຄົນ ເປັນສິ່ງຈຳເປັນຂັ້ນພື້ນຖານ ສຳລັບການດຳລົງຢູ່ຂອງມະນຸດ. ເປັນສິ່ງເປັນໄປບໍ່ໄດ້ທີ່ທຸກຄົນຈະຄືກັນ ຫຼື ມີຄວາມສາມາດເທົ່າກັນ. ຢ່າງໃດກໍ່ຕາມ, ໃນທຸກກິດຈະການຂອງມະນຸດ ຕ້ອງໄດ້ຮັບການດູແລໂດຍຫຼັກຂອງຄວາມຍຸຕິທັມ. ຄວາມຍຸຕິທັມຄວນເປັນສິ່ງທີ່ສັກສິດ ແລະ ສິດທິຂອງແຕ່ລະຄົນຄວນໄດ້ຮັບການປ້ອງກັນ.

ຄວາມຍຸຕິທັມບໍ່ມີຂີດຈຳກັດ; ຄວາມຍຸຕິທັມເປັນຄຸນນະທຳສາກົນ. ເປັນສິ່ງທີ່ຕ້ອງມີການປະຕິ ບັດໃນທຸກລະດັບຂອງສັງຄົມ. ສະມາຊິກແຕ່ລະຄົນຂອງສັງຄົມ ຄວນໄດ້ຮັບປະໂຫຍດຈາກອະລິຍະທຳ ເພາະແຕ່ລະຄົນຕ່າງ ກໍ່ເປັນສະມາຊິກຂອງຮ່າງກາຍຂອງມະນຸດຊາດ. ຫາກສະມາຊິກຜູ້ໃດຜູ້ໜຶ່ງຂອງຮ່າງກາຍນີ້ ໄດ້ຮັບຄວາມເຈັບປວດ ແລະ ຄວາມທຸກທໍລະມານ, ສະມາຊິກຄົນອື່ນໆ ກໍ່ຍ່ອມໄດ້ຮັບຄວາມລຳບາກເຊັ່ນກັນ. ຫາກສະມາຊິກຄົນໃດໜຶ່ງຈະໄດ້ຮັບຄວາມທຸກຍາກ ແລະ ສະມາຊິກຄົນອື່ນໆຈະຢູ່ຢ່າງສະບາຍໄດ້ຢ່າງໃດ? ສັງຄົມໃນປັດຈຸບັນຂາດຄວາມຊ່ວຍເຫຼືອເຊິ່ງກັນແລະກັນ ແລະ ຂາດຄວາມສົມດຸນ; ສັງຄົມຍັງບໍ່ເປັນລະບົບດີພໍ. ເປັນສິ່ງຈຳເປັນທີ່ຈະຕ້ອງມີກົດ ແລະ ຫຼັກປະຕິບັດຕ່າງໆ ທີ່ຈະຮັບປະກັນຄວາມເປັນຢູ່ທີ່ດີ ແລະ ຄວາມຜາສຸກຂອງສະມາຊິກທຸກຄົນຂອງຄອບຄົວມະນຸດຊາດ.

ຄວາມຍຸຕິທັມ ຖືກສະຖາປະນາຂຶ້ນຢູ່ເທິງເສົາຫຼັກແຫ່ງການໃຫ້ລາງວັນ ແລະ ການລົງໂທດ. ລັດຖະບານໃດທີ່ປົກຄອງໂດຍຜູ້ທີ່ບໍ່ມີຄວາມເຫຼື້ອມໃສສັດທາ, ບໍ່ຢ້ານກົວຕໍ່ການລົງໂທດຈາກສະຫວັນກໍຈະນຳໄປສູ່ກົດໝາຍທີ່ບໍ່ທ່ຽງທັມ. ຄວາມຫວັງໃນການໄດ້ຮັບລາງວັນ ແລະ ຄວາມຢ້ານກົວຕໍ່ການຖືກລົງໂທດ ສອງຢ່າງນີ້ ເປັນສິ່ງຈຳເປັນໃນການປ້ອງກັນການກົດຂີ່. ຜູ້ອອກກົດໝາຍ ແລະ ຜູ້ບໍລິຫານກົດໝາຍທັງຫຼາຍ ຈະຕ້ອງຮູ້ແຈ້ງເຖິງຜົນທາງຈິດໃຈ ທີ່ຈະເກີດຂຶ້ນ ພາຍຫຼັງການຕັດສິນໃຈຕ່າງໆຂອງພວກເຂົາ. ເມື່ອຜູ້ນຳທັງຫຼາຍເຊື່ອວ່າ ຜົນຂອງການກະທຳ ຂອງເຂົາຢູ່ເໜືອກວ່າຊີວິດໃນໂລກນີ້ ແລະ ຜູ້ທີ່ຮູ້ວ່າຄຳພິພາກສາຕ່າງໆຂອງພວກເຂົາ ຈະຖືກຊັ່ງຊາໂດຍຄວາມດຸ່ນດ່ຽງຂອງພຣະຜູ້ຊົງຄວາມຍຸຕິທັມແຫ່ງສະຫວັນ ຍ່ອມຈະຫຼີກລ້ຽງຄວາມຜະເດັດການ ແລະ ການກົດຂີ່ນີ້ຢ່າງແນ່ນອນ.

1. ຫຼັງຈາກທີ່ເຈົ້າໄດ້ຮຽນຮູ້ທີ່ຈະສະແດງອອກ ເຖິງແນວຄວາມຄິດຂ້າງເທິງຢ່າງເປັນທຳມະຊາດແລ້ວ, ຈົ່ງພິຈາລະນາວ່າ ຫົວຂໍ້ການສົນທະນາໃດແດ່ທີ່ຈະເປັນປະໂຫຍດ ຈາກຄວາມເຂົ້າໃຈຕ່າງໆຈາກຂໍ້ຄວາມທີ່ໄດ້ໃຫ້ໄປນັ້ນ.

______________________________________________

______________________________________________

______________________________________________

__________________________________

2. ເຈົ້າຈະຕອບວ່າຢ່າງໃດຫາກມີຜູ້ໃດຜູ້ໜຶ່ງທີ່ເຊື່ອວ່າ ຄວາມອະຍຸຕິທັມຈະບໍ່ມີວັນໝົດໄປໄດ້?

______________________________________________

______________________________________________

__________________________________

3. ຂ້າງລຸ່ມນີ້ແມ່ນພຣະວັດຈະນະບາງຕອນຂອງ ພຣະບາຮາອຸລລາຫ໌ ກ່ຽວກັບຄວາມຍຸຕິທັມ, ຂໍໃຫ້ເຈົ້າທ່ອງຈຳພຣະວັດຈະນະຕໍ່ໄປນີ້.

**"ແສງສະຫວ່າງຂອງມະນຸດຄືຄວາມຍຸຕິທັມ ຈົ່ງຢ່າດັບແສງນີ້ດ້ວຍອາໂຍ ແຫ່ງຄວາມກົດຂີ່ ແລະ ການໃຊ້ອຳນາດບາດໃຫຍ່. ຈຸດປະສົງຂອງຄວາມຍຸຕິທັມຄື ການບັງເກີດຂອງເອກະພາບໃນໝູ່ມະນຸດ."**[19]

**"ບໍ່ມີຄວາມຮຸ່ງເຮືອງໃດ ຈະທຽບເທົ່າຄວາມຮຸ່ງເຮືອງຂອງຄວາມຍຸຕິທັມ. ຄວາມເປັນລະບຽບ ຂອງໂລກ ແລະ ຄວາມຜາສຸກຂອງມະນຸດຊາດຂຶ້ນຢູ່ກັບຄວາມຍຸຕິທັມ."**[20]

**"ສິ່ງທີ່ອົບຮົມໂລກ ຄືຄວາມຍຸຕິທັມ ເພາະຄວາມຍຸຕິທັມ ໄດ້ຮັບການຄ້ຳຈູນໂດຍສອງເສົາຫຼັກ ນັ້ນຄືລາງວັນ ແລະ ການລົງໂທດ. ສອງເສົາຫຼັກນີ້ຄືບໍ່ເກີດຊີວິດຂອງໂລກ."**[21]

## ຕອນທີ 8

ຊ່ອງຫວ່າງລະຫວ່າງຄວາມລ້ຳລວຍ ແລະ ຄວາມທຸກຍາກກວ້າງອອກທຸກມື້, ແລະ ຂໍ້ຄວາມຂ້າງລຸ່ມ ນີ້ຈະຊ່ວຍໃຫ້ເຈົ້າສົນທະນາກັບເພື່ອນໆຂອງເຈົ້າກ່ຽວກັບຫົວຂໍ້ດັ່ງກ່າວ.

ໃນປັດຈຸບັນ, ເນື່ອງຈາກການຂາດຄວາມສຳພັນທີ່ກົມກຽວກັນ ສະມາຊິກຂອງສັງຄົມບາງກຸ່ມຢູ່ຢ່າງສະບາຍໃຈໃນຄວາມສະດວກສະບາຍຢ່າງຫຼວງຫຼາຍ ແລະ ຫຼູຫຼາ, ໃນຂະນະທີ່ຄົນອື່ນໆອີກຫຼາຍຄົນຫິວໂຫຍ ແລະ ຕ້ອງການທີ່ພັກອາໄສ. ບາງຄົນມີຄວາມຮັ່ງມີຢ່າງມະຫາສານ ໃນຂະນະທີ່ຄົນອື່ນໆ ສິ້ນເນື້ອປະດາຕົວ.

ກົດຕ່າງໆຂອງສັງຄົມ ຄວນໄດ້ຮັບສ້າງ ແລະ ປະຕິບັດໃນລັກສະນະທີ່ຈະບໍ່ເຮັດໃຫ້ຄົນກຸ່ມຄົນໃດໜຶ່ງສາມາດຮວບຮວມເອົາຄວາມຮັ່ງມີຫຼາຍຈົນເກີນໄປ ແລະ ເຮັດໃຫ້ຄົນອີກກຸ່ມຢູ່ຢ່າງຂາດແຄນ. ນີ້ບໍ່ໄດ້ໝາຍຄວາມວ່າ ທຸກຄົນຈະຕ້ອງມີເທົ່າກັນ, ເພາະຄວາມແຕກຕ່າງຂອງລະດັບ ແລະ ຄວາມສາມາດປາກົດຂຶ້ນໃນທຸກການສ້າງສັນ. ແຕ່ຄວາມຮັ່ງມີຢ່າງເຫຼືອເຟືອທີ່ໜ້າລັງກຽດ ທີ່ມາຄວບຄູ່ກັບຄວາມຍາກຈົນທີ່ເສື່ອມຊາມ ສາມາດຍົກເລີກໄດ້. ຖ້າມັນເໝາະສົມສຳລັບນາຍທຶນທີ່ຈະມີຊັບສິນ ມັນກໍເໝາະເຊັ່ນກັນ ທີ່ຄົນງານຈະໄດ້ຮັບວັດຖຸປັດໃຈຢ່າງພໍພຽງໃນການດຳລົງຊີບ. ເມື່ອໃດທີ່ເຮົາເຫັນຄວາມທຸກຍາກ, ບ່ອນນັ້ນກໍຍ່ອມມີການກົດຂີ່.

ສາລະສຳຄັນຂອງບັນຫານີ້ຄື ຄວາມຍຸຕິທັມອັນສູງສົ່ງ ຈະຕ້ອງປາກົດຢູ່ໃນສະພາບການຕ່າງໆຂອງມະນຸດ. ພື້ນຖານຂອງສະພາບເສດຖະກິດທັງໝົດ ແມ່ນມີລັກສະນະອັນສູງສົ່ງ ແລະພົວພັນກັບໂລກແຫ່ງຈິດໃຈແລະວິນຍານ. ຄົນຮັ່ງມີຕ້ອງຖວາຍຄວາມອຸດົມສົມບູນ; ພວກເຂົາຕ້ອງເຮັດໃຫ້ຈິດໃຈຂອງພວກເຂົານຸ້ມນວນລົງ ແລະ ປູກຝັງສະຕິປັນຍາທີ່ມີຄວາມເຫັນອົກເຫັນໃຈ. ຫົວໃຈຕ້ອງໄດ້ເຮັດໃຫ້ເຊື່ອມປະສານກັນ, ຄວາມຮັກກາຍເປັນສິ່ງທີ່ມີອິດທິພົນຫຼາຍ ຈົນເຮັດໃຫ້ຄົນຮັ່ງມີເຕັມໃຈຫຼາຍທີ່ສຸດ ທີ່ຈະລົງມືສ້າງການປ່ຽນແປງທາງດ້ານເສດຖະກິດຢ່າງຖາວອນ. ພວກເຂົາເອງຕ້ອງຮັບຮູ້ວ່າ ມັນບໍ່ແມ່ນພຽງແຕ່ບໍ່ຍຸຕິທັມ ຫຼືບໍ່ຖືກຕ້ອງຕາມກົດທີ່ ພວກເຂົາຄວນມີຊັບສິນອັນມະຫາສານ ໃນຂະນະທີ່ມີຄວາມທຸກຍາກຫຼາຍຢູ່ໃນຊຸມຊົນ. ດ້ວຍວິທີນີ້, ແມ້ວ່າການເກັບຮັກສາສົມບັດໄວ້ຢ່າງຫຼວງຫຼາຍ ພໍທີ່ຈະເຮັດໃຫ້ພວກເຂົາມີຊີວິດທີ່ສະດວກສະບາຍ, ພວກເຂົາກໍເຕັມໃຈຈະມອບສົມບັດຂອງພວກເຂົາ.

1. ຈົ່ງອ່ານຂໍ້ຄວາມຂ້າງຕົ້ນ ແລະ ສຶກສາໃນກຸ່ມຂອງເຈົ້າດັ່ງທີ່ເຄີຍເຮັດຜ່ານມາ. ມັນຈະມີຫຼາຍໆຄວາມກັງວົນທີ່ຢູ່ໃນຄວາມຄິດຂອງຜູ້ຄົນທີ່ກ່ຽວໂຍງກັບເລື່ອງຄວາມລ້ຳລວຍ ແລະ ຄວາມທຸກຍາກ - ເຊັ່ນວ່າ ການຈ້າງງານ, ຄ່າແຮງ, ຄ່າບ້ານ ແລະອື່ນໆ. ຂໍໃຫ້ເຈົ້າຄິດເຖິງຫົວຂໍ້ໃນການປຶກສາຫາລືອື່ນໆທີ່ອາດໄດ້ຮັບປະໂຫຍດຈາກແນວຄວາມຄິດຕ່າງໆຈາກຂໍ້ຄວາມດັ່ງກ່າວນີ້?

2. ເຈົ້າຈະຕອບຢ່າງໃດຫາກມີຜູ້ໃດຜູ້ໜຶ່ງ ທີ່ໄດ້ຍິນເຈົ້າກ່າວເຖິງແນວຄວາມຄິດ ຈາກຂໍ້ຄວາມຂ້າງຕົ້ນນັ້ນຖາມວ່າ “ເຈົ້າກຳລັງກ່າວວ່າ ພວກຄົນຮັ່ງມີຈະຍອມເຂົ້າໃຈ ແລະ ສະໜັບສະໜຸນກົດໝາຍພາສີອັນເຄັ່ງຄັດ ແລະ ພວກເຂົາກໍຈະເຕັມໃຈທີ່ຈະຈ່າຍ ໃນສ່ວນທີ່ພວກເຂົາຄວນຈະ ຈ່າຍຊັ້ນບໍ? ແມ່ນຫຍັງທີ່ເຮັດໃຫ້ເຈົ້າຄິດວ່າມັນຈະເປັນໄປໄດ້?”

3. ຂໍແນະນຳໃຫ້ເຈົ້າທ່ອງຈຳພຣະວັດຈະນະຕໍ່ໄປນີ້ ຈາກທັມມະລິຂິດຂອງ ພຣະບາຮາອຸລລາຫ໌:

"...ເຈົ້າຕ້ອງອອກໝາກຜົນທີ່ດີງາມ ແລະ ວິເສດ, ທີ່ຕົວເຈົ້າເອງ ແລະ ຜູ້ອື່ນອາດໄດ້ຮັບຜົນປະໂຫຍດຈາກໝາກຜົນນັ້ນ. ດັ່ງນັ້ນ, ຈຶ່ງເປັນພາລະໜ້າທີ່ຂອງທຸກຄົນທີ່ຈະຕ້ອງມີ ສີລະປາຊີບ ແລະ ວິຊາຊີບຕ່າງໆ, ເພື່ອຈຸດປະສົງແຫ່ງຄວາມລັບຂອງຄວາມອຸດົມສົມບູນ, ໂອ ມະນຸດແຫ່ງຄວາມເຂົ້າໃຈ!"[22]

"ຫາກວ່າດວງຕາຂອງເຈົ້າ ຫັນໄປຫາຄວາມເມດຕາກະລຸນາ, ຈົ່ງປະຖິ້ມສິ່ງຕ່າງໆທີ່ໃຫ້ຜົນປະໂຫຍດແກ່ເຈົ້າ ແລະ ຈົ່ງຍຶດໝັ້ນຕໍ່ສິ່ງທີ່ຈະໃຫ້ຜົນປະໂຫຍດແກ່ມະນຸດຊາດ. ແລະຫາກວ່າ ດວງຕາຂອງເຈົ້າຫັນໄປຫາຄວາມຍຸຕິທັມ, ເຈົ້າຈົ່ງເລືອກໃຫ້ເພື່ອນບ້ານຂອງຕົນເອງ ໃນສິ່ງທີ່ເຈົ້າເລືອກໃຫ້ຕົນເອງ."[23]

"ຂໍພຣະພອນຈົ່ງບັງເກີດແກ່ຜູ້ທີ່ເຫັນແກ່ອ້າຍນ້ອງຂອງເຂົາກ່ອນຕົນເອງ."[24]

"ບໍ່ມີການກະທຳທີ່ດີງາມ ຫຼື ຄວາມປາດຖະໜາໃດຈະສູນເສຍໄປ, ເພາະວ່າການກະທຳທີ່ເປັນກຸສົນແມ່ນເປັນຊັບສົມບັດທີ່ເກັບໄວ້ກັບພຣະຜູ້ເປັນເຈົ້າ ເພື່ອເປັນຜົນປະໂຫຍດຂອງຜູ້ທີ່ກະທຳ."[25]

"... ຢ່າໄດ້ເອົາໃຈໃສ່ ໃນການລະເມີດຂອບເຂດຂອງຄວາມພໍເໝາະພໍຄວນ, ແລະຈົ່ງຢ່າໄດ້ຢູ່ໃນໝູ່ຂອງຜູ້ທີ່ຟູມເຟືອຍ."[26]

## ຕອນທີ 9

ຂ້າງລຸ່ມນີ້ແມ່ນແນວຄວາມຄິດຈຳນວນໜຶ່ງ ທີ່ຈະຊ່ວຍໃຫ້ເຈົ້າມີສ່ວນຮ່ວມໃນການປຶກສາຫາລືກ່ຽວກັບຫົວຂໍ້ ອະຄະຕິ.

ອະຄະຕິໃນທຸກຮູບແບບ -ທາງສາສະໜາ, ເຊື້ອຊາດ, ເພດ, ຊົນເຜົ່າ, ເສດຖະກິດ - ທຳລາຍໂຄງສ້າງຂອງມະນຸດ ແລະ ຍັງຄັດຕໍ່ພຣະບັນຫຍັດຂອງພຣະຜູ້ເປັນເຈົ້າ. ເປັນເວລາຫຼາຍພັນປີ ທີ່ມະນຸດໄດ້ທຸກທໍລະມານຈາກສົງຄາມ ແລະ ການນອງເລືອດຈາກກັນແລະກັນໂດຍອະຄະຕິເລົ່ານີ້. ຕາບໃດທີ່ມັນຍັງຄົງຢູ່ ມະນຸດຊາດຈະບໍ່ມີວັນໄດ້ພັກ.

ພຣະຜູ້ເປັນເຈົ້າ ໄດ້ສົ່ງສາສະນະທູດຂອງພຣະອົງມາ ເພື່ອຈຸດປະສົງດຽວໃນການສ້າງຄວາມ ຮັກ ແລະຄວາມສາມັກຄີ. ທຸກພຣະຄຳພີສະຫວັນແມ່ນຖືກຂຽນຂຶ້ນດ້ວຍຄວາມຮັກ. ເພາະຖ້າມັນເປັນເຫດຂອງຄວາມແຕກແຍກແລ້ວ ມັນກໍຈະໄຮ້ປະໂຫຍດ. ດ້ວຍເຫດນີ້ ອະຄະຕິທາງສາສະໜາຈຶ່ງຂັດຕໍ່ ພຣະປະສົງ ແລະ ພຣະບັນຫຍັດຂອງພຣະຜູ້ເປັນເຈົ້າເປັນຢ່າງຍິ່ງ.

ອະຄະຕິລະຫວ່າງປະເທດ ແມ່ນໄຮ້ເຫດຜົນໂດຍສິ້ນເຊີງ. ໂລກນີ້ເປັນພຽງແຜ່ນດິນດຽວ, ປະເທດດຽວ. ເສັ້ນກັ້ນ ແລະ ເຂດແດນທີ່ຂັ້ນກັ້ນລະຫວ່າງປະເທດ ລ້ວນແລ້ວແຕ່ເປັນການຈິນຕະນາການ , ເພາະພຣະຜູ້ເປັນເຈົ້າບໍ່ເຄີຍສ້າງສິ່ງເລົ່ານີ້. ຜູ້ຄົນປະກາດວ່າ ແມ່ນ້ຳແມ່ນເສັ້ນຂັ້ນກັ້ນລະຫວ່າງສອງປະເທດ, ແລະໃຫ້ຊື່ເອີ້ນຂອງແຕ່ລະຝັ່ງ, ໃນຂະນະທີ່ແມ່ນ້ຳແມ່ນຖືກສ້າງຂຶ້ນເພື່ອທັງສອງປະເທດ ແລະ ເປັນດັ່ງເຊັ່ນເສັ້ນເລືອດຈາກທຳມະຊາດໃຫ້ແກ່ທຸກຄົນ. ມັນບໍ່ແມ່ນສິ່ງທີ່ເພີ້ຝັນ ແລະ ໂງ່ເຂົາຫຼືບໍ ທີ່ຜູ້ຄົນຜັກດັນທີ່ຈະໃຫ້ພຣະພອນຕ່າງໆຂອງຊີວິດກາຍເປັນເຫດຂອງສົງຄາມ ແລະ ການທຳລາຍລ້າງ?

ອະຄະຕິທາງເຊື້ອຊາດ ບໍ່ແມ່ນສິ່ງອື່ນໃດເລີຍນອກຈາກຄວາມເຊື່ອທີ່ງົມງວາຍ. ສີຜິວຂອງບຸກຄົນໃດໜຶ່ງແມ່ນເປັນພຽງຜົນໄດ້ຮັບຈາກການປັບຕົວຕາມການເວລາຂອງສະພາບອາກາດ ແລະ ສິ່ງແວດລ້ອມຂອງບັນພະບຸລຸດຂອງບຸກຄົນນັ້ນໆ. ລັກສະນະສະເພາະຕົວ ແມ່ນມາດຕະຖານທີ່ແທ້ຈິງຂອງມະນຸດ. ຄວາມເປັນເລີດ ບໍ່ໄດ້ຂຶ້ນຢູ່ກັບເຊື້ອຊາດ ຫຼື ສີຜິວ. ຄວາມສັດທາ, ຄວາມບໍລິສຸດຂອງຫົວໃຈ, ການກະທຳທີ່ດີງາມ ແລະວາຈາທີ່ເຊື່ອຖືໄດ້ ຄືສິ່ງທີ່ເປັນທີ່ຍອມຮັບນະທໍລະນີປະຕູຂອງພຣະຜູ້ເປັນເຈົ້າ.

ເປັນເວລາທີ່ຍາວນານ, ທີ່ສະຕີຖືກຢູ່ໃຕ້ການບັງຄັບບັນຊາຂອງຜູ້ບຸລຸດ ແລະ ໄດ້ຮັບການປະຕິບັດທີ່ຜິດໆ. ຄວາມແຕກຕ່າງລະຫວ່າງຍິງ ແລະ ຊາຍ ແມ່ນຄວາມຈຳເປັນຂອງໂລກທາງຮ່າງກາຍນີ້; ເພາະໃນໂລກແຫ່ງຈິດວິນຍານທຸກຄົນເທົ່າທຽມກັນ. ໃນສາຍຕາຂອງພຣະຜູ້ເປັນເຈົ້າ, ຈະບໍ່ມີຄວາມແຕກຕ່າງລະຫວ່າງຍິງ ແລະ ຊາຍ. ພຣະອົງຊົງປະສິດປະສາດມະນຸດທຸກຄົນດ້ວຍສະຕິປັນຍາ ແລະການຮັບຮູ້. ທຸກຄົນມີຄວາມສາມາດໃນການໄດ້ມາເຊິ່ງຄຸນນະທຳຕ່າງໆ. ບໍ່ມີສະພາບການໃດໃນປັດຈຸບັນ ທີ່ຈະເຮັດໃຫ້ສະພາບທາງເພດຂອງບຸກຄົນໃດໜຶ່ງ ເປັນເຫດໃຫ້ຕ້ອງໄດ້ຮັບການຈຳແນກ.

ອີງຕາມຖ້ອຍຄຳໃນພັນທະສັນຍາສະບັບເດີມ, ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຂໍໃຫ້ເຮົາສ້າງມະນຸດໃນພາບລັກຂອງເຮົາ ຕາມຄວາມໂປດປານຂອງເຮົາ." ເປັນທີ່ຊັນເຈນວ່າ ສິ່ງນີ້ໃຊ້ກັບຜູ້ຍິງເຊັ່ນກັນ. ມະນຸດຖືກສ້າງຂຶ້ນມາຕາມພາບລັກຂອງພຣະຜູ້ເປັນເຈົ້າ; ກ່າວຄືຄຸນນະທັມທັງຫຼາຍຂອງພຣະຜູ້ເປັນເຈົ້າໄດ້ສະທ້ອນ ແລະ ເປີດເຜີຍໃນພາບລັກທີ່ແທ້ຈິງຂອງມະນຸດ. ເຊິ່ງເປັນຄວາມຈິງຂອງມະນຸດທຸກຄົນ. ຈະຕ້ານທານໄດ້ພຽງໃດວ່າ ພາບລັກເລົ່ານັ້ນຈະຕ້ອງມີພຽງແຕ່ສີດຽວ, ເຊື້ອຊາດຫຼືສັນຊາດ ໄດ້ຖືກສ້າງສັນຕາມຄວາມໂປດປານຂອງພຣະຜູ້ເປັນເຈົ້າ. ຈະເປັນເລື່ອງໄຮ້ສາລະພຽງໃດທີ່ຈະປຽບເປີຍວ່າ ມີແຕ່ເສດຖີເທົ່ານັ້ນ ທີ່ຖືກສ້າງຕາມພາບລັກຂອງ

ພຣະຜູ້ເປັນເຈົ້າ ຫຼືຄິດວ່າ ບັນທັດຖານຂອງການເຂົ້າໃກ້ພຣະຜູ້ເປັນເຈົ້ານັ້ນ ແມ່ນການມີຕຳແໜ່ງສູງໃນສັງຄົມ. ມະນຸດຊາດບໍ່ສາມາດບັນລຸ ເຖິງຄວາມສະຫວ່າງສະໄຫວໄດ້ ເວັ້ນເສຍຈາກການລະຖິ້ມອັກຄະຕິ ແລະ ການໄດ້ມາເຊິ່ງອານາຈັກ ແຫ່ງສິນລະທັມທັງຫຼາຍ.

1. ຂໍໃຫ້ສຶກສາຂໍ້ຄວາມຂ້າງຕົ້ນດັ່ງທີ່ເຄີຍເຮັດໃນຕອນທີ່ຜ່ານມາ ແລະ ຂໍໃຫ້ທ່ານຄິດເຖິງຄວາມທ້າທາຍຕ່າງໆທີ່ເພື່ອນໆ ແລະ ເພື່ອນບ້ານຂອງເຈົ້າ ເຄີຍຍົກຂຶ້ນມາໃນການສົນທະນາທີ່ຮຽກຮ້ອງໃຫ້ມີການກຳຈັດອະຄະຕິ.

________________________________________

________________________________________

________________________________________

______________________________

2. ເຈົ້າຈະຕອບວ່າແນວໃດ ຫາກມີຜູ້ໃດຜູ້ໜຶ່ງໄດ້ຍິນເຈົ້າແບ່ງປັນ ເຖິງແນວຄວາມຄິດຂ້າງເທິງແລ້ວຖາມວ່າ "ເປັນໄປໄດ້ບໍ່ທີ່ເຮົາຈະມີອະຄະຕິໂດຍທີ່ບໍ່ຮູ້ຕົວ?"

________________________________________

________________________________________

__________________________________

3. ເຈົ້າອາດຈະມີໂອກາດທີ່ຈະລວມເອົາ ແນວຄວາມຄິດຕ່າງໆຈາກພຣະວັດຈະນະຂອງ ພຣະບາຮາອຸລລາຫ໌ ເລົ່ານີ້ເຂົ້າໃນການປຶກສາຫາລືຂອງເຈົ້າ.

**"ໂລກເປັນພຽງແຜ່ນດິນດຽວ, ແລະ ມະນຸດທຸກຄົນກໍເປັນພົນລະເມືອງຂອງປະເທດນັ້ນໆ."[27]**

**"ຕົ້ນອ່ອນທັງໝົດຂອງໂລກໄດ້ປາກົດຂຶ້ນ ຈາກຕົ້ນໄມ້ຕົ້ນດຽວ, ແລະ ຍອດນ້ຳທັງໝົດມາຈາກມະຫາສະໝຸດດຽວກັນ, ແລະ ການດຳລົງຢູ່ຂອງຊັບພະສິ່ງທັງປວງ ຂຶ້ນກັບຊັບພະສິ່ງດຽວ."[28]**

**"ແທ້ຈິງແລ້ວ ມະນຸດຜູ້ເຊິ່ງໃນທຸກວັນນີ້ ໄດ້ອຸທິດຕົນເອງໃຫ້ກັບການຮັບໃຊ້ ແກ່ມະນຸດຊາດທັງມວນ."[29]**

**"ແສງສະຫວ່າງຂອງອຸປະນິໄສທີ່ດີນັ້ນ ຢູ່ເໜືອແສງສະຫວ່າງຂອງດວງຕາເວັນ ແລະ ລັດສະໝີຂອງມັນ."[30]**

"ຄວາມແຕກຕ່າງຂອງມະນຸດ ບໍ່ໄດ້ຢູ່ທີ່ເຄື່ອງປະດັບ ຫຼືຄວາມຮັ່ງມີ, ແຕ່ຢູ່ທີ່ພຶດຕິກຳທີ່ດີງາມ ແລະ ຄວາມເຂົ້າໃຈທີ່ແທ້ຈິງ."[31]

"ພຣະຜູ້ເປັນເຈົ້າຊົງປະທານ ການຊ່ວຍເຫຼືອຈາກພຣະກາລຸນາທິຄຸນໃຫ້ແກ່ເຈົ້າ ພາຍໃຕ້ທຸກ ສະພາບການ ເພື່ອສະຫຼາຍຮູບປັ້ນທາງໄສຍະສາດ ແລະ ຈີກມ່ານທີ່ປິດກັ້ນຈິນຕະນາການ ຂອງມະນຸດ."[32]

"ໃນບັນດາມະນຸດທັງປວງ ຜູ້ປະມາດທີ່ສຸດແມ່ນຜູ້ທີ່ໂຕ້ຖຽງກັນຢ່າງບໍ່ມີເຫດຜົນ ແລະ ສະ ແຫວງ ຫາຄວາມກ້າວໜ້າຂອງຕົນເອງເໜືອຄົນອື່ນ."[33]

## ຕອນທີ 10

ເມື່ອເຈົ້າໂອ້ລົມຢູ່ກັບເພື່ອນໆ ເຈົ້າອາດຈະສາມາດໂຍງໃຍໄປເຖິງແນວຄິດກ່ຽວກັບ ຄວາມສະ ເໝີພາບລະຫວ່າງຍິງ-ຊາຍໄດ້ ດັ່ງໃນຂໍ້ຄວາມຕໍ່ໄປນີ້:

ດວງອາທິດເປີດເຜີຍສະພາວະທີ່ແທ້ຈິງຂອງທຸກຊັບພະສິ່ງໃນໂລກ ໂດຍຜ່ານແສງສະຫວ່າງ ແລະ ຄວາມຮ້ອນຂອງມັນ. ໝາກໄມ້ທີ່ເຊື່ອງຊ້ອນຢູ່ໃນຕົ້ນໄມ້ໄດ້ອອກມາປາກົດຕາມກິ່ງກ້ານຕ່າງໆລ້ວນ ແຕ່ດ້ວຍອຳນາດຂອງດວງອາທິດ. ໃນທຳນອງດຽວກັນ, ດວງອາທິດແຫ່ງສັດຈະທັມຂອງພຣະບາ ຮາອຸລລາຫ໌ ເຊິ່ງສ່ອງແສງລັດສະໝີອັນເຈີດຈ້າໃນທ້ອງຟ້າແຫ່ງທັມ, ໄດ້ເປີດເຜີຍສັດຈະທັມ ອັນບໍ່ ເປັນທີ່ປາກົດມາກ່ອນໃນອາດີດອອກມາ. ໜຶ່ງໃນສັດຈະທັມນັ້ນຄື ຄວາມສະເໝີພາບລະຫວ່າງຍິງ-ຊາຍ. ໂດຍລັດສະໝີຂອງດວງອາທິດແຫ່ງສັດຈະທັມນີ້, ຄວາມສາ ມາດຕ່າງໆຂອງແມ່ຍິງ ໄດ້ຮັບ ການສ່ອງສະຫວ່າງ ຈົນຄວາມສະເໝີພາບລະຫວ່າງຍິງ-ຊາຍ ເປັນຄວາມຈິງທີ່ຍອມຮັບກັນໃນ ປັດຈຸບັນ.

ພຣະບາຮາອຸລລາຫ໌ ຊົງກ່າວໄວ້ຢ່າງຊັດເຈນວ່າ ໃນສາຍພຣະເນດຂອງພຣະຜູ້ເປັນເຈົ້ານັ້ນ ບໍ່ມີ ຄວາມແຕກຕ່າງລະຫວ່າງແມ່ຍິງ ແລະ ຜູ້ຊາຍ. ສະພາບຄວາມບໍ່ສະເໝີພາບ ທີ່ໄດ້ເກີດຂຶ້ນມາ ຕະຫຼອດຍຸກສະໄໝ ບໍ່ແມ່ນຜົນຂອງຄວາມເໜືອກວ່າຂອງຜູ້ຊາຍ; ແຕ່ເປັນເພາະແມ່ຍິງບໍ່ໄດ້ຮັບ ໂອກາດທີ່ເທົ່າທຽມກັນ ທີ່ຈະສາມາດພັດທະນາສັກກະຍະພາບຕ່າງໆຂອງບັນດາແມ່ຍິງ. ຢ່າງໃດກໍ່ ຕາມ ແມ່ນວ່າຈະມີອະຄະຕິຕ່າງໆຫຼວງຫຼາຍຕໍ່ເພດຍິງ, ໃນປະຫວັດສາດ ກໍ່ຍັງມີບັນທຶກກ່ຽວກັບ ຊີວິດຂອງແມ່ຍິງຈຳນວນຫຼວງຫຼາຍ ທີ່ໄດ້ຮັບຄວາມສຳເລັດອັນຍິ່ງໃຫຍ່.

ໜຶ່ງໃນແມ່ຍິງດັ່ງກ່າວ ຄືນັກກະວີຍິງຊາວເປີເຊຍຜູ້ມີນາມ ວ່າ ທາເຣເຣ. ນາງໄດ້ກຳເນີດຂຶ້ນໃນຊ່ວງຕົ້ນສະຕະວັດທີ່ 18 ໃນປະເທດທີ່ແມ່ຍິງຢູ່ພາຍໃຕ້ການບັງຄັບບັນຊາຂອງຜູ້ຊາຍໂດຍສິ້ນເຊີງ. ນາງເປັນແມ່ຍິງຄົນທຳອິດ ທີ່ຍອມຮັບສາສະໜາໃໝ່ຂອງພຣະຜູ້ເປັນເຈົ້າ. ເມື່ອນາງໄດ້ເປັນພະຍານຕໍ່ການເປີກຂຶ້ນຂອງວັນໃໝ່, ນາງກໍ່ເຊື່ອໝັ້ນວ່າເວລາໄດ້ມາເຖິງແລ້ວ ທີ່ສັດຈະທັມ ຂອງຄວາມສະເໝີ ພາບລະຫວ່າງຍິງ-ຊາຍຈະເປັນທີ່ຍອມຮັບ. ນາງໄດ້ທຸ້ມເທກຳລັງ ແລະ ຄວາມພະຍາຍາມເພື່ອປະກາດສັດຈະທັມນີ້. ຄວາມຮູ້ ແລະ ການເວົ້າຢ່າງຄ່ອງແຄ້ວຂອງນາງເຮັດໃຫ້ບັນດານັດປາດຜູ້ຊາຍໃນສະໄໝນັ້ນຕະລຶງ. ແມ່ນວ່າຈະມີແຮງຕ້ານທັງຫຼາຍຈາກກະສັດ ຜູ້ກົດຂີ່ລາດສະດອນ ແລະ ນັກບວດຜູ້ທີ່ໂງ່ເຂົາແລະຍິ່ງທະນົງ ຈະລຸກຂຶ້ນຕໍ່ຕ້ານນາງ, ນາງກໍ່ບໍ່ເຄີຍລັງເລໃຈທີ່ຈະເວົ້າເຖິງຄວາມຈິງນີ້. ແລະ ໃນທີ່ສຸດ ນາງກໍໄດ້ສະຫຼະຊີວິດເພື່ອສາສະໜາໃໝ່ທີ່ນາງຍຶດຖືຢ່າງໝັ້ນຄົງ.

ການເຊື່ອໃນສິ່ງທີ່ພຣະຜູ້ເປັນເຈົ້າບໍ່ຊົງສົນພຣະໄທຄື ຄວາມໂງ່ງ່າວ ແລະ ຄວາມເຊື່ອທີ່ງົມງວາຍ. ປັດຈຸບັນນີ້ ແມ່ຍິງຄວນໄດ້ຮັບໂອກາດທຸກໆຢ່າງ ທີ່ຈະໄດ້ຮັບການສຶກສາ ແລະຢູ່ໃນສະຖານທີ່ເທົ່າທຽມກັນກັບຜູ້ຊາຍໃນທຸກດ້ານຂອງພາລະກິດຂອງມະນຸດ. ຄວາມກ້າວໜ້າທີ່ແທ້ຈິງຂອງມະນຸດຊາດ ຈະເປັນສິ່ງທີ່ເປັນໄປບໍ່ໄດ້ ຈົນກວ່າຄວາມສະເໝີພາບລະຫວ່າງ ຍິງ-ຊາຍ ຈະເປັນຈິງຂຶ້ນໃນໂລກນີ້, ຄືກັນກັບທີ່ເປັນຢູ່ໃນໂລກແຫ່ງຈິດວິນຍານ.

1. ຢ່າງເຊັ່ນເຄີຍ ເຈົ້າຄວນສຶກສາຂໍ້ຄວາມຂ້າງຕົ້ນໃນກຸ່ມຂອງເຈົ້າ ແລະ ຝຶກທີ່ຈະເວົ້າເຖິງແນວຄວາມຄິດຕ່າງໆນັ້ນ. ມີບົດສົນທະນາໃດແດ່ທີ່ເຈົ້າມີກັບເພື່ອນໆຂອງເຈົ້າໃນຊ່ວງນີ້ ທີ່ໄດ້ຮັບປະໂຫຍດຈາກຄວາມຮູ້ທີ່ໄດ້ສະເໜີໃຫ້? ແມ່ນຫຍັງທີ່ເປັນຫົວຂໍ້ຂອງການສົນທະນານັ້ນ?

______________________________________________

______________________________________________

______________________________________________

______________________________

2. ມີຄວາມເຊື່ອ ແລະ ການປະຕິບັດໃດແດ່ທີ່ຄວນໄດ້ຮັບການປ່ຽນແປງ ຫາກແມ່ຍິງໄດ້ຮັບຄວາມເທົ່າທຽມກັນກັບຜູ້ຊາຍໃນຕຳແໜ່ງການງານ ໃນທຸກໆໜ້າວຽກຂອງຄວາມພະຍາຍາມ?

______________________________________________

______________________________________________

__________________________________

3. ຂ້າງລຸ່ມນີ້ ຄືພຣະວັດຈະນະບາງຕອນ ຂອງພຣະບາຮາອຸລລາຫ໌ ທີ່ເຈົ້າອາດຈະປາຖະໜາທີ່ຈະທ່ອງຈຳ.

**"ແມ່ຍິງ ແລະ ຜູ້ຊາຍນັ້ນເທົ່າທຽມກັນມາໂດຍຕະຫຼອດ ແລະ ຈະຄົງເທົ່າທຽມກັນສະເໝີ ໃນສາຍພຣະເນດຂອງພຣະຜູ້ເປັນເຈົ້າ."[34]**

**"ເຈົ້າຮູ້ບໍ່ວ່າ ເປັນຫຍັງເຮົາພຣະອົງຈຶ່ງສ້າງພວກເຈົ້າທັງໝົດຂຶ້ນມາຈາກທຸລີດຽວກັນ? ກໍ່ເພື່ອວ່າຈະບໍ່ມີຜູ້ໃດຍົກຕົນຂົ່ມຜູ້ອື່ນ."[35]**

**"ໃນຍຸກນີ້ ພຣະຫັດແຫ່ງກະລຸນາທິຄຸນຂອງສະຫວັນ ໄດ້ກຳຈັດຄວາມແຕກຕ່າງທັງມວນອອກໄປ. ບັນດາຄົນຮັບໃຊ້ ແລະ ຍິງຮັບໃຊ້ທັງຫຼາຍຂອງພຣະຜູ້ເປັນເຈົ້າ ຕ່າງກໍ່ມີຖານະເທົ່າທຽມ ກັນ."[36]**

## ຕອນທີ 11

ຂໍ້ຄວາມຕອນສຸດທ້າຍນີ້ທີ່ເຮົາຈະໄດ້ສຶກສາແມ່ນກ່ຽວກັບຫົວຂໍ້ ການສຶກສາສາກົນ:

ການສົ່ງເສີມການສຶກສາເປັນສິ່ງຈຳເປັນອັນຮີບດ່ວນທີ່ສຸດຂອງພວກເຮົາໃນຍຸກນີ້. ບໍ່ມີປະເທດຊາດໃດຈະບັນລຸເຖິງຄວາມຮຸ່ງເຮືອງໄດ້ ຈົນກວ່າປະເທດນັ້ນຈະເນັ້ນໜັກວ່າການສຶກສາເປັນເລື່ອງສຳຄັນຫຼັກ. ເຫດຜົນຂັ້ນພື້ນຖານຂອງຄວາມເສື່ອມຂອງປະຊາຊົນ ກໍ່ຄືອະວິຊາ.

ການສຶກສາຕ້ອງເລີ້ມຕົ້ນຕັ້ງແຕ່ໄວທາລົກ. ເປັນໜ້າທີ່ຂອງບິດາ ແລະ ມານດາທີ່ຈະຕ້ອງ ພະຍາຍາມທຸກວິທີທາງ ທີ່ຈະໃຫ້ການສຶກສາແກ່ບຸດຂອງພວກເຂົາ, ຂັດເກົາອຸປະນິໄສຕ່າງໆ ຂອງພວກເຂົາ ຕາມແນວທາງຂອງກົດທາງຈິດວິນຍານ ແລະ ສິນລະທັມ, ແລະ ເຝິກຝົນຄວາມສາມາດທາງສິລະປະ ແລະ ວິທະຍາສາດແກ່ພວກເຂົາ. ມານດາທັງຫຼາຍເປັນຜູ້ໃຫ້ການສຶກສາຄົນທຳອິດຂອງມະນຸດຊາດ; ເປັນຜູ້ເຝົ້າດູແລທາລົກນ້ອຍຕັ້ງແຕ່ແບເບາະ ແລະ ທະນຸບຳລຸງເດັກເຫຼົ່ານັ້ນດ້ວຍນ້ຳນົມແຫ່ງຄວາມຮູ້. ເດັກທຸກຄົນຕ້ອງໄດ້ຮັບການສຶກສາ; ສິ່ງນີ້ເປັນສິ່ງທີ່ລະເລີຍບໍ່ໄດ້. ຫາກບິດາມານດາສາມາດທີ່ຈະຮັບພາລະຄ່າໃຊ້ຈ່າຍໃນເລື່ອງນີ້ໄດ້ ພວກເຂົາຕ້ອງກະທຳຕາມນັ້ນ. ຫາກບໍ່ເປັນເຊັ່ນນັ້ນແລ້ວ ຊຸມຊົນຈະຕ້ອງຈັດຫາວິທີທາງທີ່ຈະໃຫ້ການສຶກສາແກ່ເດັກຄົນນັ້ນ.

ການສຶກສາຄວນຊ່ວຍພັດທະນາໃຫ້ມະນຸດທຸກຄົນ ມີຄວາມປາດຖະໜາທີ່ຈະບັນລຸເຖິງຄວາມເປັນເລີດ. ເຮົາຄວນຮັກໃນຄວາມສົມບູນແບບຂອງການເປັນມະນຸດ ແລະ ພະຍາຍາມຢ່າງແຮງກ້າເພື່ອໄປສູ່ຄວາມສົມບູນນັ້ນ. ເຮົາຄວນຝັກໄຝ່ໃນຄວາມໂດດເດັ່ນທາງທັມ, ໃຫ້ເປັນທີ່ຮູ້ຈັກ ໃນຄຸນນະທັມສຳລັບໂລກມະນຸດ -ອັນໄດ້ແກ່ ຄວາມຈິງໃຈ, ຄວາມຈົ່ງຮັກພັກດີ, ການຮັບໃຊ້ຕໍ່ມະນຸດຊາດ, ຄວາມຮັກ ແລະ ຄວາມຍຸຕິທັມ. ເຮົາຈະຕ້ອງສະແຫວງຫາຄວາມໂດດເດັ່ນດ້ວຍຄວາມພະຍາຍາມທີ່ຈະສົ່ງເສີມສັນຕິພາບ ແລະ ຄວາມສາມັກຄີ ແລະ ສະໜັບສະໜູນ ການຮຽນຮູ້. ໜ້າທີ່ ທີ່ແທ້ຈິງຂອງການສຶກສາຄື ການນຳທາງມະນຸດໄປໃນທົນທາງນີ້ນັ້ນເອງ.

1. ຫຼັງຈາກສຶກສາຂໍ້ຄວາມຂ້າງຕົ້ນໃນກຸ່ມຂອງເຈົ້າແລ້ວ, ຂໍໃຫ້ເຈົ້າຈົ່ງລອງຊອກຫາເລື່ອງສຳຄັນ ທີ່ເພື່ອນໆຂອງເຈົ້າມີກ່ຽວກັບການສຶກສາ. ແນວຄວາມຄິດຂ້າງຕົ້ນນັ້ນ ຈະຊ່ວຍຕອບໂຈດກັບເລື່ອງສຳຄັນນີ້ໄດ້ຢ່າງໃດແດ່?

______________________________________________

______________________________________________

______________________________________________

______________________________

2. ຂໍແນະນຳໃຫ້ເຈົ້າທ່ອງຈຳພຣະວັດຈະນະຕໍ່ໄປນີ້ ຈາກທັມມະລິຂິດຂອງ ພຣະບາຮາອຸລລາຫ໌:

**"ເປັນສິ່ງບໍ່ເພິ່ງປາດຖະໜາທີ່ມະນຸດຈະຖືກປະຖິ້ມ ໃຫ້ຂາດຄວາມຮູ້ ຫຼືຄວາມຊຳນານ ເພາະເຂົາຈະເປັນດັ່ງເຊັ່ນຕົ້ນໄມ້ທີ່ບໍ່ແຕກດອກອອກໝາກ."**[37]

**"ຈົ່ງດັດແນວຄິດ ແລະ ຄວາມມຸ່ງຫວັງຂອງເຈົ້າ ໃນການໃຫ້ການສຶກສາແກ່ປະຊາຊົນ ແລະ ພີ່ນ້ອງໃນໂລກ..."**[38]

**"ສິລະປະ, ຫັດຖະກຳ ແລະ ວິທະຍາສາດ ຊ່ວຍຍົກລະດັບໂລກແຫ່ງການດຳລົງຢູ່, ແລະ ນຳມາເຊິ່ງຄວາມສູງສົ່ງຂອງໂລກ."**[39]

**"ໂດຍແທ້ຈິງແລ້ວ, ຄວາມຮູ້ເປັນສົມບັດອັນແທ້ຈິງຂອງມະນຸດ, ແລະ ເປັນແຫຼ່ງກຳເນີດແຫ່ງຄວາມຮຸ່ງເຮືອງ, ກະລຸນາທິຄຸນ, ຄວາມຫັນສາ, ຄວາມສູງສົ່ງ, ຄວາມເບີກບານ ແລະ ຄວາມຍິນດີແກ່ເຂົາ."**[40]

# ຕອນທີ 12

ສັນຕິພາບ ຄືຄວາມກັງວົນໜຶ່ງທີ່ຢູ່ໃນຄວາມຄິດຂອງທຸກໆຄົນ. ການສະຖາປະນາສັນຕິພາບນີ້ເປັນສິ່ງທີ່ຮີບດ່ວນ ແລະ ສຳຄັນທີ່ສຸດ. ບັດນີ້ເຈົ້າໄດ້ຄົ້ນຄິດກ່ຽວກັບຫຼັກການທີ່ສະຫຼຸບໄວ້ໃນຂໍ້ຄວາມກ່ອນໜ້ານີ້ແລ້ວ, ເຈົ້າອາດພົບວ່າ ເປັນປະໂຫຍດທີ່ຈະທົບທວນຄຳຖາມກ່ຽວກັບສັນຕິພາບສາກົນ.

ແນ່ນອນວ່າ ລັດຖະບານທັງຫຼາຍຕ້ອງດຳເນີນການຕາມຂັ້ນຕອນເພື່ອກຳຈັດສົງຄາມ. ຂໍ້ຕົກລົງທາງການເມືອງເພື່ອຍຸດຕິຂໍ້ຂັດແຍ່ງ ແລະ ຫຼຸດກອງກຳລັງອາວຸດ ມີຄວາມສຳຄັນຕໍ່ການສະແຫວງຫາສັນຕິພາບ, ເຊັ່ນດຽວກັບຮູບແບບຕ່າງໆ ຂອງການຮ່ວມມືສາກົນລະຫວ່າງປະເທດ. ສະນັ້ນ ບໍ່ວ່າມາດຕະການດັ່ງກ່າວຈະສຳຄັນພຽງໃດກໍຕາມ, ມັນຈະບໍ່ນຳໄປສູ່ສັນຕິພາບທີ່ຍັ້ງຢືນ ຫາກຫຼັກການທີ່ກ່າວເຖິງກ່ອນໜ້ານີ້ບໍ່ໄດ້ ກຳໜົດຂຶ້ນທົ່ວທັງໂລກ. ຈົນກວ່າປະຊາຊົນຈະຮຽນຮູ້ທີ່ຈະສຳຫຼວດຄວາມເປັນຈິງ ແລະ ຕະໜັກວ່າຄວາມຈິງເປັນໜຶ່ງດຽວ, ຈະບໍ່ມີຄວາມກຽດຊັງໃນໄວຊະລາ, ພວກເຮົາຕ້ອງຖາມຕົວເອງວ່າ ຈະຍັງຄົງສືບຕໍ່ຊ້ຳແລ້ວຊ້ຳອີກບໍ? ພວກເຮົາທຸກຄົນມາຈາກຕົ້ນກຳເນີດດຽວກັນ. ພຣະຜູ້ເປັນເຈົ້າເຝົ້າດູແລພວກເຮົາທຸກຄົນ ແລະ ເຝິກຝົນພວກເຮົາທຸກຄົນ ຜ່ານທາງບັນດາພຣະສາສະດາທັງຫຼາຍຂອງພຣະອົງ. ຄຳສອນຂອງເລົ່າພຣະສາ ສະດາຕັ້ງຢູ່ບົນພື້ນຖານອັນດຽວກັນ ດ້ວຍຄວາມຮັກ ແລະ ມິດຕະພາບ. ເມື່ອຍອມຮັບຄວາມເປັນໜຶ່ງດຽວ ຂອງສາສະໜາເທົ່ານັ້ນ ຈະຍຸດຕິການໂຕ້ແຍ້ງກັນທາງສາສະໜາ ແລະ ແສງສະຫວ່າງຂອງສາສະໜາ ສ່ອງທາງສູ່ຫົນທາງແຫ່ງສັນຕິພາບ. ພວກເຮົາຄວນຖາມຕໍ່ໄປວ່າ ວິທະຍາສາດແລະສາສະໜາບໍ່ມີຄວາມຈຳເປັນຫຼືບໍ່ທີ່ຈະເຮັດວຽກຮ່ວມກັນ, ເພື່ອກຳຈັດເມກແຫ່ງຄວາມເມີນເສີຍ ແລະ ສະແດງຄວາມຜິດພາດຂອງ ອັກຄະຕິໃນທຸກຮູບແບບ ເຊິ່ງເປັນອຸປະສັກອັນໃຫຍ່ຫຼວງຕໍ່ສັນຕິພາບ? ເປັນອີກຄຳຖາມໜຶ່ງທີ່ຖາມວ່າ ສາມາດສ້າງໂລກທີ່ສະຫງົບສຸກ ໄດ້ບໍ ຖ້າຫາກປັດຈຸບັນການຫຼຸດໂຕນກັນຫຼາຍລະຫວ່າງ ຄົນຮັ່ງມີແລະຄົນຍາກຈົນ ບໍ່ໄດ້ຖືກກ່າວເຖິງໃນທົ່ວທຸກມຸມໂລກ? ແລະ ດ້ວຍຄວາມມານະບາກບັ່ນຂອງຄວາມເປັນມະນຸດ ຈົນກວ່າຜູ້ຍິງຈະໄດ້ຮັບອະນຸຍາດ ໃຫ້ເຂົ້າມີສ່ວນຮ່ວມໃນທຸກດ້ານເທົ່າທຽມກັນກັບຜູ້ຊາຍ ຄວາມຮຸນແຮງທີ່ມີລັກສະນະໂດດເດັ່ນໃນປະຫວັດສາດ ຈະຫຼີກທາງໃຫ້ແກ່ສັນຕິພາບ ແລະ ຄວາມມັ່ງຄັ່ງຢ່າງແທ້ຈິງ. ຄົນລຸ້ນຫຼັງຕ້ອງໄດ້ຮັບການສຶກສາ ໃນລະດັບສາກົນຕາມກົດຕ່າງໆ, ບໍ່ດັ່ງນັ້ນ ຄວາມຫວັງທຸກຢ່າງເພື່ອສັນຕິພາບຈະຖືກພັງທະລາຍລົງ. ເຈົ້າອາດປາດຖະໜາທີ່ຈະທ່ອງຈຳຖ້ອຍຄຳຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌ ເພື່ອເຈົ້າຈະໄດ້ແບ່ງປັນກັບຄົນອື່ນໆ ທີ່ເປັນຫ່ວງອານາຄົດຂອງມະນຸດຊາດ:

> **"ຄວາມຜາສຸກຂອງມະນຸດຊາດ, ສັນຕິພາບ ແລະ ຄວາມປອດໄພ, ບໍ່ສາມາດບັນລຸໄດ້ ນອກຈາກວ່າຄວາມສາມັກຄີຂອງມະນຸດຊາດ ຈະໄດ້ຮັບການສະຖາປະນາຢ່າງໝັ້ນຄົງ."**[41]

## ເອກະສານອ້າງອີງ


1. ພຣະອັບດຸລບາຮາ, ກ່າວໂດຍ ທ່ານ ໂຊກີ ເອຟເຟັນດີ, *World Order of Baha'u'llah: Selected Letters* (Wilmette: Baha'i Publishing Trust, 1991), ໜ້າທີ 139.
2. *Gleanings from the Writings of Baha'u'llah,* CIX, ໜ້າທີ 215.
3. Ibid., CXXXII, ໜ້າທີ 287.
4. Ibid., XXXIV, ໜ້າທີ 79-80.
5. *Tablets of Baha'u'llah Revealed after Kitab-i-Aqdas*, (Wilmette: Baha'i Publishing Trust, 1994), ໜ້າທີ 161.
6. *Gleanings from the Writings of Baha'u'llah,* CXI, ໜ້າທີ 217.
7. Ibid., XLII, ໜ້າທີ 95.
8. Ibid., CX, ໜ້າທີ 215.
9. *Tablets of Baha'u'llah Revealed after Kitab-i-Aqdas*, ໜ້າທີ 210.
10. ພຣະບາຮາອຸລລາຫ໌, *The Kitab-i-Iqan: The Book of Certitude* (Wilmette: Baha'i Publishing Trust, 1983), ໜ້າທີ 142.
11. *Gleanings from the Writings of Baha'u'llah*, XXXIV, ໜ້າທີ 80.
12. Ibid., XXXVIII, ໜ້າທີ 70.
13. Ibid., XXIV, ໜ້າທີ 59.
14. Ibid., XXV, ໜ້າທີ 60.
15. Ibid., XIV, ໜ້າທີ 30.
16. Ibid., XXVIII, ໜ້າທີ 45.
17. Ibid., CVI, ໜ້າທີ 213.
18. Ibid., CVI, ໜ້າທີ 213.
19. Ibid., XCVI, ໜ້າທີ 196.
20. *Tablets of Baha'u'llah Revealed after Kitab-i-Aqdas*, ໜ້າທີ 129-30.
21. Ibid., ໜ້າທີ 63-64.
22. *Gleanings from the Writings of Baha'u'llah*, CXXXI, ໜ້າທີ 286.
23. Ibid., CXII, ໜ້າທີ 218.
24. Ibid., CXXXII, ໜ້າທີ 288.
25. Ibid., CXI, ໜ້າທີ 217.
26. *Tablets of Baha'u'llah Revealed after Kitab-i-Aqdas,* ໜ້າທີ 90.
27. Ibid., ໜ້າທີ 66-67.
28. ພຣະບາຮາອຸລລາຫ໌, cited in Shoghi Effendi, *The Advent of Divine Justice* (Wilmette: Baha'i Publishing Trust, 1990), ໜ້າທີ 28.
29. *Tablets of Baha'u'llah Revealed after Kitab-i-Aqdas*, ໜ້າທີ 27.
30. ພຣະບາຮາອຸລລາຫ໌, cited in *Women*, compiled the Research Department of the Universal House of Justice (Thornhill: Baha'i Canada Publication, 1991), no. 54, ໜ້າທີ 26
31. ພຣະບາຮາອຸລລາຫ໌, *ພຣະອັດຈະນະເຫຼັ້ມລັບ,* ພາກພາສາອາຫຼັບ, ຂໍ້ 68, ໜ້າທີ 20.
32. ພຣະບາຮາອຸລລາຫ໌, cited in *Women*, no.3, ໜ້າທີ 3.
33. ພຣະບາຮາອຸລລາຫ໌, cited in *Excellence in All Things*, complied by the Research Department of the Universal House of Justice (London: Baha'i Publishing Trust, 1989) no.5, ໜ້າທີ 2.
34. *Gleanings from the Writings of Baha'u'llah*, CLVI, ໜ້າທີ 333.
35. ພຣະບາຮາອຸລລາຫ໌, *Epistle to the Son of the Wolf* (Wilmette: Baha'i Publishing Trust, 1988), ໜ້າທີ 26.
36. Ibid., ໜ້າທີ 27.



# ຫົວຂໍ້ຫຼັກໃນການສຶກສາທັມມະເລີກເຊິ່ງ

ຈຸດປະສົງ

ເພື່ອພັດທະນານິດໄສໃນການຢ້ຽມຢາມໝູ່ເພື່ອນ ແລະ ເພື່ອນບ້ານໃກ້ຄຽງ
ເພື່ອສົນທະນາກ່ຽວກັບຫົວຂໍ້ຄວາມສຳຄັນທາງຈິດວິນຍານ

## ຕອນທີ 1

ໃນພາກທີສາມນີ້, ກໍຄືກັນກັບພາກກ່ອນໆ, ທີ່ກ່ຽວຂ້ອງກັບສິ່ງທີ່ຈະຊ່ວຍໃຫ້ພວກເຮົາສາມາດເຂົ້າສູ່ການສົນທະນາທີ່ມີຄວາມໝາຍ ແລະ ຍົກລະດັບການສົນທະນາຂອງພວກເຮົາ. ຈຸດມຸ່ງໝາຍແມ່ນຈຸດເນັ້ນຂອງພວກເຮົາໃນພາກທີສອງ ທີ່ຈະນຳສະເໜີຫຼາກຫຼາຍເຫດການເພື່ອຍົກລະດັບການສົນທະນາ ໂດຍອີງໃສ່ຫຼັກທັມທາງຈິດວິນຍານ. ໃນນີ້ພວກເຮົາຈະມຸ່ງເນັ້ນໄປທີ່ການລົງຢ້ຽມຢາມເຮືອນຂອງໝູ່ເພື່ອນ ແລະ ເພື່ອນບ້ານ, ເພື່ອສຳຫຼວດຊຸດຫົວຂໍ້ຫຼັກຮ່ວມກັນທີ່ເປັນສູນກາງຊີວິດຂອງຊຸມຊົນ.

ໃນບ້ານ ແລະ ແຖວບ້ານໃກ້ຄຽງຢູ່ໃນທົ່ວໂລກ, ກຸ່ມເພື່ອນມີສ່ວນຮ່ວມຢ່າງຈິງແທ້ໃນຊຸດກິດຈະກຳທີ່ມີຄວາມສຳພັນກັນ ເຊິ່ງລວມເຖິງການພົບປະກັນເພື່ອສັກກາລະບູຊາເປັນປະຈຳ, ຈັດຊັ້ນຮຽນເພື່ອການສຶກສາທາງຈິດວິນຍານໃຫ້ແກ່ເດັກນ້ອຍ, ການຈັດກຸ່ມເຍົາວະຊົນ, ການຮຽນກຸ່ມນ້ອຍ ແລະ ຄ້າຍຊາວໜຸ່ມ ແລະການຮຽນເລິກເຊິ່ງປະເພດຕ່າງໆ. ເນື່ອງຈາກຮູບແບບຂອງກິດຈະກຳເຫຼົ່ານີ້ຢັ່ງຮາກເລິກໃນທ້ອງຖິ່ນ ແລະເມື່ອຈຳນວນທີ່ເພີ່ມພູນຂຶ້ນ ຂອງຜູ້ອຸທິດຕົນເພື່ອການຮັບໃຊ້, ກຸ່ມແກນກາງຂອງເພື່ອນໆມີການຂະຫຍາຍ ແລະ ມີຄວາມເຂັ້ມແຂງຫຼາຍຂຶ້ນ. ໂຄງການຢ້ຽມຢາມເຮືອນມີຈຳນວນຫຼາຍຂຶ້ນເລື້ອຍໆ, ໃນບ້ານ ຫຼື ແຖວບ້ານໃກ້ຄຽງແມ່ນເປັນອົງປະກອບທີ່ສຳຄັນ ຂອງຂະບວນການສ້າງຊຸມຊົນທີ່ກຳລັງຮວບຮວມແຮງຜັກດັນ. ມີການກ່າວເຖິງຊຸດຫົວຂໍ້ຫຼັກທີ່ຫຼາກຫຼາຍ ໃນລະຫວ່າງການຢ້ຽມຢາມດັ່ງກ່າວ. ຍົກຕົວຢ່າງເຊັ່ນ: ຄູຂອງຊັ້ນຮຽນເດັກນ້ອຍບາຮາຍຕ້ອງໄດ້ເຊື້ອເຊີນຜູ້ປົກຄອງຂອງເດັກຫຼາຍຂຶ້ນເລື້ອຍໆ ເພື່ອສົນທະນາກ່ຽວກັບຫົວຂໍ້ທີ່ກ່ຽວຂ້ອງກັບການສຶກສາ. ການຢ້ຽມຢາມບ້ານໃນລັກສະນະດຽວກັນ ຈະຕ້ອງມີຂຶ້ນໃນບ້ານຂອງເຍົາວະຊົນ ແລະ ຊາວໜຸ່ມທີ່ເຮັດໜ້າທີ່ເປັນຜູ້ປຸກ ລະດົມກຸ່ມເຍົາວະຊົນ ແລະ ຜູ້ອຳນວຍຄວາມສະດວກເພື່ອປຶກສາຫາລືກ່ຽວກັບເລື່ອງທີ່ກ່ຽວຂ້ອງກັບຄວາມທ້າທາຍ ແລະ ໂອກາດທີ່ກ່ຽວຂ້ອງກັບຊ່ວງອາຍຸທີ່ມີແນວໂນ້ມໃນຊີວິດຂອງມະນຸດເຫຼົ່ານີ້. ການສົນທະນາທີ່ຈັດຂຶ້ນກັບສະມາຊິກໃນຄອບຄົວ ກ່ຽວກັບຫົວຂໍ້ທີ່ເຮັດໃຫ້ຄວາມຮູ້ຂອງພວກເຂົາເລິກເຊິ່ງຫຼາຍຂຶ້ນ ກ່ຽວກັບຄວາມສັດທາເຊິ່ງເປັນສິ່ງທີ່ສຳຄັນຄືກັນ. ສະຫຼຸບໄດ້ວ່າ, ຜົນຂອງການຢ້ຽມຢາມດັ່ງກ່າວ ທີ່ມີຕໍ່ວັດທະນະທັມແຫ່ງມິດຕະພາບທີ່ເກີດຂຶ້ນໃນຊຸມຊົນນັ້ນ ບໍ່ສາມາດປະເມີນໄດ້ຢ່າງສູງສົ່ງ.

## ຕອນທີ 2

ສຳລັບຈຸດປະສົງໃນພາກນີ້, ພວກເຮົາຈະເບິ່ງແຖວບ້ານໃກ້ຄຽງທີ່ຈິນຕະນາການໄວ້ ເຊິ່ງມີຂະບວນການທີ່ອະທິບາຍໄວ້ເບື້ອງຕົ້ນທີ່ກຳລັງມີຄວາມກ້າວໜ້າ ແລະ ພວກເຮົາຈະໃຊ້ເປັນບໍລິບົດໃນການກວດສອບປະເພດຂອງການສົນທະນາທີ່ອາດເກີດຂຶ້ນລະຫວ່າງການຢ້ຽມຢາມບ້ານ.

ອາເລຈັນດຣາ Alejandra ເປັນຍິງສາວທີ່ຮຽນຢູ່ປີສາມຂອງມະຫາວິທະຍາໄລ. ລາວ ແລະ ອ້າຍກົກຂອງລາວ ເຊິ່ງເປັນນັກຮຽນ, ອາໄສຢູ່ກັບພໍ່ແມ່ຂອງພວກເຂົາໃນແຖວບ້ານໃກ້ຄຽງ ທີ່ພວກເຮົາຈິນຕະນາການເຖິງ, ໃນບ້ານທີ່ພວກເຂົາເກີດ ແລະ ເຕີບໂຕຂຶ້ນມາ. ພວກເຂົາທັງສີ່ຄົນ ແລະ ຄູ່ໜຸ່ມສາວທີ່ຫາກໍຍ້າຍໄປຢູ່ໃນແຖວບ້ານໃກ້ຄຽງພົບກັນທຸກອາທິດເພື່ອສູດອະທິຖານ ແລະ ປຶກສາຫາລືກ່ຽວກັບຄວາມຄືບ

ໜ້າຂອງກິດຈະກຳທີ່ຈັດຂຶ້ນໃນກຸ່ມຂອງພວກເຂົາ ທີ່ມີປະຊາກອນຢູ່ປະມານ 8,000 ຄົນ. ອີກສາມຄົນເຂົ້າຮ່ວມເປັນບາງຄັ້ງຄາວໃນການປະຊຸມປະຈຳອາທິດເລົ່ານີ້ ແລະ ເຂົາກໍເລີ່ມຄິດຢ່າງເປັນລະບົບ ບໍ່ພຽງແຕ່ການປະຕິບັດການຮັບໃຊ້ຂອງພວກເຂົາເອງເທົ່ານັ້ນ, ແຕ່ຍັງລວມເຖິງ ຂະບວນການສ້າງຊຸມຊົນທັງໝົດດ້ວຍ: ຄູປະຈຳຊັ້ນຮຽນທີ່ສິດສອນເດັກນ້ອຍເລີ່ມແຕ່ເມື່ອຫົກເດືອນທີ່ຜ່ານມາ ແລະ ຊາວໜຸ່ມທີ່ມີອາຍຸສິບເຈັດປີສອງຄົນແມ່ນເປັນຜູ້ທີ່ພະຍາຍາມນຳພາກຸ່ມເຍົາວະຊົນ ໂດຍໄດ້ຮັບການຊ່ວຍເຫຼືອຈາກອ້າຍຂອງອາເລຈັນດຣາ, ເຊິ່ງເປັນຜູ້ບຸກລະດົມກຸ່ມເຍົາວະຊົນຂອງພວກເຂົາເອງໃນຕອນພວກເຂົາຍັງນ້ອຍ ແລະ ແມ່ນເປັນຜູ້ທີ່ໄປຢ້ຽມຢາມພໍ່ແມ່ຂອງພວກເຂົາເປັນປະຈຳ.

ບົດສົນທະນາໃນຊຸດທຳອິດທີ່ພວກເຮົາຈະກວດສອບຄື ລະຫວ່າງອາເລຈັນດຣາ ແລະ ຄອບຄົວຊານເຊັດສ໌ Sanchezes ເຊິ່ງເປັນຄອບຄົວທີ່ຮູ້ຈັກກັນດີ ແລະ ໄດ້ຮັບຄວາມເຄົາລົບໃນແຖວໃກ້ຄຽງ. ສາມີພັນລະຍາຄູ່ນີ້ມີອາຍຸຫົກສິບປີ ແລະ ໄດ້ລ້ຽງດູລູກຊາຍ ແລະ ລູກສາວທີ່ອາໄສຢູ່ນຳກັນ, ເຮືອນຂອງເຂົາຫ່າງຈາກເຮືອນຂອງອາເລຈັນດຣາບໍ່ໄດ້ໄກປານໃດ. ທ້າວແລະນາງ ຊານເຊັດສ໌ ພໍຮູ້ໜັງສືແຕ່ບໍ່ໄດ້ຮັບການສຶກສາຢ່າງເປັນທາງການຫຼາຍປານໃດ. ຄວາມນັບຖືຢ່າງກວ້າງຂວາງທີ່ພວກເຂົາໄດ້ຮັບ ເກີດຈາກພູມປັນຍາທີ່ພວກເຂົາມີໃນການໃຊ້ຊີວິດດ້ວຍຄວາມຊື່ສັດສຸຈະລິດ ແລະ ຄວາມເອື້ອເຟື້ອເຜື່ອແຜ່. ພວກເຂົາຮັບຮູ້ຄຳສອນສາສະໜາບາຮາຍມາໄລຍະໜຶ່ງແລ້ວ; ແຕ່ເມື່ອບໍ່ດົນມານີ້, ພວກເຂົາຕັດສິນໃຈທີ່ຈະກວດສອບຢ່າງຈິງຈັງ. ອາທິດໜຶ່ງຜ່ານໄປ, ພວກເຂົາຕິດຕໍ່ຫາພໍ່ແມ່ຂອງອາເລຈັນດຣາ ວ່າພວກເຂົາອາດຕ້ອງການເຂົ້າຮ່ວມກັບຊຸມຊົນ. ການຈັດປະຊຸມພົບປະເພື່ອຕ້ອນຮັບພວກເຂົາ ກໍໄດ້ມີການຂຶ້ນແຜນແລ້ວ, ນອກຈາກນີ້ຍັງມີການຕົກລົງກັນວ່າ ອາເລຈັນດຣາ ຈະເປັນຜູ້ໄປຢ້ຽມຢາມພວກເຂົາເປັນປະຈຳເປັນເວລາຫຼາຍອາທິດ ເພື່ອແບ່ງປັນຊຸດຫົວຂໍ້ຫຼັກ ທີ່ຈະຊ່ວຍໃຫ້ພວກເຂົາມີຄວາມຮູ້ກ່ຽວກັບຄວາມສັດທາຫຼາຍຂຶ້ນ. ເມື່ອຕິດຕາມເລື່ອງລາວຂອງການຢ້ຽມຢາມ, ເຈົ້າຈະສາມາດສຳຫຼວດຫົວຂໍ້ຫຼັກເຫຼົ່ານີ້ ແລະ ໃນຂະນະດຽວກັນແມ່ນໃຫ້ໄຕ່ຕອງເຖິງການເຄື່ອນໄຫວຂອງການສົນທະນາໃນໂອກາດດັ່ງກ່າວດ້ວຍ.

## ຕອນທີ 3

ອາເລຈັນດຣາ ສ້າງແຜນການສຳລັບການສົນທະນາຄັ້ງທຳອິດກັບຄອບຄົວຊານເຊັດສ໌ ຕາມຄຳອະທິບາຍສັ້ນໆຂ້າງລຸ່ມຂອງຊຸດຫົວຂໍ້ນີ້ຕໍ່ ພຣະປະທີບຍານິລັນດອນຂອງພຣະຜູ້ເປັນເຈົ້າ.

> ພຣະຜູ້ສ້າງທຸກສິ່ງກໍຄືພຣະຜູ້ເປັນເຈົ້າ, ແມ່ນຫາທີ່ປຽບປານບໍ່ໄດ້, ພຣະຜູ້ຊົງດຳລົງຢູ່ດ້ວຍພຣະອົງເອງ. ພຣະບາຮາອຸລລາຫ໌ ຊົງສອນພວກເຮົາວ່າ ແກ່ນແທ້ຂອງພຣະຜູ້ເປັນເຈົ້ານັ້ນ ບໍ່ສາມາດເຂົ້າໃຈໄດ້ໃນຈິດໃຈຂອງມະນຸດ, ເພາະສິ່ງທີ່ຈຳກັດບໍ່ສາມາດເຂົ້າໃຈ ໃນຄວາມບໍ່ມີທີ່ສິ້ນສຸດໄດ້. ສິ່ງທີ່ຜູ້ຄົນສ້າງຂຶ້ນຈາກພຣະອົງ ເປັນພຽງຜົນຈາກການຈິນຕະນາການຂອງພວກເຂົາເອງ. ພຣະຜູ້ເປັນເຈົ້າບໍ່ແມ່ນມະນຸດ ແລະ ພຣະອົງກໍບໍ່ໄດ້ເປັນພຽງພະລັງທີ່ແຜ່ຂະຫຍາຍໄປທົ່ວຈັກກະວານ. ຄຳທີ່ພວກເຮົາຈຳເປັນຕ້ອງໃຊ້ເພື່ອອ້າງເຖິງແຫຼ່ງທີ່ມາຂອງການດຳລົງຢູ່ຂອງພວກເຮົາເຊັ່ນ: ພຣະ

ບິດາເທິງສະຫວັນ, ອຳນາດແຫ່ງສະຫວັນ, ພຣະວິນຍານອັນຍິ່ງໃຫຍ່, ສະແດງຊື່ ແລະ ຄຸນລັກສະນະຂອງພຣະອົງດ້ວຍລີ້ນຂອງມະນຸດ ແລະ ບໍ່ພຽງພໍທີ່ຈະບັນຍາຍເຖິງພຣະອົງໄດ້ເລີຍ.
ໃນພຣະວັດຈະນະເລັ້ນລັບ, ກ່າວວ່າ:
**"ໂອ ບຸດແຫ່ງມະນຸດ! ເຮົາຮັກການສ້າງສາຂອງເຈົ້າ, ດັ່ງນັ້ນເຮົາຈຶ່ງສ້າງເຈົ້າຂຶ້ນມາ. ດ້ວຍເຫດນີ້, ເຈົ້າຈົ່ງຮັກເຮົາ, ເພື່ອເຮົາຈະໄດ້ກ່າວເຖິງນາມຂອງເຈົ້າ ແລະ ເຕີມພະລັງແຫ່ງຊີວິດໃຫ້ແກ່ວິນຍານຂອງເຈົ້າ."**[1]
ໃນຂໍ້ນີ້, ພຣະບາຮາອຸລລາຫ໌ ຊົງບອກພວກເຮົາວ່າ ຄວາມຮັກຂອງພຣະຜູ້ເປັນເຈົ້າທີ່ມີຕໍ່ພວກເຮົາເປັນເຫດຜົນທີ່ເຮັດໃຫ້ພຣະອົງມີຊີວິດຢູ່. ພວກເຮົາຕ້ອງລະນຶກເຖິງສະເໝີວ່າຄວາມຮັກນີ້ປົກປ້ອງພວກເຮົາ, ຄ້ຳຈຸນພວກເຮົາ ແລະ ເຕີມເຕັມພວກເຮົາດ້ວຍຈິດວິນຍານແຫ່ງຊີວິດ. ໃນຊ່ວງເວລາແຫ່ງຄວາມຍາກ ລຳບາກ ຫຼື ຜ່ອນຄາຍ, ຄວາມເສົ້າ ຫຼື ຄວາມສຸກ, ພວກເຮົາຕ້ອງຈົດຈຳໄວ້ວ່າຄວາມຮັກຂອງພຣະອົງໂອບກອດພວກເຮົາຢູ່ສະເໝີ.
ຈາກຄຳສອນຂອງບາຮາຍ, ພວກເຮົາຮຽນຮູ້ວ່າພຣະຜູ້ເປັນເຈົ້າຊົງສ້າງພວກເຮົາຂຶ້ນມາຈາກຄວາມຮັກຂອງພຣະອົງ, ພຣະຜູ້ຊົງມີຄຳໝັ້ນສັນຍາກັບພວກເຮົາ, ຄຳວ່າ "ພັນທະສັນຍາ" ໝາຍເຖິງຂໍ້ຕົກລົງ ຫຼື ສັນຍາລະຫວ່າງຄົນສອງຄົນຂຶ້ນໄປ. ອີງຕາມພຣະປະຕິນຍານິລັນດອນ, ພຣະຜູ້ສ້າງຜູ້ຊົງລ້ຳເລີດບໍ່ເຄີຍປະຖິ້ມພວກເຮົາໃນແຕ່ລະຍຸກສະໄໝ, ພຣະອົງຊົງສະແດງພຣະປະສົງ ແລະ ຈຸດມຸ່ງໝາຍຂອງ ພຣະອົງຜ່ານທາງພຣະຜູ້ສະແດງທັມຂອງພຣະອົງ.
ຄຳກິລິຍາ "ຊົງເຮັດໃຫ້ປະກົດ " ໝາຍເຖິງການເປີດເຜີຍ, ເພື່ອສະແດງສິ່ງທີ່ບໍ່ຮູ້ຈັກກັນມາກ່ອນ. ພຣະຜູ້ຊົງສະແດງທັມຂອງພຣະຜູ້ເປັນເຈົ້າ ຄືສິ່ງມີຊີວິດທີ່ພິເສດ, ພຣະຜູ້ຊົງເປີດເຜີຍພຣະວັດຈະນະຂອງ ພຣະຜູ້ເປັນເຈົ້າໃຫ້ພວກເຮົາໄດ້ຮັບຮູ້ເຫຼົ່ານັ້ນ ເປັນຄູສອນສາກົນທີ່ສອນພວກເຮົາ ເຖິງວິຖີດຳເນີນຊີວິດຕາມພຣະປະສົງຂອງພຣະຜູ້ເປັນເຈົ້າ ແລະ ວິທີບັນລຸເຖິງຄວາມສຸກທີ່ແທ້ຈິງ. ໃນບັນດາພຣະຜູ້ສະແດງທັມເຫຼົ່ານີ້ໄດ້ແກ່: ພຣະອັບຣາຮຳ, ພຣະກຣິດສະນະ, ພຣະໂມເສດສ໌, ພຣະໂຊໂຣແອັດສ໌ເຕີ, ພຣະພຸດທະເຈົ້າ, ພຣະເຢຊູຄຣິດສ໌, ພຣະໂມຮຳໝັດ ແລະແນ່ນອນທີ່ສຸດ, ພຣະບ໊ອບ ແລະ ພຣະບາຮາອຸລລາຫ໌, ເຊິ່ງເປັນພຣະສາສະດາຄູ່ຂອງພຣະຜູ້ເປັນເຈົ້າ ສຳລັບຍຸກນີ້ໃນປະຫວັດສາດຂອງມະນຸດຊາດ.
ດັ່ງນັ້ນ, ໃນພັນທະສັນຍານິລັນດອນຂອງພຣະຜູ້ເປັນເຈົ້າ, ພາກສ່ວນຂອງພຣະອົງສຳເລັດສະເໝີ. ຄຳຖາມພື້ນຖານທີ່ພວກເຮົາທຸກຄົນຕ້ອງຖາມຕົວເອງຄື: "ຂ້າພະອົງຈະປະຕິບັດພັນທະສັນຍາໄດ້ແນວໃດ?" ຄຳຕອບທີ່ພວກເຮົາພົບໃນພຣະຄຳພີທາງສາສະໜາທັງໝົດຄື: ໂດຍສຳນຶກເຖິງການສະແດງອົງຂອງ ພຣະຜູ້ເປັນເຈົ້າ ແລະ ເຊື່ອຟັງຄຳສອນຂອງພຣະອົງ. ການຕອບສະໜອງນີ້ຊີ້ໃຫ້ເຫັນເຖິງຈຸດມຸ່ງໝາຍໃນຊີວິດຂອງພວກເຮົາ, ນັ້ນຄືການຮູ້ຈັກ ແລະ ນະມັດສະການພຣະອົງ. ໃນບົດອະທິຖານບັງຄັບບົດສັ້ນ, ພວກເຮົາປະກາດວ່າ:

**“ໂອ ພຣະຜູ້ເປັນເຈົ້າຂອງຂ້າພະອົງ, ຂ້າພະອົງຂໍເປັນພະຍານວ່າ ພຣະອົງໄດ້ຊົງສ້າງຂ້າພະອົງຂຶ້ນມາ ເພື່ອຈະໄດ້ຮູ້ຈັກ ແລະ ນະມັດສະການພຣະອົງ. ບັດນີ້, ຂ້າພະອົງຂໍຢັ້ງຢືນເຖິງຄວາມປາສະຈາກອຳນາດວາດສະໜາຂອງຂ້າພະອົງ ຕໍ່ສັກດານຸພາບຂອງພຣະອົງ, ຄວາມທຸກຍາກຂອງຂ້າພຣະອົງ ຕໍ່ຄວາມອຸດົມຮັ່ງມີຂອງພຣະອົງ.**

**“ບໍ່ມີພຣະຜູ້ເປັນເຈົ້າອື່ນໃດອີກນອກຈາກພຣະອົງ, ພຣະຜູ້ຊົງຊ່ວຍເຫຼືອໃນຍາມທີ່ພວກເຮົາໄດ້ຮັບໄພອັນຕະລາຍ, ພຣະອົງຊົງດຳລົງຢູ່ດ້ວຍພຣະອົງເອງ.”**[2]

ເນື່ອງຈາກ ຄວາມເປັນໄປບໍ່ໄດ້ທີ່ພວກເຮົາຈະຮູ້ຈັກພຣະຜູ້ເປັນເຈົ້າ ຍົກເວັ້ນໂດຍຜ່ານພຣະຜູ້ສະແດງທັມຂອງພຣະອົງ, ວິທີດຽວທີ່ພວກເຮົາຈະບັນລຸຈຸດມຸ່ງໝາຍໃນຊີວິດຄືຍອມຮັບພຣະຜູ້ສະແດງທັມ ແລະ ປະຕິບັດຕາມຄຳສອນຂອງພຣະອົງ. ໃນຍຸກນີ້, ພວກເຮົາອີ່ມອົກອີ່ມໃຈດ້ວຍຄວາມຂອບພຣະຄຸນສຳລັບຄວາມມັ່ງຄັ່ງຂອງການມີຊີວິດຢູ່ໃນຊ່ວງເວລາທີ່ຄຳສັນຍາໃນພຣະຄຳພີສັກສິດທຸກເຫຼັ້ມ, ທີ່ສັນຕິພາບ ແລະ ຄວາມຍຸຕິທັມຈະໄດ້ຮັບການສະຖາປານາເທິງໂລກກຳລັງຈະສຳເລັດ. ພຣະບາຮາອຸລລາຫ໌ຊົງປະກາດວ່າ:

**“ຍຸກນີ້ເປັນຍຸກທີ່ພຣະຜູ້ເປັນເຈົ້າ ຊົງປະທານພຣະພອນອັນຍິ່ງໃຫຍ່ໃຫ້ແກ່ມະນຸດ, ເຊິ່ງເປັນຍຸກທີ່ພຣະກຽດຕິຄຸນອັນຍິ່ງໃຫຍ່ທີ່ສຸດຂອງພຣະອົງ ໄດ້ຖືກເຕີມເຕັມໃນທຸກສິ່ງທີ່ສ້າງຂຶ້ນ. ເປັນໜ້າທີ່ຂອງທຸກຄົນໃນໂລກ ທີ່ຈະປອງດອງຄວາມແຕກຕ່າງຂອງພວກເຂົາ ດ້ວຍຄວາມສາມັກຄີ ແລະ ຄວາມສະຫງົບສຸກທີ່ສົມບູນແບບ ຢູ່ພາຍໃຕ້ຮົ່ມເງົາຂອງຕົ້ນໄມ້ແຫ່ງຄວາມຫ່ວງໃຍ ແລະ ຄວາມກະລຸນາຮັກແພງຂອງພຣະອົງ.”**[3]

ກ່ອນທີ່ພວກເຮົາຈະດຳເນີນການຕໍ່ໄປກັບເລື່ອງເລົ່າຂອງພວກເຮົາ, ເຈົ້າຄວນອ່ານຄຳອະທິບາຍຂ້າງເທິງ ແລະ ໄຕ່ຕອງເທື່ອລະຫຍໍ້ໜ້າກັບຜູ້ເຂົ້າຮ່ວມອື່ນໆໃນກຸ່ມຂອງເຈົ້າ. ເຈົ້າສາມາດຖາມຄຳຖາມຕໍ່ກັນແລະກັນ ແລະ ຕອບຄຳຖາມຮ່ວມກັນ, ຈົນກວ່າແຕ່ລະຄົນຈະສາມາດສະແດງຄວາມຄິດໄດ້ຢ່າງເປັນທຳມະຊາດ ແລະ ລຽບງ່າຍ. ການຮຽນຮູ້ພຣະທັມມະລິຂິດເປັນສິ່ງທີ່ສຳຄັນຢ່າງຍິ່ງ, ສຳລັບການແບ່ງປັນຂໍ້ຄວາມຈາກພຣະວັດຈະ ນະໃນການສົນທະນາປະເພດນີ້ ຊຶ່ງເປັນສິ່ງທີ່ຂາດບໍ່ໄດ້. ບົດເຝິກຫັດຕໍ່ໄປນີ້ ຈະຊ່ວຍໃຫ້ເຈົ້ານຶກເຖິງແນວຄວາມຄິດທີ່ນຳສະເໜີໃນຕອນນີ້ ແລະກ່ຽວກັບຄວາມໝາຍຂອງຂໍ້ຄວາມທີ່ຍົກມາ:

1. ເຈົ້າຈະອະທິບາຍກັບຜູ້ໃດຜູ້ໜຶ່ງໄດ້ແນວໃດວ່າ ພຣະຜູ້ເປັນເຈົ້າເປັນສິ່ງທີ່ບໍ່ອາດຢັ່ງຮູ້ໄດ້? ຫຍໍ້ໜ້າທຳອິດຂ້າງເທິງສາມາດຊ່ວຍເຈົ້າໄດ້.

________________________________________

________________________________________

________________________________________

________________________________________

2. ພຣະຜູ້ເປັນເຈົ້າຊົງສ້າງພວກເຮົາຂຶ້ນມາເຮັດຫຍັງ?

________________________________________

________________________________________

3. ຄໍາວ່າ "ພັນທະສັນຍາ" ໝາຍຄວາມວ່າແນວໃດ?

________________________________________

________________________________________

4. ພຣະຜູ້ເປັນເຈົ້າຊົງສັນຍາຫຍັງແດ່ໄວ້ໃນພັນທະສັນຍານິລັນດອນຂອງພຣະອົງກັບມະນຸດຊາດ?

________________________________________

________________________________________

5. ແມ່ນຫຍັງຄືຈຸດມຸ່ງໝາຍຂອງຊີວິດຂອງພວກເຮົາ?

________________________________________

________________________________________

6. ຫາກພວກເຮົາບໍ່ສາມາດຮູ້ຈັກແກ່ນແທ້ຂອງພຣະຜູ້ເປັນເຈົ້າໄດ້ເລີຍ, ການທີ່ຈຸດປະສົງຂອງຊີວິດຂອງພວກເຮົາຄືການຮູ້ຈັກພຣະຜູ້ເປັນເຈົ້າ, ໝາຍຄວາມວ່າແນວໃດ?

________________________________________

________________________________________

7. ຄໍາວ່າ "ພຣະຜູ້ສະແດງທັມ" ໝາຍເຖິງຫຍັງ?

________________________________________

________________________________________

8. ຈົ່ງກ່າວເຖິງພຣະນາມຂອງພຣະຜູ້ສະແດງທັມຂອງພຣະຜູ້ເປັນເຈົ້າ:

________________________________________

________________________________________

________________________________________

________________________________________

9. ແມ່ນຫຍັງຄືສິ່ງທີ່ພວກເຮົາຕ້ອງການ ຫາກພວກເຮົາປະຕິບັດຕາມສ່ວນຂອງພວກເຮົາໃນພັນທະສັນຍາ?__________________________________

________________________________________

10. ຈົ່ງເຕີມປະໂຫຍກຕໍ່ໄປນີ້:

ກ. ຍຸກນີ້, ເປັນຍຸກທີ່ພຣະຜູ້ເປັນເຈົ້າ __________________________ ແກ່ມະນຸດ.

ຂ. ຍຸກນີ້, ເປັນຍຸກທີ່ ________________________________ ຂອງພຣະຜູ້ເປັນເຈົ້າໄດ້ຖືກເຕີມເຕັມໃນທຸກສິ່ງທີ່ສ້າງຂຶ້ນ.

ຄ. ໃນຍຸກນີ້ພວກເຮົາຄວນ _____________ ຄວາມແຕກຕ່າງຂອງພວກເຂົາ ດ້ວຍຄວາມສາມັກຄີ ແລະ ຄວາມສະຫງົບສຸກທີ່ສົມບູນແບບ ______________________________________

______________________________________

11. ພຣະບາຣາອຸລລາຫ໌ຊົງຂໍໃຫ້ປະຊາຊົນທົ່ວໂລກເຮັດຫຍັງ?

______________________________________

______________________________________

______________________________________

## ຕອນທີ 4

ເລື່ອງເລົ່າຂອງຊຸດຫົວຂໍ້ຫຼັກ, ອາເລຈັນດຣາ ມີແຜນການທີ່ຈະແບ່ງປັນກັບ ທ້າວແລະນາງ ຊານເຊັດສ໌ ບໍ່ແມ່ນແຕ່ພຽງສິ່ງດຽວທີ່ຢູ່ໃນໃຈຂອງລາວ. ລາວຫວັງທີ່ຈະສ້າງສາຍສຳພັນທີ່ແໜ້ນແຟ້ນກັບຄູ່ສາມີພັນລະຍານີ້. ຈາກປະສົບການໂດຍກົງ, ລາວຮູ້ສຶກເຖິງຜົນຮ້າຍຂອງທັງອະຄະຕິ ແລະ ທັດສະນະຄະຕິທີ່ຫຼົ່ຫຼອມສິ່ງເລົ່ານີ້ຢູ່. ລາວຈະຫຼີກລ້ຽງຢ່າງເປັນທຳມະຊາດ; ການສຶກສາທີ່ສູງຂອງລາວບໍ່ໄດ້ເຮັດໃຫ້ຄວາມອ່ອນນ້ອມຖ່ອມຕົນໃນຕົວລາວຫຼຸດໜ້ອຍຖອຍລົງ. ລາວບໍ່ມີຫຍັງຢູ່ໃນໃຈນອກຈາກຄວາມຮັກ ແລະ ຄວາມເຄົາລົບຢ່າງແທ້ຈິງຕໍ່ຄອບຄົວຊານເຊັດສ໌. ໃນຂະນະທີ່ລາວພິຈາລະນາວ່າ ຈະອະທິບາຍຫົວຂໍ້ທຳອິດໄດ້ແນວໃດ, ລາວໄດ້ເຕືອນຕົນເອງວ່າ ນີ້ຄືຈຸດເລີ່ມຕົ້ນຂອງການສົນທະນາຕໍ່ເນື່ອງທີ່ຈະເກີດຂຶ້ນໃນຊ່ວງຫຼາຍອາທິດ. ລາວຈື່ສິ່ງນັ້ນໄດ້, ເຖິງແມ່ນວ່າຈະເປັນເລື່ອງສຳຄັນທີ່ຈະຕ້ອງນຳສະເໜີລຳດັບຄວາມຄິດຢ່າງກົງໄປກົງມາ, ແຕ່ລາວກໍຄວນຢຸດໃນບາງຈຸດເພື່ອຟັງຄຳຕອບຂອງທັງສອງຄົນ. “ຂ້າພະເຈົ້າບໍ່ຄວນທີ່ຈະສະແດງຄວາມກັງວົນໃຈ” ລາວບອກຕົວລາວເອງ, “ສິ່ງນັ້ນຄື ເມື່ອຂ້າພະເຈົ້າເວົ້າໄປເລື້ອຍໆ ແລະ ບໍ່ມີໂອກາດທີ່ຈະເຮັດໃຫ້ການສົນທະນາເປັນຮູບຮ່າງຂຶ້ນມາ.” ອາເລຈັນດຣາ ຍັງຄົງຄິດກ່ຽວກັບການມາຢ້ຽມຢາມຂອງລາວຢູ່ໄລຍະໜຶ່ງ. ຖ້າຫາກເຈົ້າຢູ່ໃນສະຖານະການຄືກັນກັບລາວ, ເຈົ້າຈະພິຈາລະນາວ່າໃນຫົວຂໍ້ຂ້າງລຸ່ມນີ້, ມີຂໍ້ໃດແດ່ເໝາະສົມກັບສິ່ງທີ່ເຈົ້າຄວນຄິດພິຈາລະນາ?

_____ ເປັນໜ້າທີ່ຂອງຂ້າພະເຈົ້າເອງທີ່ຈະສອນຄອບຄົວຊານເຊັດສ໌ ໃນເລື່ອງຄວາມສັດທາ ແລະ ຂ້າພະເຈົ້າຈະໝັ້ນໃຈໄດ້ວ່າພວກເຂົາໄດ້ຮຽນຮູ້ຢ່າງຫຼວງຫຼາຍ.

_____ ແມ່ນເປັນສິດພິເສດພຽງໃດ ທີ່ຂ້າພະເຈົ້າຈະໄດ້ມີໂອກາດໃຊ້ເວລາຮ່ວມກັບຄອບຄົວທີ່ແສນດີນີ້ ແລະ ແບ່ງປັນຂໍ້ຄວາມບາງຕອນຈາກທັມມະລິຂິດກັບພວກເຂົາ.

_____ ຂ້າພະເຈົ້າຮູ້ວ່າການຢ້ຽມຢາມຄັ້ງນີ້ສຳຄັນ. ແຕ່ເຖິງດັ່ງນັ້ນ, ຂ້າພະເຈົ້າຫວັງວ່າຈະໃຊ້ເວລາບໍ່ດົນ, ເພາະຂ້າພະເຈົ້າຍັງມີສິ່ງອື່ນໆທີ່ຈະຕ້ອງເຮັດ.

_____ ການນຳສະເໜີກ່ຽວກັບພຣະວັດຈະນະອາດຈະຍາກເກີນໄປສຳລັບພວກເຂົາ. ຂ້າພະເຈົ້າຄວນຈະຍົກຕົວຢ່າງງ່າຍໆຈັກໜຶ່ງຫຼືສອງຕົວຢ່າງກໍຄົງຈະພຽງພໍ. ສິ່ງສຳຄັນຄືຂ້າພະເຈົ້າຄວນຈະສະແດງຄວາມຮັກຕໍ່ພວກເຂົາ.

_____ ໃນໄວຂອງພວກເຂົາ (ຄູ່ສາມີພັນລະຍາຊານເຊັດສ໌) ຄົງຈະຮຽນຫຍັງບໍ່ໄດ້ຫຼາຍດອກ.

_____ ຂ້າພະເຈົ້າລໍຄອຍທີ່ຈະໄປຢ້ຽມຢາມ ແລະ ຮັບຟັງຂໍ້ມູນທີ່ເລິກເຊິ່ງຂອງພວກເຂົາໃນຂະນະທີ່ພວກເຮົາສົນທະນາກັນໃນຊຸດຂອງຫົວຂໍ້ ແລະ ໄດ້ໄຕ່ຕອງເຖິງພຣະວັດຈະນະນັ້ນ.

_____ ພວກເຂົາບໍ່ໄດ້ກຶກໜັງສື. ຂ້າພະເຈົ້າຈະແນະນຳເຖິງຫົວເລື່ອງ ແລະ ເອົາພຣະວັດຈະນະໄວ້ໃຫ້ພວກເຂົາສຶກສາດ້ວຍຕົນເອງ.

_____ ໃນຄະນະທີ່ນຳສະເໜີເຖິງແນວຄວາມຄິດ, ປົກກະຕິແລ້ວຂ້າພະເຈົ້າຈະຕ້ອງຢຸດໄລຍະໜຶ່ງເພື່ອພວກເຮົາຈະໄດ້ສຶກສາພຣະທັມມະລິຂິດຮ່ວມກັນ ແລະ ປຶກສາເຖິງສິ່ງເລົ່ານັ້ນ.

_____ ຂ້າພະເຈົ້າຫວັງວ່າ ຈະນຳສະເໜີຫົວຂໍ້ຫຼັກທັງໝົດໄດ້ໂດຍບໍ່ຢຸດພັກ ແລະ ໃນຕອນທ້າຍຈະຖາມພວກເຂົາວ່າ ພວກເຂົາມີຄຳຖາມຫຍັງແດ່?

ຂໍໃຫ້ເຈົ້ານຶກເຖິງສິ່ງອື່ນໆທີ່ເຈົ້າຕ້ອງການມີ ຫຼື ສິ່ງທີ່ເຈົ້າບໍ່ຕ້ອງການ ໃນການກະກຽມຕົວສຳລັບການຢ້ຽມຢາມ?

## ຕອນທີ 5

ການຢ້ຽມຢາມຄອບຄົວຊານເຊັດສ໌ ຄັ້ງທຳອິດຂອງອາເລຈັນດຣາ ແມ່ນເປັນໄປດ້ວຍດີ. ທັງສອງສັງເກດອາການວິຕົກກັງວົນຂອງລາວ ແລະ ເຮັດໃຫ້ລາວສະບາຍໃຈດ້ວຍຄວາມອົບອຸ່ນ ແລະ ຄວາມເມດຕາຂອງພວກເຂົາ. ພວກເຂົາຕັ້ງໃຈຟັງ ແລະ ມີສ່ວນຮ່ວມຢ່າງເຕັມທີ່ໃນການສົນທະນາ, ໂດຍໃຫ້ຄວາມສົນໃຈເປັນພິເສດກັບພຣະທັມມະລິຂິດ. ຊ່ວງເວລາທີ່ຕື່ນເຕັ້ນໄດ້ຫາຍໄປຂະນະໜຶ່ງເມື່ອ ນາງ ຊານເຊັດສ໌ເຮັດໃຫ້ອາເລຈັນດຣາປະຫຼາດໃຈດ້ວຍຄຳຖາມທີ່ວ່າ: "ການເຂົ້າຮ່ວມຊຸມຊົນບາຮາຍຈະເຮັດໃຫ້ຂ້າພະເຈົ້າລືມ ພຣະເຢຊູຄຣິດສ໌ ຫຼືບໍ່?" ອາເລຈັນດຣາ ຮູ້ຄຳຕອບ, ແຕ່ລາວຕ້ອງໃຊ້ເວລາໃນການຮຽບຮຽງ. ທ້າວຊານເຊັດສ໌ ຍິ້ມອອກມາ ແລະ ຊ່ວຍລາວ: "ຂ້າພະເຈົ້າຄິດວ່າຄວາມຮັກທີ່ມີຕໍ່ພຣະເຢຊູຄຣິດສ໌ເຕີບໂຕຂຶ້ນຢ່າງແນ່ນອນ, ຕັ້ງແຕ່ພວກເຮົາໄດ້ຮຽນຮູ້ກ່ຽວກັບຄຳສອນຂອງບາຮາຍ." ອາເລຈັນດຣາ ເວົ້າເສີມວ່າ "ແລະນັ້ນເປັນວິທີທີ່ມີຄົນຈຳນວນຫຼາຍທົ່ວໂລກ ໄດ້ສັງລວມຄວາມຄິດຮ່ວມກັນ. ຄວາມຮັກທີ່ພວກເຂົາມີຕໍ່ພຣະໂມເສດສ໌, ພຣະເຢຊູຄຣິດສ໌, ພຣະກຣິດສະນະ, ພຣະພຸດທະເຈົ້າ, ພຣະໂຊໂຣແອັດສ໌ເຕີ ແລະ ພຣະໂມຮຳໝັດ ນັ້ນມີຄວາມເຂັ້ມແຂງຂຶ້ນ, ກໍຍ້ອນສິ່ງທີ່ພຣະບາຮາອຸລລາຫ໌ ສອນກ່ຽວກັບເອກະພາບຂອງ ພຣະຜູ້ເປັນເຈົ້າ, ຄວາມເປັນອັນໜຶ່ງອັນດຽວກັນຂອງສາສະໜາ ແລະ ຄວາມສາມັກຄີຂອງມະນຸດຊາດ."

ຈະເປັນປະໂຫຍດສໍາລັບເຈົ້າ ທີ່ຈະໃຊ້ເວລາຈັກໜ້ອຍໜຶ່ງໃນກຸ່ມຂອງເຈົ້າ ເພື່ອສົນທະນາກ່ຽວກັບເລື່ອງຄຸນສົມບັດ ແລະ ທັດສະນະຄະຕິທີ່ຕ້ອງມີໃນລະຫວ່າງການລົງຢ້ຽມຢາມຂອງອາເລຈັນດຣາ ເພື່ອໃຫ້ມີປະສິດທິພາບຫຼາຍຂຶ້ນ. ດັ່ງນັ້ນ, ຫົວຂໍ້ທີ່ເຈົ້າຕ້ອງພິຈາລະນາຄື ຄວາມອ່ອນນ້ອມຖ່ອມຕົນ. ຮາກຖານຂອງຄວາມອ່ອນນ້ອມຖ່ອມຕົນຄື ຄວາມຖ່ອມຕົນຕໍ່ໜ້າພຣະຜູ້ເປັນເຈົ້າ. ຈາກນັ້ນກໍນໍາມາເຊິ່ງຄວາມອ່ອນນ້ອມຖ່ອມຕົນຕໍ່ໜ້າສັບພະສິ່ງທີ່ພຣະອົງຊົງສ້າງ. ຈະບໍ່ມີເວລາໃດສໍາຄັນໄປກວ່ານີ້, ເມື່ອຄົນໜຶ່ງສະແດງຄວາມອ່ອນນ້ອມຖ່ອມຕົນໃນການກ່າວເຖິງພຣະຜູ້ເປັນເຈົ້າ ແລະ ພຣະຜູ້ສະແດງທັມຂອງພຣະອົງ. ເຈົ້າຄວນໄຕ່ຕອງຂໍ້ຄວາມຕໍ່ໄປນີ້ຂອງ ພຣະບາຮາອຸລລາຫ໌ ແລະ ພະຍາຍາມຢ່າງເຕັມທີ່ເພື່ອທ່ອງຈໍາຂໍ້ຄວາມເລົ່ານີ້:

> "ພວກເຂົາຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ, ບໍ່ວ່າຈະລວມຕົວກັນໃນທີ່ໃດ ແລະ ຜູ້ໃດກໍຕາມທີ່ພວກເຂົາອາດຈະພົບພໍ້, ຕ້ອງສະແດງອອກເຖິງທັດສະນະຄະຕິຂອງພວກເຂົາ ທີ່ມີຕໍ່ພຣະຜູ້ເປັນເຈົ້າ, ແລະໃນລັກສະນະຂອງການສັນລະເສີນພຣະກຽດຕິຄຸນຂອງພຣະອົງ, ຄວາມອ່ອນນ້ອມຖ່ອມຕົນ ແລະ ການຍອມຈໍານົນເຊັ່ນນີ້ ເພື່ອໃຫ້ທຸກອາຕອມຂອງທຸລີທີ່ຢູ່ພາຍໃຕ້ພື້ນຕີນຂອງພວກເຂົາສາມາດຢືນຢັນຄວາມລໍ້າເລີດ ຂອງຄວາມຈົ່ງຮັກພັກດີຂອງພວກເຂົາ. ການສົນທະນາທີ່ດໍາເນີນໄປ ໂດຍວິນຍານສັກສິດເລົ່ານີ້ ຄວນໄດ້ຮັບການຮັບຮູ້ດ້ວຍພະລັງດັ່ງກ່າວທີ່ອາຕອມຂອງທຸລີດຽວກັນເລົ່ານີ້ ໄດ້ຮັບຜົນກະທົບຈາກອິດທິພົນຂອງພະລັງດັ່ງກ່າວ, ພວກເຂົາຄວນປະຕິບັດຕົນໃນລັກສະນະທີ່ໂລກທີ່ພວກເຂົາຢຽບຢ່າງ ອາດບໍ່ໄດ້ຮັບອະນຸຍາດໃຫ້ກ່າວກັບພວກເຂົາດ້ວຍຄໍາເວົ້າເລົ່ານີ້: 'ຂ້າພະເຈົ້າແມ່ນຢາກຖືກເລືອກໃຫ້ຢູ່ເໜືອເຈົ້າ. ເພື່ອເປັນພະຍານວ່າ, ຂ້າພະເຈົ້າອົດທົນຫຼາຍພຽງໃດ ໃນການແບກຮັບພາລະທີ່ມະນຸດກົດຂີ່ຂ້າພະເຈົ້າ. ຂ້າພະເຈົ້າເປັນເຄື່ອງມືທີ່ສົ່ງພຣະພອນຢ່າງຕໍ່ເນື່ອງໃຫ້ແກ່ທຸກສັບພະສິ່ງ ເຊິ່ງພຣະອົງຜູ້ຊົງເປັນບໍ່ເກີດຂອງພຣະກະລຸນາທິຄຸນທັງໝົດ ໄດ້ຊົງມອບຄວາມໄວ້ວາງໃຈໄວ້ກັບຂ້າພະເຈົ້າ. ແມ່ນວ່າຈະມີການມອບກຽດຕິຍົດໃຫ້ແກ່ຂ້າພະເຈົ້າ ແລະ ຫຼັກຖານທີ່ບໍ່ສາມາດຄະນານັບໄດ້ເຖິງຄວາມອຸດົມສົມບູນຂອງຂ້າພະເຈົ້າ, ຄວາມອຸດົມສົມບູນທີ່ສະໜອງ ຕໍ່ຄວາມຕ້ອງການຂອງທຸກສັບພະສິ່ງທີ່ພຣະອົງຊົງສ້າງ, ຈົ່ງເບິ່ງລະດັບຄວາມຖ່ອມຕົນຂອງຂ້າພະເຈົ້າ, ເຊິ່ງເປັນພະຍານຕໍ່ສິ່ງທີ່ເປັນການຍອມຈໍານົນຢ່າງສຸດຂີດ, ຂ້າພະເຈົ້າຈຶ່ງຍອມໃຫ້ຕົນເອງຖືກຢຽບຢໍ່າ ຢູ່ໃຕ້ພື້ນຕີນຂອງມະນຸດ.'"[4]

ດັ່ງທີ່ກ່າວມາແລ້ວຢູ່ຂ້າງເທິງ, ຄວາມອ່ອນນ້ອມຖ່ອມຕົນຕໍ່ໜ້າເພື່ອນມະນຸດ ເກີດຈາກຄວາມຖ່ອມຕົນຕໍ່ໜ້າພຣະຜູ້ເປັນເຈົ້າ. ດ້ວຍຄວາມອ່ອນນ້ອມຖ່ອມຕົນແບບດຽວກັນນີ້ເອງ ທີ່ພວກເຮົາຖືວ່າມີທ່າທີຂອງການອະທິຖານໃນຂະນະທີ່ລົງຢ້ຽມຢາມເຮືອນຂອງເພື່ອນ ຫຼື ເພື່ອນບ້ານໃກ້ຄຽງ ເພື່ອທໍາຄວາມເຂົ້າໃຈທີ່ເລິກເຊິ່ງກ່ຽວກັບຫົວຂໍ້ຫຼັກດ້ວຍກັນ. ລະຫວ່າງການສົນທະນາ, ພວກເຮົາມຸ່ງຄວາມຄິດຂອງພວກເຮົາໄປຍັງພຣະຜູ້ເປັນເຈົ້າຢູ່ເລື້ອຍໆ, ໂດຍຂໍໃຫ້ພຣະອົງຊົງສ່ອງແສງສະຫວ່າງໃຫ້ແກ່ຄວາມຄິດ ແລະ ຈິດໃຈ

ຂອງພວກເຮົາ ແລະ ຂອງທຸກຄົນທີ່ຢູ່ນຳກັນ. ມີຫຼາຍອະລີ ແລະ ຫຼາຍປະໂຫຍກຈາກບົດອະທິຖານທີ່ພວກເຮົາສາມາດຈົດຈຳ, ໂດຍມີຈຸດປະສົງນີ້ຢູ່ໃນໃຈ. ບົດອະທິຖານເລົ່ານີ້ເປັນພຽງບາງສ່ວນເທົ່ານັ້ນ:

> **"ຂໍຊົງເຮັດໃຫ້ຈິດໃຈຂອງພວກເຮົາສະຫວ່າງສະໄຫວ, ຊ່ວຍໃຫ້ພວກເຮົາມີດວງຕາທີ່ເຫັນທັມ ແລະ ຫູທີ່ຕັ້ງໃຈຟັງ"[5]**
>
> **"ໂອ ພຣະຜູ້ເປັນນາຍ! ຂໍຊົງມອບຂອງຂວັນລາງວັນອັນບໍ່ມີທີ່ສິ້ນສຸດ ແລະ ຂໍຊົງປະທານແສງສະຫວ່າງແຫ່ງການນຳທາງຂອງພຣະອົງ."[6]**
>
> **"ຂໍຊົງໄຂປະຕູແຫ່ງຄວາມເຂົ້າໃຈທີ່ແທ້ຈິງ ແລະ ຂໍຊົງປະທານແສງສະຫວ່າງແຫ່ງຄວາມສັດທາ ທີ່ສ່ອງແສງຢ່າງສະຫວ່າງສະໄຫວ."[7]**
>
> **"ໂອ ພຣະຜູ້ເປັນນາຍ! ຂໍຊົງສ່ອງແສງໃສ່ດວງຕາຂອງພວກເຮົາໃຫ້ສະຫວ່າງສະໄຫວ, ເພື່ອພວກເຮົາຈະໄດ້ເບິ່ງເຫັນແສງສະຫວ່າງຂອງພຣະອົງ."[8]**
>
> **"ຂ້າພະອົງຫັນມາຫາພຣະອົງຢ່າງໝົດຊີວິດຈິດໃຈ, ກຳລັງວິງວອນຂໍພຣະອົງຢ່າງຮ້ອນຮົນດ້ວຍສິ້ນສຸດຫົວໃຈ, ດ້ວຍຄວາມຄິດຈິດໃຈ ແລະ ລີ້ນຂອງຂ້າພະອົງ, ເພື່ອປົກປ້ອງຂ້າພະອົງຈາກທຸກສິ່ງທີ່ສວນທາງກັບພຣະປະສົງຂອງພຣະອົງ, ໃນວັດຕະຈັກແຫ່ງເອກະພາບອັນສັກສິດຂອງພຣະອົງ..."[9]**

## ຕອນທີ 6

ຫົວໃຈຂອງອາເລຈັນດຣາ ເຕັມໄປດ້ວຍຄວາມສຸກທັນສາ ຫຼັງຈາກທີ່ລາວໄປຢ້ຽມຢາມເຮືອນຂອງຄອບຄົວຊານເຊັດສ໌ ແລະ ລາວໄດ້ສົນທະນາກັບພວກເຂົາໃນເລື່ອງຂອງພັນທະສັນຍານິລັນດອນ. ລາວຄິດວ່າ "ຕັ້ງຕໍ່ໄປຈະເປັນໂອກາດດີທີ່ພວກເຂົາຈະໄດ້ຮຽນຮູ້ກ່ຽວກັບຊີວິດຂອງ ພຣະບາຮາອຸລລາຫ໌ ໃຫ້ເລິກເຊິ່ງຍິ່ງຂຶ້ນ." ຕໍ່ໄປນີ້ເປັນການນຳສະເໜີທີ່ລາວຈະກ່າວເຖິງ:

> ພຣະບາຮາອຸລລາຫ໌ ຊົງປະສູດໃນມື້ວັນທີ 12 ພະຈິກປີ 1817 ໃນເມືອງເຕຫະຣານ, ເຊິ່ງເປັນເມືອງຫຼວງຂອງອານາຈັກເປີເຊຍ. ຕັ້ງແຕ່ຍັງຊົງພຣະເຍົາ, ພຣະອົງສະແດງອອກເຖິງລັກສະນະພິເສດຕ່າງໆຫຼາຍປະການ ແລະ ຄວາມປະພຶດຂອງພຣະອົງກໍເຮັດໃຫ້ພຣະບິດາ ແລະ ພຣະມານດາຂອງພຣະອົງເຊື່ອວ່າ ພຣະອົງຖືກກຳນົດມາເພື່ອຄວາມຍິ່ງໃຫຍ່. ພຣະບິດາຂອງພຣະອົງເຊິ່ງເປັນເສນາບໍດີ ຜູ້ເປັນທີ່ນັບໜ້າຖືຕາໃນສຳນັກພຣະຣາຊະວັງໃນສະໄໝນັ້ນ. ໃນຄືນໜຶ່ງ, ພຣະບິດາຂອງພຣະອົງຝັນໄປວ່າ ພຣະບາຮາອຸລລາຫ໌ ກຳລັງລອຍຢູ່ໃນມະຫາສະໝຸດອັນກວ້າງໃຫຍ່ໄພສານ, ພຣະວໍລະກາຍຂອງພຣະອົງ ມີລັດສະໝີຮຸ່ງແຈ້ງເຮັດໃຫ້ຜືນນ້ຳສະຫວ່າງສະໄຫວ. ພຣະເກສາອັນດຳເຫຼື້ອມຂອງພຣະອົງ ແຜ່ກະຈາຍອອກໄປທຸກທິດທາງ. ມີຝູງປາຈຳນວນຫຼວງຫຼາຍມາຫ້ອມລ້ອມພຣະອົງຢູ່, ປາແຕ່ລະໂຕເອົາປາກຄາບປາຍເສັ້ນພຣະເກສາ ໂຕລະເສັ້ນດຶງຈ່ອງໄວ້ຢ່າງ

ໜຽວແໜ້ນ. ເຖິງແມ່ນວ່າຈະມີຝູງປາຈຳນວນຫຼວງຫຼາຍເຮັດແນວນັ້ນ, ກໍບໍ່ມີພຣະເກສາແມ່ນແຕ່ເສັ້ນດຽວຫຼຸດຫຼົ່ນຈາກພຣະສຽນຂອງ ພຣະບາຮາອຸລລາຫ໌. ພຣະອົງຊົງເຄື່ອນໄປຢ່າງເປັນອິດສະຫຼະ ແລະ ບໍ່ໄດ້ຖືກໜ່ວງໜ່ຽວ, ພວກຝູງປາຕ່າງກໍຕິດຕາມພຣະອົງໄປ. ໃນຕອນເຊົ້າຂອງມື້ຕໍ່ມາ, ພຣະບິດາຂອງພຣະອົງ ໄດ້ນຳຄວາມຝັນນີ້ໄປເລົ່າໃຫ້ຊາຍຜູ້ໜຶ່ງຟັງ, ຊາຍຜູ້ນັ້ນໄດ້ອະທິບາຍວ່າ: ມະຫາສະໝຸດອັນກວ້າງໃຫຍ່ໄພສານ ໝາຍເຖິງໂລກແຫ່ງການດຳລົງຢູ່ໂດຍລຳພັງຂອງພຣະອົງເອງ, ແລະດ້ວຍພຣະຫັດພຽງເບື້ອງດຽວ, ພຣະບາຮາອຸລລາຫ໌ ຈະຊົງຄອບຄອງໂລກ. ຝູງປາຈຳນວນຫຼວງຫຼາຍໝາຍເຖິງຄວາມສັ່ນສະເທືອນ ທີ່ພຣະອົງຈະຊົງເຮັດໃຫ້ເກີດຂຶ້ນໃນທ່າມກາງປະຊາຊົນໃນໂລກ, ພຣະອົງຈະຊົງໄດ້ຮັບຄວາມຄຸ້ມຄອງປ້ອງກັນຈາກພຣະຜູ້ເປັນເຈົ້າ, ພຣະຜູ້ຊົງພະລານຸພາບ ແລະ ຈະບໍ່ມີສິ່ງໃດທຳລາຍພຣະອົງໄດ້.

ໃນຍາມທີ່ພຣະບາຮາອຸລລາຫ໌ ຊົງມີພຣະຊົນໄດ້ສິບສາມ ຫາສິບສີ່ພັນສາ, ພຣະອົງຊົງເປັນທີ່ຮູ້ຈັກກັນຢ່າງດີຂອງຜູ້ຄົນໃນສຳນັກພຣະຣາຊະວັງ ກ່ຽວກັບຄວາມສະຫຼຽວສະຫຼາດ ແລະ ຄວາມຮອບຮູ້. ເມື່ອພຣະບິດາຂອງພຣະອົງເຖິງແກ່ອະນິດຈະກຳ ໃນຕອນທີ່ພຣະອົງຊົງມີພຣະຊົນຊາວສອງພັນສາ, ລັດຖະບານໄດ້ສະເໜີຕຳແໜ່ງເສນາບໍດີໃຫ້ແກ່ພຣະອົງ, ແຕ່ພຣະບາຮາອຸລລາຫ໌ຊົງບໍ່ໄດ້ສົນພຣະໄທທີ່ຈະໃຊ້ເວລາໃນການຈັດການກັບພາລະກິດທາງໂລກ, ພຣະອົງຊົງປະຕິເສດທີ່ຈະຮັບຕຳແໜ່ງນີ້ ແລະ ຊົງເລືອກທີ່ຈະດຳເນີນໄປຕາມທາງທີ່ພຣະຜູ້ເປັນເຈົ້າຊົງກຳນົດໄວ້ໃຫ້. ພຣະອົງຊົງໃຊ້ເວລາໄປໃນການຊ່ວຍເຫຼືອຜູ້ທີ່ຖືກກົດຂີ່, ຜູ້ເຈັບເປັນເອັນຮ້າຍ ແລະ ຜູ້ທຸກຍາກ. ຫຼັງຈາກນັ້ນບໍ່ດົນ, ພຣະອົງກໍຊົງເປັນທີ່ຮູ້ຈັກກັນດີໃນນາມຂອງຜູ້ດຳລົງຄວາມຍຸຕິທັມ.

ເມື່ອມີພຣະຊົນໄດ້ຊາວເຈັດພັນສາ, ພຣະບາຮາອຸລລາຫ໌ຊົງໄດ້ຮັບພຣະທັມມະລິຂິດຂອງພຣະບ໊ອບຈາກຜູ້ສົ່ງສານຄົນໜຶ່ງ, ພຣະບ໊ອບ ຊົງປະກາດເຖິງການໃກ້ເຂົ້າມາຂອງຍຸກສະໄໝຂອງພຣະຜູ້ເປັນເຈົ້າ, ທີ່ຈະມີສາສະນະທູດອົງໃໝ່ມາປະກົດ ແລະ ຈະຊົງນຳໂລກໄປສູ່ສັນຕິພາບ, ຄວາມສາມັກຄີປອງດອງ ແລະ ຄວາມຍຸຕິທັມທີ່ມະນຸດຊາດຕ່າງຄອງຄອຍ. ພຣະບາຮາອຸລລາຫ໌ ຊົງຍອມຮັບພຣະບ໊ອບໃນທັນທີ ແລະ ຊົງເຂົ້າເປັນສາວົກທີ່ມີຄວາມສັດທາອັນຍິ່ງໃຫຍ່ຄົນໜຶ່ງຂອງພຣະບ໊ອບ. ແຕ່ອະນິດຈາ, ບັນດາຜູ້ປົກຄອງອານາຈັກເປີເຊຍໃນສະໄໝນັ້ນ ຕາມືດບອດດ້ວຍຄວາມເຫັນແກ່ຕົວ, ໄດ້ສັ່ງການໃຫ້ມີການປະຫັດປະຫານ ບັນດາສາວົກຂອງພຣະບ໊ອບຢ່າງໂຫດຮ້າຍປ່າເຖື່ອນ. ບໍ່ເວັ້ນແມ່ນແຕ່ພຣະບາຮາອຸລລາຫ໌ ຜູ້ຊົງເປັນທີ່ຮູ້ຈັກກັນດີກ່ຽວກັບຄວາມດີງາມຂອງພຣະອົງ. ປະມານແປດປີ ພາຍຫຼັງຈາກທີ່ພຣະບ໊ອບຊົງປະກາດສາສະໜາ ແລະ ປະມານສອງປີພາຍຫຼັງຈາກທີ່ພຣະບ໊ອບຊົງຖືກປົງພຣະຊົນຊີບ, ພຣະບາຮາອຸລລາຫ໌ຊົງຖືກຄຸມຂັງໃນຄຸກມືດໃຕ້ດິນທີ່ເອີ້ນວ່າ "ຂຸມດຳ", ສາຍໂສ້ທີ່ລ່າມພຣະສໍຂອງພຣະອົງໜັກຫຼາຍ, ຈົນພຣະອົງເງີຍພຣະສຽນບໍ່ຂຶ້ນ. ພຣະ

ອົງຊົງທົນທຸກທໍລະມານຢ່າງແສນສາຫັດ ຢູ່ໃນຄຸກນີ້ນານເຖິງສີ່ເດືອນ, ແຕ່ວ່າໃນຕອນທີ່ຢູ່ໃນຄຸກແຫ່ງນີ້, ພະລັງຂອງພຣະຜູ້ເປັນເຈົ້າໄດ້ຫຼັ່ງໄຫຼລົງມາຍັງດວງຈິດຂອງພຣະອົງ ແລະ ເປີດເຜີຍໃຫ້ພຣະອົງຊົງຊາບວ່າ ພຣະອົງຄືພຣະຜູ້ຊົງສະເດັດມາຕາມພັນທະສັນຍາຂອງທຸກຍຸກທຸກສະໄໝດັ່ງທີ່ໄດ້ຖືກທໍານວາຍໄວ້. ຈາກຄຸກມືດແຫ່ງນີ້, ດວງຕາເວັນຂອງພຣະບາຮາອຸລລາຫ໌ໄດ້ສ່ອງແສງສະຫວ່າງໃຫ້ແກ່ທຸກສັບພະສິ່ງ.

ຫຼັງຈາກສີ່ເດືອນທີ່ຢູ່ໃນຂຸມດໍາ, ພຣະບາຮາອຸລລາຫ໌ຊົງຖືກຢຶດຊັບສິນທັງໝົດ ແລະ ພຣະອົງພ້ອມທັງຄອບຄົວກໍຖືກເນລະເທດ. ໃນທ່າມກາງລະດູໜາວອັນແສນໂຫດຮ້າຍ ທີ່ເຢັນກະດ້າງສັ່ນເຊັນໄປທັງຕົວ, ພຣະອົງພ້ອມກັບຄອບຄົວຕ້ອງເດີນທາງຜ່ານໄປຕາມຮ່ອມຫ້ວຍ ແລະ ເຫວຊັນຂອງຫຸບເຂົາທາງທິດຕາເວັນຕົກຂອງເປີເຊຍໄປຍັງ ເມືອງແບັກແດັດ ເຊິ່ງໃນສະໄໝນັ້ນເປັນເມືອງໃຫຍ່ຂອງອານາຈັກ ອັອດໂຕມານ ແລະ ໃນປະຈຸບັນເປັນເມືອງຫຼວງຂອງປະເທດອີຣັກ. ບໍ່ມີຄໍາໃດສາມາດບັນລະຍາຍໄດ້ເຖິງຄວາມທຸກທໍລະມານຂອງພຣະອົງ ແລະ ຄອບຄົວ, ໃນຂະນະທີ່ພຣະອົງຊົງເດີນທາງດ້ວຍການຍ່າງໄປຕາມພື້ນດິນ ທີ່ປົກຄຸມດ້ວຍຫິມະທີ່ແຂງຈົນກາຍເປັນນໍ້າກ້ອນ. ເປັນເສັ້ນທາງຍາວໄກຫຼາຍຮ້ອຍກິໂລແມັດ ເພື່ອໄປຍັງເມືອງທີ່ເຕັມໄປດ້ວຍຊະຕາກໍານັ້ນ.

ບໍ່ດົນປານໃດ, ຊື່ສຽງຂອງພຣະບາຮາອຸລລາຫ໌ກໍແຜ່ຂະຫຍາຍໄປທົ່ວເມືອງແບັກແດັດ ແລະ ເມືອງອື່ນໆທີ່ຢູ່ໃກ້ຄຽງ, ມີຜູ້ຄົນຈໍານວນຫຼວງຫຼາຍມາຂໍພອນຈາກພຣະອົງ, ພຣະຜູ້ຊົງເປັນນັກໂທດທີ່ຖືກເນລະເທດ. ແຕ່ມີຄົນຢູ່ຈໍານວນໜຶ່ງທີ່ອິດສາໃນຊື່ສຽງຂອງພຣະອົງ, ໜຶ່ງໃນນັ້ນແມ່ນນ້ອງຊາຍຕ່າງມານດາຂອງພຣະອົງກໍຄື ມີຣ໌ຊາ ຢະຫ໌ຢໍ ຊຶ່ງເປັນຜູ້ທີ່ອາໄສຢູ່ພາຍໃຕ້ການເອົາໃຈໃສ່ດ້ວຍຄວາມຮັກຂອງພຣະອົງ. ມີຣ໌ຊາ ຢະຫ໌ຢໍ ຄັດຄ້ານ ພຣະບາຮາອຸລລາຫ໌, ຄິດວ່າພວກບາບີທີ່ໃນຕອນນັ້ນໃຫ້ຄວາມເຄົາລົບແກ່ເຂົາ ແລະ ຈະໃຫ້ເຂົາເປັນຜູ້ນໍາ. ແຜນຂອງ ມີຣ໌ຊາ ຢະຫ໌ຢໍ ໄດ້ກໍ່ໃຫ້ເກີດການແຕກສາມັກຄີໃນໝູ່ສາວົກຂອງ ພຣະບ໊ອບ ແລະ ເຮັດໃຫ້ພຣະບາຮາອຸລລາຫ໌ຊົງເສຍພຣະໄທຫຼາຍທີ່ສຸດ. ໃນຄືນໜຶ່ງ, ພຣະອົງຊົງສະເດັດອອກຈາກເຮືອນໄປໂດຍບໍ່ໄດ້ບອກຜູ້ໃດ ແລະ ຊົງສະເດັດໄປຍັງສາຍພູທີ່ຢູ່ໃນແຄວ້ນເຄີດິດສ໌ທານ. ພຣະອົງຊົງໃຊ້ຊີວິດໃນການສູດອະທິຖານ ແລະ ນັ່ງສະມາທິຢ່າງໂດດດ່ຽວ. ທີ່ນັ້ນ, ພຣະອົງຊົງພັກພາອາໄສຢູ່ໃນຖໍ້ານ້ອຍໆ ແລະ ຊົງຮັບປະທານອາຫານແບບງ່າຍດາຍທີ່ສຸດ. ບໍ່ມີຜູ້ໃດຮູ້ວ່າພຣະອົງເປັນໃຜ, ມາແຕ່ໃສ. ບໍ່ດົນປານໃດ, ຜູ້ຄົນຢູ່ແຖວນັ້ນກໍເລີ່ມກ່າວເຖິງພຣະອົງດ້ວຍນາມມະຍົດວ່າ "ພຣະຜູ້ໄຮ້ນາມ", ຜູ້ເປັນນັກບຸນທີ່ໄດ້ຮັບການປະສິດປະສາດຄວາມຮູ້ ໂດຍພຣະຜູ້ເປັນເຈົ້າ. ເມື່ອຂ່າວກ່ຽວກັບນັກບຸນຜູ້ສັກສິດນີ້ ກະຈາຍໄປຮອດບຸດຊາຍຜູ້ທໍາອິດຂອງພຣະອົງກໍຄື "ພຣະອັບດຸລບາຮາ" ເຊິ່ງທ່ານກໍຊາບທັນທີວ່າ ນັກບຸນຜູ້ນີ້ຄືພຣະບິດາຜູ້ເປັນທີ່ຮັກຂອງທ່ານ. ທ່ານໄດ້ໃຫ້ຄົນນໍາຈົດໝາຍໄປສົ່ງ ເຊິ່ງ

ເປັນຂໍ້ຄວາມອ້ອນວອນ ຂໍໃຫ້ພຣະບາຮາອຸລລາຫ໌ ສະເດັດກັບຄືນມາຍັງເມືອງແບັກແດັດ. ພຣະບາຮາອຸລລາຫ໌ຊົງຍອມຮັບ ແລະ ນັບເປັນການສິ້ນສຸດລົງຂອງຊ່ວງເວລາສອງປີແຫ່ງການພັດພາກທີ່ເຕັມໄປດ້ວຍຄວາມເຈັບປວດ.

ລະຫວ່າງທີ່ພຣະບາຮາອຸລລາຫ໌ສະເດັດຈາກໄປ, ສະພາບຂອງຊຸມຊົນບາບີ ໄດ້ຊຸດໂຊມລົງຢ່າງຫຼວງຫຼາຍ. ເຈັດປີທີ່ພຣະອົງຊົງອາໄສຢູ່ໃນແບັກແດັດ, ນັບທັງການກັບຄືນມາຈາກພູ, ພຣະບາຮາອຸລລາຫ໌ຊົງເລີ່ມຟື້ນຟູສະພາບຈິດໃຈທີ່ສັບສົນວຸ້ນວາຍຂອງຊາວບາບີຄືນໃໝ່. ແມ່ນວ່າພຣະອົງຍັງບໍ່ທັນໄດ້ຊົງປະກາດສະຖານະອັນຍິ່ງໃຫຍ່ຂອງພຣະອົງ, ອຳນາດ ແລະ ອັດສະລິຍະພາບໃນຖ້ອຍຄຳແຫ່ງພຣະວັດຈະນະຂອງພຣະອົງ ສາມາດຊະນະໃຈຂອງຊາວບາບີຈຳນວນຫຼວງຫຼາຍ ແລະປະຊາຊົນຈາກທຸກຊົນຊັ້ນ. ແຕ່ພວກນັກບວດມຸດສະລິມທີ່ບ້າສາສະໜາ ບໍ່ສາມາດທົນເບິ່ງອິດທິພົນອັນຍິ່ງໃຫຍ່ຂອງພຣະບາຮາອຸລລາຫ໌ ທີ່ມີຕໍ່ດວງວິນຍານຈຳນວນມະຫາສານ. ພວກເຂົາໄປຟ້ອງຮ້ອງເຈົ້າໜ້າທີ່ຂອງທາງການ ຈົນກະທັ້ງລັດຖະບານຂອງເປີເຊຍ ຮ່ວມມືກັບເຈົ້າໜ້າທີ່ບາງຄົນຂອງອານາຈັກອ໊ອດໂຕມານ ສັ່ງເນລະເທດພຣະບາຮາອຸລລາຫ໌ ໃຫ້ພົ້ນຈາກບ້ານເກີດເມືອງນອນຂອງພຣະອົງໄປໄກກວ່າເດີມ, ເທື່ອນີ້ແມ່ນໄປຍັງເມືອງຄອນສະແຕນຕິໂນເປີລ.

ເດືອນເມສາປີ 1863, ເປັນເດືອນແຫ່ງຄວາມໂສກເສົ້າສຳລັບຊາວເມືອງແບັກແດັດ. ພຣະຜູ້ຊົງເປັນທີ່ຮັກຂອງພວກເຂົາກຳລັງຈະອອກໄປຈາກເມືອງ, ມຸ່ງໜ້າໄປຍັງຈຸດໝາຍປາຍທາງທີ່ພວກເຂົາບໍ່ຮູ້ຈັກ. ກ່ອນທີ່ພຣະອົງຈະຊົງສະເດັດຈາກໄປ, ພຣະບາຮາອຸລລາຫ໌ ຊົງສະເດັດໄປຍັງສວນແຫ່ງໜຶ່ງທີ່ຢູ່ຊານເມືອງ, ຊົງປັກຫຼັກກາງພູ້ບພາຂອງພຣະອົງ ແລະ ຊົງປະທັບຢູ່ເປັນເວລາສິບສອງວັນເພື່ອຕ້ອນຮັບແຂກຄົນທີ່ພາກັນຫຼັ່ງໄຫຼເຂົ້າມາ ເຕົ້າໂຮມກັນເພື່ອກ່າວຄຳອຳລາ. ບັນດາສາວົກຂອງພຣະບ໊ອບ ກໍມາທີ່ສວນແຫ່ງນັ້ນດ້ວຍຄວາມອຸກອົກອຸກໃຈ; ບາງຄົນຢາກຕິດຕາມພຣະບາຮາອຸລລາຫ໌ ໄປກັບການເນລະເທດຄັ້ງນີ້, ເຖິງແມ່ນມີຫຼາຍຄົນຕ້ອງຢູ່ເບື້ອງຫຼັງ ແລະ ຖືກພາກອອກຈາກການພົວພັນໃກ້ຊິດກັບພຣະອົງ. ແຕ່ພຣະຜູ້ເປັນເຈົ້າບໍ່ໄດ້ຊົງມີພຣະປະສົງ ທີ່ຈະໃຫ້ໂອກາດນີ້ເປັນເວລາແຫ່ງຄວາມໂສກເສົ້າ. ປະຕູແຫ່ງຄວາມກະລຸນາບໍ່ມີທີ່ສິ້ນສຸດ ຂອງພຣະອົງເປີດກວ້າງອອກ ແລະ ພຣະບາຮາອຸລລາຫ໌ ກໍຊົງປະກາດຕໍ່ບັນດາຜູ້ທີ່ມາເຕົ້າໂຮມວ່າ ພຣະອົງຄືພຣະຜູ້ທີ່ພຣະບ໊ອບຊົງທຳນວາຍໄວ້ວ່າ ພຣະຜູ້ເປັນເຈົ້າຈະຊົງເຮັດໃຫ້ປະກົດ. ຄວາມໂສກເສົ້າແມ່ນຫຼີກທາງໃຫ້ແກ່ຄວາມປິຕິຍິນດີຢ່າງເຫຼືອລົ້ນ; ຫົວໃຈຖືກຍົກສູງຂຶ້ນ ແລະ ດວງວິນຍານທັງຫຼາຍກໍຖືກຈູດຂຶ້ນດ້ວຍໄຟແຫ່ງຄວາມຮັກຂອງພຣະອົງ. ຊ່ວງໄລຍະເວລາສິບສອງວັນໃນເດືອນເມສານີ້ ແມ່ນໄດ້ຮັບການສະເຫຼີມສະຫຼອງທຸກຫົນແຫ່ງໃນນາມ ເທດສະການຣິດສ໌ວານ, ເຊິ່ງເປັນບຸນຄົບຮອບການປະກາດພຣະຮາຊະພາລະກິດທີ່ປົກຄຸມທົ່ວທັງໂລກຂອງພຣະບາຮາອຸລລາຫ໌.

ຄອນສະແຕນຕິໂນເປິລ ແມ່ນເປັນເມືອງຫຼວງຂອງອານາຈັກອ໊ອດໂຕມານ. ຢູ່ທີ່ເມືອງນີ້ມີແຕ່ພຽງສີ່ເດືອນເທົ່ານັ້ນ, ແມ່ນອີກຄັ້ງໜຶ່ງທີ່ອັດສະລິຍະພາບອັນຍິ່ງໃຫຍ່ ແລະ ບຸກຄະລິກກະພາບຂອງພຣະບາຮາອຸລລາຫ໌ ເລີ່ມດຶງດູດຜູ້ຄົນເພີ່ມຂຶ້ນຢ່າງຫຼວງຫຼາຍ. ພວກນັກບວດມຸດສະລິມທີ່ບ້າສາສະໜາຈົ່ມນຳກັນວ່າ ພຣະອົງຈະຢູ່ໃນຄອນສະແຕນຕິໂນເປິລຕໍ່ໄປບໍ່ໄດ້, ພວກເຂົາຍຸຍົງສົ່ງເສີມເຈົ້າໜ້າທີ່ຂອງທາງການໃຫ້ເນລະເທດພຣະບາຮາອຸລລາຫ໌ ຕໍ່ໄປຍັງເມືອງອະເດຣຍໂນເປິລ. ຢູ່ທີ່ອະເດຣຍໂນເປິລ, ເຊິ່ງເປັນບ່ອນທີ່ພຣະອົງຊົງພຳນັກຢູ່ເປັນເວລາສີ່ປີເຄິ່ງນັ້ນ, ພຣະບາຮາອຸລລາຫ໌ຊົງແຕ່ງພຣະຣາຊະສານໄປຍັງບັນດາເຈົ້າຊີວິດ ແລະ ນັກປົກຄອງທັງຫຼາຍໃນໂລກເພື່ອຮຽກຮ້ອງໃຫ້ພວກເຂົາຍົກເລີກການກົດຂີ່ຂົ່ມເຫັງ ແລະ ອຸທິດຕົນໃນການຮັບໃຊ້ປະຊາຊົນ. ດັ່ງນັ້ນ, ບັນດາສັດຕູຂອງພຣະອົງ ກໍຄິດວາງແຜນລົງໂທດພຣະອົງຢ່າງໂຫດຮ້າຍສາມານທີ່ສຸດ. ພຣະອົງພ້ອມກັບຄອບຄົວຈຶ່ງຖືກເນລະເທດໄປຍັງເມືອງອັກຄາ, ເຊິ່ງໃນເວລານັ້ນເປັນນິຄົມຄຸກທີ່ໂຫດຮ້າຍທີ່ສຸດໃນອານາຈັກ. ພວກຄົນປັນຍາອ່ອນຄິດວ່າ “ແນ່ນອນທີ່ສຸດ, ພຣະອົງຄົງຈະດັບສິ້ນໄປໃນສະພາບອັນໂຫດຮ້າຍຂອງເມືອງຄຸກແຫ່ງນີ້,” ພວກເຂົາຄິດວ່າຕົນເອງສາມາດຢຸດຢັ້ງແຜນການ ທີ່ພຣະຜູ້ເປັນເຈົ້າຊົງວາງໄວ້ເພື່ອໃຫ້ບັງເກີດຂຶ້ນ.

ຄວາມຍາກລຳບາກທີ່ພຣະບາຮາອຸລລາຫ໌ຊົງທຸກທໍລະມານຢູ່ໃນເມືອງອັກຄາ ແມ່ນຫຼວງຫຼາຍກວ່າຈະພັນລະນາໄດ້. ພຣະອົງຊົງຂາດເຂີນທຸກສິ່ງອຳນວຍຄວາມສະດວກ ແລະ ຖືກອ້ອມຮອບໄປດ້ວຍສັດຕູງູພິດທັງກາງເວັນ ແລະ ກາງຄືນ. ແຕ່ສະພາບຕ່າງໆຂອງການຄຸມຂັງກໍຄ່ອຍໆປ່ຽນໄປ. ບັນດາຜູ້ທີ່ອາໄສຢູ່ໃນເມືອງອັກຄາ ແລະ ອຳນາດການປົກຄອງເມືອງຕ່າງໆເລີ່ມຄິດໄດ້ວ່າພຣະອົງ ແລະ ກຸ່ມນ້ອຍໆຂອງພວກບາຮາຍທີ່ຖືກເນລະເທດມາ ສູ່ເມືອງຂອງພວກເຂົາເປັນຜູ້ບໍລິສຸດ. ອີກຄັ້ງໜຶ່ງທີ່ປະຊາຊົນໄດ້ຮັບການດຶງດູດ ໂດຍອັດສະລິຍະພາບ ແລະ ຄວາມຮັກຂອງພຣະຜູ້ຊົງມີບຸກຄະລິກກະພາບພິເສດນີ້, ເຖິງແມ່ນວ່າຄົນສ່ວນຫຼາຍບໍ່ໄດ້ເຂົ້າໃຈ ສະຖານະອັນຍິ່ງໃຫຍ່ຂອງພຣະອົງ. ເວລາຜ່ານໄປປະມານເກົ້າປີ, ປະຕູຂອງເມືອງຄຸກກໍເປີດອອກໃຫ້ ພຣະບາຮາອຸລລາຫ໌ ແລະ ບັນດາສາວົກຂອງພຣະອົງ. ພຣະຣາຊະບຸດຜູ້ເປັນທີ່ຮັກຂອງພຣະອົງ, ພຣະອັບດຸລບາຮາ ກໍ່ສາມາດຮັກສາສະຖານທີ່ອັນສະຫງ່າງາມແຫ່ງໜຶ່ງໄວ້ ສຳລັບພຣະບິດາຂອງທ່ານ ເພື່ອອອກໄປພຳນັກຢູ່ພາຍນອກກຳແພງເມືອງ ແລະ ໃນທີ່ສຸດກໍເປັນໄປໄດ້, ທີ່ພຣະອັບດຸລບາຮາສາມາດເຊົ່າເຮືອນຫຼັງໜຶ່ງໃນເຂດຊົນນະບົດ ໃນບ່ອນທີ່ພຣະບາຮາອຸລລາຫ໌ ຊົງໃຊ້ເວລາທີ່ເຫຼືອສິບສາມປີຂອງຊີວິດຂອງພຣະອົງໃນຄວາມສະຫງົບສຸກ. ຂະນະນີ້ພວກເຮົາຮູ້ຈັກເຮືອນຫຼັງນີ້ ໃນນາມຄະລືຫາດບາຫ໌ຈີ ແລະ ພຣະອົງຊົງສະເດັດປະລິນິບພານຢູ່ທີ່ນັ້ນ ໃນເດືອນພຶດສະພາປີ 1892 ໃນຊ່ວງເວລາແຫ່ງຄວາມຮຸ່ງເຮືອງ ແລະ ຄວາມສະຫງ່າງາມສູງສຸດຂອງພຣະອົງ.

ພຣະບາຮາອຸລລາຫ໌ ຊົງຊູທຸງໄຊແຫ່ງສັນຕິພາບ ແລະ ມິດຕະພາບສາກົນ ແລະ ຊົງເປີດເຜີຍພຣະວັດຈະນະຂອງພຣະຜູ້ເປັນເຈົ້າ. ເຖິງແມ່ນວ່າສັດຕູຈະລວມກຳລັງຕໍ່ຕ້ານພຣະອົງ, ພຣະອົງກໍຍັງຊົງມີໄຊຊະນະເໜືອເລົ່າສັດຕູ ດັ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງສັນຍາໄວ້ກັບພຣະອົງ ໃນຍາມທີ່ພຣະອົງຖືກພັນທະນາການດ້ວຍສາຍໂສ້ ຢູ່ໃນຄຸກມືດແຫ່ງເຕຫະຣານ. ໃນຊ່ວງຊີວິດຂອງພຣະອົງ, ຂ່າວສານຂອງພຣະອົງ ໄດ້ຟື້ນຊີວິດຈິດໃຈຂອງຜູ້ຄົນຫຼາຍພັນຄົນ. ແລະ ໃນປັດຈຸບັນ, ຄຳສອງຂອງພຣະອົງຍັງສືບຕໍ່ແຜ່ຂະຫຍາຍອອກໄປທົ່ວໂລກ. ບໍ່ມີສິ່ງໃດສາມາດສະກັດກັ້ນພຣະອົງ ຈາກການບັນລຸສູ່ເປົ້າໝາຍອັນສູງສຸດຂອງພຣະອົງ, ກໍຄືການເຕົ້າໂຮມມະນຸດຊາດໄວ້ໃນສາສະໜາສາກົນດຽວກັນ, ໃນສາສະໜາທີ່ເປັນໜຶ່ງດຽວຂອງທຸກຄົນ.

ເລື່ອງລາວຊີວິດຂອງພຣະບາຮາອຸລລາຫ໌ຂ້າງເທິງນັ້ນອາດຈະຍາວແດ່. ກ່ອນທີ່ຈະດຳເນີນການຕໍ່ໃນບົດເຝິກຫັດຂ້າງລຸ່ມນີ້, ເຈົ້າຄວນອ່ານຫຍໍ້ໜ້າຂອງເລື່ອງລາວແຕ່ລະຫຍໍ້ໜ້າ ກັບກຸ່ມຂອງເຈົ້າ ແລະຖາມຄຳຖາມກັນຈົນກວ່າເຈົ້າຈະຮຽນຮູ້ເນື້ອຫາໄດ້ດີ ແລະສາມາດນຳສະເໜີໄດ້ຢ່າງງ່າຍດາຍ. ແຜນທີ່ຕໍ່ໄປນີ້ ຈະຊ່ວຍໃຫ້ເຈົ້ານຶກເຖິງເສັ້ນທາງການເນລະເທດຂອງ ພຣະບາຮາອຸລລາຫ໌ ແລະ ຈົດຈຳເຫດການທີ່ເກີດຂຶ້ນລະຫວ່າງນັ້ນ.



1. ຈະເປັນປະໂຫຍດໃຫ້ແກ່ເຈົ້າ ທີ່ຈະຂຽນຂໍ້ຄວາມລົງໃນຊ່ອງຫວ່າງຂ້າງລຸ່ມນີ້, ກ່ຽວກັບເລື່ອງລາວຂ້າງເທິງ, ເຖິງລຳດັບເຫດການທີ່ເກີດຂຶ້ນໃນຊີວິດຂອງພຣະບາຮາອຸລລາຫ໌.

2. ໃນການສົນທະນາກ່ຽວກັບຫົວຂໍ້ຫຼັກກ່ຽວກັບ ຊີວິດຂອງພຣະບາຮາອຸລລາຫ໌, ມີແນວຄິດຫຼາຍປະການທີ່ຕ້ອງເນັ້ນຍ້ຳນອກເໜືອໄປຈາກລຳດັບເຫດການ. ມີຄວາມສຳຄັນເປັນພິເສດ ເຊິ່ງເປັນການສະທ້ອນໃຫ້ເຫັນເຖິງຄວາມທຸກທໍລະມານທີ່ພຣະອົງຊົງອົດທົນ ດ້ວຍຄວາມຮັກທີ່ມີຕໍ່ມະນຸດຊາດ, ແລະ ໄຊຊະນະທີ່ພິເສດໄດ້ຈາກສັດທາຂອງພຣະອົງ ເມື່ອປະເຊີນໜ້າກັບການຕໍ່ຕ້ານ. ຂໍໃຫ້ຖ້ອຍຄຳເລົ່ານີ້ທີ່ຝັງເລິກລົງໃນແນວຄວາມຄິດ ແລະ ຫົວໃຈຂອງພວກເຮົາ:

**"ພຣະຜູ້ຊົງຄວາມງາມບູຮານນະການຊົງຍອມຖືກລ່າມດ້ວຍສາຍໂສ້ ເພື່ອມະນຸດຊາດອາດຈະໄດ້ຮັບການປົດປ່ອຍຈາກພັນທະນາການ ແລະ ຊົງຍອມຮັບການເປັນນັກໂທດພາຍໃນຖານທີ່ໝັ້ນທີ່ຍິ່ງໃຫຍ່ທີ່ສຸດແຫ່ງນີ້, ເພື່ອຄົນທັງໂລກຈະໄດ້ຮັບອິດສະຫຼະພາບທີ່ແທ້ຈິງ. ພຣະອົງຊົງດື່ມເສດຕະກອນກົ້ນຈອກແຫ່ງຄວາມເສົ້າໂສກຈົນໝົດສິ້ນ ເພື່ອປະຊາຊົນທົ່ວໂລກອາດບັນລຸເຖິງຄວາມສຸກຕະຫຼອດໄປ ແລະ ເຕັມໄປດ້ວຍຄວາມຍິນດີ. ນີ້ຄືຄວາມເມດຕາຂອງພຣະຜູ້ເປັນນາຍຂອງເຈົ້າ, ພຣະຜູ້ຊົງກະລຸນາ, ພຣະຜູ້ຊົງເມດຕາສູງສຸດ. ເຮົາຍອມຮັບຖານະທີ່ເສື່ອມສັກສີ, ໂອ ຜູ້ທີ່ເຊື່ອໃນເອກະພາບຂອງພຣະຜູ້ເປັນເຈົ້າ, ເພື່ອເຈົ້າອາດຈະໄດ້ຮັບການຍົກຍ້ອງສັນລະເສີນ ແລະ ໄດ້ຮັບ**

**ຄວາມທຸກທໍລະມານອັນຫຼາກຫຼາຍ, ເພື່ອເຈົ້າຈະໄດ້ຮັບຄວາມຈະເລີນຮຸ່ງເຮືອງ ແລະ ງອກງາມ. ພຣະອົງຜູ້ຊົງສະເດັດມາເພື່ອສ້າງໂລກໃໝ່ທັງມວນ. ຈົ່ງເບິ່ງ, ເຖິງວິທີທີ່ພວກເຂົາໄດ້ຮ່ວມເປັນພັນທະມິດກັບພຣະຜູ້ເປັນເຈົ້າ, ບີບບັງຄັບພຣະອົງໃຫ້ໄປພຳນັກຢູ່ພາຍໃນເມືອງ ທີ່ໂດດດ່ຽວດຽວດາຍທີ່ສຸດ!"[10]**

3. ເມື່ອພວກເຮົາເວົ້າເຖິງຄວາມທຸກທໍລະມານຂອງ ພຣະບາຮາອຸລລາຫ໌, ພວກເຮົາບໍ່ຄວນນຳສະເໜີວ່າ ພຣະອົງເປັນເຫຍື່ອຂອງສັດຕູທີ່ກະທຳຜິດ. ພຣະອົງຊົງຍອມຖືກພັນທະນາການ ດ້ວຍສາຍໂສ້ດ້ວຍຄວາມເຕັມໃຈກໍເພື່ອປົດປ່ອຍມະນຸດຊາດ. ເລື່ອງລາວຊີວິດຂອງພຣະອົງ, ແມ່ນວ່າມີຫຼາຍເຫດການ ທີ່ເຕັມໄປດ້ວຍຄວາມທຸກທໍລະມານ, ກໍນັບວ່າເປັນອີກສາລະສຳຄັນປະການໜຶ່ງຂອງໄຊຊະນະ. ດ້ວຍການຊ່ວຍເຫຼືອຂອງຜູ້ອຳນວຍຄວາມສະດວກໃນກຸ່ມຂອງເຈົ້າ, ຂໍໃຫ້ເຈົ້າກະກຽມຄຳບັນຍາຍສັ້ນໆ ກ່ຽວກັບຄວາມທຸກທໍລະມານ ແລະ ໄຊຊະນະຂອງພຣະບາຮາອຸລລາຫ໌ ໂດຍອ້າງອີງຈາກຄວາມຮູ້ໃນປະຈຸບັນຂອງເຈົ້າ ກ່ຽວກັບຊີວິດຂອງພຣະອົງ? ຄຳຖາມຂ້າງລຸ່ມນີ້ອາດຈະຊ່ວຍເຈົ້າໄດ້.

ກ ເຫດໃດພຣະບາຮາອຸລລາຫ໌ ຈຶ່ງຊົງຍອມຖືກພັນທະນາການດ້ວຍສາຍໂສ້? ______________

______________________________________________________________

ຂ. ຍ້ອນຫຍັງພຣະບາຮາອຸລລາຫ໌ ຊົງຍອມຖືກຈັບເປັນນັກໂທດ? ______________________

______________________________________________________________

ຄ. ຍ້ອນຫຍັງພຣະບາຮາອຸລລາຫ໌ ຈຶ່ງຊົງດື່ມຈາກຈອກແຫ່ງຄວາມເສົ້າໂສກ? ______________

______________________________________________________________

ງ. ຍ້ອນຫຍັງພຣະບາຮາອຸລລາຫ໌ ຊົງຍອມຮັບຖານະທີ່ເສື່ອມສັກສີ? ____________________

______________________________________________________________

ຈ. ຍ້ອນຫຍັງພຣະບາຮາອຸລລາຫ໌ ຈຶ່ງຕ້ອງຊົງທົນທຸກທໍລະມານຫຼວງຫຼາຍຄືແນວນີ້? __________

______________________________________________________________

ສ. ພຣະບາຮາອຸລລາຫ໌ຊົງຍອມທົນທຸກທໍລະມານ ຍ້ອນພຣະອົງບໍ່ມີອຳນາດທີ່ຈະກະທຳສິ່ງອື່ນໆບໍ່?____________________________________________________________

ຊ. ຖ້າຫາກພຣະບາຮາອຸລລາຫ໌ບໍ່ຊົງໄຮ້ເຊິ່ງອຳນາດຕໍ່ໜ້າສັດຕູ, ແລ້ວເປັນຫຍັງພຣະອົງຕ້ອງຊົງທົນທຸກທໍລະມານ?______________________________________________________

______________________________________________________________

## ຕອນທີ 7

ການມາຢ້ຽມຢາມຄອບຄົວຊານເຊັດສ໌ ຄັ້ງທີສອງຂອງ ອາເລຈັນດຣາ ເປັນເລື່ອງທີ່ໜ້າຍິນດີຄືກັນກັບຄັ້ງທຳອິດ. ຄອບຄົວຊານເຊັດສ໌ຄຸ້ນເຄີຍກັບເລື່ອງລາວຊີວິດຂອງ ພຣະບາຮາອຸລລາຫ໌ຢູ່ແລ້ວ, ແຕ່ພວກເຂົາກໍຍິນດີທີ່ຈະຮຽນຮູ້ເພີ່ມເຕີມຈາກການນຳສະເໜີຂອງ ອາເລຈັນດຣາ ແລະ ໄດ້ຮັບຮູ້ເຖິງເລື່ອງລາວຢ່າງຊັດເຈນ ກ່ຽວກັບຄວາມທຸກທໍລະມານຂອງພຣະອົງ. ເບິ່ງຄືວ່າ ນາງ ຊານເຊັດສ໌ ໄດ້ໄຕ່ຕອງໃນຕອນໜຶ່ງວ່າ, "ການສະເດັດມາຂອງພຣະຜູ້ສະແດງໃຫ້ປະກົດຂອງພຣະຜູ້ເປັນເຈົ້ານັ້ນ, ມັກຈະທົນທຸກຢູ່ໃນມືຂອງຜູ້ທີ່ກະຫາຍຄວາມເປັນຜູ້ນຳ ແລະ ອຳນາດທາງໂລກ." ອາເລຈັນດຣາ ຕັດສິນໃຈຢ່າງເໝາະສົມທີ່ຈະແບ່ງປັນພຣະວັດຈະນະທີ່ລາວໄດ້ທ່ອງຈຳມາກັບພວກເຂົາ. ເຈົ້າກໍຄືກັນ, ສາມາດຮຽນຮູ້ໄດ້ຈາກການສຶກສາຂອງເຈົ້າໃນຕອນທີ່ຜ່ານມາ, ທີ່ພຣະບາຮາອຸລລາຫ໌ ຊົງກ່າວເຖິງຄວາມທຸກທໍລະມານທີ່ພຣະອົງອົດທົນເພື່ອປະໂຫຍດຂອງມະນຸດຊາດ, ເພື່ອພວກເຮົາຈະໄດ້ຮັບການປົດປ່ອຍຈາກການກົດຂີ່ ແລະ ໄດ້ຮັບຄວາມຄວາມສຸກຕະຫຼອດໄປ. ກັນລະຍານະມິດທັງສາມຄົນມີຄວາມຮູ້ສຶກຖືກກະຕຸ້ນຈາກການສົນທະນາໃນມື້ນັ້ນ.

ໃນການພິຈາລະນາການຢ້ຽມຢາມຄັ້ງຕໍ່ໄປຂອງລາວ, ອາເລຈັນດຣາ ສະຫຼຸບໄດ້ຢ່າງວ່ອງໄວວ່າ ສະຖານະຂອງພຣະອັບດຸລບາຮາ ໜ້າຈະເປັນຫົວຂໍ້ທີ່ເໝາະສົມສຳລັບການສົນທະນາໃນຄັ້ງຕໍ່ໄປ. ນີ້ຄືປະເດັນທີ່ລາວແນ່ໃຈໃນການນຳໄປກ່າວ:

> ພຣະຣາຊະບຸດຜູ້ທຳອິດຂອງ ພຣະບາຮາອຸລລາຫ໌ ເປັນບຸກຄົນທີ່ມີເອກະລັກສະເພາະຕົວທີ່ສຸດໃນປະຫວັດສາດຂອງມະນຸດຊາດ ແລະ ພວກເຮົາບໍ່ພົບວ່າຈະມີບຸກຄົນໃດຄ້າຍຄືກັບທ່ານໃນສາສະໜາໃດກໍຕາມໃນກ່ອນໜ້ານີ້. ທ່ານຈຳໄດ້ໃນບົດຄວາມໜຶ່ງ ທີ່ກ່າວເຖິງສະຖານະອັນສັກສິດຂອງພຣະບິດາຂອງທ່ານ, ໃນຂະນະທີ່ຍັງເຍົາໄວ ແລະ ມີສ່ວນຮ່ວມໃນການຖືກເນລະເທດ ແລະ ຄວາມທຸກທໍລະມານຂອງພຣະອົງ. ຫຼັງຈາກທີ່ພຣະບາຮາອຸລລາຫ໌ ຊົງສະເດັດປະລິນິບພານ, ຊຸມຊົນບາຮາຍກໍຢູ່ພາຍໃຕ້ການເບິ່ງແຍງ ແລະ ການຄຸ້ມຄອງຂອງພຣະອັບດຸລບາຮາ. ພວກເຮົາບໍ່ສາມາດຊື່ນຊົມສິ່ງທີ່ຍິ່ງໃຫຍ່ໄດ້ຢ່າງເຕັມທີ່ ເທົ່າກັບລາງວັນທີ່ພຣະບາຮາອຸລລາຫ໌ ໄດ້ມອບໃຫ້ແກ່ມະນຸດຊາດ, ໂດຍບໍ່ພຽງແຕ່ມອບຄວາມປະເສີດທີ່ສຸດໃຫ້ແກ່ພວກເຮົາເທົ່ານັ້ນ, ຍັງລວມເຖິງພຣະຣາຊະບຸດຂອງພຣະອົງ ເຊິ່ງເປັນຜູ້ທີ່ພຽບພ້ອມດ້ວຍຄວາມຮູ້ ແລະ ສະຕິປັນຍາ. ພຣະອົງຊົງກ່າວວ່າ ໂລກຈະໄດ້ຮັບການນຳທາງ ແລະ ສະຫວ່າງສະໄຫວ.
>
> ເມື່ອພວກເຮົາສຶກສາຊີວິດ ແລະ ຖ້ອຍຄຳຂອງພຣະອັບດຸລບາຮາ, ພວກເຮົາຈະໄດ້ຮັບຂໍ້ມູນຢ່າງເລິກເຊິ່ງ ກ່ຽວກັບສະຖານະພິເສດສະເພາະ ທີ່ທ່ານຄອບຄອງໃນຍຸກແຫ່ງການປະສິດປະສາດນີ້. ສະຖານະສາມປະການນີ້ແມ່ນສຳຄັນເຊິ່ງພວກເຮົາຈະຕ້ອງຈົດຈຳໄວ້:
>
> ປະການທຳອິດ, ພຣະອັບດຸລບາຮາເປັນສູນກາງແຫ່ງປະຕິນຍາຂອງ ພຣະບາຮາອຸລລາຫ໌. ພຣະບາຮາອຸລລາຫ໌ ຊົງສ້າງປະຕິນຍາໄວ້ກັບບັນດາສາວົກຂອງພຣະອົງ, ຮຽກຮ້ອງໃຫ້ພວກເຂົາເຊື່ອຟັງ ແລະ ມຸ່ງຈິດໄປຍັງສູນກາງນັ້ນ ແລະ ຈົ່ງຮັກພັກດີຢ່າງສິ້ນສຸດຈິດໃຈຕໍ່ສູນກາງນັ້ນ. ຢູ່ໃນພີໄນກຳ

ຂອງທ່ານ, ພຣະອັບດຸລບາຣາແຕ່ງຕັ້ງ ທ່ານໂຊເກ ເອັຟເຟັນດີ, ຜູ້ພິທັກສາສະໜາ, ໃຫ້ເປັນສູນກາງທີ່ທຸກຄົນຄວນຫັນໄປຫາຫຼັງຈາກທີ່ທ່ານຈາກໄປ. ໃນປະຈຸບັນ, ສູນກາງແຫ່ງນີ້ຄືທັມມະສະພາຍຸຕິທັມແຫ່ງສາກົນ, ເຊິ່ງໄດ້ຮັບການສະຖາປະນາຂຶ້ນຕາມພຣະປະສົງທີ່ຊັດເຈນຂອງ ພຣະບາຣາອຸລລາຫ໌ ແລະ ຄຳແນະນຳທີ່ຈະແຈ້ງຂອງພຣະອັບດຸລບາຣາ ແລະ ທ່ານຜູ້ພິທັກສາສະໜາ. ພະລັງອຳນາດແຫ່ງພຣະປະຕິນຍາ ທີ່ລວບລວມຊຸມຊົນບາຮາຍເຂົ້າໄວ້ດ້ວຍກັນ ແລະ ປົກປ້ອງຊຸມຊົນຈາກການແຕກແຍກ ແລະ ການສະຫຼາຍຕົວ.

ປະການທີສອງ, ພຣະອັບດຸລບາຣາ ເປັນນາຍແປຖ້ອຍຄຳທີ່ບໍ່ມີຂໍ້ຜິດພາດຂອງ ພຣະບາຣາອຸລລາຫ໌. ການເປີດເຜີຍພຣະທັມອັນກວ້າງໃຫຍ່ໄພສານຂອງ ພຣະບາຣາອຸລລາຫ໌, ຄວາມໝາຍທີ່ເລິກເຊິ່ງທີ່ປະສິດປະສາດຢູ່ໃນຖ້ອຍຄຳຂອງພຣະອົງນັ້ນ, ພຣະອົງເຫັນວ່າຈຳເປັນຕ້ອງມອບໝາຍໃຫ້ແກ່ຜູ້ຕີຄວາມ, ເຊິ່ງເປັນຜູ້ທີ່ພຣະອົງເອງໄດ້ສ້າງແຮງບັນດານໃຈ. ດັ່ງນັ້ນ, ເພື່ອຊົນລຸ້ນຫຼັງທີ່ຕາມມາ, ມະນຸດຊາດຈະສາມາດເຂົ້າໃຈຄຳສອນຂອງ ພຣະບາຣາອຸລລາຫ໌ ໂດຍການສຶກສາຈາກການຕີຄວາມຂອງພຣະອັບດຸລບາຣາ ໃນພຣະທັມມະຈາລຶກຈຳນວນຫຼວງຫຼາຍຂອງພຣະອົງ ແລະ ໃນບົດບັນທຶກຄຳປາໄສຂອງພຣະອົງ. ຜູ້ພິທັກສາສະໜາ ໄດ້ເຮັດໜ້າທີ່ເປັນຜູ້ຕີຄວາມຄຳສອນຂອງ ພຣະບາຣາອຸລລາຫ໌ ຕໍ່ຈາກ ພຣະອັບດຸລບາຣາ; ກໍຍ້ອນທ່ານ, ຈຶ່ງເຮັດໃຫ້ພາລະກິດການຕີຄວາມໝາຍມີຄວາມສົມບູນແບບ ແລະ ບໍ່ມີຜູ້ໃດມີອຳນາດໃນການຕີຄວາມຖ້ອຍຄຳຂອງ ພຣະບາຣາອຸລລາຫ໌ ສຳລັບສ່ວນທີ່ເຫຼືອທີ່ກ່ຽວກັບພຣະທັມຄຳສອນຂອງພຣະອົງ.

ໃນອະດີດ, ທຸກສາສະໜາໄດ້ຮັບຄວາມທຸກທໍລະມານ ຍ້ອນການແຕກແຍກທີ່ມາຈາກການຕີຄວາມເນື້ອຫາສາລະທີ່ມາຈາກພຣະຄຳພີສັກສິດຕ່າງໆ. ແຕ່ໃນພຣະທັມຄຳສອນນີ້, ເມື່ອມີຄວາມບໍ່ແນ່ໃຈກ່ຽວກັບຄວາມໝາຍຂອງຄຳກ່າວຂອງ ພຣະບາຣາອຸລລາຫ໌, ໃຫ້ທຸກຄົນຫັນໄປຫາການຕີຄວາມຂອງພຣະອັບດຸລບາຣາ ແລະ ທ່ານຜູ້ພິທັກສາສະໜາ. ຫາກວ່າຍັງມີຄວາມບໍ່ແນ່ໃຈ, ກໍສາມາດຫັນໄປຫາສະພາຍຸຕິທັມແຫ່ງສາກົນເພື່ອຂໍຄຳຊີ້ແຈງ. ບໍ່ມີຊ່ອງຫວ່າງເຫຼືອໄວ້ສຳລັບການຂັດແຍ່ງກ່ຽວກັບຄວາມໝາຍຂອງຄຳສອນຕ່າງໆ ແລະ ເອກະພາບຂອງສາສະໜາຈະໄດ້ຮັບການຄຸ້ມຄອງປ້ອງກັນ.

ປະການທີສາມ, ພຣະອັບດຸລບາຣາ ເປັນຕົວຢ່າງທີ່ສົມບູນແບບຕາມຄຳສອນຂອງພຣະບິດາຂອງທ່ານ. ເຖິງແມ່ນວ່າພວກເຮົາບໍ່ສາມາດຄາດຫວັງ ທີ່ຈະບັນລຸເຖິງຂີດຂັ້ນຂອງຄວາມສົມບູນແບບເຊັ່ນນີ້, ພວກເຮົາຄວນມີພຣະອົງຢູ່ໃນສາຍຕາຂອງພວກເຮົາສະເໝີ ແລະ ພະຍາຍາມປະຕິບັດຕາມແບບຢ່າງຂອງພຣະອົງ. ເມື່ອພວກເຮົາອ່ານພຣະຄັມພີກ່ຽວກັບຄວາມຮັກ, ພວກເຮົາສາມາດຫັນໄປຫາພຣະອັບດຸລບາຣາ ແລະ ພວກເຮົາຈະໄດ້ເຫັນແກ່ນແທ້ຂອງຄວາມຮັກ ແລະ ຄວາມກະລຸນາ. ເມື່ອພວກເຮົາອ່ານກ່ຽວກັບຄວາມບໍລິສຸດ, ຄວາມຍຸຕິທັມ, ຄວາມຖືກຕ້ອງ, ຄວາມສຸກທັມສາ ແລະ ຄວາມເອື້ອເຟື້ອເພື່ອແຜ່, ພວກເຮົາສາມາດຫັນໄປຫາພຣະອົງ ແລະ ຄິດເຖິງຊີວິດ

ຂອງພຣະອົງ ແລະ ພວກເຮົາຈະໄດ້ເຫັນວິທີທີ່ພຣະອົງສະແດງໃຫ້ປະກົດ ເຖິງຄຸນສົມບັດເລົ່ານີ້ໄດ້ຢ່າງສົມບູນແບບທີ່ສຸດ.

ແນ່ນອນທີ່ສຸດ, ເຄື່ອງໝາຍແຫ່ງຊີວິດຂອງພຣະອັບດຸລບາຮາກໍຄື ການຮັບໃຊ້ຂອງພຣະອົງ. ນາມມະຍົດ "ອັບດຸລບາຮາ" ໝາຍເຖິງ "ຜູ້ຮັບໃຊ້ຂອງບາຮາ", ແລະນີ້ຄືນາມມະຍົດທີ່ພຣະອົງຖືກໃຈກວ່າທຸກນາມມະຍົດທີ່ມອບໃຫ້ແກ່ພຣະອົງ. ຖ້ອຍຄຳຂອງພຣະອັບດຸລບາຮາຕໍ່ໄປນີ້ ແມ່ນການສະແດງອອກເຖິງຄວາມປາດຖະໜາຢ່າງແຮງກ້າທີ່ຈະຮັບໃຊ້:

**"ເຮົາມີນາມວ່າອັບດຸລບາຮາ. ຄຸນສົມບັດຂອງເຮົາຄືອັບດຸລບາຮາ. ຄວາມເປັນຈິງຂອງເຮົາຄືອັບດຸລບາຮາ. ຄຳສັນລະເສີນຂອງເຮົາຄືອັບດຸລບາຮາ. ການຜູກມັດຕໍ່ພຣະຜູ້ຊົງສົມບູນແບບອັນອຸດົມພອນ ແມ່ນເປັນມົງກຸດອັນຮຸ່ງເຮືອງ ແລະ ສ່ອງແສງສະຫວ່າງ, ແລະເປັນພາລະກິດທີ່ອຸທິດເພື່ອມະນຸດຊາດທັງໝົດໃນສາສະໜານິລັນດອນ, ເຮົາ....ບໍ່ມີນາມໃດ, ບໍ່ມີນາມມະຍົດໃດ, ບໍ່ມີຄຳກ່າວໃດ ແລະ ບໍ່ມີຄຳສັນລະເສີນໃດທີ່ເຮົາເຄີຍມີ ແລະ ຈະມີ, ຍົກເວັ້ນແຕ່ນາມ "ອັບດຸລບາຮາ". ນີ້ແມ່ນຄວາມປະສົງຂອງເຮົາ. ນີ້ແມ່ນຄວາມໄຝ່ຝັນອັນຍິ່ງໃຫຍ່ທີ່ສຸດຂອງເຮົາ. ນີ້ແມ່ນຊີວິດນິລັນດອນຂອງເຮົາ. ນີ້ແມ່ນຄວາມຮຸ່ງເຮືອງອັນບໍ່ມີທີ່ສິ້ນສຸດຂອງເຮົາ."[11]**

ພວກເຮົາເຫັນໄດ້ຢ່າງຊັດເຈນວ່າ ອາເລຈັນດຣາ ມີແຜນຈະແບ່ງປັນກັບຄອບຄົວຊານເຊັດສ໌ໃນຄັ້ງຕໍ່ໄປຂອງລາວ, ຈະບໍ່ມີພຽງການນຳສະເໜີຈຸດທີ່ເປັນເອກະລັກທີ່ສຸດ; ຄວາມຊື່ນຊົມຂອງພວກເຂົາທີ່ມີຕໍ່ສະຖານະທີ່ຖືກຄອບຄອງໂດຍພຣະອັບດຸລບາຮາໃນພຣະທັມຄຳສອນນີ້ ເຊິ່ງຈະເຕີບໂຕຕໍ່ໄປໃນອີກຫຼາຍປີຂ້າງໜ້າ. ໃນຊີວິດຂອງຕົວເຈົ້າເອງ, ຂະນະທີ່ເຈົ້າຍ່າງໄປໃນຫົນທາງແຫ່ງການຮັບໃຊ້, ເຈົ້າຈະມີໂອກາດຫຼວງຫຼາຍທີ່ຈະກ່າວເຖິງແບບຢ່າງຂອງ ພຣະອັບດຸລບາຮາ, ລະນຶກເຖິງ ແລະ ໄຕ່ຕອງເຖິງຖ້ອຍຄຳຂອງພຣະອັບດຸລບາຮາ. ຢູ່ໃນພາກທີ່ຜ່ານມາ, ເຈົ້າຄຸ້ນເຄີຍກັບຫົວຂໍ້ສຳລັບການສຶກສາທັມມະເລີກເຊິ່ງທີ 49 ດ້ວຍຖ້ອຍຄຳບາງປະການຂອງພຣະອັບດຸລບາຮາ, ແລະເຈົ້າໄດ້ຮັບການສະໜັບສະໜູນໃຫ້ຮຽນຮູ້ທີ່ຈະສະແດງອອກໃນລັກສະນະທີ່ ພຣະອັບດຸລບາຮາປະຕິບັດຕາມແນວຄິດ ທີ່ກຳນົດໄວ້ໃນທັມມະຈາລຶກຂອງພຣະອົງເອງ ແລະ ການກ່າວຄຳປາໄສໃນທີ່ສາທາລະນະ. ໃນຂະນະນີ້, ເພື່ອສັງລວມຄວາມເຂົ້າໃຈໃນປະຈຸບັນຂອງເຈົ້າ ກ່ຽວກັບສະຖານະຂອງພຣະອັບດຸລບາຮາ, ເຈົ້າຄວນປຶກສາຫາລືກັບສະມາຊິກຄົນອື່ນໆໃນກຸ່ມຂອງເຈົ້າຕໍ່ກັບປະເດັນຫຼັກທີ່ກ່າວເຖິງຂ້າງເທິງ ແລະ ເຝິກການເວົ້າໃຫ້ຄ່ອງແຄ້ວ. ການໄຕ່ຕອງບົດຄວາມທີ່ອ້າງເຖິງຈະສ້າງແຮງບັນດານໃຈໃຫ້ແກ່ເຈົ້າ ໃນຄວາມພະຍາຍາມທີ່ຈະກ້າວໄປສູ່ເສັ້ນທາງແຫ່ງການຮັບໃຊ້.

## ຕອນທີ 8

ຄຳຖາມທີ່ຢູ່ໃນໃຈຂອງອາເລຈັນດຣາ ນັບຕັ້ງແຕ່ລາວເລີ່ມລົງຢ້ຽມຢາມຄອບຄົວຊານເຊັດສ໌ ວ່າຊຸດຫົວຂໍ້ຂອງການສົນທະນາໃດຈະຊ່ວຍໃຫ້ພວກເຂົາໄດ້ຮັບການຢືນຢັນຫຼາຍທີ່ສຸດ ແລະ ເປັນບຸກຄົນຫຼັກຂອງ

ຂະບວນການສ້າງຊຸມຊົນໃນແຖວໃກ້ຄຽງ. ໃນອີກດ້ານໜຶ່ງ, ມີຫົວຂໍ້ກ່ຽວກັບການອະທິຖານ, ຄວາມເປັນອຳມະຕະຂອງຈິດວິນຍານ ແລະ ຄວາມແນ່ວແນ່ໃນຄວາມຮັກຕໍ່ພຣະຜູ້ເປັນເຈົ້າ ທີ່ລາວຫວັງວ່າຈະສົນທະນາກັບພວກເຂົາ, ເພື່ອເປັນຮາກຖານຂອງຊີວິດທາງຈິດວິນຍານຂອງພວກເຂົາ ທີ່ຕ້ອງໄດ້ຮັບການເສີມແຮງຢ່າງຕໍ່ເນື່ອງ. ໃນທາງກົງຂ້າມ, ເປັນສິ່ງສຳຄັນສຳລັບພວກເຂົາທີ່ຈະໄດ້ຮັບວິໄສທັດຂອງຄວາມເປັນຊຸມຊົນທີ່ຄ່ອຍໆພັດທະນາ ແລະ ຮູ້ວ່າສາມາດສ້າງຄຸນຄ່າຂອງການມີສ່ວນຮ່ວມ ໃນການເຮັດໃຫ້ເກີດຄວາມເປັນຈິງໄດ້. ໃນລະຫວ່າງທີ່ລາວສົນທະນາກັບຄອບຄົວຊານເຊັດສ໌ ກ່ຽວກັບສະຖານະຂອງພຣະອັບດຸລບາຮາ, ອາເລຈັນດຣາຄ່ອຍໆຕະໜັກເຖິງຫົວຂໍ້ຫຼັກທີ່ລາວຄວນຈະນຳໄປ ໃນການຢ້ຽມຢາມຄັ້ງຕໍ່ໄປຂອງລາວ. ລາວຄິດວ່າ "ພວກເຂົາມີຄວາມຊັດເຈນຢ່າງຫຼາຍ ກ່ຽວກັບຈຸດປະສົງຂອງຄວາມສັດທາທີ່ຈະເຕົ້າໂຮມຜູ້ຄົນເຂົ້າດ້ວຍກັນ. ດັ່ງນັ້ນ, ຫົວຂໍ້ທີ່ພວກເຮົາຄວນສຳຫຼວດໃນຕອນນີ້ຄືວິທີການສ້າງ ແລະ ຮັກສາຊຸມຊົນທີ່ເປັນໜຶ່ງດຽວກັນ."

ອາເລຈັນດຣາເລີ່ມການຢ້ຽມຢາມໃນຄັ້ງທີສີ່ຂອງລາວ ໂດຍບັນຍາຍເຖິງກິດຈະກຳທີ່ກຳລັງດຳເນີນຢູ່, ດຳເນີນການໂດຍກຸ່ມເພື່ອນໆທີ່ມີຂະໜາດນ້ອຍໃນແຖວບ້ານໃກ້ຄຽງ. ລາວອະທິບາຍວ່າ "ຂະນະທີ່ຈຳນວນກິດຈະກຳເພີ່ມຫຼາຍຂຶ້ນ, ຄວາມຮັບຜິດຊອບທີ່ທ້າທາຍທີ່ສຸດທີ່ພວກເຮົາທຸກຄົນຕ້ອງແບກຮັບຄື ຄວາມເປັນອັນໜຶ່ງອັນດຽວກັນໃນຄຳເວົ້າທີ່ຫຼາຍຂຶ້ນ, ລວມທັງແນວຄວາມຄິດ ແລະ ການກະທຳຂອງພວກເຮົາ. ຖ້າພວກເຈົ້າເຫັນດີ, ດັ່ງນັ້ນ, ມື້ນີ້ພວກເຮົາມາສຳຫຼວດແກ່ນແທ້ຂອງຄວາມສາມັກຄີຮ່ວມກັນ."

"ຂ້າພະເຈົ້າເຫັນວ່າຄວາມສາມັກຄີ ມີຄວາມສຳຄັນຕໍ່ການພັດທະນາຊຸມຊົນຂອງພວກເຮົາຫຼາຍພຽງໃດ," ນາງ ຊານເຊັດສ໌ ຕອບ.

"ນອກຈາກນັ້ນ, ກໍຍັງມີບົດຄວາມແຫ່ງຄວາມສາມັກຄີຂອງພຣະບາຮາອຸລລາຫ໌ ທີ່ດຶງດູດຈິດໃຈພວກເຮົາເປັນອັນດັບທຳອິດສູ່ຄຳສອນຂອງພຣະອົງ" ທ້າວ ຊານເຊັດສ໌ ກ່າວ.

"ຂ້າພະເຈົ້າມີແນວຄວາມຄິດບາງຢ່າງ ແລະ ມີພຣະວັດຈະນະຈະໃຫ້ແຕ່ລະຄົນ" ອາເລຈັນດຣາກ່າວ "ຖ້າຫາກເຈົ້າຍິນດີ, ພວກເຮົາຈະອ່ານໄປເທື່ອລະວັກ ແລະ ປຶກສາຫາລືໃນແຕ່ລະວັກນຳກັນ."

ຂ້າງລຸ່ມນີ້ຄືລາຍການແນວຄວາມຄິດຂອງອາເລຈັນດຣາ:

- ການທີ່ຈະເຮັດໃຫ້ຊຸມຊົນບາຮາຍຈະສາມັກຄີກັນຢ່າງແທ້ຈິງນັ້ນ, ສາສະນິກະຊົນທຸກຄົນຕ້ອງຫຼີກໜີຈາກການວິວາດບາດໝາງ ແລະ ການໂຕ້ຖຽງກັນ. ພຣະບາຮາອຸລລາຫ໌ຊົງກ່າວວ່າ:

**"ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ຫຼາຍກວ່າ ການໂຕ້ຖຽງກັນ ແລະ ການຜິດຖຽງກັນ, ຄວາມຂັດແຍ້ງ, ຄວາມຫ່າງເຫີນ ແລະ ຄວາມເມີນເສີຍຕໍ່ກັນໃນໝູ່ຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ. ຈົ່ງຫຼີກໜີສິ່ງເລົ່ານີ້ໂດຍອາໄສອະນຸພາບ ແລະ ຄວາມຊ່ວຍເຫຼືອຈາກພຣະຜູ້ເປັນເຈົ້າ ແລະ ພະຍາຍາມຜູກຫົວໃຈມະນຸດເຂົ້າດ້ວຍກັນໃນນາມຂອງພຣະອົງ, ພຣະຜູ້ຊົງປະສານສາມັກຄີ, ພຣະຜູ້ຊົງຮອບຮູ້, ພຣະຜູ້ຊົງອັດສະລິຍະພາບ."**[12]

- ພວກເຮົາຄວນໃຫ້ຄວາມຮັກແກ່ສາສະນິກະຊົນທຸກຄົນໃນຊຸມຊົນຂອງພວກເຮົາ ແລະ ດ້ວຍສິ່ງນີ້ ພວກເຮົາຄວນກະທຳເພື່ອຄວາມຮັກຂອງພຣະຜູ້ເປັນເຈົ້າ. ພຣະອັບດຸລບາຮາກ່າວວ່າ:

**"ຈົ່ງສາມັກຄີກັນຢ່າງພ້ອມພຽງ, ຢ່າໄດ້ກຽດຊັງກັນແລະກັນ. ຈົ່ງຮັກເພື່ອນມະນຸດເພື່ອເຫັນແກ່ພຣະຜູ້ເປັນເຈົ້າ, ບໍ່ແມ່ນເພື່ອມະນຸດເອງ.. ເຈົ້າຈະບໍ່ມີວັນກຽດຊັງ ຫຼື ໝົດຄວາມອົດທົນ ຫາກເຈົ້າຮັກພວກເຂົາເພື່ອເຫັນແກ່ພຣະຜູ້ເປັນເຈົ້າ. ມະນຸດນັ້ນບໍ່ສົມບູນ, ມີຂໍ້ບົກຜ່ອງ ແລະ ເຈົ້າຈະບໍ່ມີຄວາມສຸກສະເໝີ, ຫາກວ່າເຈົ້າເບິ່ງໄປທີ່ຕົວຜູ້ຄົນ. ແຕ່ຖ້າຫາກເຈົ້າເບິ່ງໄປທີ່ພຣະຜູ້ເປັນເຈົ້າ, ເຈົ້າຈະຮັກ ແລະ ມີເມດຕາຕໍ່ພວກເຂົາໃນພົບຂອງພຣະຜູ້ເປັນເຈົ້າ ກໍຄືພົບທີ່ດີພ້ອມ ແລະ ມີຄວາມປານີອັນຍິ່ງໃຫຍ່ໄພສານ."**[13]

- ດ້ວຍຄວາມຮັກທີ່ພວກເຮົາຮູ້ສຶກຕໍ່ກັນແລະກັນ ຫາກເກີດຄວາມເຄັ່ງຕຶງຂຶ້ນລະຫວ່າງພວກເຂົາ, ພວກເຮົາຄວນຈະລະນຶກເຖິງຄຳແນະນຳນີ້ຂອງພຣະອັບອຸລບາຮາໃນທັນທີ:

**"ຂ້າພະເຈົ້າມອບໝາຍໃຫ້ແກ່ເຈົ້າທັງຫຼາຍວ່າ ແຕ່ລະຄົນຄວນສຳລວມຄວາມຄິດທັງຫຼາຍໃນຫົວໃຈຂອງເຈົ້າໃຫ້ຢູ່ໃນຄວາມຮັກ ແລະຄວາມເປັນອັນໜຶ່ງອັນດຽວກັນ. ເມື່ອຄວາມຄິດແຫ່ງສົງຄາມເກີດຂຶ້ນ, ຈົ່ງຕໍ່ຕ້ານດ້ວຍຄວາມຄິດແຫ່ງສັນຕິພາບທີ່ເໜືອກວ່າ. ຄວາມຄິດແຫ່ງຄວາມກຽດຊັງສາມາດຖືກທຳລາຍ ລົງດ້ວຍຄວາມຄິດແຫ່ງຄວາມຮັກເຊິ່ງມີອຳນາດເໜືອກວ່າ. ຄວາມຄິດແຫ່ງສົງຄາມນຳມາເຊິ່ງການທຳລາຍທຸກສິ່ງທຸກຢ່າງ ເຊັ່ນ ຄວາມສະໝັກສະໝານສາມັກຄີ, ເປັນຢູ່ທີ່ດີ, ຄວາມສະຫງົບສຸກ ແລະ ຄວາມພໍໃຈ.**

**"ຄວາມຄິດແຫ່ງຄວາມຮັກເສີມສ້າງພະລາດອນພາບ, ສັນຕິພາບ, ມິດຕະພາບ ແລະ ຄວາມຜາສຸກ."** [14]

- ແລະເຖິງແມ່ນວ່າຈະໄດ້ພະຍາຍາມທຸກວິທີທາງ ທີ່ຈະຄອບຄຸມຄວາມຮູ້ສຶກນຶກຄິດຕ່າງໆຂອງພວກເຮົາແລ້ວ, ພວກເຮົາຍັງພົບວ່າຕົນເອງຖືກຄອບງຳດ້ວຍອາລົມ ແລະ ກຳລັງເຂົ້າໄປຢູ່ໃນຄວາມຂັດແຍ່ງກັບຜູ້ອື່ນ, ພວກເຮົາຄວາມກະຕຸ້ນເຕືອນພວກເຮົາກັນເອງ ດ້ວຍບົດຄວາມຂອງພຣະບາຮາອຸລລາຫ໌ດັ່ງຕໍ່ໄປນີ້:

**"ຫາກມີຄວາມຂັດແຍ່ງໃດໆເກີດຂຶ້ນລະຫວ່າງພວກເຈົ້າ ໃຫ້ເບິ່ງເຫັນວ່າເຮົາກຳລັງຢືນຢູ່ຕໍ່ໜ້າພວກເຈົ້າ, ແລະ ໃຫ້ເບິ່ງຂ້າມຄວາມບົກຜ່ອງຂອງກັນແລະກັນ ເພື່ອເຫັນແກ່ນາມຂອງເຮົາ ແລະ ເປັນດັ່ງເຄື່ອງໝາຍແຫ່ງຄວາມຮັກຂອງພວກເຈົ້າທີ່ມີຕໍ່ການປະກົດ ແລະ ມີແສງຮຸ່ງເຫຼື້ອມສະຫງ່າງາມຂອງເຮົາ."**[15]

- ວິໄນທາງຈິດວິນຍານທີ່ຈະເບິ່ງຂ້າມຄວາມບົກຜ່ອງຂອງກັນແລະກັນ, ການເບິ່ງທີ່ຄຸນລັກສະນະອັນໜ້າສັນລະເສີນ ແລະ ລະເວັ້ນຈາກການນິນທາຢ່າງຈິງຈັງ, ເປັນມາດຕະການທີ່ໃຊ້ຕ້ານຄວາມແຕກສາມັກຄີຢ່າງໄດ້ຜົນ. ພວກເຮົາຄວນລະນຶກຢູ່ສະເໝີວ່າ ພວກເຮົາບໍ່ຄວນມີທ່າອ່ຽງທີ່ຈະເບິ່ງຄວາມບົກຜ່ອງຂອງບັນດາຜູ້ທີ່ພວກເຮົາຮັກ ແລະ ພວກເຮົາບໍ່ຄວນຮູ້ສຶກວ່າຍາກ ໃນການທີ່ຈະເບິ່ງພວກເຂົາດ້ວຍສາຍຕາທີ່ປົກປິດຄວາມບາບ. ພຣະອັບດຸລບາຮາກ່າວວ່າ:

  **"ຕາທີ່ບົກຜ່ອງເບິ່ງເຫັນແຕ່ສິ່ງທີ່ບົກຜ່ອງ, ເພື່ອການປົກປິດຂໍ້ບົກຜ່ອງເບິ່ງໄປທີ່ພຣະຜູ້ສ້າງຈິດວິນຍານທັງຫຼາຍ. ພຣະອົງຊົງສ້າງພວກເຂົາ, ອົບຮົມ ແລະ ຈັດຫາສິ່ງຈຳເປັນສຳລັບພວກເຂົ້າ. ປະສິດປະສາດພວກເຂົາດ້ວຍຄວາມສາມາດ ແລະ ຊີວິດ, ດ້ວຍສາຍຕາ ແລະ ການໄດ້ຍິນ. ດັ່ງນັ້ນ, ພວກເຂົາຄືສັນຍາລັກແຫ່ງຄວາມຍິ່ງໃຫຍ່ຂອງພຣະອົງ. ເຈົ້າຕ້ອງຮັກ ແລະ ເມດຕາຕໍ່ທຸກຄົນ, ເອົາໃຈໃສ່ຕໍ່ຜູ້ຍາກໄຮ້, ປົກປ້ອງຜູ້ອ່ອນແອ ແລະ ປິ່ນປົວຜູ້ເຈັບໄຂ້, ສອນ ແລະ ໃຫ້ການສຶກສາແກ່ຜູ້ໄຮ້ວິຊາ."[16]**

  ພຣະບາຮາອຸລລາຫ໌ຊົງກ່າວວ່າ:

  **"ໂອ ສະຫາຍຮ່ວມບັນລັງຂອງເຮົາ! ຢ່າໄດ້ຟັງສິ່ງຊົ່ວຮ້າຍ, ແລະເບິ່ງສິ່ງຊົ່ວຮ້າຍ, ຢ່າເຮັດໃຫ້ຕົນເອງຕົກຕ່ຳ, ຢ່າຖອນຫາຍໃຈ ແລະ ໄຫ້. ຈົ່ງຢ່າເວົ້າສິ່ງຊົ່ວຮ້າຍ ເພື່ອເຈົ້າຈະບໍ່ໄດ້ຍິນສິ່ງຊົ່ວຮ້າຍທີ່ເວົ້າກັບເຈົ້າ, ແລະຢ່າຂະຫຍາຍຂໍ້ບົກຜ່ອງຂອງຜູ້ອື່ນ ເພື່ອຂໍ້ບົກຜ່ອງຂອງເຈົ້າເອງຈະບໍ່ໃຫຍ່ຂຶ້ນ; ຢ່າປາດຖະໜາຄວາມຕົກຕ່ຳໃຫ້ແກ່ຜູ້ໃດ ເພື່ອວ່າຄວາມຕົກຕ່ຳຂອງເຈົ້າເອງຈະບໍ່ຖືກເປີດເຜີຍ. ດັ່ງນັ້ນ, ຈົ່ງດຳເນີນຊີວິດໃນວັນເວລາແຫ່ງຊີວິດຂອງເຈົ້າ ເຊິ່ງມີໜ້ອຍກວ່າຊົ່ວໄລຍະທີ່ຜ່ານໄປຢ່າງໄວວາ, ດ້ວຍຈິດໃຈທີ່ໄຮ້ມົນທິນຂອງເຈົ້າ, ດ້ວຍຫົວໃຈທີ່ສະອາດຂອງເຈົ້າ, ດ້ວຍຄວາມຄິດທີ່ບໍລິສຸດຂອງເຈົ້າ, ແລະທັມມະຊາດອັນວິສຸດຂອງເຈົ້າ, ເພື່ອເຈົ້າຈະເປັນອິດສະຫຼະ ແລະ ເພິ່ງພໍໃຈທີ່ຈະປະຖິ້ມຮ່າງກາຍນີ້, ແລະໄປສູ່ສະຫວັນອັນລີ້ລັບ ແລະ ອາໄສຢູ່ໃນອານາຈັກນິລັນດອນຕະຫຼອດໄປ."[17]**

  ແລະ ພຣະອົງຊົງບອກພວກເຮົາວ່າ:

  **"ໂອ ບັນດາຜູ້ອົບພະຍົບ! ລີ້ນທີ່ເຮົາອອກແບບໄວ້ໃຫ້ກ່າວເຖິງເຮົານັ້ນ, ຢ່າເຮັດໃຫ້ເປື້ອນເປິດ້ວຍການທຳລາຍກຽດ. ຫາກໄຟແຫ່ງອັດຕາມີອຳນາດເໜືອເຈົ້າ, ຈົ່ງຄິດເຖິງຂໍ້ບົກຜ່ອງຂອງເຈົ້າເອງ ແລະ ບໍ່ແມ່ນຂໍ້ບົກຜ່ອງຂອງຊັບພະສິ່ງສ້າງສັນຂອງເຮົາ, ດັ່ງນັ້ນ ພວກເຈົ້າທຸກຄົນຈົ່ງຮູ້ຈັກຕົນເອງໃຫ້ດີກວ່າທ່ຽວໄປຮູ້ຈັກຜູ້ອື່ນ."[18]**

- ແນ່ນອນທີ່ສຸດ, ຄວາມສາມັກຄີບໍ່ແມ່ນເປັນແຕ່ພຽງບໍ່ມີການທະເລາະວິວາດ ແລະ ຂັດແຍ່ງກັນ ແລະ ຄວາມຮັກຕ້ອງບໍ່ຖືກສະແດງອອກແຕ່ພຽງຄຳເວົ້າ. ພວກເຮົາສາມາດບັນລຸເຖິງຄວາມສາມັກ

ຄືທີ່ແທ້ຈິງໄດ້ໃນຊຸມຊົນບາຮາຍຂອງພວກເຮົາ, ຖ້າຍາມທີ່ພວກເຮົາພຽງແຕ່ມີກັນແລະກັນ ໄດ້ຖືກປ່ຽນແປງໄປເປັນການຮັບໃຊ້ ແລະ ກິດຈະກຳຕ່າງໆຂອງພວກເຮົາ, ພວກເຮົາຈະຖືກຄອບຄອງດ້ວຍດວງຈິດແຫ່ງຄວາມຮ່ວມມື ແລະ ຊ່ວຍເຫຼືອຊຶ່ງກັນແລະກັນ. ພຣະອັບດຸລບາຮາກ່າວວ່າ:

**"ຈົ່ງຢ່າຢຸດພັກແມ່ນແຕ່ພຽງຊົ່ວຂະນະ ແລະ ຢ່າສະແຫວງຫາຄວາມສະດວກສະບາຍແມ່ນແຕ່ວິນາທີດຽວ; ແທນທີ່ຈະເປັນເຊັ່ນນັ້ນ, ເຈົ້າຄວນຈະທຸ້ມເທດ້ວຍຫົວໃຈ ແລະ ຈິດວິນຍານຂອງເຈົ້າ, ເພື່ອວ່າເຈົ້າຈະອຸທິດໃຫ້ກັບການຮັບໃຊ້ພຽງສິ່ງດຽວ, ເພື່ອນຳຄວາມປິຕິຍິນດີ, ຄວາມສຸກໃຈ ແລະ ຈິດໃຈອັນຜ່ອງໃສມາມອບໃຫ້ແກ່ບັນດາມິດສະຫາຍ. ນີ້ຄືພຣະພອນທີ່ແທ້ຈິງ, ຄວາມເພິ່ງພໍໃຈຂອງພຣະອັບດຸລບາຮາຄືແສງສະຫວ່າງ. ຈົ່ງເປັນຜູ້ຮ່ວມງານກັບເຮົາ ແລະ ເຊື່ອມໂຍງກັນໃນທີ່ນັ້ນ."**[19]

ແລະ ພຣະພຣະອັບດຸລບາຮາຍັງກ່າວອີກວ່າ:

**"ຄວາມຕ້ອງການສູງສຸດຂອງມະນຸດຊາດຄືຄວາມຮ່ວມມື ແລະ ການແລກປ່ຽນຊຶ່ງກັນແລະກັນ. ຄວາມແຂງແກ່ນຂອງຄວາມສຳພັນແຫ່ງມິດຕະພາບ ແລະ ຄວາມເປັນອັນໜຶ່ງອັນດຽວກັນໃນໝູ່ມະນຸດທີ່ຫຼາຍຂຶ້ນ ອຳນາດຂອງການສ້າງສັນ ແລະ ຄວາມສຳເລັດໃນທຸກກິດຈະກຳຂອງມະນຸດກໍຈະມີຫຼາຍຂຶ້ນ."**[20]

- ກະແຈທີ່ສຳຄັນທີ່ສຸດ ສູ່ກິດຈະກຳຂອງຊຸມຊົນທີ່ມີຄວາມສຳເລັດຄື ການປຶກສາຫາລືຢ່າງຮັກແພງ ແລະ ກົງໄປກົງມາໃນທຸກເລື່ອງ. ໂດຍຜ່ານການປຶກສາຫາລື, ມຸມມອງຕ່າງກັນຂອງພວກເຮົາແຕ່ລະຄົນຈະຫຼອມລວມເຂົ້າດ້ວຍກັນ ແລະ ພວກເຮົາຈະຄົ້ນພົບແນວທາງທີ່ດີທີ່ສຸດ ທີ່ພວກເຮົາຄວນດຳເນີນໄປໃນກິດຈະກຳຮ່ວມກັນຂອງພວກເຮົາ. ໂດຍການປຶກສາຫາລື, ພວກເຮົາຈະບັນລຸເຖິງຄວາມເປັນເອກະພາບຂອງຄວາມຄິດ ແລະ ຄວາມເຫັນຕ່າງໆຂອງພວກເຮົາເປັນອັນໜຶ່ງອັນດຽວກັນ, ພວກເຮົາຈະສ້າງແຜນງານທີ່ເຕັມໄປດ້ວຍຈິນຕະນາ ການຕ່າງໆສຳລັບການຈະເລີນເຕີບໂຕຂອງຊຸມຊົນຂອງພວກເຮົາໄດ້. ພຣະອັບດຸລບາຮາ ກ່າວແກ່ບັນດາຜູ້ທີ່ປຶກສາຫາລືກັນວ່າ:

**"ສິ່ງທີ່ຈຳເປັນສຳລັບພວກເຂົາທີ່ຮ່ວມປຶກສານຳກັນຄື ຄວາມບໍລິສຸດຂອງແຮງຈູງໃຈ, ຄວາມສະຫວ່າງສະໄຫວຂອງຈິດວິນຍານ, ການແຍກຕົວອອກຈາກທຸກສິ່ງນອກຈາກພຣະຜູ້ເປັນເຈົ້າ, ການດຶງດູດໄປສູ່ສຸຄົນທະລົດຂອງພຣະອົງ, ຄວາມອ່ອນນ້ອມຖ່ອມຕົນ ແລະ ຄວາມຕ່ຳຕ້ອຍທ່າມກາງຜູ້ເປັນທີ່ຮັກຂອງພຣະອົງ, ຄວາມອົດທົນ ແລະ ຄວາມພາກພຽນໃນຄວາມຍາກລຳບາກ ແລະ ຍອມຈຳນົນ ຢູ່ຕໍ່ໜ້າທໍລະນີປະຕູອັນສູງສົ່ງຂອງພຣະອົງ. ພວກເຂົາຄວນໄດ້ຮັບຄວາມຊ່ວຍເຫຼືອດ້ວຍຄວາມເມດຕາ ເພື່ອໃຫ້ໄດ້ມາເຊິ່ງຄຸນລັກສະນະເລົ່ານີ້, ໄຊຊະນະຈາກອານາຈັກຂອງບາຮາທີ່ເບິ່ງບໍ່ເຫັນ ຈະຕ້ອງໄດ້ຮັບການຮັບຮອງແກ່ພວກເຂົາ."**[21]

- ເອກະພາບຂອງຄວາມຄິດຈະໄດ້ຮັບຜົນສຳເລັດ ຫາກບໍ່ຖືກປ່ຽນແປງໄປເປັນຄວາມເປັນອັນໜຶ່ງອັນດຽວກັນຂອງການກະທຳ ໃນການລົງມືປະຕິບັດຢ່າງເປັນອັນໜຶ່ງອັນດຽວກັນ. ບໍ່ໄດ້ໝາຍຄວາມວ່າພວກເຮົາທຸກຄົນຕ້ອງກະທຳສິ່ງດຽວກັນ. ໃນທາງກົງກັນຂ້າມ, ເມື່ອຊຸມຊົນຂອງພວກເຮົາວາງແຜນງານທີ່ມີແນວປະຕິບັດໄປໃນທິດທາງດຽວກັນ, ຄວາມສາມາດອັນຫຼວງຫຼາຍຂອງສາສະນິກະຊົນແຕ່ລະຄົນຈະຖືກນຳໃຊ້ຢ່າງເຕັມທີ່. ພະລະກຳລັງຂອງພວກເຮົາຈະທະວີຄູນຂຶ້ນ ແລະ ແມ່ນວ່າຈະເປັນຊຸມຊົນຂະໜາດນ້ອຍ ກໍຈະສາມາດປະສົບຄວາມສຳເລັດໄດ້ຫຼາຍ, ທຽບເທົ່າກັບອົງກອນທີ່ມີຂະໜາດໃຫຍ່ ແລະ ມີກຳລັງຄົນຫຼາຍທີ່ສຸດໃນໂລກສາມາດເຮັດໄດ້. ພຣະອັບດຸລບາຮາ ກ່າວວ່າ:

**"ເມື່ອໃດກໍຕາມ ທີ່ຈິດວິນຍານອັນສັກສິດ, ທີ່ອາໄສອຳນາດຂອງສະຫວັນ, ຈະທະຍານຂຶ້ນດ້ວຍຄຸນສົມບັດຕ່າງໆຂອງຈິດວິນຍານນັ້ນ ແລະ ການເດີນຂະບວນຢ່າງພ້ອມພຽງ, ແຖວຕໍ່ແຖວ, ວິນຍານທຸກດວງເຫຼົ່ານັ້ນຈະເປັນຄືກັບໜຶ່ງພັນດວງ ແລະ ຄື້ນທີ່ສາດຊັດຂອງມະຫາສະໝຸດອັນຍິ່ງໃຫຍ່ນັ້ນຈະເທົ່າກັບກອງກຳລັງແຫ່ງເທບເທວັນໃນສະຫວັນຊັ້ນຟ້າ."**[22]

ຫຼັງຈາກທີ່ເຈົ້າໄດ້ອ່ານຂໍ້ຄວາມຜ່ານມາຢ່າງລະອຽດແລ້ວ ແລະ ຂໍໃຫ້ເວົ້າເຖິງເນື້ອຫາເທື່ອລະປະເດັນກັບຜູ້ເຂົ້າຮ່ວມໃນກຸ່ມຂອງເຈົ້າ. ເຈົ້າຈະຕ້ອງຊ່ວຍກັນເຝິກການນຳສະເໜີຫົວຂໍ້ຫຼັກ ຕາມທີ່ເຈົ້າໄດ້ປະຕິບັດໃນສາມລາຍການກ່ອນໜ້ານີ້. ເຈົ້າຈະພົບກັບແບບເຝິກຫັດຂ້າງລຸ່ມທີ່ໃຫ້ການຊ່ວຍເຫຼືອແກ່ຄວາມພະຍາຍາມຂອງເຈົ້າ:

1. ຈົ່ງເຕີມປະໂຫຍກຕໍ່ໄປນີ້ໃຫ້ສົມບູນ:
   ກ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າ __________________ ແລະ ການຜິດຖຽງກັນ, ຄວາມຂັດແຍ່ງ, ຄວາມຫ່າງເຫີນ ແລະ ຄວາມເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.
   ຂ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າ ການໂຕ້ແຍ້ງ ແລະ ____________________, ຄວາມຂັດແຍ້ງ, ຄວາມຫ່າງເຫີນ ແລະ ຄວາມເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.
   ຄ. ____________________ສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າ ການໂຕ້ແຍ້ງ ແລະ ການຜິດຖຽງກັນ, ຄວາມຂັດແຍ່ງ, ຄວາມຫ່າງເຫີນ ແລະ ຄວາມເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.

ງ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າການໂຕ້ແຍ້ງ ແລະ ການຜິດຖຽງກັນ, ຄວາມຂັດແຍ່ງ, ຄວາມຫ່າງເຫີນ ແລະ ____________________ ໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.

ຈ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າ ການໂຕ້ແຍ້ງ ແລະ ການຜິດຖຽງກັນ, ________________________, ຄວາມຫ່າງເຫີນ ແລະ ເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.

ສ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ສາສະໜານີ້ໄດ້ຫຼາຍກວ່າ ການຂັດແຍ່ງ ແລະ ການຜິດຖຽງກັນ, ຄວາມຂັດແຍ່ງ, _____________________ ແລະ ຄວາມເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ

ຊ. ໃນຍຸກນີ້ບໍ່ມີສິ່ງໃດເປັນໄພຕໍ່ _______________ ນີ້ໄດ້ຫຼາຍກວ່າ ການໂຕ້ແຍ້ງ ແລະ ການຜິດຖຽງກັນ, ຄວາມຂັດແຍ່ງ, ຄວາມຫ່າງເຫີນ ແລະ ຄວາມເມີນເສີຍໃນທ່າມກາງຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ.

2. ໃນຂໍ້ຄວາມທີສອງ, ພຣະອັບດຸລບາຮາ ຊົງບອກພວກເຮົາວ່າ:

ກ. ພວກເຮົາຕ້ອງ _______________________ ກັນຢ່າງພ້ອມພຽງ.

ຂ. ພວກເຮົາຢ່າໄດ້ _____________________ ແລະ _________.

ຄ. ພວກເຮົາຕ້ອງຮັກທຸກຄົນເພື່ອ ______________________________________ ບໍ່ແມ່ນເພື່ອມະນຸດເອງ.

ງ. ພວກເຮົາຈະບໍ່ມີວັນ _______________________ ຫຼື __________________________ ຫາກພວກເຮົາຮັກພວກເຂົາເພື່ອ ___________________________________.

ຈ. ມະນຸດນັ້ນບໍ່ _________________________.

ສ. ພວກເຮົາຈະບໍ່ມີ ______________________ ສະເໝີ, ຫາກພວກເຮົາເບິ່ງໄປທີ່ _________ _________.

ຊ. ແຕ່ຖ້າຫາກພວກເຮົາເບິ່ງໄປທີ່____________________ ພວກເຮົາຈະ ________ ແລະ ___________________ຕໍ່ພວກເຂົາ.

3. ໃນຂໍ້ຄວາມທີສາມ, ພຣະອັບດຸລບາຮາ ບອກພວກເຮົາວ່າ:

ກ. ພວກເຮົາຕ້ອງສຳລວມຄວາມຄິດທັງຫຼາຍ ໃນຫົວໃຈຂອງພວກເຮົາໃຫ້ຢູ່ໃນ ___________ _____ ແລະ____________________________.

ຂ. ເມື່ອຄວາມຄິດແຫ່ງສົງຄາມເກີດຂຶ້ນ, ພວກເຮົາຄວນຕ້ານມັນດ້ວຍ ________________

________________________________________.

ຄ. ຄວາມຄິດແຫ່ງຄວາມກຽດຊັງສາມາດຖືກທຳລາຍລົງດ້ວຍ________________________

________________________________________.

ງ. ຄວາມຄິດແຫ່ງສົງຄາມນຳມາເຊິ່ງການທຳລາຍທຸກສິ່ງທຸກຢ່າງ ເຊັ່ນ:________________

______________________, ______________, ______________________ ແລະ

______________________.

ຈ. ຄວາມຄິດແຫ່ງຄວາມຮັກເສີມສ້າງ _________________, ________________,

_____________________ແລະ________________________.

4. ເຈົ້າຄວນເຮັດຢ່າງໃດເມື່ອເຫັນຄວາມແຕກຕ່າງລະຫວ່າງຕົວເຈົ້າເອງ ແລະ ຄົນອື່ນໆໃນສັງຄົມ?

______________________________________________________________________

______________________________________________________________________

______________________________________________________________________

______________________________________________________________________

5. ຂໍໃຫ້ອະທິບາຍກ່ຽວກັບວິໄນທາງຈິດວິນຍານ ທີ່ສາມາດຊ່ວຍເຈົ້າໃນການສ້າງຄວາມສາມັກຄີໃນຊຸມຊົນຂອງເຈົ້າ:

______________________________________________________________________

______________________________________________________________________

______________________________________________________________________

______________________________________________________________________

6. ຂໍ້ໃດຕໍ່ໄປນີ້ທີ່ເຮັດໃຫ້ເກີດຄວາມສາມັກຄີ?

______ເບິ່ງໄປທີ່ຂໍ້ບົກຜ່ອງຂອງຄົນອື່ນ

______ເບິ່ງຂ້າມຂໍ້ບົກຜ່ອງຂອງຜູ້ອື່ນ

______ການສະແດງຄວາມຄິດເຫັນກ່ຽວກັບຂໍ້ບົກຜ່ອງຂອງບຸກຄົນອື່ນຕໍ່ເພື່ອນ

______ການເວົ້າເກີນຈິງ ຫຼື ປຸ່ງແຕ່ງເລື່ອງເພື່ອເຮັດໃຫ້ຄົນອື່ນເບິ່ງບໍ່ດີ

______ຄິດເຖິງຄວາມຜິດຂອງຜູ້ອື່ນ

7. ເປັນຫຍັງພວກເຮົາຈິ່ງວິພາກວິຈານຄົນອື່ນໆ ໃນຍາມທີ່ພວກເຂົາເຮັດຜິດພາດ, ແຕ່ບໍ່ວິພາກວິຈານອີກຄົນໜຶ່ງທີ່ເຂົາເຮັດຜິດພາດໃນທຳນອງດຽວກັນ?

________________________________________

________________________________________

________________________________________

8. ເປັນໄປໄດ້ບໍ່ທີ່ຈະມີຄວາມສາມັກຄີໃນຊຸມຊົນ ໃນເມື່ອຍັງມີຜູ້ຄົນມັກກ່າວຂວັນນິນທາກັນແລະກັນຢູ່? ຍ້ອນຫຍັງ?

________________________________________

________________________________________

________________________________________

________________________________________

________________________________________

9. ການເວົ້າຕົວະກັບຜູ້ໃດຜູ້ໜຶ່ງ ເປັນເລື່ອງທີ່ຜິດຢ່າງເຫັນໄດ້ຢ່າງຊັດເຈນ. ແຕ່ຈະຖືກຕ້ອງບໍ່ທີ່ຈະວິພາກວິຈານຄົນໆໜຶ່ງ, ເຊິ່ງທ້າວຫຼືນາງໄດ້ກະທຳໃນສິ່ງນັ້ນຢ່າງແທ້ຈິງ?________________

________________________________________

10. ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງການນິນທາ, ການກ່າວຂວັນລັບຫຼັງ ແລະ ການວິພາກວິຈານຜູ້ອື່ນ?

________________________________________

________________________________________

________________________________________

________________________________________

11. ການນິນທາ, ການກ່າວຂວັນລັບຫຼັງ ແລະ ການວິພາກວິຈານຢ່າງຕໍ່ເນື່ອງມີຜົນຢ່າງໃດຕໍ່ຊຸມຊົນ?

________________________________________

________________________________________

________________________________________

________________________________________

12. ພວກເຮົາຈະກຳຈັດນິດໄສເລົ່ານີ້ອອກໄປຈາກຊີວິດຂອງພວກເຮົາໄດ້ແນວໃດ?____________

________________________________________________________________

________________________________________________________________

________________________________________________________________

13. ຈະເກີດຫຍັງຂຶ້ນຖ້າພວກເຮົາມົວເມົາແຕ່ເວົ້າເຖິງຄົນອື່ນກ່ຽວກັບການປະພຶດຂອງເຂົາ?

________________________________________________________________

________________________________________________________________

________________________________________________________________

14. ຖ້າພວກເຮົານິນທາຕໍ່ໜ້າເດັກນ້ອຍ, ຈະມີຜົນແນວໃດຕໍ່ພວກເຂົາ?___________________

________________________________________________________________

________________________________________________________________

________________________________________________________________

15. ແນວໂນ້ມທີ່ຈະນິນທາ ແລະ ການມັກກ່າວຂວັນມາແຕ່ໃສ?_________________________

________________________________________________________________

________________________________________________________________

16. ພຣະບາຣາອຸລລາຫ໌ຊົງເຕືອນພວກເຮົາ: "ຫາກໄຟແຫ່ງອັດຕາມີອຳນາດເໜືອເຈົ້າ __________ _________________________ ແລະບໍ່ແມ່ນ ______________________________, ດັ່ງນັ້ນ ພວກເຈົ້າທຸກຄົນຈົ່ງຮູ້ ___________________ ດີກວ່າ ___________________."

17. ຄວາມຮັກບໍ່ແມ່ນເປັນພຽງແຕ່ສະແດງອອກດ້ວຍຄຳເວົ້າເທົ່ານັ້ນ. ມີການກະທຳຫຍັງແດ່ທີ່ສາມາດສະແດງຄວາມຮັກນີ້ອອກມາໄດ້? _____________________________________

________________________________________________________________

18. ກ່ຽວກັບຄວາມສາມັກຄີ ແລະ ຄວາມຮັກ ພຣະອັບດຸລບາຣາ ຮຽກຮ້ອງໃຫ້ພວກເຮົາ: "ຈົ່ງຢ່າ ________________ ພຽງຊົ່ວຂະນະ ແລະ ຈົ່ງຢ່າ ______________________________ ພຽງຊົ່ວວິນາທີດຽວ; ແທນທີ່ຈະເປັນເຊັ່ນນັ້ນ __________________ ດ້ວຍ ____________

______________________ ເພື່ອວ່າເຈົ້າຈະອຸທິດໃຫ້ກັບ __________________ ພຽງສິ່ງດຽວ ເພື່ອນຳ ______________________, ______________ ແລະ _____________________ ແກ່ບັນດາມິດສະຫາຍ."

19. ແລະ ພຣະອົງກ່າວເພີ່ມເຕີມອີກວ່າ: "ຄວາມຕ້ອງການສູງສຸດຂອງມະນຸດຊາດຄື _____________ ______ ແລະ ______________________________. ຄວາມແຂງແກ່ນຂອງຄວາມສຳພັນແຫ່ງ ___________________ ແລະ __________________________ ໃນໝູ່ມະນຸດທີ່ຫຼາຍຂຶ້ນ ອຳນາດຂອງ ___________ ແລະ ____________________ ໃນທຸກກິດຈະກຳຂອງມະນຸດກໍຈະມີຫຼາຍຂຶ້ນ."

20. ແມ່ນຫຍັງຄືກະແຈສຳຄັນທີ່ສຸດ ທີ່ຈະເຮັດໃຫ້ທຸກການກະທຳຂອງຊຸມຊົນປະສົບຄວາມສຳເລັດ?

______________________________________________________________________

______________________________________________________________________

21. ພຣະອັບດຸລບາຮາ ໄດ້ກ່າວເຖິງຜູ້ທີ່ມີການປຶກສາຫາລືກັນວ່າ: "ສິ່ງທີ່ຈຳເປັນສຳລັບພວກເຂົາທີ່ຮ່ວມປຶກສາຫາລືນຳກັນຄື _________________________________, _______________________ __________________________, _____________________________________________ __________________, _____________________________________________, _______ _____________________________________________ ທ່າມກາງຜູ້ເປັນທີ່ຮັກຂອງພຣະອົງ, __________________________________ໃນຄວາມຍາກລຳບາກ ແລະ ________________ ___________ ຕໍ່ໜ້າທໍລະນີປະຕູອັນສູງສົ່ງຂອງພຣະອົງ. ພວກເຂົາຄວນໄດ້ຮັບຄວາມຊ່ວຍເຫຼືອດ້ວຍຄວາມເມດຕາ ເພື່ອໃຫ້ໄດ້ມາເຊິ່ງຄຸນນະທັມເລົ່ານີ້, __________________ ຈາກອານາຈັກຂອງບາຮາທີ່ເບິ່ງບໍ່ເຫັນ ຈະຕ້ອງໄດ້ຮັບ _______________________________."

22. ກ່ຽວກັບພະລັງຂອງການເຮັດວຽກຢ່າງເປັນເອກະພາບ, ພຣະອັບດຸລບາຮາ ບອກພວກເຮົາວ່າ:" ເມື່ອໃດກໍຕາມທີ່ດວງວິນຍານສັກສິດ, ທີ່ອາໄສ __________________________, ຈະທະຍານຂຶ້ນດ້ວຍ ______________________________________ ແລະ ການເດີນຂະບວນ ________ ___________, ແຖວຕໍ່ແຖວ, ວິນຍານ __________ ເຫຼົ່ານັ້ນຈະເປັນ ___________________ ແລະ ຄື້ນທີ່ສາດຊັດຂອງມະຫາສະໝຸດອັນຍິ່ງໃຫຍ່ນັ້ນຈະເທົ່າກັບ ___________________ ແຫ່ງ _______________________________."

# ຕອນທີ 9

ລະຫວ່າງການຢ້ຽມຢາມ ທ້າວ ແລະ ນາງ ຊານເຊັດສ໌ ຄັ້ງທີສີ່ຂອງລາວ, ອາເລຈັນດຣາ ມີຄວາມສຸກທີ່ໄດ້ພົບກັບ ບີທຣິດຊ໌ (Beatrice), ຜູ້ເປັນຫຼານສາວທີ່ໄດ້ມາອາໄສຢູ່ກັບພວກເຂົາ ເຊິ່ງກຳລັງຮຽນໃນໂຮງຮຽນມັດທະຍົມໃກ້ໆບ້ານ. ບີທຣິດຊ໌ ມີຄວາມຢາກຮູ້ຫຼາຍ ກ່ຽວກັບປະເດັນຂອງຄວາມສາມັກຄີ ແລະ ການມີສ່ວນຮ່ວມຢ່າງກະຕືລືລົ້ນໃນການປຶກສາຫາລື. ຂະນະທີ່ການສົນທະນາດຳເນີນໄປໃກ້ຈະສິ້ນສຸດ, ນາງ ຊານເຊັດສ໌ ກໍໄດ້ນຳເອົາກາເຟ ແລະ ເຄັກມາໃຫ້ທຸກຄົນກິນ. ເປັນຊ່ວງເວລາທີ່ເຮັດໃຫ້ ອາເລຈັນດຣາ ໄດ້ມີໂອກາດທຳຄວາມຮູ້ຈັກກັບບີທຣິດສ໌ເລັກໜ້ອຍ ແລະ ອາເລຈັນດຣາ ກໍນັດພົບກັບລາວໃນຕອນເຊົ້າຂອງມື້ຖັດໄປ ເພື່ອຈະໂອ້ລົມກັນກ່ຽວກັບຄວາມພະຍາຍາມ ໃນການສ້າງຊຸມຊົນໃນແຖວບ້ານໃກ້ຄຽງ. ອາເລຈັນດຣາ ຄິດກັບຕົນເອງ “ລາວອາດສົນໃຈຮຽນຕາມລຳດັບຂອງຫຼັກສູດ, ຂ້າພະເຈົ້າຄວນຊ່ວຍໃຫ້ລາວໄດ້ສຶກສາຫຼັກສູດສອງສາມເຫຼັ້ມທຳອິດເຊິ່ງເປັນບາດກ້າວທີ່ໝັ້ນຄົງ. ຈາກນັ້ນ, ລາວອາດຕ້ອງການເລີ່ມຊັ້ນຮຽນສຳລັບເດັກ ຫຼື ອາດຈະຊ່ວຍຂ້າພະເຈົ້າຈັດກຸ່ມເຍົາວະຊົນໃນແຖວບ້ານໃກ້ຄຽງກໍໄດ້. ໃນກໍລະນີເຊັ່ນນັ້ນ, ລາວສາມາດມີຄວາມຮັບຜິດຊອບຕໍ່ກຸ່ມຮຽນຫຼາຍຂຶ້ນ ຖ້າຫາກລາວໄດ້ສຶກສາໄປຈົນເຖິງເຫຼັ້ມ 5, ທີ່ຈະເປັນການກະກຽມຄວາມພ້ອມແກ່ລາວ ເພື່ອຈະເຮັດໜ້າທີ່ເປັນຜູ້ຊຸກຍູ້ເຍົາວະຊົນ.” ອາເລຈັນດຣາ ໄດ້ເຂົ້າຮ່ວມການຊຸມນຸມຂອງຊາວໜຸ່ມຫຼາຍຄັ້ງ, ເຊິ່ງມຸ່ງເນັ້ນບາງຫົວຂໍ້ຂອງການປຶກສາຫາລື, ໄດ້ນຳໄປສູ່ການມີສ່ວນຮ່ວມຂອງຫຼາຍໆຄົນ ໃນຂະບວນການເຝິກອົບຮົມ. ລາວຕັດສິນໃຈວ່າ ໃນມື້ຕໍ່ໄປລາວຈະປະຕິບັດຕາມລຳດັບຄວາມຄິດ ຄືກັບໃນການສົນທະນາຂອງລາວກັບ ບີທຣິດຊ໌. ນີ້ຄືວິທີເປີດການສົນທະນາ:

> ພວກເຮົາທຸກຄົນຕ້ອງການເຫັນໂລກກາຍເປັນສະຖານທີ່ທີ່ດີຂຶ້ນ. ພວກເຮົາຢາກເຫັນອະນາຄົດທີ່ສັນຕິ ພາບສາກົນຖືກສະຖາປານາຂຶ້ນ ແລະ ຄອບຄົວມະນຸດກໍຢູ່ຮ່ວມກັນຢ່າງສັນຕິ. ອະນາຄົດດັ່ງກ່າວບໍ່ແມ່ນຄວາມຝັນ ແລະ ສາມາດສ້າງຂຶ້ນໄດ້, ເນື່ອງຈາກພວກເຮົາພະຍາຍາມຫຼາຍຂຶ້ນເລື້ອຍໆ ໃນການມີສ່ວນຊ່ວຍໃຫ້ໂລກດີຂຶ້ນ. ໃນຫ້ວງເລິກຂອງຈິດໃຈພວກເຮົາແຕ່ລະຄົນ, ກໍລ້ວນແລ້ວແຕ່ມີຄວາມປາດຖະໜາທີ່ຈະຮັບໃຊ້ຊຸມຊົນຂອງພວກເຮົາ. ສິ່ງທີ່ພວກເຮົາຕ້ອງການກໍຄື ການພັດທະນາຂີດຄວາມສາມາດຂອງພວກເຮົາ ໃນການກະທຳການອຸທິດຕົນເພື່ອປະໂຫຍດສ່ວນລວມ.
>
> ພວກເຮົາສາມາດຄິດເຖິງການຮັບໃຊ້ຂອງພວກເຮົາ ໃຫ້ແກ່ມະນຸດຊາດໂດຍການຈິນຕະນາການເຖິງເສັ້ນທາງແຫ່ງການຮັບໃຊ້ທີ່ພວກເຮົາຍ່າງໄປນຳກັນ. ເສັ້ນທາງນີ້ເປີດໃຫ້ກັບທຸກຄົນ, ພວກເຮົາແຕ່ລະ ຄົນກະທຳການເລືອກທີ່ຈະຮ່ວມດຳເນີນການ ແລະ ກ້າວຍ່າງໄປດ້ວຍບາດກ້າວຂອງຕົນເອງ. ພວກເຮົາບໍ່ໄດ້ຍ່າງຕາມເສັ້ນທາງນີ້ພຽງລຳພັງ; ພວກເຮົາໃຫ້ການຮັບໃຊ້ຄຽງຄູ່ໄປກັບ

ເພື່ອນຂອງພວກເຮົາ, ຮຽນຮູ້ຮ່ວມກັນ ແລະ ຄຽງບ່າຄຽງໄຫຼ່ໄປນຳກັນ. ທຸກຂັ້ນຕອນທີ່ພວກເຮົາດຳເນີນການສ້າງຄວາມສຸກ ແລະ ຄວາມໝັ້ນໃຈ ແລະ ທຸກຄວາມພະຍາຍາມຂອງພວກເຮົານຳມາເຊິ່ງການຮັບຮອງຈາກພຣະຜູ້ເປັນເຈົ້າ.

ບິທຣິດຊ໌ ມັກສິ່ງທີ່ລາວໄດ້ຍິນ ແລະ ບົດສົນທະນາທີ່ມີຊີວິດຊີວາທີ່ເກີດຂຶ້ນ. ຫຼັງຈາກນັ້ນບໍ່ດົນ, ກ່ອນທີ່ຈະດຳເນີນການຕໍ່ໄປ ໃຫ້ພວກເຮົາຢຸດຢູ່ທີ່ບ່ອນນີ້ກ່ອນ ແລະ ຂໍໃຫ້ໄຕ່ຕອງເຖິງລັກສະນະຂອງຄວາມສຳພັນລະຫວ່າງການເປັນເພື່ອນໃໝ່ຂອງທັງສອງ. ອາເລຈັນດຣາ ຕັດສິນໃຈທີ່ຈະມີບົດສົນທະນາຕາມລຳດັບ ເພື່ອເຊື້ອເຊີນ ບິທຣິດຊ໌ ເຂົ້າຮ່ວມໃນຂະບວນການຝຶກອົບຮົມ. ເປັນຫຍັງລາວຈຶ່ງຍັງບໍ່ຄວນບອກກັບ ບິທຣິດຊ໌ ວ່າຫຼັກສູດຕ່າງໆທີ່ຈະສຶກສານັ້ນ ແມ່ນສະຖາບັນເຝິກອົບຮົມເປັນຜູ້ສະໜອງໃຫ້ ແລະ ໄດ້ເຊີນລາວເຂົ້າຮ່ວມ?

________________________________________

________________________________________

________________________________________

________________________________________

________________________________________

## ຕອນທີ 10

ການສົນທະນາລະຫວ່າງ ອາເລຈັນດຣາ ແລະ ບິທຣິດຊ໌ ດຳເນີນຕໍ່ໄປປະມານສອງຊົ່ວໂມງ. ຂ້າງລຸ່ມນີ້ຄືແນວຄວາມຄິດເພີ່ມເຕີມຫຼາຍປະການທີ່ ອາເລຈັນດຣາ ແບ່ງປັນກັບເພື່ອນໃໝ່ຂອງລາວ. ແນ່ນອນວ່າພວກເຮົາເຂົ້າໃຈ, ລາວບໍ່ໄດ້ນຳສະເໜີເປັນເວລາດົນຢ່າງຕໍ່ເນື່ອງ. ສອງຊົ່ວໂມງຄືການໃຊ້ເວລາພິຈາລະນາຮ່ວມກັນ ກ່ຽວກັບແນວຄວາມຄິດຕ່າງໆທີ່ລະບຸໄວ້ໃນຫຍໍ້ໜ້າເລົ່ານີ້:

ພວກເຮົາຍັງໜຸ່ມນ້ອຍ, ພວກເຮົາຍັງມີພະລະກຳລັງ ແລະ ພວກເຮົາຍັງມີຄວາມກະຕືລືລົ້ນຢ່າງຫຼວງຫຼາຍ. ຜູ້ຄົນເດົາວ່າພວກເຮົາຍັງໄຮ້ດຽງສາຢູ່, ແຕ່ແມ່ນກົງກັນຂ້າມ, ພວກເຮົາມີຄວາມໃສ່ໃຈຕໍ່ກັບຊາຕາກຳຂອງມະນຸດຊາດ ແລະ ຢາກເຫັນການປ່ຽນແປງທີ່ເກີດຂຶ້ນແທ້ໃນສັງຄົມ. ແລະພວກເຮົາຍັງຕ້ອງໄດ້ຄິດກ່ຽວກັບຊີວິດພວກເຮົາເອງ, ບໍ່ວ່າຈະເປັນການສຶກສາ, ການເຮັດວຽກ, ເພື່ອນ, ຄອບຄົວ. ພວກເຮົາມີອາຍຸຫຼາຍຂຶ້ນໃນແຕ່ລະປີ, ພວກເຮົາພົບວ່າຕົນເອງໄດ້ແບກຮັບຄວາມຮັບຜິດຊອບຫຼາຍຂຶ້ນ, ຂ້າພະເຈົ້າຮູ້ສຶກໜັກໃຈຫຼາຍ. ຈາກນັ້ນ, ຂ້າພະເຈົ້າໄດ້ຄິດເຖິງບົດຄວາມໜຶ່ງຈາກພຣະທັມມະລິຂິດບາຮາຍ ທີ່ຂ້າພະເຈົ້າທ່ອງຈຳໄດ້: “ຊີວິດຂອງມະນຸດຄືກັບລະດູໃບ

ໄມ້ປົ່ງ ແລະ ປະດັບປະດາດ້ວຍຄວາມຮຸ່ງເຮືອງອັນໜ້າອັດສະຈັນ. ໃນຊ່ວງໄວໜຸ່ມຈະເຫັນເຖິງຄຸນລັກສະນະຂອງຄວາມເຂັ້ມແຂງ ແລະ ພະລະກຳລັງ ແລະ ເປັນຊ່ວງເວລາທີ່ດີທີ່ສຸດໃນຊີວິດຂອງມະນຸດ.”

ສິ່ງທີ່ຂ້າພະເຈົ້າຢາກຈະແບ່ງປັນກັບເຈົ້າຄື ຄົນໜຸ່ມສາວຈຳນວນຫຼາຍທົ່ວໂລກເຂົ້າມາຊຸມນຸມກັນເຊັ່ນດຽວກັບພວກເຮົາ, ທີ່ຕະໜັກດີວ່າພະລັງຂອງພວກເຂົາສາມາດກຳນົດໄດ້ເຖິງວັດຖຸປະສົງສອງດ້ານ: ເພື່ອເບິ່ງແຍງການຈະເລີນເຕີບໂຕທາງສະຕິປັນຍາ ແລະ ຈິດວິນຍານຂອງຕົນເອງ ແລະ ມີສ່ວນຮ່ວມສູ່ການປ່ຽນແປງຂອງສັງຄົມ. ວັດຖຸປະສົງທັງສອງດ້ານນີ້ມີການເຊື່ອມໂຍງກັນ, ໃນຂະນະທີ່ພວກເຮົາພັດທະນາຂີດຄວາມສາມາດຂອງພວກເຮົາເອງ, ພວກເຮົາສາມາດໃຫ້ການຮັບໃຊ້ຜູ້ອື່ນ ໃນການຊ່ວຍເຫຼືອເຊິ່ງກັນແລະກັນໄດ້ດີຂຶ້ນ. ໃນສ່ວນບຸກຄົນ, ຂະນະທີ່ພວກເຮົາເຕີບໂຕ, ພວກເຮົາຕ້ອງເສີມສ້າງຄຸນສົມບັດທີ່ພວກເຮົາມີດ້ວຍ.

ນີ້ຄືແນວຄວາມຄິດຂອງເສັ້ນທາງແຫ່ງການຮັບໃຊ້ ທີ່ຂ້າພະເຈົ້າກ່າວເຖິງກ່ອນທີ່ຈະມາເຖິງ. ການຍ່າງບໍ່ແມ່ນສິ່ງທີ່ພວກເຮົາເພີ່ມເຂົ້າໄປໃນຊີວິດ; ແຕ່ມັນນຳຄວາມໝາຍມາສູ່ທຸກສິ່ງທີ່ພວກເຮົາກະທຳ. ການຮັບໃຊ້ຊຸມຊົນໃນການຊ່ວຍໃຫ້ພວກເຮົາເຂົ້າໃຈ ເຖິງຈຸດປະສົງຂອງການສຶກສາໄດ້ດີຂຶ້ນ, ເພື່ອຊີ້ແຈງຄວາມຄິດຂອງພວກເຮົາກ່ຽວກັບອະນາຄົດ. ເພື່ອພັດທະນາຄຸນສົມບັດ, ພວກເຮົາຈຳເປັນຕ້ອງມີສ່ວນຮ່ວມ ເພື່ອຄວາມເປັນຢູ່ທີ່ດີຂອງຄອບຄົວຂອງພວກເຮົາ. ແມ່ນເປັນການເສີມສ້າງມິດຕະພາບຂອງພວກເຮົາ ເຊິ່ງເຮັດໃຫ້ພວກເຮົາພົ້ນຈາກການກະຈາຍພະລັງຂອງພວກເຮົາ ໄປກັບການສະແຫວງຫາຄວາມຮູ້ພຽງເລັກໜ້ອຍ.

ໃນການຄິດເຖິງການເຕີບໂຕທາງຈິດວິນຍານ ແລະ ທາງປັນຍາຂອງພວກເຮົາ, ພວກເຮົາຕ້ອງຕະໜັກເຖິງພະລັງທັງຫຼາຍທີ່ມີອິດທິພົນຕໍ່ພວກເຮົາ. ພະລັງບາງຢ່າງເຊັ່ນ: ພະລັງທາງຄວາມຮູ້, ຄວາມຍຸຕິທັມ ແລະ ພະລັງແຫ່ງຄວາມຮັກ, ຂັບເຄື່ອນພວກເຮົາໄປໃນທິດທາງທີ່ຖືກຕ້ອງ ແລະ ພວກເຮົາຕ້ອງຮຽນຮູ້ທີ່ຈະປັບຕົວໃຫ້ເຂົ້າກັບພະລັງເລົ່ານັ້ນ. ນອກນັ້ນ, ຍັງມີພະລັງອື່ນໆອີກ ເຊັ່ນ: ພະລັງທາງວັດຖຸນິຍົມ, ການເອົາຕົນເອງເປັນສູນກາງ, ການກະທຳທີ່ກົງກັນຂ້າມ, ແລະພວກເຮົາຄວນຕໍ່ຕ້ານສິ່ງເລົ່ານັ້ນ. ພວກເຮົາຕ້ອງມຸ່ງໝັ້ນທີ່ຈະບັນລຸຄວາມເປັນເລີດ ແລະ ມີຄວາມເຊື່ອໝັ້ນວ່າ ຄວາມພະຍາຍາມຂອງພວກເຮົາຈະໄດ້ຮັບພອນດ້ວຍການຮັບຮອງຈາກພຣະຜູ້ເປັນເຈົ້າ.

ແລະໃນການຄິດກ່ຽວກັບການມີສ່ວນຮ່ວມຂອງພວກເຮົາ ໃນການປ່ຽນແປງຂອງສັງຄົມນັ້ນ ຄືການປ່ຽນແປງໂລກແຫ່ງຄວາມຮຸນແຮງ, ຄວາມຍາກຈົນ ໄປສູ່ໂລກແຫ່ງສັນຕິພາບ, ຄວາມຈະເລີນ

ຮຸ່ງເຮືອງ ແລະ ຄວາມປອງດອງກັນ. ພວກເຮົາຕ້ອງພິຈາລະນາທັງຄວາມກ້າວໜ້າທາງວັດຖຸ ແລະ ທາງຈິດວິນຍານ. ຄວາມກ້າວໜ້າຂອງວັດຖຸສຳລັບທຸກຄົນຈະບໍ່ມີທາງບັນລຸໄດ້ ຫາກພວກເຮົາຍັງບໍ່ກ້າວໜ້າທາງຈິດວິນຍານ. ຈົນກວ່າທັງສອງສິ່ງນີ້ຈະຮ່ວມໄປນຳກັນເທົ່ານັ້ນຈຶ່ງຈະເຮັດໃຫ້ໂລກດີຂຶ້ນໄດ້. ຍັງມີອີກໜຶ່ງຂໍ້ຄວາມທີ່ຂ້າພະເຈົ້າພະຍາຍາມທ່ອງຈຳ: "ອາລິຍະທັມທາງວັດຖຸກໍຄືກັບຕະກຽງ, ໃນຂະນະທີ່ອາລິຍະທັມທາງຈິດວິນຍານເປັນດັ່ງແສງສະຫວ່າງໃນຕະກຽງນັ້ນ. ຫາກອາລິຍະທັມທາງວັດຖຸ ແລະ ຈິດວິນຍານລວມກັນເປັນໜຶ່ງດຽວ, ແລ້ວພວກເຮົາຈຶ່ງມີທັງແສງສະຫວ່າງ ແລະ ຕະກຽງຢູ່ນຳກັນ ເຊິ່ງເປັນຜົນໄດ້ຮັບທີ່ສົມບູນແບບ."

ໃນຂະນະທີ່ພວກເຮົາຍ່າງໄປໃນຫົນທາງແຫ່ງການຮັບໃຊ້, ພວກເຮົາຮຽນຮູ້ທີ່ຈະເຮັດວຽກຮ່ວມກັບກຸ່ມບຸກຄົນຫຼາຍໆຄົນ, ໂດຍສະເພາະເຍົາວະຊົນ ແລະ ເດັກນ້ອຍ, ທີ່ຊ່ວຍພວກເຂົາໃຫ້ໄດ້ຮັບຄວາມຮູ້, ທັກສະ ແລະ ຄຸນນະພາບທາງຈິດວິນຍານ. ນອກຈາກນີ້ ພວກເຮົາຍັງຮຽນຮູ້ທີ່ຈະໃຫ້ຄວາມສຳຄັນກັບຄວາມສາມັກຄີໃນຊຸມຊົນຂອງພວກເຮົາ. ບຸກຄົນ, ຄອບຄົວ ແລະ ອົງການຕ່າງໆທີ່ຕ້ອງການມີສ່ວນຮ່ວມໃນຄວາມກ້າວໜ້າຂອງຊຸມຊົນຕ້ອງມີການຮ່ວມມືກັນ. ພວກເຂົາຕ້ອງສ້າງວິໄສທັດ ແລະ ຈຸດມຸ່ງໝາຍຮ່ວມກັນ ແລະ ປະຖິ້ມວິຖີທາງແຫ່ງຄວາມຂັດແຍ້ງ.

ດັ່ງນັ້ນ, ຈຶ່ງເປັນສິ່ງສຳຄັນທີ່ໃນໄວຊາວໜຸ່ມຂອງພວກເຮົາ ຈະພັດທະນານິດໄສຂອງການມີປະຕິສຳພັນທີ່ກົມກຽວກັນກັບຄົນອື່ນໆ. ພວກເຮົາຕ້ອງເປັນເພື່ອນກັນ: ຊ່ວຍເຫຼືອເຊິ່ງກັນແລະກັນໃນວຽກທີ່ພວກເຮົາເຮັດ, ຍອມຮັບການມີສ່ວນຮ່ວມຂອງກັນແລະກັນ, ໃຫ້ກຳລັງໃຈ ແລະ ສະໜັບສະໜູນຊຶ່ງກັນແລະກັນ, ເຫັນຈຸດແຂງຂອງກັນແລະກັນ, ສະແຫວງຫາ ແລະ ໃຫ້ຄຳແນະນຳທີ່ເປັນປະໂຫຍດຕໍ່ກັນແລະກັນ ແລະ ມີຄວາມສຸກໃນຄວາມສຳເລັດຂອງກັນແລະກັນ. ໃນການກ້າວໄປສູ່ເສັ້ນທາງແຫ່ງການຮັບໃຊ້, ພວກເຮົາຕ້ອງລົງມືປະຕິບັດ, ໄຕ່ຕອງເຖິງການກະທຳຂອງພວກເຮົາ, ປຶກສາຫາລື ແລະ ສຶກສາຮ່ວມກັນ.

ໃນບໍ່ເທົ່າໃດທົດສະວັດທີ່ຜ່ານມາ, ຊຸມຊົນບາຮາຍປະສົບຄວາມສຳເລັດໃນການສະຖາປະນາສະຖາບັນການຮຽນຮູ້ ທີ່ພິເສດໃນທຸກປະເທດທົ່ວໂລກຢ່າງເປັນປະໂຫຍດ. ດ້ວຍສະຖາບັນເລົ່ານີ້, ແມ່ນເປັນວິທີທີ່ພວກເຮົາອ້າງເຖິງ, ນຳສະເໜີຫຼັກສູດທີ່ເສີມສ້າງຂີດຄວາມສາມາດຂອງພວກເຮົາເພື່ອຮັບໃຊ້ຊຸມຊົນ. ໂດຍການສຶກສາຫຼັກສູດເລົ່ານີ້, ພວກເຮົາໄດ້ຮັບຂໍ້ມູນທີ່ເລິກເຊິ່ງທາງຈິດວິນຍານ ແລະທັກສະທີ່ຈຳເປັນເພື່ອການກ້າວໜ້າໄປໃນຫົນທາງແຫ່ງການຮັບໃຊ້ຮ່ວມກັນ. ຂະນະທີ່ພວກເຮົາໄດ້ຮຽນຮູ້ຈາກຫຼັກສູດນັ້ນ, ຄວາມສາມາດຂອງພວກເຮົາກໍເພີ່ມພູນຂຶ້ນໃນການດຳເນີນການຮັບໃຊ້ທີ່ສັບຊ້ອນຫຼາຍຂຶ້ນເລື້ອຍໆກໍເຕີບໂຕ. ຄຽງຄູ່ກັນນັ້ນ, ພວກເຮົາກໍໄດ້ຮັບການຊ່ວຍເຫຼືອຈາກຜູ້ທີ່ມີປະສົບ

ການຫຼາຍກວ່າ ທີ່ຄອຍໃຫ້ການຊ່ວຍເຫຼືອພວກເຮົາຕະຫຼອດເວລາ, ຈົນກວ່າພວກເຮົາຈະສາມາດໄປຊ່ວຍເພື່ອນຜູ້ທີ່ມີປະສົບການໜ້ອຍກວ່າ. ຈາກການເລີ່ມຕົ້ນ, ພວກເຮົາທຸກຄົນຕ່າງເປັນຜູ້ສະໜັບສະໜູນໃນການປຸ່ງນແປງສ່ວນບຸກຄົນ ແລະ ສັງຄົມ, ກະຕືລືລົ້ນຕໍ່ກັບຄວາມຮັບຜິດຊອບຕໍ່ການຮຽນຮູ້ຂອງຕົນເອງ ແລະ ໃຫ້ການຮັບໃຊ້ແກ່ຊຸມຊົນ.

"ການເປັນຜູ້ສະໜັບສະໜູນ" ໝາຍເຖິງການມີຄວາມປາດຖະໜາທີ່ຈະກະທຳຢ່າງຮອບຄອບ, ຢຶດໝັ້ນຕໍ່ການໃຊ້ຄວາມພະຍາຍາມຂອງພວກເຮົາ, ເພື່ອໃຫ້ໄດ້ມາ ແລະນຳໃຊ້ຄວາມຮູ້ທີ່ໄດ້ມາໃນທຸກບາດກ້າວ. ການເປັນຜູ້ສະໜັບສະໜູນບໍ່ໄດ້ເປັນພຽງຜູ້ຮັບຜົນປະໂຫຍດແບບບໍ່ໄດ້ເຮັດຫຍັງ, ແຕ່ຕ້ອງເປັນຜູ້ສະໜັບສະໜູນທີ່ຫ້າວຫັນຕໍ່ຄວາມກ້າວໜ້ານັ້ນ. ການໄດ້ມາເຊິ່ງການເປັນຜູ້ສະໜັບສະໜູນນັ້ນ, ພວກເຮົາຕ້ອງຮຽນຮູ້ທີ່ຈະລິເລີ່ມເຝິກຝົນຄວາມຄິດສ້າງສັນ ແລະ ການມີວິໄນ. ຫຼັກສູດຂອງສະຖາບັນ ຊ່ວຍພວກເຮົາເພີ່ມຂີດຄວາມສາມາດ ຂອງການເປັນຜູ້ສະໜັບສະໜູນໃນຂະບວນການສ້າງຊຸມຊົນ.

ພວກເຮົາຄວນໃຊ້ເວລາຈັກໜ້ອຍໜຶ່ງ ເພື່ອໄຕ່ຕອງເຖິງແນວຄິດໃນຫຍໍ້ໜ້າຂ້າງເທິງ. ທີ່ໄດ້ກ່າວເຖິງໃນຕອນທຳອິດຂອງຕອນນີ້, ອາເລຈັນດຣາຈະບໍ່ພຽງແຕ່ນຳສະເໜີແນວຄວາມຄິດໄປເທື່ອລະຂໍ້, ແຕ່ຈະເຮັດໃຫ້ແນ່ໃຈວ່າ ບີທຣິດຊ໌ ມີເວລາພຽງພໍສຳລັບການຄົ້ນຄິດເຖິງສິ່ງນັ້ນ ແລະ ມີສ່ວນຮ່ວມໃນການປຶກສາຫາລື. ສິ່ງທີ່ເຈົ້າອາດຕ້ອງການພິຈາລະນາ, ຫຼັງຈາກທີ່ເຈົ້າມີໂອກາດສົນທະນາໃນທຸກຫຍໍ້ໜ້າກັບກຸ່ມຂອງເຈົ້າແລ້ວ ແລະ ໄດ້ຮຽນຮູ້ທີ່ຈະສະແດງຄວາມຄິດໄດ້ເປັນຢ່າງດີດ້ວຍຕົວເຈົ້າເອງ ບໍ່ວ່າບົດສົນທະນາຈະພັດທະນາໄປເຖິງຈຸດທີ່ ອາເລຈັນດຣາ ຮູ້ສຶກໝັ້ນໃຈຫຼືບໍ່. ໃນການແບ່ງປັນສອງສາມຂໍ້ຄວາມກ່ຽວກັບຫຼັກສູດບາງສ່ວນຂອງສະຖາບັນຣູຮີ ແລະ ໄດ້ເຊື້ອເຊີນ ບີທຣິດຊ໌ ເຂົ້າຮ່ວມການສຶກສາເຫຼັ້ມ 1. ຂໍໃຫ້ເຈົ້າຂຽນໃນຊ່ອງຫວ່າງຂ້າງລຸ່ມນີ້ ກ່ຽວກັບສິ່ງທີ່ເຈົ້າຈະເວົ້າ. ຖ້າຫາກວ່າເຈົ້າຢູ່ໃນສະຖານະການຄືກັນກັບລາວ. ເຈົ້າຈະອະທິບາຍຫຼັກສູດເຫຼັ້ມ 1 ແລະ 2 ແລະ ການຮັບໃຊ້ທີ່ພວກເຂົາຮຽກຮ້ອງໄດ້ແນວໃດ? ການອ້າງອີງສັ້ນໆ ກ່ຽວກັບການຮັບໃຊ້ໃນຫຼັກສູດເຫຼັ້ມຕໍ່ໆໄປ, ໂດຍສະເພາະຢ່າງຍິ່ງການສອນຊັ້ນຮຽນສຳລັບການສຶກສາທາງຈິດວິນຍານແກ່ເດັກນ້ອຍ ແລະ ການແນະນຳກຸ່ມເຢົາວະຊົນໃນຖານະທີ່ເປັນຜູ້ຊຸກຍູ້ກຸ່ມເຢົາວະຊົນ, ບໍ່ເປັນທີ່ສົງໄສເລີຍວ່າຈະຊ່ວຍໃຫ້ ບີທຣິດຊ໌ ໄດ້ຮັບວິໄສທັດວ່າລາວສາມາດໃຫ້ການຮັບໃຊ້ຫຍັງໄດ້ແດ່ໃນອະນາຄົດ. ຜູ້ອຳນວຍຄວາມສະດວກໃນກຸ່ມຂອງເຈົ້າ ສາມາດຊ່ວຍເຈົ້າໃນການຂຽນສອງສາມປະໂຫຍກໃນສອງການກະທຳເພື່ອການຮັບໃຊ້ເລົ່ານີ້, ທີ່ຄ້າຍຄືກັບສິ່ງທີ່ ອາເລຈັນດຣາ ອາດເພີ່ມເຕີມໃນການເຊີນ ບີທຣິດຊ໌ ເຂົ້າຮ່ວມການສຶກສາເຫຼັ້ມທີ 1.

## ຕອນທີ 11

ສອງອາທິດຜ່ານໄປ, ກ່ອນທີ່ອາເລຈັນດຣາຈະໄປຢ້ຽມຢາມ ຄອບຄົວຊານເຊັດສ໌ ຄັ້ງຕໍ່ໄປ. ໃນລະຫວ່າງນັ້ນ, ບີທຣິດຊ໌ ສາມາດເຂົ້າຮ່ວມຄ້າຍການສຶກສາແບບເຂັ້ມຂົ້ນ ແລະ ສຳເລັດພາກທີໜຶ່ງ ແລະ ສອງຂອງເຫຼັ້ມ 1. ຕອນນີ້ລາວກຳລັງສຶກສາໃນພາກທີສາມກັບເພື່ອນຫ້າຄົນ ໃນກຸ່ມທີ່ພົບກັນອາທິດລະສອງຄັ້ງໃນແຖວບ້ານໃກ້ຄຽງ. ອາເລຈັນດຣາ ຄິດວ່າເປັນໂອກາດດີ ທີ່ຈະໂອ້ລົມກັບຄອບຄົວຊານເຊັດສ໌ ໃນຫົວຂໍ້ການອະທິຖານ ແລະ ຖາມບີທຣິດຊ໌ວ່າຈະຊ່ວຍລາວໄດ້ຫຼືບໍ່. ເຈົ້າເຄີຍໄດ້ສຶກສາພາກທີສອງຂອງເຫຼັ້ມ 1 ໄປແລ້ວ; ດັ່ງນັ້ນ, ຈຶ່ງບໍ່ຈຳເປັນຕ້ອງສະຫຼຸບໃຫ້ເຈົ້າກ່ຽວກັບເນື້ອຫາທີ່ຢູ່ໃນນັ້ນ. ລະຫວ່າງການຢ້ຽມຢາມຂອງອາເລຈັນດຣາ ແລະ ບີທຣິດຊ໌, ຫຼັງຈາກທົບທວນຄືນໃນພາກນັ້ນ, ຂໍໃຫ້ເຈົ້າລະບຸປະເດັນຫຼັກທີ່ເຈົ້າຈະພະຍາຍາມເວົ້າເຖິງ ໃນການສົນທະນາຫົວຂໍ້ນີ້ໂດຍລວມ, ແລ້ວຂຽນແນວຄວາມຄິດຂອງເຈົ້າລົງໃນຊ່ອງຫວ່າງຂ້າງລຸ່ມນີ້:

## ຕອນທີ 12

ການຢ້ຽມຢາມຄອບຄົວຊານເຊັດຊ໌ ຂອງອາເລຈັນດຣາ ຍັງຄົງດຳເນີນຕໍ່ໄປໃນອີກຫຼາຍອາທິດຂ້າງໜ້າ ແລະ ພວກເຂົາໄດ້ມີໂອກາດປຶກສາຫາລືກັນກ່ຽວກັບຫົວຂໍ້ຕ່າງໆຢ່າງເໝາະສົມ. ໃນການພິຈາລະນາຂອງພວກເຂົາກ່ຽວກັບຄວາມສຳຄັນຂອງການອະທິຖານ ແລະ ຊີວິດຂອງຈິດວິນຍານ, ການພັດທະນາຄຸນລັກສະນະທາງທັມ, ການເຊື່ອຟັງກົດ ແລະ ພຣະບັນຍັດຂອງພຣະຜູ້ເປັນເຈົ້າ ແລະ ຄວາມແນ່ວແນ່ໃນຄວາມຮັກທີ່ມີຕໍ່ພຣະອົງ. ມີຢູ່ຄັ້ງໜຶ່ງ, ພວກເຂົາໄດ້ສົນທະນາກັນໜ້ອຍໜຶ່ງກ່ຽວກັບລະບົບການຄຸ້ມຄອງຂອງສະຖາບັນ, ໂດຍສະເພາະແມ່ນກ່ຽວກັບທັມມະສະພາທ້ອງຖິ່ນ ແລະ ທັມມະສະພາແຫ່ງຊາດ. ພວກເຮົາບໍ່ຈຳເປັນຕ້ອງພິຈາລະນາເນື້ອຫາ ທີ່ມີໃນລະຫວ່າງການຢ້ຽມຢາມຂອງແຕ່ລະຄັ້ງເລົ່ານັ້ນ. ຢ່າງໃດກໍຕາມ, ມີສອງຄຳຖາມທີ່ມັກເກີດຂຶ້ນລະຫວ່າງຜູ້ເຂົ້າຮ່ວມໃນການສົນທະນາທີ່ສົມມຸດຂຶ້ນ ເຊັ່ນ: ຄຳຖາມທຳອິດກ່ຽວຂ້ອງກັບລັກສະນະຂອງການປະຊຸມທີ່ຈັດຂຶ້ນໂດຍຊຸມຊົນ ແລະ ຄຳຖາມທີສອງກ່ຽວກັບການເງິນ. ພວກເຮົາຈະກ່າວເຖິງຫົວຂໍ້ຂອງການປະຊຸມ, ໂດຍສະເພາະງານສະຫຼອງບຸນສິບເກົ້າວັນ, ໃນຕອນນີ້ ແລະ ຄຳຖາມກ່ຽວກັບການເງິນຈະເປັນຫົວຂໍ້ຕໍ່ໄປ.

ຈາກນັ້ນ, ປະເດັນຕໍ່ໄປນີ້ອາດເປັນພື້ນຖານສຳລັບການສົນທະນາໃນຮູບແບບຂອງ ງານສະຫຼອງບຸນສິບເກົ້າວັນ:

- ໃນຊຸມຊົນບາຮາຍ, ມີການລວມຕົວກັນເພື່ອຈຸດປະສົງຕ່າງໆເພື່ອການສູດອ້ອນວອນ, ເພື່ອການສຶກສາ, ເພື່ອສະເຫຼີມສະຫຼອງວັນພິເສດຕ່າງໆ, ມີການປຶກສາຫາລືກ່ຽວກັບກິດຈະກຳຊຸມຊົນ ແລະ ການຮັບໃຊ້ສັງຄົມ, ເພື່ອປຶກສາຫາລືກ່ຽວກັບແຜນການດຳເນີນງານຕ່າງໆ. ພຣະບາຮາອຸລລາຫ໌ໃຫ້ຄຳສັນຍາດັ່ງຕໍ່ໄປນີ້:

**"ເຮົາຂໍຢືນຢັນດ້ວຍຊີວິດ ແລະ ສາສະໜາຂອງເຮົາ! ບໍ່ວ່າສະຖານທີ່ໃດທີ່ບັນດາມິດສະຫາຍຂອງພຣະຜູ້ເປັນເຈົ້າຍ່າງເຂົ້າໄປ ແລະ ເປັນບ່ອນທີ່ພວກເຂົາຈະຮ້ອງສັນລະເສີນ ພຣະກຽດຕິຄຸນຂອງພຣະຜູ້ເປັນນາຍ, ຈະເປັນບ່ອນທີ່ຖືກຫ້ອມລ້ອມດ້ວຍດວງວິນຍານຂອງຜູ້ທີ່ຈົ່ງຮັກພັກດີ ແລະ ເລົ່າເທບທິດາຜູ້ເປັນທີ່ຮັກແພງທັງມວນ."[23]**

- ການຟັງພຣະວັດຈະນະຂອງພຣະຜູ້ເປັນເຈົ້າ ໃນການພົບປະສ້າງສັນໃນໝູ່ເພື່ອນເຮັດໃຫ້ຫົວໃຈມີຄວາມສຸກ ແລະ ເສີມສ້າງສາຍສຳພັນແຫ່ງຄວາມສາມັກຄີ. ພຣະບາຮາອຸລລາຫ໌ ຊົງແນະນຳພວກເຮົາວ່າ:

**"ເປັນສິ່ງຈຳເປັນສຳລັບມິດສະຫາຍ, ບໍ່ວ່າຈະຢູ່ໃນແຫ່ງຫົນໃດກໍຕາມ, ຈົ່ງມາລວມຕົວກັນເພື່ອການຊຸມນຸມໃນກອງປະຊຸມຕ່າງໆ, ແລະໃນທີ່ນັ້ນຈົ່ງເວົ້າຈາຢ່າງສະຫຼຽວສະຫຼາດ, ດ້ວຍວາຈາທີ່ຈັບໃຈ ແລະ ອ່ານທັມມະລິຂິດຂອງພຣະຜູ້ເປັນເຈົ້າ; ເພື່ອຄວາມຮັກໃນຖ້ອຍຄຳຂອງພຣະຜູ້ເປັນເຈົ້ານັ້ນຈະຖືກຈູດໃຫ້ສະຫວ່າງຂຶ້ນ."[24]**

ພຣະອັບດຸລບາຮາ ຂຽນໄວ້ວ່າ:

**"ຈົ່ງຈັດການຊຸມນຸມເພື່ອຂັບຂານ ແລະ ສູດອະທິຖານເປັນທ່ວງທຳນອງຈາກຄຳສອນສະຫວັນ, ເພື່ອວ່າປະເທດນັ້ນອາດຈະໄດ້ຮັບການສ່ອງສະຫວ່າງດ້ວຍແສງແຫ່ງສັດຈະທັມ ແລະ ດິນແດນນັ້ນອາດກາຍເປັນສະຫວັນທີ່ສຳລານ, ໂດຍການຮັບຮອງຈາກພຣະວິນຍານສັກສິດ, ເພາະວັດຕະຈັກນີ້ເປັນວັດຕະຈັກແຫ່ງພຣະຜູ້ຊົງຄວາມຮຸ່ງເຮືອງ ແລະ ທ່ວງທຳນອງແຫ່ງເອກະພາບຂອງໂລກແຫ່ງມະນຸດຊາດ ຈະດັງກ້ອງໄປເຖິງຫູຂອງທຸກຄົນທົ່ວທັງຊີກໂລກຕາເວັນຕົກ ແລະ ຕາເວັນອອກ."[25]**

- ໃນບັນດາການຊຸມນຸມບາຮາຍຕ່າງໆ, ງານສະຫຼອງບຸນ 19 ວັນ ແມ່ນເປັນບຸນທີ່ມີຄວາມສຳຄັນເປັນພິເສດ. ປະຕິທິນບາຮາຍທັງໝົດມີ 19 ເດືອນ, ແຕ່ລະເດືອນມີ 19 ວັນ ແລະ ພຣະບາຮາອຸລລາຫ໌ ຊົງກຳນົດໃຫ້ທຸກຄົນຈັດງານສະຫຼອງຂຶ້ນເປັນປະຈຳທຸກເດືອນ:

**"ແທ້ທີ່ຈິງ, ເຈົ້າໄດ້ຮັບບັນຊາໃຫ້ຈັດງານສະຫຼອງເດືອນລະຄັ້ງ, ແມ່ນວ່າຈະມີບໍລິການແຕ່ພຽງນ້ຳດື່ມເທົ່ານັ້ນ; ເພາະພຣະຜູ້ເປັນເຈົ້າຊົງປະສົງຈະເຊື່ອມຫົວໃຈທັງຫຼາຍເຂົ້າດ້ວຍກັນ ແມ່ນວ່າຈະໃຊ້ວິທີການທາງໂລກ ແລະ ທາງສະຫວັນໃດກໍຕາມ."[26]**

- ງານສະຫຼອງບຸນ 19 ວັນປະກອບດ້ວຍສາມພາກ. ພາກທຳອິດເປັນການອຸທິດຖະຫວາຍທີ່ມີການສູດອະທິຖານ ແລະ ອ່ານຂໍ້ຄວາມຈາກທັມມະລິຂິດສັກສິດ. ພາກທີສອງເປັນພາກການບໍລິຫານທີ່

ເພື່ອນບາຮາຍຈະປຶກສາຫາລືກັນ ກ່ຽວກັບກິດຈະກຳຂອງຊຸມຊົນ. ພາກທີສາມເປັນພາກສ້າງສັນທາງສັງຄົມລະຫວ່າງໝູ່ເພື່ອນ.

**"ໂອ ເຈົ້າຄົນຮັບໃຊ້ຜູ້ຈົ່ງຮັກພັກດີຕໍ່ພຣະຜູ້ຊົງຄວາມງາມອັນອຸດົມພອນ! ໃນທຸກໆວົງຮອບ ແລະທຸກຍຸກສາສະໜາ, ງານສະຫຼອງແມ່ນເປັນທີ່ເພິ່ງພໍໃຈ ແລະ ເປັນທີ່ຮັກ, ແລະ ການປູໂຕະຕ້ອນຮັບບັນດາຜູ້ເປັນທີ່ຮັກຂອງພຣະຜູ້ເປັນເຈົ້າ ແມ່ນໄດ້ຮັບການພິຈາລະນາວ່າ ເປັນການກະທຳທີ່ໜ້າສັນລະເສີນ. ໂດຍສະເພາະໃນປັດຈຸບັນນີ້, ໃນຍຸກສາສະໜາທີ່ບໍ່ມີທີ່ປຽບປານ ແລະ ເປັນຍຸກທີ່ໂອບອ້ອມອາລີທີ່ສຸດນີ້ ເຊິ່ງງານສະຫຼອງໄດ້ຮັບການຕ້ອນຮັບຢ່າງສູງສົ່ງ, ຍ້ອນງານສະຫຼອງແມ່ນໄດ້ຮັບການພິຈາລະນາວ່າເປັນການຊຸມນຸມທີ່ຈັດຂຶ້ນເພື່ອບູຊາ ແລະ ສັນລະເສີນພຣະຜູ້ເປັນເຈົ້າ. ໃນງານນີ້ມີການສູດພຣະວັດຈະນະສັກສິດ, ບົດກອນ ແລະ ຄຳສະດຸດີແຫ່ງສະຫວັນ ແລະ ຫົວໃຈໄດ້ຮັບການປຸກໃຫ້ຕື່ນຂຶ້ນ ແລະ ຖືກນຳພາໄປຈາກຕົນເອງ."**[27]

- ໃນລະຫວ່າງພາກການບໍລິຫານງານຂອງງານສະຫຼອງບຸນ 19 ວັນ, ເພື່ອນໆຈະໄດ້ຟັງລາຍການກິດຈະກຳຕ່າງໆຂອງຊຸມຊົນບາຮາຍທັງໃກ້ແລະໄກ, ປຶກສາຫາລືກັນກ່ຽວກັບກິດຈະກຳຂອງສາສະໜາໃນຊຸມຊົນຂອງຕົນ ແລະ ປະເມີນຄວາມກ້າວໜ້າ, ເຮັດໃຫ້ມີຄວາມລຶ້ງເຄີຍກັບຄຳແນະນຳຕ່າງໆທີ່ໄດ້ຮັບຈາກສະພາຍຸຕິທັມແຫ່ງສາກົນ ແລະ ສະເໜີຄຳຄິດເຫັນຕ່າງໆໃຫ້ກັບສະຖາບັນຂອງສາສະໜາໄດ້ຮັບການພິຈາລະນາ. ການປຶກສາຫາລືໃນງານສະຫຼອງບຸນ 19 ວັນມີຄວາມສຳຄັນຢ່າງທີ່ສຸດເພາະວ່າ ດ້ວຍວິທີນີ້ເອງ, ທີ່ສາສະນິກະຊົນທຸກຄົນຈະໄດ້ມີສ່ວນຮ່ວມໃນກິດຈະກຳຂອງຊຸມຊົນຊາວບາຮາຍທົ່ວໂລກ.

- ສຳລັບພາກສ້າງສັນຂອງງານສະຫຼອງບຸນ 19 ວັນ, ຊ່ວງເວລານີ້ເປັນຊ່ວງເວລາຂອງຄວາມເປັນມິດ, ຄວາມມີນ້ຳໃຈແກ່ກັນແລະກັນ ແລະ ຄວາມຮັກ. ອາດຈະມີການຫຼິ້ນດົນຕີ, ການກ່າວສູນທອນພິດທີ່ຊ່ວຍຍົກລະດັບຈິດໃຈ, ການສະແດງສັ້ນໆໂດຍເດັກນ້ອຍ. ການສະແດງທີ່ສົ່ງເສີມວັດທະນະທັມທີ່ຄັດເລືອກມາເປັນຢ່າງດີ ເລົ່ານີ້ສາມາດນຳມາໃຊ້ໄດ້ ເພື່ອຊ່ວຍເພີ່ມຊີວິດຊີວາໃຫ້ກັບພາກນີ້ຂອງງານສະຫຼອງບຸນ 19 ວັນ.

- ງານສະຫຼອງບຸນ 19 ວັນເປັນເອກະລັກທີ່ໂດດເດັ່ນຂອງລະບົບບໍລິຫານຂອງສາສະໜາບາຮາຍ. ເປັນງານທີ່ລວມທັງດ້ານການອຸທິດຖະຫວາຍ, ການບໍລິຫານ ແລະ ການຮ່ວມສັງຄົມຂອງຊຸມຊົນເຂົ້າດ້ວຍກັນ. ແຕ່ລະດ້ານຂອງງານຄວນໄດ້ຮັບການເນັ້ນເຖິງຄວາມສຳຄັນເທົ່າໆກັນ, ເພາະຄວາມສຳເລັດຂອງງານສະຫຼອງບຸນ 19 ວັນແມ່ນຂຶ້ນຢູ່ກັບຄວາມສົມດູນທີ່ຖືກຕ້ອງຂອງທັງສາມ

ສ່ວນປະກອບນີ້. ໃນສານເຖິງບາຮາຍສາສະນິກະຊົນທົ່ວໂລກໃນເດືອນສິງຫາປີ 1989, ສະພາຍຸຕິທັມແຫ່ງສາກົນກ່າວວ່າ:

**"ລະບຽບຂອງໂລກແຫ່ງພຣະບາຮາອຸລລາຫ໌ ຫ້ອມລ້ອມທຸກໜ່ວຍຂອງສັງຄົມມະນຸດ; ລວບລວມຂະບວນການທາງຈິດວິນຍານ, ການບໍລິຫານ ແລະ ສັງຄົມຂອງຊີວິດເຂົ້າດ້ວຍກັນ ແລະ ຊີ້ແນວທາງໃຫ້ການສະແດງອອກຂອງມະນຸດໃນຮູບແບບຕ່າງໆ ໄປສູ່ການສ້າງສັນອາລະຍະທັມໃໝ່. ງານສະຫຼອງບຸນ 19 ວັນ ລວມເອົາທຸກແງ່ມຸມເລົ່ານີ້ໄວ້ທີ່ໜ່ວຍພື້ນຖານຂອງສັງຄົມ. ດັ່ງທີ່ກຳລັງດຳເນີນຢູ່ຕາມບ້ານ,ເມືອງ, ນະຄອນ; ງານສະຫຼອງນີ້ເປັນສະຖາບັນທີ່ຊາວບາຮາຍທັງໝົດເປັນສະມາຊິກ. ເປັນງານທີ່ມຸ່ງໝາຍສົ່ງເສີມຄວາມສາມັກຄີ, ການຮັບປະກັນຄວາມກ້າວໜ້າ ແລະ ສະໜັບສະໜູນຄວາມຜາສຸກ."[28]**

- ງານທີ່ມີຄວາມສຳຄັນຫຼາຍຄືກັບງານສະຫຼອງບຸນ 19 ວັນນີ້, ບໍ່ສາມາດຈັດກຽມຂຶ້ນຢ່າງລວບລັດຕັດຕອນໂດຍການສູດອະທິຖານ ແລະ ນັ່ງສະມາທິເທົ່ານັ້ນ, ສາສະນິກະຊົນແຕ່ລະຄົນຕ້ອງກຽມຈິດວິນຍານຂອງຕົນເອງໃຫ້ພ້ອມກ່ອນມາງານສະຫຼອງບຸນ 19 ວັນ ແລະ ຂະນະທີ່ຢູ່ໃນງານ, ທຸກຄົນຄວນຮ່ວມງານດ້ວຍຈິດໃຈ ແລະ ຄວາມຄິດ, ບໍ່ວ່າຈະໃນການອ່ານ ຫຼື ສູດພຣະວັດຈະນະ, ບໍ່ວ່າຈະໃນການລາຍງານຕໍ່ທີ່ປະຊຸມ, ການຮັບຄຳແນະນຳ ຫຼື ການນຳສະເໜີຄຳຄິດຄຳເຫັນ ຫຼື ໃນການເຮັດໜ້າທີ່ເປັນເຈົ້າພາບ ຫຼື ການເປັນຜູ້ຕ້ອນຮັບດ້ວຍຄວາມສົດໃສ ແລະ ຍິນດີ. ໃນສານສະບັບດຽວກັນກ່ຽວກັບບຸນ 19 ວັນ ຂອງສະພາຍຸຕິທັມແຫ່ງສາກົນ ຍັງກ່າວອີກວ່າ:

**"ປະເດັນສຳຄັນໃນການຈັດກຽມງານສະຫຼອງບຸນ 19 ວັນ ປະກອບດ້ວຍການຄັດເລືອກເອົາບົດພຣະວັດຈະນະທີ່ເໝາະສົມສຳລັບການອ່ານ, ການກຳນົດຜູ້ອ່ານທີ່ມີຄວາມຊຳນານໄວ້ລ່ວງໜ້າ ແລະ ການວາງຕົນຢ່າງເໝາະສົມທັງໃນການເປັນຜູ້ນຳສະເໜີການອຸທິດຖະຫວາຍ ແລະ ການເປັນຜູ້ຮັບຟັງ. ການເອົາໃຈໃສ່ສະພາບແວດລ້ອມທີ່ງານສະຫຼອງບຸນ 19 ວັນຈະຖືກຈັດຂຶ້ນ, ບໍ່ວ່າຈະໃນຮົ່ມ ຫຼື ກາງແຈ້ງ, ຍ່ອມມີຜົນຢ່າງຫຼວງຫຼາຍຕໍ່ຄວາມຮູ້ສຶກຂອງການຮ່ວມງານ. ຄວາມສະອາດ, ການຈັດບໍລິເວນໃຫ້ເໝາະສົມ ແລະ ງົດງາມເລົ່ານີ້ລ້ວນແຕ່ມີຄວາມສຳຄັນ. ການຕົງຕໍ່ເວລາກໍ່ເປັນມາດຖານວັດແທກຢ່າງໜຶ່ງຂອງການກະກຽມງານທີ່ດີ.**

**"ໂດຍສ່ວນຕົວ, ຄວາມສຳເລັດຂອງງານສະຫຼອງບຸນ 19 ວັນ ແມ່ນຂຶ້ນຢູ່ກັບຄຸນນະພາບຂອງການກະກຽມງານ ແລະ ການມີສ່ວນຮ່ວມຂອງທຸກຄົນ. ທ່ານນາຍຜູ້ເປັນທີ່ຮັກໄດ້ໃຫ້ຄຳແນະນຳຕໍ່ໄປນີ້: ຈົ່ງໃຫ້ຄວາມສຳຄັນແກ່ງານສະຫຼອງບຸນ 19 ວັນໃຫ້ຫຼາຍ ເພື່ອວ່າໃນໂອກາດເລົ່ານີ້ ຜູ້ເປັນທີ່ຮັກຂອງພຣະຜູ້ເປັນນາຍ ແລະ ບັນດາຍິງຮັບໃຊ້ຂອງພຣະຜູ້ຊົງກະລຸນາຈະຫັນໜ້າຂອງພວກເຂົາໄປຍັງອານາຈັກສະຫວັນ, ສູດພຣະວັດຈະນະ, ວິງວອນຂໍການຊ່ວຍເຫຼືອຈາກພຣະຜູ້ເປັນເຈົ້າ, ມີຄວາມຮັກແພງຍິນດີຕໍ່ກັນແລະກັນ ແລະ ເຕີບໂຕຂຶ້ນໃນຄວາມບໍລິສຸດ ແລະ ສັກສິດ ແລະ ໃນ**

**ຄວາມຢ້ານກົວພຣະຜູ້ເປັນເຈົ້າ ແລະ ໃນການຕໍ່ຕ້ານກິເລດ ແລະ ອັດຕາຂອງຕົນ. ດັ່ງນີ້, ພວກເຂົາຈະແຍກຕົນເອງອອກຈາກໂລກວັດຖຸ ແລະ ດຳດິ່ງລົງໄປໃນຄວາມສັດທາແຮງກ້າແຫ່ງຈິນວິນຍານ.'"**[29]

ຄືກັບທີ່ເຈົ້າເຄີຍກະທຳຜ່ານມາ, ເຈົ້າຄວນອ່ານທັມມະລິຂິດຫຼາຍໆຄັ້ງ ແລະ ປຶກສາຫາລືກັນໃນກຸ່ມຂອງເຈົ້າ ເພື່ອໃຫ້ເຈົ້າຮຽນຮູ້ທີ່ຈະເວົ້າໄດ້ໂດຍງ່າຍ. ແບບເຝິກຫັດຕໍ່ໄປນີ້ ຈະຊ່ວຍເຈົ້າໃຫ້ໄດ້ຮັບຂໍ້ມູນທີ່ເລິກເຊິ່ງເພີ່ມເຕີມກ່ຽວກັບຄວາມສຳຄັນຂອງງານສະຫຼອງບຸນ 19 ວັນ:

1. ພຣະບາຮາອຸລລາຫ໌ ຊົງໄດ້ໃຫ້ການຮັບຮອງຫຍັງກັບພວກເຮົາ ທີ່ບົ່ງບອກລັກສະນະຂອງທີ່ຢູ່ອາໄສທຸກແຫ່ງທີ່ພວກເຮົາລວມຕົວກັນ, ຮ່ວມກັນສັນລະເສີນ ແລະ ຖວາຍພຣະກຽດຕິຄຸນແດ່ພຣະຜູ້ເປັນເຈົ້າ?

   ________________________________________

   ________________________________________

   ________________________________________

2. ໃນພຣະທັມມະລິຂິດທີສອງຂ້າງເທິງ, ພຣະບາຮາອຸລລາຫ໌ຊົງບອກພວກເຮົາວ່າ, ເມື່ອພວກເຮົາມາລວມກັນເພື່ອການຊຸມນຸມຂອງກອງປະຊຸມຕ່າງໆ, ພວກເຮົາຄວນເວົ້າຈາ ________________ ແລະດ້ວຍ____________________ແລະອ່ານ____________________________________; ເພື່ອຄວາມຮັກໃນຖ້ອຍຄຳຂອງພຣະຜູ້ເປັນເຈົ້າ____________________________________.
3. ໃນຖ້ອຍຄຳຂອງພຣະອັບດຸລບາຮາທີ່ແນະນຳໃຫ້ພວກເຮົາຈັດການຊຸມນຸມເພື່ອຂັບຂານ ແລະ ສູດອະທິຖານເປັນທ່ວງທຳນອງຈາກຄຳສອນສະຫວັນວ່າ:

   - ປະເທດທີ່ພວກເຮົາອາໄສຢູ່ອາດຈະໄດ້ຮັບ ____________________________________
   - ຜືນແຜ່ນດິນທີ່ພວກເຮົາອາໄສຢູ່ອາດກາຍເປັນ ___________________________________

   ________________________________________

4. ປະຕິທິນບາຮາຍທັງໝົດມີຈັກເດືອນ?______________________________________
5. ເດືອນໜຶ່ງມີຈັກວັນ?______________________________________________
6. ການຊຸມນຸມພິເສດຫຍັງທີ່ຊາວບາຮາຍຈັດຂຶ້ນເດືອນລະຄັ້ງ? __________________________
7. ສ່ວນປະກອບສາມພາກຂອງງານສະຫຼອງບຸນ 19 ວັນມີຫຍັງແດ່?

   ________________________________________

   ________________________________________

8. ທັງສາມພາກຂອງງານສະຫຼອງບຸນ 19 ວັນ ຕ້ອງຈັດຂຶ້ນລຽງຕາມລຳດັບຫຼືບໍ່? ______________
9. ພາກອຸທິດຖະຫວາຍຂອງງານສະຫຼອງບຸນ 19 ວັນມີຈຸດປະສົງຫຍັງ? ____________________

______________________________________________________________

______________________________________________________________

______________________________________________________________

10. ພາກການບໍລິຫານຂອງງານສະຫຼອງບຸນ 19 ວັນມີຈຸດປະສົງຫຍັງ? ____________________

______________________________________________________________

______________________________________________________________

______________________________________________________________

11. ພາກການສ້າງສັນຂອງງານສະຫຼອງບຸນ 19 ວັນມີຈຸດປະສົງຫຍັງ? ____________________

______________________________________________________________

______________________________________________________________

12. ຫົວຂໍ້ໃດແດ່ເປັນຫົວຂໍ້ທີ່ເໝາະສົມ ສຳລັບການປຶກສາຫາລືໃນລະຫວ່າງພາກການບໍລິຫານ ຂອງງານສະຫຼອງບຸນ 19 ວັນ?

______ຄວາມຕ້ອງການທາງດ້ານການເງິນຂອງການດຳເນີນງານຂອງຊຸມຊົນ

______ຄະແນນຂອງກິລາບານເຕະທີມຊາດ

______ວິທີແກ້ບັນຫາຂໍ້ຂັດແຍ່ງລະຫວ່າງສະມາຊິກສອງຄົນໃນຊຸມຊົນ

______ຄວາມກ້າວໜ້າຂອງຊັ້ນຮຽນເດັກນ້ອຍບາຮາຍໃນຊຸມຊົນ

______ຄວາມໝາຍຂອງຂໍ້ຄວາມຈາກທັມມະລິຂິດໜຶ່ງ ໃນສະມາຊິກຂອງຊຸມຊົນກຳລັງສຶກສາໃນຊ່ວງຕົ້ນອາທິດ

______ຄວາມມີຊີວິດຊີວາຂອງໂຄງການເຍົາວະຊົນໃນຊຸມຊົນ

______ໂອກາດໃນການເຮັດວຽກໃນທ້ອງຖິ່ນທີ່ເປີດກວ້າງສຳລັບຄົນໜຸ່ມສາວ

______ການສະໜັບສະໜູນຊຸມຊົນໃຫ້ສາມາດຮັບໃຊ້ໂຄງການເພື່ອກຸ່ມເຍົາວະຊົນທີ່ຍັງເປັນເລື່ອງຫຍຸ້ງຍາກ

______ຢ້ຽມຢາມຜູ້ປົກຄອງເດັກ ແລະ ໂຄງການການສຶກສາສິ່ງເສີມໂດຍສະຖາບັນ

______ການເສີມສ້າງຄຸນລັກສະນະການຂອງການສູດອະທິຖານໃຫ້ແກ່ຊຸມຊົນ

______ຕາຕະລາງລາຍການທີ່ອອກອາກາດທາງໂທລະພາບ

______ຂໍ້ມູນເລີກເຊິ່ງທີ່ໄດ້ຮັບກ່ຽວກັບການເສີມສ້າງບັນຍາກາດທີ່ມ່ວນຊື່ນ ແລະ ມີລະບຽບວິໄນຂອງການຮຽນກຸ່ມນ້ອຍ

______ການສະເຫຼີມສະຫຼອງວັນສັກສິດທີ່ກຳລັງຈະມາເຖິງ

______ການລິເລີ່ມປະຕິບັດການທາງສັງຄົມທີ່ເກີດຈາກຂະບວນການສ້າງຊຸມຊົນ

13. ຂໍໃຫ້ປຶກສາຫາລືກັນກ່ຽວກັບຄຳຖາມຕໍ່ໄປນີ້ໃນກຸ່ມຂອງເຈົ້າ. ເປັນຫຍັງຄວາມສົມດູນລະຫວ່າງສາມພາກຂອງງານສະຫຼອງບຸນ 19 ວັນຈຶ່ງມີຄວາມສຳຄັນ?
14. ຈົ່ງແລກປ່ຽນຄວາມຄິດເຫັນກັນໃນສອງຄຳຖາມຕໍ່ໄປນີ້:
   ກ) ເຈົ້າຈະກະກຽມຫຍັງແດ່, ຫາກວ່າເຈົ້າຈະຕ້ອງເປັນເຈົ້າພາບງານສະຫຼອງບຸນ 19 ວັນ?
   ຂ) ເຈົ້າຈະກະກຽມຕົວແນວໃດ, ຫາກວ່າເຈົ້າເປັນຜູ້ໄປຮ່ວມງານສະຫຼອງບຸນ 19 ວັນ?

## ຕອນທີ 13

ຄຳຖາມທີສອງທີ່ມັກເກີດຈະຂຶ້ນໃນການສົນທະນາກ່ຽວກັບສັດທາຄື ວິທີການທີ່ຊຸມຊົນບາຮາຍຕອບສະໜອງຄວາມຕ້ອງການທາງດ້ານການເງິນ. ປະເດັນຕໍ່ໄປນີ້ອາດຈະຊ່ວຍເຈົ້າຕອບຄຳຖາມດັ່ງກ່າວ:

- ເຄື່ອງມືທີ່ຊຸມຊົນບາຮາຍໃຊ້ເພື່ອເບິ່ງແຍງຄວາມຕ້ອງການທາງວັດຖຸຄືກອງທຶນບາຮາຍ ທີ່ບໍລິຫານໂດຍສະຖາບັນຂອງສາສະໜາໃນລະດັບຕ່າງໆ: ໃນລະດັບທ້ອງຖິ່ນ, ລະດັບຊາດ, ລະດັບທະວີບ ແລະ ລະດັບສາກົນ. ຊາວບາຮາຍເຊື່ອວ່າພວກເຂົາແຕ່ລະຄົນເປັນຜູ້ແບກຮັບຄ່າໃຊ້ຈ່າຍ ຂອງຄວາມພະຍາຍາມໃນການສົ່ງເສີມສັດທາຂອງພວກເຂົາ ແລະ ດ້ວຍເຫດນີ້, ກອງທຶນໄດ້ຮັບການສະໜັບສະໜູນຈາກສາສະນິກກະຊົນຂອງຊຸມຊົນເທົ່ານັ້ນ.

- ການບໍລິຈາກເງິນເຂົ້າກອງທຶນເປັນການກະທຳໂດຍສະໝັກໃຈ. ເປັນຄວາມລັບໃນແງ່ທີ່ເປັນເລື່ອງລະຫວ່າງບຸກຄົນ ແລະ ສະຖາບັນຂອງສາສະໜາ; ຊື່ຜູ້ບໍລິຈາກ ແລະ ຈຳນວນທີ່ບໍລິຈາກຈະບໍ່ມີການປະກາດ. ບໍ່ມີການສ້າງຄວາມກົດດັນແກ່ສາສະນິກກະຊົນໃຫ້ບໍລິຈາກ. ສະຖາບັນໃຫ້ຄວາມສົນໃຈໂດຍທົ່ວໄປຕໍ່ຊຸມຊົນ, ຄຳເຕືອນກ່ຽວກັບຄວາມສຳຄັນຂອງກອງທຶນ ແລະ ຊີ້ໃຫ້ເຫັນເຖິງຄວາມຕ້ອງການຂອງກອງທຶນ. ບໍ່ແມ່ນທຸກຄັ້ງທີ່ຊຸມຊົນຈະກຳນົດເປົ້າໝາຍຂອງການບໍລິຈາກຂຶ້ນດ້ວຍຕົນເອງ. ຈຳນວນເງິນທີ່ບໍລິຈາກຈະບໍ່ຖືກກຳນົດຕາຍຕົວ ຫຼື ຮ້ອງຂໍຈາກຂອງແຕ່ລະບຸກຄົນ. ມັນຂຶ້ນກັບການຕັດສິນໃຈຂອງບຸກຄົນເອງ ຕໍ່ກັບຄວາມເຂົ້າໃຈຂອງພວກເຂົາໃນຫຼັກທັມຂອງການມີສ່ວນຮ່ວມວ່າເຂົາຈະບໍລິຈາກໄດ້ຫຼາຍໜ້ອຍພຽງໃດ.

- ອາລິຍະທັມທີ່ພວກເຮົາພະຍາຍາມສ້າງຈະມີຄວາມຮຸ່ງເຮືອງ, ທັງທາງວັດຖຸ ແລະ ທາງຈິດວິນຍານ. ຄວາມມັ່ງຄັ່ງເປັນສິ່ງທີ່ຍອມຮັບໄດ້ ກໍຕໍ່ເມື່ອກົງກັບເງື່ອນໄຂບາງປະການເທົ່ານັ້ນ. ພວກເຮົາຄວນໄດ້ຮັບ ໂດຍຜ່ານການເຮັດວຽກທີ່ຊື່ສັດ. ພວກເຮົາຄວນໃຊ້ຈ່າຍເພື່ອປະໂຫຍດຂອງມະນຸດຊາດທັງມວນ. ຊຸມຊົນຄວນໄດ້ຮັບການຍົກລະດັບ, ເປັນທີ່ຍອມຮັບບໍ່ໄດ້ທີ່ມີພຽງ 2-3 ຄົນຮັ່ງມີ

ມະຫາສານ, ໃນຂະນະທີ່ຄົນສ່ວນໃຫຍ່ຕ້ອງການສິ່ງຈຳເປັນໃນຊີວິດ. ພຣະບາຮາອຸລລາຫ໌ ຊົງບອກແກ່ພວກເຮົາວ່າ:

**"ມະນຸດທີ່ດີ ຄື ຜູ້ທີ່ສ້າງລາຍໄດ້ດ້ວຍການຫາລ້ຽງຊີບ ແລະ ການໃຊ້ຈ່າຍເພື່ອຕົນເອງ ແລະ ຍາດພີ່ນ້ອງຂອງເຂົາດ້ວຍຄວາມຮັກທີ່ມີຕໍ່ພຣະຜູ້ເປັນເຈົ້າ, ພຣະຜູ້ເປັນນາຍແຫ່ງພິພົບທັງປວງ."**[30]

**"...ເຈົ້າຕ້ອງໃຫ້ໝາກຜົນທີ່ດີ ແລະ ໜ້າອັດສະຈັນແກ່ຕົນເອງ ແລະ ຜູ້ອື່ນ, ເພື່ອວ່າພວກເຈົ້າ ແລະ ຜູ້ອື່ນໆ ອາດຈະໄດ້ປະໂຫຍດຈາກສິ່ງນັ້ນ. ດັ່ງນັ້ນ, ຈຶ່ງເປັນໜ້າທີ່ຂອງທຸກຄົນທີ່ຈະມີສ່ວນຮ່ວມໃນງານຫັດຖະກຳ ແລະ ອາຊີບຕ່າງໆ, ເພາະຄວາມເລິກລັບຂອງຄວາມມັ່ງຄັ່ງແມ່ນຢູ່ທີ່ນັ້ນ. ໂອ ມະນຸດແຫ່ງຄວາມເຂົ້າໃຈ!"**[31]

ແລະພຣະອັບດຸລບາຮາຊົງອະທິບາຍໄວ້ວ່າ:

**"ຄວາມມັ່ງຄັ່ງເປັນສິ່ງທີ່ໜ້າຍົກຍ້ອງຫຼາຍທີ່ສຸດ, ທີ່ປະທານໃຫ້ປະຊາກອນທັງໝົດທີ່ຮັ່ງມີ. ເຖິງແມ່ນດັ່ງນັ້ນກໍຕາມ, ມີພຽງບໍ່ເທົ່າໃດຄົນທີ່ມີຄວາມຮັ່ງຢ່າງລົ້ນເຫຼືອ ໃນຂະນະທີ່ຄົນອື່ນອົດຢາກຍາກຈົນຢູ່ ແລະ ບໍ່ມີໝາກຜົນ ຫຼື ຜົນປະໂຫຍດໃດທີ່ເກີດຂຶ້ນຈາກຄວາມມັ່ງຄັ່ງນັ້ນ, ຈະມີພຽງແຕ່ໜີ້ສິນທີ່ມີຕໍ່ຜູ້ຄອບຄອງເທົ່ານັ້ນ."**[32]

- ໃນການສ້າງສັງຄົມທີ່ປາສະຈາກຄວາມອະຍຸຕິທັມ ແລະ ຄວາມທຸກຍາກ, ພວກເຮົາທຸກຄົນຕ້ອງເອື້ອເຟື້ອເພື່ອແຜ່ ແລະ ຮູ້ເຖິງການໃຫ້. ແມ່ນວ່າຊັບພະຍາກອນທາງການເງິນຂອງພວກເຮົາຈະມີບໍ່ຫຼາຍ, ພວກເຮົາກໍຄວນທີ່ຈະປະກອບສ່ວນບາງຢ່າງເພື່ອຄວາມກ້າວໜ້າຂອງມະນຸດຊາດ, ເພື່ອຄວາມມັ່ງຄັ່ງທີ່ແທ້ຈິງ ຈະເປັນທີ່ຍອມຮັບໂດຍການໃຫ້ເທົ່ານັ້ນ. ຄວາມເອື້ອເຟື້ອເຜື່ອແຜ່ເປັນຄຸນລັກສະນະຂອງຈິດວິນຍານຂອງມະນຸດ; ບໍ່ມີຫຍັງກ່ຽວຂ້ອງກັບສະຖານະການທາງວັດຖຸຂອງພວກເຮົາ. ໃນພຣະວັດຈະນະແຫ່ງຄວາມລີ້ລັບ, ພຣະບາຮາອຸລລາຫ໌ ຊົງກ່າວໄວ້ວ່າ:

**"ການໃຫ້ ແລະ ຄວາມເອື້ອເຟື້ອແມ່ນເປັນຄຸນລັກສະນະຂອງເຮົາພຣະອົງ; ທີ່ຢູ່ໃນຕົວຂອງເຂົາປະດັບປະດາຕົວເຂົາດ້ວຍຄຸນນະທັມຂອງເຮົາ."**[33]

- ພວກເຮົາຄວນຈົດຈຳໄວ້ວ່າ ແຫຼ່ງທີ່ມາທີ່ແທ້ຈິງຂອງຄວາມມັ່ງຄັ່ງໃດກໍຕາມທີ່ພວກເຮົາມີຄື ພຣະຜູ້ເປັນເຈົ້າ, ພຣະຜູ້ຊົງອຸດົມພອນ. ພຣະອົງຊົງຈັດຫາວິທີການດຳລົງຢູ່ຂອງພວກເຮົາ, ພຣະອົງຊົງເຮັດໃຫ້ເປັນໄປໄດ້ ເພື່ອຄວາມກ້າວໜ້າຂອງພວກເຮົາ. ເມື່ອພວກເຮົາບໍລິຈາກໃຫ້ກັບກອງທຶນ,

ການໃຊ້ຈ່າຍຂອງພວກເຮົາເພື່ອສາສະໜາ, ເປັນສ່ວນໜຶ່ງຂອງສິ່ງທີ່ພຣະອົງຊົງປະທານໃຫ້ແກ່ພວກເຮົາ. ສຳລັບສາສະນິກກະຊົນບາຮາຍແລ້ວ, ການບໍລິຈາກບໍ່ແມ່ນພຽງແຕ່ເລື່ອງຄວາມເອື້ອເຟື້ອເທົ່ານັ້ນ; ນອກຈາກນີ້ຍັງເປັນຄວາມເພິ່ງພໍໃຈທາງຈິດວິນຍານ ແລະ ເປັນຄວາມຮັບຜິດຊອບທີ່ສູງສົ່ງຂອງບຸກຄົນດ້ວຍ. ຜູ້ພິທັກສາສະໜາ ໃຫ້ຄຳແນະນຳແກ່ພວກເຮົາວ່າ:

**"ພວກເຮົາຕ້ອງເປັນຄືກັບນ້ຳພຸ ຫຼື ລະດູໃບໄມ້ປົ່ງ ທີ່ເຮັດຕົນເອງຫວ່າງເປົ່າຈາກທຸກສິ່ງທັງໝົດຕະຫຼອດເວລາ ແລະ ຖືກເຕີມຢ່າງຕໍ່ເນື່ອງຈາກແຫຼ່ງທີ່ເບິ່ງບໍ່ເຫັນ. ເພື່ອການໃຫ້ຢ່າງຕໍ່ເນື່ອງສຳລັບປະໂຫຍດແກ່ເພື່ອນມິດຂອງພວກເຮົາ, ໂດຍປາສະຈາກຄວາມຢ້ານກົວຕໍ່ຄວາມຍາກຈົນ ແລະ ເພິ່ງພາຄວາມອຸດົມສົມບູນຂອງແຫຼ່ງທີ່ມາຂອງຄວາມມັ່ງຄັ່ງ ແລະ ຄວາມດີງາມທັງໝົດ - ສິ່ງນີ້ເປັນຄວາມລັບຂອງການດຳເນີນຊີວິດທີ່ຖືກຕ້ອງ."**[34]

ເຈົ້າຈະມີໂອກາດພິຈາລະນາແນວຄິດບາງຢ່າງທີ່ເລິກເຊິ່ງຫຼາຍຂຶ້ນ ຕາມລຳດັບຂອງຫຼັກສູດຕໍ່ໆໄປທີ່ໄດ້ກ່າວເຖິງຫົວຂໍ້ປັດໄຈທາງວັດຖຸ. ສຳລັບຕອນນີ້, ຂໍໃຫ້ເຈົ້າປຶກສາຫາລືກັນຄືກັບທີ່ຜ່ານມາກ່ຽວກັບເນື້ອຫາສາລະຂ້າງເທິງເທື່ອລະປະເດັນ ແລະ ເຮັດບົດເຝິກຫັດເພື່ອໃຫ້ເຈົ້າໄດ້ຮຽນຮູ້ທີ່ຈະສະແດງຄວາມຄິດເຫັນຢ່າງເປັນທຳມະຊາດ ແລະ ງ່າຍຂຶ້ນ:

1. ບົນພື້ນຖານຂອງພຣະທັມມະລິຂິດ, ຂໍໃຫ້ເຕີມລົງໃນຊ່ອງຫວ່າງປະໂຫຍກຂ້າງລຸ່ມນີ້:
   ກ. ພຣະບາຮາອຸລລາຫ໌ບອກພວກເຮົາວ່າ ພວກເຮົາຄວນສ້າງລາຍໄດ້ດ້ວຍ_______________ ແລະ ໃຊ້ຈ່າຍເພື່ອ_______________
   ຂ. ພວກເຮົາຄວນໃຫ້ໝາກຜົນ_______________ແລະ_______________ ແກ່ຕົວພວກເຮົາເອງ ແລະ ຄົນອື່ນໆ_______________
   ຄ. ພວກເຮົາທຸກຄົນຄວນ_____________ໃນງານ____________ ແລະ_____________, ເພາະ_____________________ຂອງ_____________________ແມ່ນຢູ່ໃນທີ່ນັ້ນ.
   ງ. ພຣະອັບດຸລບາຮາ ອະທິບາຍວ່າຄວາມມັ່ງຄັ່ງເປັນ_____________________________ທີ່ປະທານໃຫ້_____________________________ຮັ່ງມີ.
   ຈ. ຖ້າ_____________________________ ທີ່ມີ _____________________________ ໃນຂະນະທີ່________________________ຢູ່ ແລະ ບໍ່ມີ____________ຫຼື ____________ ໃດທີ່ເກີດຂຶ້ນຈາກ _______________ນັ້ນ, ຈະມີພຽງແຕ່___________ ທີ່ມີຕໍ່ຜູ້ຄອບຄອງເທົ່ານັ້ນ.

ສ. ພຣະບາຣາອຸລລາຊີງກ່າວວ່າ, "________________ແລະ ຄວາມ ___________________ ເປັນຄຸນລັກສະນະຂອງເຮົາພຣະອົງ; ທີ່ຢູ່ໃນຕົວຂອງເຂົາ _________________________ ຂອງເຮົາ."

ຊ. ແລະຜູ້ພິທັກສາສະໜາ ໄດ້ແນະນຳພວກເຮົາວ່າ ພວກເຮົາຕ້ອງເປັນຄືກັບ______________ ຫຼື__________________ທີ່ເຮັດໃຫ້ຕົນເອງ______________________ຈາກທຸກສິ່ງທັງໝົດ ຕະຫຼອດເວລາ ແລະ _____________ຢ່າງຕໍ່ເນື່ອງ______________________________

ຍ. ເພື່ອ_________________ຢ່າງຕໍ່ເນື່ອງສຳລັບ_________________________ຂອງພວກ ເຮົາ ໂດຍ_________________________________ ແລະ ເພິ່ງ ພາ_________________________ - ສິ່ງນີ້ເປັນຄວາມລັບຂອງການດຳເນີນຊີວິດທີ່ຖືກຕ້ອງ.

2. ຂໍໃຫ້ຂຽນລຳດັບແນວຄວາມຄິດຕາມການນຳສະເໜີຂ້າງເທິງ:

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

________________________________________________________________________

## ຕອນທີ 14

ເພື່ອຮັບຂໍ້ມູນທີ່ເລິກເຊິ່ງກ່ຽວກັບປະເພດຂອງການສົນທະນາທີ່ສາມາດໄຂຂໍ້ຂ້ອງໃຈ, ໃນບ້ານ ຫຼື ແຖວບ້ານໃກ້ຄຽງທີ່ເຕັມໄປດ້ວຍກິດຈະກຳ, ພວກເຮົາໄດ້ຕິດຕາມຄວາມພະຍາຍາມຂອງ ອາເລຈັນດຣາ,

ເຊິ່ງເປັນນັກຮຽນມະຫາວິທະຍາໄລຜູ້ໜຸ່ມນ້ອຍ. ໃນການຢ້ຽມຢາມຫຼາຍຄັ້ງ, ທີ່ໃຊ້ເວລາຫຼາຍອາທິດ, ລາວໄດ້ປຶກສາຫາລືຮ່ວມກັບຄອບຄົວຊານເຊັດຊ໌ຫຼາຍປະເດັນ, ທີ່ລາວຫວັງວ່າຈະຊ່ວຍເພີ່ມພູນຄວາມຮູ້ແຫ່ງຄວາມສັດທາແກ່ພວກເຂົາ ແລະ ເສີມສ້າງຄວາມມຸ່ງໝັ້ນຕໍ່ຄຳສອນທີ່ພວກເຂົານ້ອມຮັບ. ໃນທີ່ສຸດ, ກໍມາເຖິງເຫດການຂອງບີທຣິດສ໌, ຫຼານສາວຂອງຄອບຄົວຊານເຊັດຊ໌, ໄດ້ເຮັດໃຫ້ພວກເຮົາກວດສອບເຖິງການສົນທະນາອີກແບບໜຶ່ງ, ລະຫວ່າງຊາວໜຸ່ມສອງຄົນນີ້. ທັງສອງມີຄວາມກະຕືລືລົ້ນທີ່ຈະຮຽນຮູ້ວ່າພວກເຂົາຈະຮັບໃຊ້ແນວໃດໄດ້ແດ່ໃນຊຸມຊົນຂອງພວກເຂົາ. ໃນການດຳເນີນການຜ່ານເລື່ອງເລົ່າ ແລະ ໃນການເຮັດບົດເຝິກຫັດ, ພວກເຮົາເຫັນໄດ້ວ່າ ນອກເໜືອຈາກຄວາມຮູ້ທີ່ເພີ່ມຂຶ້ນໃນເລື່ອງທີ່ກ່ຽວຂ້ອງແລ້ວ, ຄຸນສົມບັດບາງຢ່າງ, ທັດສະນະຄະຕິ ແລະ ທັກສະ ເປັນສິ່ງທີ່ຈຳເປັນເພື່ອສະໜັບສະໜູນການສົນທະນາທີ່ພວກເຮົາກຳລັງພິຈາລະນານີ້.

ໃນຕອນນີ້ ແລະ ຕອນຖັດໄປຂອງບົດຮຽນໃນພາກນີ້, ພວກເຮົາຈະສຳຫຼວດຫົວຂໍ້ຫຼັກປະເພດອື່ນອີກ, ນັ້ນຄືຜູ້ຄົນທົ່ວໄປມັກຈະປຶກສາຫາລືກັນ ໃນລະຫວ່າງການຢ້ຽມຢາມຄອບຄົວທີ່ມີໄວໜຸ່ມເຂົ້າຮ່ວມໃນໂຄງການສຶກສາທີ່ສົ່ງເສີມໂດຍສະຖາບັນ. ຕາມທີ່ລະບຸໄວ້ແລ້ວວ່າ, ການສອນຊັ້ນຮຽນສຳລັບເດັກນ້ອຍ ແລະ ການນຳພາເຍົາວະຊົນໃນຖານະຜູ້ຊຸກຍູ້ເຍົາວະຊົນ, ເປັນການກະທຳຂອງການຮັບໃຊ້ທີ່ກ່າວເຖິງໃນຫຼັກສູດ ຕໍ່ໆໄປໃນເຫຼັ້ມ 3 ແລະ 5 ຕາມລຳດັບ. ເຈົ້າອາດຄຸ້ນເຄີຍ ຫຼື ບໍ່ຄຸ້ນເຄີຍກັບສອງໂຄງການທີ່ກ່ຽວຂ້ອງ, ຂຶ້ນຢູ່ກັບວ່າຕົວເຈົ້າເອງໄດ້ເຂົ້າຮ່ວມນຳໃນຊ່ວງຍັງເຍົາໄວຫຼືບໍ່.

ອັນດັບທຳອິດ, ໃຫ້ພວກເຮົາເບິ່ງເນື້ອຫາທີ່ມັກຈະເປັນພື້ນຖານສຳລັບການສົນທະນາ ທີ່ກຳລັງດຳເນີນຢູ່ກັບຄອບຄົວຂອງນ້ອງໆເຍົາວະຊົນ. ພວກເຮົາຈະຈິນຕະນາການວ່າເວລາຜ່ານໄປຊົ່ວໄລຍະໜຶ່ງ ໃນຕອນທີ່ພວກເຮົາອອກຈາກເລື່ອງເລົ່າຂອງພວກເຮົາ ແລະ ຈາກມື້ນັ້ນ, ຕອນນີ້ບີທຣິດຊ໌ກຳລັງຮຽນເຫຼັ້ມ 2. ອາເລຈັນດຣາໄດ້ຂໍໃຫ້ເພື່ອນຂອງລາວ ຮ່ວມກັນລົງຢ້ຽມຢາມຄອບຄົວຂອງເຍົາວະຊົນ ຈຳນວນຫຼາຍຫຼັງຄາເຮືອນນຳກັນ. ຜູ້ທີ່ກຳລັງຈະຈັດກຸ່ມເຍົາວະຊົນຂຶ້ນດ້ວຍການຊ່ວຍເຫຼືອຂອງລາວ. ເພື່ອນຂອງລາວຕອບຮັບຢ່າງກະຕືລືລົ້ນ.

ອາເລຈັນດຣາ ອະທິບາຍໃຫ້ບີທຣິດຊ໌ຟັງເຖິງສິ່ງທີ່ລາວຈິນຕະນາການ. ລາວແຈ້ງໃຫ້ເພື່ອນຂອງລາວຮູ້ວ່າ "ພວກເຮົາຈະເລີ່ມການຢ້ຽມຢາມແຕ່ລະຄັ້ງ ໂດຍການແນະນຳຜູ້ປົກຄອງໃຫ້ຮູ້ຈັກກັບຫຼັກສູດທີ່ລູກຊາຍ ຫຼື ລູກສາວຂອງພວກເຂົາສະແດງຄວາມສົນໃຈໃນການເຂົ້າຮ່ວມ ແລະ ໂດຍການນຳສະເໜີດັ່ງກ່າວ. ກໍຖືວ່າເປັນສ່ວນໜຶ່ງຂອງຂະບວນການສ້າງຊຸມຊົນທີ່ກ້າວໄປຂ້າງໜ້າໃນແຖວບ້ານໃກ້ຄຽງ, ຈາກນັ້ນພວກເຮົາຈະສຳຫຼວດແນວຄິດບາງຢ່າງກັບພວກເຂົາ ແລະ ແນວຄິດທີ່ເປັນສູນກາງຂອງຫຼັກສູດນີ້. ການຢ້ຽມຢາມຄັ້ງນີ້ຂອງພວກເຮົາຈະເປັນຄັ້ງທຳອິດໃນຫຼາຍໆຄັ້ງທີ່ຜ່ານມາ, ຄວາມຫວັງຂອງພວກເຮົາຄື: ໃນຂະນະ

ທີ່ການສົນທະນາດຳເນີນໄປຢ່າງກ້າວໜ້າຕາມການເວລາ, ຄອບຄົວຈະບໍ່ພຽງແຕ່ໃຫ້ການສະໜັບສະໜູນຕໍ່ກຸ່ມໃນຮູບແບບຕ່າງໆ, ແຕ່ກາຍເປັນຜູ້ສົ່ງເສີມການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນພາຍໃນຊຸມຊົນ."

ອາເລຈັນດຣາ ແລະ ບີທຣິດຊ໌ ສືບຕໍ່ການປຶກສາຫາລືໃນບາງປະເດັນທີ່ພວກເຂົາວາງແຜນຈະສົ່ງເສີມໃນແຕ່ລະຄອບຄົວ. ພວກເຂົາຕັດສິນໃຈຂຽນບັນທຶກແນວຄວາມຄິດທັງໝົດທີ່ຄິດວ່າສຳຄັນ, ໂດຍການກ່າວແຕ່ພຽງສອງສາມແນວຄວາມຄິດໃນການຢ້ຽມຢາມຄັ້ງທຳອິດ ແລະ ຈະກ່າວເຖິງສ່ວນທີ່ເຫຼືອໃນການສົນທະນາຄັ້ງຕໍ່ໄປ. ນີ້ຄືປະເດັນທີ່ພວກເຂົາພິຈາລະນາກ່ຽວກັບສັກກະຍະພາບຂອງເຍົາວະຊົນ:

- ໃນຊີວິດຂອງແຕ່ລະບຸກຄົນ, ໃນຊ່ວງເວລາສາມປີລະຫວ່າງ ອາຍຸ 12-15 ປີ ແມ່ນເປັນຊ່ວງທີ່ສຳຄັນຂອງການປ່ຽນແປງຈາກໄວເດັກສູ່ໄວຊາວໜຸ່ມ.

- ພວກເຮົາມັກເອີ້ນໄວນີ້ວ່າ "ເຍົາວະຊົນ" ພວກເຂົາບໍ່ແມ່ນເດັກນ້ອຍ ແລະ ຍັງບໍ່ທັນເປັນຊາວໜຸ່ມເທື່ອ.

- ໜ້າເສຍດາຍທີ່ພາບລັກຂອງເຍົາວະຊົນຖືກເຂົ້າໃຈຜິດ ທີ່ແຜ່ຂະຫຍາຍຢ່າງກວ້າງຂວາງວ່າເປັນຄົນໃຈຮ້ອນ, ດື້ດຶງ, ໝົກມຸ້ນ ແລະ ມີແນວໂນ້ມທີ່ຈະເກີດວິກິດຢ່າງຕໍ່ເນື່ອງ. ຢ່າງໃດກໍຕາມ, ພວກເຮົາເຫັນພວກເຂົາໃນມຸມມອງທີ່ແຕກຕ່າງກັນ. ເປັນຄວາມຈິງທີ່ວ່າໃນຊ່ວງເວລາສັ້ນໆຂອງຊີວິດ, ພວກເຮົາທຸກຄົນສຳຜັດກັບການປ່ຽນແປງຢ່າງວ່ອງໄວທັງທາງຮ່າງກາຍ, ອາລົມ ແລະ ຈິດໃຈ ແລະ ກໍແມ່ນເປັນຄວາມຈິງຄືກັນ, ເຊິ່ງເປັນຜົນໃຫ້ພວກເຮົາອາດສະແດງຄວາມດື້ດຶງ. ແຕ່ໃນຄວາມເປັນຈິງນີ້ແມ່ນເປັນຊ່ວງອາຍຸທີ່ມີສັກກະຍະພາບອັນສູງສົ່ງ ແລະ ມີສັນຍານຂອງຄວາມດີເລີດ.

- ເມື່ອບໍ່ດົນມານີ້, ພວກເຮົາເອງເຄີຍເປັນເຍົາວະຊົນ ແລະ ຍັງຈົດຈຳໄດ້ວ່າພວກເຮົາໄດ້ຮັບຜົນກະທົບຢ່າງໃດໂດຍການປ່ຽນແປງເຫຼົ່ານີ້. ບາງຄັ້ງພວກເຮົາກໍກ້າຫານ ແລະ ບາງຄັ້ງກໍມີຄວາມຢ້ານ. ບາງຄັ້ງພວກເຮົາກໍເຂົ້າກັບຄົນງ່າຍ ແລະ ບາງຄັ້ງກໍມີຄວາມນະອາຍຫຼາຍ. ພວກເຮົາມັກຈະສະແດງຄວາມປາດຖະໜາທີ່ຈະຢູ່ຄົນດຽວ, ບໍ່ດົນປານໃດກໍຫວັງວ່າຈະໄດ້ຮັບຄວາມສົນໃຈ. ພວກເຮົາຢາກຈະເຂົ້າໃຈວ່າມີຫຍັງແດ່ທີ່ພວກເຮົາເຮັດໄດ້ດີ, ມີພອນສະຫວັນ ແລະ ຄວາມສາມາດຫຍັງແດ່ທີ່ພວກເຮົາມີ ແລະ ມັນມີຄວາມສຳຄັນຕໍ່ພວກເຮົາຫຼາຍ ເມື່ອຄົນອື່ນເຫັນພວກເຮົາເປັນແບບໃດ ແລະ ພວກເຂົາຄິດແນວໃດຕໍ່ກັບແນວຄິດຕ່າງໆຂອງພວກເຮົາ.

- ສິ່ງສຳຄັນທີ່ຕ້ອງຕະໜັກຄື ພຶດຕິກຳແບບນີ້ເກີດຂຶ້ນພຽງຊົ່ວຄາວ. ໃນຊີວິດຂອງມະນຸດ, ຊ່ວງອາຍຸປະມານນີ້ທີ່ພະລັງບາງຢ່າງທາງສະຕິປັນຍາໄດ້ພັດທະນາຂຶ້ນມາຢ່າງວ່ອງໄວ. ພວກເຮົາກໍເລີ່ມສະແຫວງຫາຄຳຕອບຕໍ່ກັບຄຳຖາມພື້ນຖານທີ່ມີ. ພວກເຮົາໄດ້ວິເຄາະວ່າເກີດຫຍັງຂຶ້ນຢູ່ຮອບຕົວຂອງພວກເຮົາ ແລະ ຕັ້ງຄຳຖາມຫຼວງຫຼາຍກ່ຽວກັບສິ່ງທີ່ພວກເຮົາໄດ້ຮັບການສອນ. ແລະ ພວກເຮົາບໍ່ເຕັມໃຈທີ່ພວກເຮົາເຄີຍເຮັດຕາມສິ່ງທີ່ຜູ້ໃຫຍ່ບອກໃຫ້ພວກເຮົາເຮັດໂດຍອັດຕະໂນມັດ, ໂດຍສະເພາະຢ່າງຍິ່ງ, ເມື່ອພວກເຮົາເຫັນຄວາມຂັດແຍ້ງລະຫວ່າງຄຳເວົ້າ ແລະ ການກະທຳຂອງພວກເຂົາ.

- ຫາກຄົນໜຸ່ມສາວຕ້ອງໄດ້ຮັບການຊ່ວຍເຫຼືອ ໃນການໃຊ້ພະລັງທີ່ເກີດຂຶ້ນໃໝ່ຢ່າງມີປະສິດທິຜົນ, ສິ່ງທີ່ຈຳເປັນຢ່າງຍິ່ງກໍຄື, ຈະຕ້ອງຫຼີກລ້ຽງຈາກການປະຕິບັດຕໍ່ພວກເຂົາ ຄືກັບວ່າພວກເຂົາເປັນເດັກນ້ອຍ. ສິ່ງທີ່ເຫັນໄດ້ໃນທີ່ນີ້ຄືກັບທີ່ ພຣະອັບດຸລບາຮາ ອະທິບາຍເຖິງຊ່ວງເວລານີ້ວ່າ:

  **"ອີກບໍ່ດົນ, ເຂົາກໍກ້າວເຂົ້າສູ່ຊ່ວງໄວໜຸ່ມນ້ອຍ, ທີ່ນັ້ນເຂົາຈະໄດ້ສ້າງເງື່ອນໄຂ ແລະ ຄວາມຕ້ອງການຖືກແທນທີ່ ດ້ວຍຂໍ້ກຳນົດໃໝ່ໆທີ່ກ່ຽວຂ້ອງກັບຄວາມກ້າວໜ້າຂອງເຂົາ. ລະດັບຄວາມສາມາດໃນການສັງເກດຂອງເຂົາກວ້າງຂວາງ ແລະ ເລິກເຊິ່ງຂຶ້ນ; ຄວາມສະຫຼຽວສະຫຼາດຂອງເຂົາ, ຄວາມສາມາດໄດ້ຮັບການເຝິກຝົນ ແລະ ປຸກໃຫ້ຕື່ນຂຶ້ນ; ຂໍ້ຈຳກັດ ແລະ ສະພາບແວດລ້ອມໃນໄວເດັກ, ບໍ່ຈຳກັດພະລັງ ແລະ ຄວາມສຳເລັດຂອງເຂົາໄດ້ອີກຕໍ່ໄປ."[35]**

- ສະພາຍຸຕິທັມແຫ່ງສາກົນ, ເຊິ່ງເປັນສະຖາບັນປົກຄອງຂອງສາສະໜາບາຮາຍກ່າວເຖິງສິ່ງນີ້, ກ່ຽວກັບແນວທາງທີ່ພວກເຮົານຳມາໃຊ້ໃນການເຮັດວຽກກັບເຢົາວະຊົນວ່າ:

  **"ໃນຂະນະທີ່ແນວໂນ້ມຂອງໂລກສະແດງພາບຂອງກຸ່ມອາຍຸນີ້ວ່າເປັນໄວທີ່ມີບັນຫາ, ຫຼົງທາງຢູ່ໃນຄວາມສັບສົນຂອງການປ່ຽນແປງທາງຮ່າງກາຍ ແລະ ອາລົມ, ບໍ່ມີຄວາມຮັບຜິດຊອບ ແລະ ສົນໃຈແຕ່ຄວາມຕ້ອງການຂອງຕົນເອງ, ຊຸມຊົນບາຮາຍກັບເບິ່ງຄົນໃນໄວນີ້ວ່າ ມີແນວທາງການໃຊ້ພາສາທີ່ຖືກຍອມຮັບ ແລະ ມີຄວາມເດັດດ່ຽວ, ທີ່ກຳລັງດຳເນີນໄປໃນທິດທາງກົງກັນຂ້າມຢ່າງເຫັນໄດ້ຢ່າງຊັດເຈນ, ໃນການເບິ່ງເຫັນເຢົາວະຊົນເປັນຜູ້ທີ່ມີຄວາມບໍລິສຸດໃຈ, ຄວາມຮັບຮູ້ທີ່ແຫຼມຄົມກ່ຽວກັບຄວາມຍຸຕິທັມ, ຄວາມກະຕືລືລົ້ນທີ່ຈະຮຽນຮູ້ກ່ຽວກັບຈັກກະວານ ແລະ ຄວາມປາດຖະໜາທີ່ຈະມີສ່ວນຮ່ວມໃນການສ້າງໂລກທີ່ດີກວ່າ."[36]**

ຕໍ່ໄປອາເລຈັນດຣາ ແລະ ບິທຣິດຊ໌ ຫັນມາສົນໃຈຕໍ່ໂຄງການເສີມສ້າງພະລັງທາງຈິດວິນຍານ ແລະ ພະຍາຍາມລະບຸຄຸນສົມບັດບາງຢ່າງ:

- ກຸ່ມທີ່ມີອາຍຸລະຫວ່າງ 12-15 ປີ ເປັນກຸ່ມຂອງເພື່ອນໆ ເຊິ່ງພວກເຂົາສາມາດແບ່ງປັນຄວາມຄິດເຫັນຕ່າງໆຂອງເຂົານຳກັນ, ເຮັດວຽກເພື່ອໂຄງການຕ່າງໆ, ຫຼິ້ນກິລາແລະອື່ນໆ. ດ້ວຍເຫດນີ້, ໂຄງການຫຼັກສູດຈຶ່ງສ້າງຂຶ້ນຈາກແນວຄິດຂອງ "ກຸ່ມເຍົາວະຊົນ". ແຕ່ລະກຸ່ມນີ້ໄດ້ຮັບການນຳພາຂອງ "ຜູ້ຊຸກຍູ້ກຸ່ມເຍົາວະຊົນ" ເຊິ່ງມັກຈະເປັນຊາວໜຸ່ມທີ່ມີອາຍຸຫຼາຍກວ່າ, ເຊິ່ງເປັນເພື່ອນແທ້ຂອງສະມາຊິກ, ຊ່ວຍພວກເຂົາໃນການພັດທະນາຂີດຄວາມສາມາດຕ່າງໆ.

- ກຸ່ມມີການພົບປະກັນເປັນປະຈຳ, ໃນການປະຊຸມຂອງພວກເຂົາ, ເຍົາວະຊົນໄດ້ຮຽນຮູ້ທີ່ຈະສຳຫຼວດແນວຄວາມຄິດ ແລະ ສະແດງຄວາມຄິດອອກມາໂດຍບໍ່ຕ້ອງມີຄວາມຢ້ານກົວ ຫຼື ການຖືກເຍາະເຍີ້ຍ. ພວກເຂົາໄດ້ຮັບການຮຽນຮູ້ໃນການຟັງ, ການເວົ້າ, ໄຕ່ຕອງ, ວິເຄາະ, ຕັດສິນໃຈ ແລະ ປະຕິບັດຕໍ່ສິ່ງນັ້ນ.

- ພວກເຮົາຢູ່ໃນຊ່ວງເວລາທີ່ພະລັງດ້ານລົບອັນຫຼວງຫຼາຍທີ່ສົ່ງຜົນຕໍ່ວິທີການຄິດ ແລະ ການປະພຶດຂອງເຍົາວະຊົນ. ຜູ້ຊຸກຍູ້ກຸ່ມເຍົາວະຊົນ ທີ່ຈະຊ່ວຍພວກເຂົາໃນການຕໍ່ສູ້ກັບພະລັງເລົ່ານີ້, ບໍ່ພຽງແຕ່ເພື່ອປົກປ້ອງຕົວເອງຈາກຄວາມເສື່ອມໂຊມທາງສິລະທັມຂອງສັງຄົມເທົ່ານັ້ນ, ແຕ່ເພື່ອເຮັດວຽກສຳລັບໂລກໃຫ້ດີຂຶ້ນ.

- ໂຄງການນີ້ພະຍາຍາມທີ່ຈະຮັກສາພະລັງ ທີ່ມີຢູ່ໃນຈິດວິນຍານຂອງມະນຸດ. ພະລັງທີ່ເກີດຂຶ້ນໃນລະ ຫວ່າງຊ່ວງໄວໜຸ່ມຕອນຕົ້ນນັ້ນ ເລີ່ມປະກົດຕົວໃນລະດັບທີ່ສູງຂຶ້ນເລື້ອຍໆ. ສິ່ງສຳຄັນຢ່າງຍິ່ງຄື ພະລັງ ແຫ່ງຄວາມຄິດ ແລະ ການສະແດງອອກ. ໄວໜຸ່ມຕ້ອງພັດທະນາພາສາທີ່ຈຳເປັນເພື່ອສະແດງຄວາມຄິດທີ່ເລິກເຊິ່ງກ່ຽວກັບໂລກ ແລະ ເພື່ອເວົ້າໃຫ້ຊັດເຈນວ່າພວກເຂົາຕ້ອງການຈະເຫັນເຖິງການປ່ຽນແປງແນວໃດ.

- ເຍົາວະຊົນກະຕືລືລົ້ນທີ່ຈະໄຕ່ຕອງ ເຖິງຄວາມໝາຍຂອງແນວຄວາມຄິດພື້ນຖານ ທີ່ມີຕໍ່ຈຸດມຸ່ງໝາຍຂອງຊີວິດ. ຄວາມສຸກ, ຄວາມຫວັງ ແລະ ຄວາມເປັນເລີດ ເຊິ່ງເປັນຕົວຢ່າງໃນບາງສ່ວນ. ແຕ່ໜ້າເສຍດາຍທີ່ຄົນມັກກ່າວເຖິງແນວຄວາມຄິດເລົ່ານີ້ແບບແປະໆບາງໆ. ເພື່ອຮັບເອົາຄວາມເຂົ້າໃຈຢ່າງເລິກເຊິ່ງໃນຄວາມຄິດດັ່ງກ່າວນັ້ນ, ຂໍໃຫ້ຕະໜັກວ່າພວກເຂົາມີການສະແດງອອກຢ່າງ

ໃດໃນຊີວິດປະຈຳວັນ, ທີ່ສາມາດເສີມສ້າງຈິດໃຈທີ່ອ່ອນເຍົານີ້ ດ້ວຍໂຄງສ້າງທາງສິລະທັມທີ່ດີ ແລະ ເພື່ອຕ້ານທານຕໍ່ພະລັງດ້ານລົບຂອງສັງຄົມ.

- ການເຂົ້າໃຈແນວຄິດມີຄວາມສຳຄັນຕໍ່ພັດທະນາການທາງສະຕິປັນຍາ. ບາງຄັ້ງເຍົາວະຊົນປະເຊີນກັບຄວາມຍາກລຳບາກໃນໂຮງຮຽນ ເພາະພວກເຂົາຖືກຄາດຫວັງວ່າຈະໄດ້ຮຽນຮູ້ທີ່ຫຼວງຫຼາຍກ່ຽວກັບຂໍ້ມູນໃນບົດຮຽນນັ້ນໆ. ໂດຍບໍ່ໄດ້ຮັບຄວາມຊ່ວຍເຫຼືອຢ່າງພຽງພໍທີ່ຈະເຂົ້າໃຈແນວຄິດພື້ນຖານ , ຫຼັກສູດນີ້ຊ່ວຍກະຕຸ້ນໃຫ້ພວກເຂົາຄິດຢ່າງເລິກເຊິ່ງກ່ຽວກັບແນວຄວາມຄິດທາງສິລະທັມ, ທາງຄະນິດສາດ, ວິທະຍາສາດ ແລະອື່ນໆ ແລະ ສິ່ງນີ້ຈະຊ່ວຍປັບປຸງປະສິດທິພາບຂອງເຂົາຢ່າງສະໝ່ຳສະເໝີຢູ່ໃນໂຮງຮຽນດ້ວຍ.

- ເຍົາວະຊົນມີຄວາມປາດຖະໜາຢ່າງຍິ່ງທີ່ຈະທຳຄວາມເຂົ້າໃຈກັບສິ່ງຕ່າງໆ. ພວກເຂົາຕ້ອງການທີ່ຈະເຂົ້າໃຈສາເຫດຂອງສິ່ງທີ່ເກີດຂຶ້ນຮອບຕົວເຂົາ. ເພື່ອບັນລຸຕໍ່ສິ່ງນີ້, ພວກເຂົາຕ້ອງສາມາດເບິ່ງເຫັນບໍ່ພຽງແຕ່ດ້ວຍດວງຕາທາງກາຍະພາຍຂອງເຂົາເທົ່ານັ້ນ, ແຕ່ຍັງລວມເຖິງດວງຕາທາງຈິດວິນຍານດ້ວຍ. ດັ່ງນັ້ນ, ຈຸດມຸ່ງໝາຍທີ່ສຳຄັນຂອງໂຄງການນີ້ຄື ເພື່ອເພີ່ມປະສິດທິພາບຂອງການຮັບຮູ້ທາງສິລະທັມ ເຊັ່ນ: ຄວາມສາມາດໃນການຕະໜັກເຖິງພະລັງທາງຈິດວິນຍານ ແລະ ລະບຸຫຼັກການທາງຈິດວິນຍານໃນສະຖານະການຕ່າງໆທີ່ປະເຊີນໜ້າຢູ່.

- ໂຄງການສາມາດບັນລຸສູ່ຈຸດມຸ່ງໝາຍທີ່ຫຼາກຫຼາຍເຊັ່ນ: ການພັດທະນາສິລະທັມ, ການຮັບຮູ້ທາງຈິດວິນຍານ ແລະ ພະລັງແຫ່ງການສະແດງອອກ ດ້ວຍຊຸດຂອງບົດຄວາມໃນຫຼັກສູດ ເຊິ່ງໃນຫຼັກສູດນັ້ນ ຈະປະກອບດ້ວຍເລື່ອງລາວງ່າຍໆກ່ຽວກັບຊີວິດຂອງໄວໜຸ່ມສາວໃນສ່ວນຕ່າງໆຂອງໂລກ. ນອກຈາກນີ້ ຍັງໄດ້ສຶກສາຂໍ້ຄວາມໃນຫຼັກສູດເລົ່ານີ້ຮ່ວມກັນ, ປຶກສາຫາລືເນື້ອຫາຂອງບົດຮຽນ ແລະ ເຮັດບົດເຝິກຫັດນຳກັນ, ເຍົາວະຊົນໄດ້ມີສ່ວນຮ່ວມໃນການຫຼິ້ນກິລາ ແລະ ຮຽນຮູ້ກ່ຽວກັບງານສິລະປະ ແລະ ຫັດຖະກຳຕ່າງໆດ້ວຍ.

- ດ້ວຍຄວາມຊ່ວຍເຫຼືອຂອງຜູ້ຊຸກຍູ້ກຸ່ມເຍົາວະຊົນ, ກຸ່ມຮຽນພາກັນອອກແບບ ແລະ ພາກັນຈັດຕັ້ງປະຕິບັດໂຄງການຮັບໃຊ້, ເຊິ່ງເປັນອົງປະກອບຫຼັກຂອງໂຄງການນີ້, ຜ່ານໂຄງການເລົ່ານີ້ທີ່ພວກເຂົາຄິດຂຶ້ນມາ, ເຍົາວະຊົນຮຽນຮູ້ທີ່ຈະຄິດເຖິງຊຸມຊົນ ແລະ ຄວາມຕ້ອງການຂອງຊຸມຊົນ, ໃຫ້ຄຳປຶກສາ ແລະ ເຮັດວຽກຮ່ວມກັນ ແລະ ກັບຄົນອື່ນໆໃນຊຸມຊົນ.

• ຫຼັກສູດປະກອບດ້ວຍບົດຮຽນຫຼາຍບົດ; ແຕ່ລະບົດຈະມຸ່ງເນັ້ນໄປທີ່ຫົວຂໍ້ທີ່ຈຳເປັນ ເພື່ອການເສີມສ້າງພະລັງທາງຈິດວິນຍານຂອງເຍົາວະຊົນ. ຕົວຢ່າງໃນຫຼັກສູດເຫຼັ້ມທີ 1, ເຊິ່ງມີຫົວຂໍ້ກ່ຽວກັບ "ການຮັບຮອງ" ນັ້ນຄື: ພຣະຜູ້ເປັນເຈົ້າຊົງຮັບຮອງຄວາມພະຍາຍາມທີ່ພວກເຮົາເຮັດເພື່ອບັນລຸເປົ້າໝາຍອັນສູງສົ່ງ. ອີກຫຼັກສູດໜຶ່ງກ່ຽວກັບ "ຄວາມຫວັງ", ພວກເຮົາຈະຕ້ອງເບິ່ງໄປຍັງອະນາຄົດດ້ວຍຄວາມຫວັງແນວໃດ, ໃນເວລາທີ່ພວກເຮົາປະເຊີນກັບຍາກລຳບາກທີ່ສຸດ. ອີກຫຼັກສູດໜຶ່ງໄດ້ວິເຄາະເຖິງແນວຄິດຂອງ "ຄວາມເປັນເລີດ". "ຄວາມສຸກທັນສາ" ຄືຫົວຂໍ້ສຳຄັນຂອງເລື່ອງໜຶ່ງ, ໃນຂະນະທີ່ "ພະລັງແຫ່ງຖ້ອຍຄຳ" ກໍເປັນອີກຫົວຂໍ້ຂອງການໄຕ່ຕອງໃນຫຼັກສູດອີກເຫຼັ້ມໜຶ່ງ. ໃນບັນດາຫຼັກສູດທີ່ກ່າວເຖິງແນວຄິດທາງຄະນິດສາດ, ກໍເປັນເຫຼັ້ມໜຶ່ງທີ່ຈະສຳຫຼວດເຖິງນິດໄສຂອງການຈັດລະບຽບຈິດໃຈ. ໃນສ່ວນຂອງວິທະຍາສາດ, ກໍມີຂໍ້ຄວາມທີ່ມຸ່ງເນັ້ນໄປທີ່ການເບິ່ງແຍງເລື່ອງສຸຂະພາບຂອງຄົນໆໜຶ່ງ, ຮ່າງກາຍ, ຈິດໃຈ ແລະ ຈິດວິນຍານ. ແລະມີອີກຫຼາຍຢ່າງນັບບໍ່ຖ້ວນທີ່ເຍົາວະຊົນຈະໄດ້ຮຽນຮູ້ໃນຊ່ວງສາມປີນີ້.

ອາເລຈັນດຣາ ແລະ ບີທຣິດຊ໌ ຂຶ້ນແຜນການທີ່ຈະເອົາຫຼັກສູດສອງເຫຼັ້ມໄປນຳ ເພື່ອວ່າຜູ້ປົກຄອງຕ້ອງການທີ່ຈະເບິ່ງຈາກພວກເຂົາ. ຫາກເຈົ້າບໍ່ຄຸ້ນເຄີຍກັບຫຼັກສູດນີ້, ຈະເປັນການດີທີ່ທ່ານຈະໃຊ້ເວລາອ່ານເລື່ອງລາວຫຼາຍໆເລື່ອງ ເທົ່າທີ່ເຈົ້າຈະສາມາດເຮັດໄດ້. ເຊິ່ງວິທີນີ້ຈະຊ່ວຍເຈົ້າໃນການສົນທະນາທີ່ຫຼາກຫຼາຍໃນຊຸມຊົນໄດ້ດີຂຶ້ນ. ໃນເວລາດຽວກັນ, ຂໍໃຫ້ເຈົ້າສົນທະນາຢ່າງເຕັມທີ່ກັບຜູ້ເຂົ້າຮ່ວມຄົນອື່ນໆໃນກຸ່ມສຶກສາຂອງເຈົ້າກ່ຽວກັບແນວຄວາມຄິດທີ່ນຳສະເໜີຂ້າງເທິງ, ເຊິ່ງໄດ້ຮັບການປະຕິບັດທີ່ເລິກເຊິ່ງຫຼາຍໃນເຫຼັ້ມທີ 5. ຖ້າຫາກເຈົ້າໄດ້ສຶກສາປຶ້ມເຫຼັ້ມນັ້ນແລ້ວ, ເຈົ້າສາມາດຕັດສິນໃຈໃນການເຮັດໜ້າທີ່ເປັນຜູ້ຊຸກຍູ້ກຸ່ມເຍົາວະຊົນນັ້ນໄດ້, ເຈົ້າຈະຕ້ອງໄປຢ້ຽມຢາມຄອບຄົວຂອງສະມາຊິກກຸ່ມຢ່າງເປັນລະບົບ ແລະ ໄຕ່ຕອງຮ່ວມກັບພວກເຂົາເຖິງແນວຄວາມຄິດທີ່ຄ້າຍກັບຄວາມຄິດເລົ່ານີ້. ແຕ່ວ່າຕອນນີ້, ໃຫ້ເຈົ້າປະຕິບັດຄືກັບບີທຣິດຊ໌ ທີ່ເຈົ້າເອງຈະຕ້ອງຊ່ວຍຢ່າງຽງບ່າຽງໄຫຼ່ຮ່ວມກັບຄົນທີ່ມີປະສົບການ ໃນການຢ້ຽມຢາມສອງສາມຄອບຄົວຂອງເຍົາວະຊົນໃນຊຸມຊົນຂອງເຈົ້າ.

## ຕອນທີ 15

ໃນມື້ໃໝ່ຕໍ່ມາ, ອາເລຈັນດຣາ ແລະ ບີທຣິດຊ໌ ໄປຢ້ຽມຢາມຄອບຄົວຂອງເຍົາວະຊົນສາມຄົນເພື່ອຈະໃຫ້ເຂົ້າຮ່ວມກຸ່ມໃໝ່ທີ່ຈັດຂຶ້ນໃນແຖວບ້ານນັ້ນ. ບີທຣິດຊ໌ ມີຄວາມສຸກທີ່ໄດ້ເຫັນຄວາມກະຕືລືລົ້ນທີ່ບັນດາຜູ້ປົກຄອງ ມີສ່ວນຮ່ວມໃນການສົນທະນາກ່ຽວກັບໂຄງການເສີມພະລັງທາງຈິດວິນຍານຂອງເຍົາວະຊົນ. ໝົດຊ່ວງບ່າຍຂອງມື້ນັ້ນ, ລາວໝັ້ນໃຈວ່າລາວຕ້ອງຊ່ວຍອາເລຈັນດຣາໃນກຸ່ມເຍົາວະຊົນ ແລະ ຮຽນຮູ້ທີ່ຈະຮັບໃຊ້ເປັນຜູ້ຊຸກຍູ້ຂອງກຸ່ມເຍົາວະຊົນດ້ວຍຕົນເອງ, ຄາດວ່າພາຍໃນປີນີ້. ແນ່ນອນທີ່ສຸດ, ລາວຮູ້ດີ

ວ່າລາວຕ້ອງສຶກສາຫຼັກສູດສອງສາມເຫຼັ້ມໃນລະຫວ່າງນີ້ໃຫ້ຈົບເສຍກ່ອນ. ແຕ່ລາວໄດ້ຄິດມຸ່ງໝັ້ນໄວ້ລ່ວງໜ້າຕໍ່ຄວາມກ້າວໜ້າໃນການສຶກສາຂອງພວກເຂົາ ເຊັ່ນດຽວກັບບາດກ້າວທີ່ເຮັດໃຫ້ລາວມາໄກປານນີ້.

ດັ່ງນັ້ນ, ດ້ວຍຄວາມຊ່ວຍເຫຼືອ ແລະ ໃຫ້ກຳລັງໃຈຢ່າງຕໍ່ເນື່ອງຈາກອາເລຈັນດຣາ, ບິທຣິດຊ໌ ກ້າວໄປຂ້າງໜ້າໃນຫົນທາງແຫ່ງການຮັບໃຊ້. ໃຫ້ພວກເຮົາກັບມາເລົ່າເລື່ອງລາວຂອງລາວອີກຄັ້ງ, ຫຼັງຈາກສອງສາມເດືອນຜ່ານໄປ. ເມື່ອລາວກຳລັງຈະຈົບເຫຼັ້ມ 3, ຜູ້ອຳນວຍຄວາມສະດວກກຸ່ມຮຽນຂອງລາວໄດ້ຖາມມາຣິເບລຜູ້ເປັນຄູສອນຊັ້ນຮຽນເດັກນ້ອຍ, ໃຫ້ເຊີນ ບິທຣິດຊ໌ ແລະ ເພື່ອນຮ່ວມກຸ່ມຂອງລາວໃຫ້ຊ່ວຍລົງຢ້ຽມຢາມຜູ້ປົກຄອງຂອງເດັກນ້ອຍໃນຊັ້ນຮຽນຂອງລາວນຳ ເຊິ່ງເປັນຊັ້ນຮຽນທີ່ຫາກໍເລີ່ມໃໝ່ສຳລັບການສອນເດັກລະດັບ 1. ບິທຣິດຊ໌ ຮູ້ສຶກວ່າລາວໄດ້ຮຽນຮູ້ຢ່າງຫຼວງຫຼາຍຈາກການສຶກສາເຫຼັ້ມ 3 ແລະ ລາວກໍຮູ້ຈາກ ອາເລຈັນດຣາ ທີ່ໄດ້ເວົ້າເຖິງລາວປະມານສອງສາມຄັ້ງ, ຂໍ້ມູນທີ່ແທ້ຈິງທີ່ລາວໄດ້ຮັບຈາກຫຼັກສູດເຫຼັ້ມນີ້, ຈະຊ່ວຍເພີ່ມພູນຄວາມສາມາດຂອງລາວ ໃນການເຮັດໜ້າທີ່ເປັນຜູ້ຊຸກຍູ້ກຸ່ມເຍົາວະຊົນໄດ້ຄືກັນ.

ເມື່ອພວກເຂົາຢູ່ນຳກັນ, ມາຣິເບລບອກບິທຣິດຊ໌ວ່າ ພວກເຂົາຈະໄປຢ້ຽມຢາມແມ່ ແລະ ນ້ອງເອັມມາ "ລາວເປັນເດັກຍິງຕົວນ້ອຍໆທີ່ມັກຮຽນຮູ້ຫຼາຍ," ມາຣິເບລແບ່ງປັນວ່າ: "ຂ້າພະເຈົ້າເຄີຍໄດ້ໄປຢ້ຽມຢາມພໍ່ແມ່ລາວມາແລ້ວໜຶ່ງຄັ້ງ ແລະ ອະທິບາຍໃຫ້ພວກເຂົາຟັງເຖິງລັກສະນະຂອງຊັ້ນຮຽນເດັກນ້ອຍບາຮາຍ. ພວກເຂົາຍິນດີທີ່ໃຫ້ເອັມມາເຂົ້າຮ່ວມ. ແມ່ຂອງລາວສະແດງຄວາມສົນໃຈ ທີ່ໄດ້ຮັບຟັງຫຼາຍກ່ຽວກັບຊັ້ນຮຽນ ແລະ ຂ້າພະເຈົ້າສັນຍາວ່າ ຈະກັບໄປໂອ້ລົມນຳລາວອີກເລັກໜ້ອຍ ກ່ຽວກັບແນວຄິດດ້ານການສຶກສາໃນເນື້ອຫາທີ່ພວກເຮົາສອນ. ຂ້າພະເຈົ້າໄດ້ບັນທຶກສຳລັບຕົວຂ້າພະເຈົ້າເອງ "ຖ້າເຈົ້າຕ້ອງການ, ພວກເຮົາສາມາດມາຄົ້ນຄວ້າ ແລະ ສົນທະນາກ່ຽວກັບສິ່ງນີ້ນຳກັນ." ບິທຣິດຊ໌ ເຫັນດີນຳ, ນີ້ຄືຄຳເວົ້າທີ່ພວກເຂົາສົນທະນາກັນ:

- ກ່ອນອື່ນຂ້າພະເຈົ້າຈະບອກ ນາງ ມາຕິເນັດຊ໌ວ່າ ຂ້າພະເຈົ້າມີຄວາມສຸກພຽງໃດທີ່ເອັມມາຢູ່ໃນຊັ້ນຮຽນເດັກ ແລະ ຕັ້ງໃຈກ່າວເຖິງຄຸນສົມບັດທີ່ປະເສີດຂອງລາວ.

- ເບິ່ງຄືວ່າຈະເປັນການດີທີ່ສຸດທີ່ຈະເລີ່ມການສົນທະນາ ໂດຍການອ່ານຖ້ອຍຄຳຕໍ່ໄປນີ້ຈາກພຣະທັມມະລິຂິດຂອງ ພຣະບາຮາອຸລລາຫ໌:

**"ມະນຸດເປັນດັ່ງເໝືອງທີ່ອຸດົມໄປດ້ວຍອັນຍະມະນີທີ່ປະເມີນຄ່າບໍ່ໄດ້, ການສຶກສາເທົ່ານັ້ນທີ່ສາມາດເປີດເຜີຍສົມບັດອັນລ້ຳຄ່ານີ້ອອກມາ ແລະ ຊ່ວຍໃຫ້ມະນຸດໄດ້ຮັບປະໂຫຍດຈາກສົມບັດນັ້ນ."**[37]

- ຈາກນັ້ນ, ຂ້າພະເຈົ້າໄດ້ແບ່ງປັນຄວາມຄິດເຫັນໜ້ອຍໜຶ່ງ ກ່ຽວກັບຄຳເວົ້າທີ່ມີອິດທິພົນຕໍ່ຂ້າພະເຈົ້າໃນຖານະຜູ້ເປັນຄູສອນ. ຫົວໃຈຂອງຂ້າພະເຈົ້າເຕັມໄປດ້ວຍຄວາມສຸກ, ຂ້າພະເຈົ້າຈະເວົ້າວ່າ, ເມື່ອໃດກໍຕາມທີ່ຂ້າພະເຈົ້າເບິ່ງໄປຍັງເດັກນ້ອຍໃນຊັ້ນຮຽນ ແລະ ຄິດວ່າພວກເຂົາເປັນຄືກັນກັບເໝືອງທີ່ເຕັມໄປດ້ວຍອັນຍະມະນີລ້ຳຄ່າ. ທຸກຄົນມີສັກກະຍະພາບໃນການສະແດງຄຸນສົມບັດຈາກສະຫວັນ. ທຸກຄົນມີພອນສະຫວັນທີ່ສາມາດຖືກຄົ້ນພົບ ແລະ ພັດທະນາຂຶ້ນມາໄດ້. ທຸກຄົນສາມາດເຕີບໂຕຂຶ້ນຢ່າງມີຄຸນຄ່າເປັນພົນລະເມືອງດີຂອງສັງຄົມ ແລະ ມີສ່ວນຊ່ວຍໃຫ້ໂລກດີຂຶ້ນ.

- ຕໍ່ໄປຂ້າພະເຈົ້າຈະຍົກສອງສາມຕົວຢ່າງກ່ຽວກັບອັນຍະມະນີ ເຊິ່ງການສຶກສາຕ້ອງມຸ່ງໝັ້ນທີ່ຈະເປີດເຜີຍໃນຕົວເດັກທຸກຄົນ. ຂ້າພະເຈົ້າຈະກ່າວເຖິງພະລັງບາງຢ່າງຂອງຈິດໃຈ, ຄຳເວົ້າ, ເພື່ອຄົ້ນພົບກົດແຫ່ງທຳມະຊາດ, ເພື່ອຜະລິດຜົນງານສິລະປະທີ່ສວຍງາມ ແລະ ສະແດງຄວາມຄິດອັນສູງສົ່ງ. ເດັກນ້ອຍສາມາດເລີ່ມພັດທະນາພະລັງທັງໝົດນີ້ໄດ້, ຂ້າພະເຈົ້າຈະອະທິບາຍ, ເມື່ອພວກເຂົາໄດ້ຮັບການສຶກສາທີ່ເໝາະສົມ. ແຕ່ຈະເຮັດໃຫ້ສິ່ງນີ້ເກີດຂຶ້ນໄດ້ນັ້ນ, ພວກເຂົາຕ້ອງໄດ້ຮັບຄຸນລັກສະນະບາງຢ່າງຕັ້ງແຕ່ຕອນເຂົາຍັງນ້ອຍ. ຕົວຢ່າງເຊັ່ນ: ພວກເຂົາຕ້ອງຮຽນຮູ້ການມີຄວາມຕັ້ງໃຈ, ເຮັດວຽກງານໜັກເມື່ອມີຄວາມຈຳເປັນ ແລະ ເອົາໃຈໃສ່ໃນສິ່ງທີ່ພວກເຂົາເຮັດ. ພວກເຂົາຄວນເຕີບໂຕເປັນຜູ້ທີ່ຫ່ວງໃຍຕໍ່ຄວາມເປັນຢູ່ທີ່ດີຂອງຄົນອື່ນ ແລະ ຕ້ອງການທີ່ຈະຮັບໃຊ້ຊຸມຊົນຂອງຕົນ. ດ້ວຍເຫດນັ້ນ, ຈຶ່ງເປັນສິ່ງສຳຄັນທີ່ຈະຕ້ອງມີສ່ວນຮ່ວມໃນການພັດທະນາຄວາມເປັນຕົວເຂົາຕັ້ງແຕ່ອາຍຸຍັງນ້ອຍ.

- ຄົງຈະເໝາະສົມໃນຕອນນີ້, ທີ່ຈະຂໍໃຫ້ນາງມາຕິເນັດຊ໌ແບ່ງປັນຄວາມຄິດບາງຢ່າງແກ່ພວກເຮົາກ່ຽວກັບເລື່ອງທີ່ລາວຢາກໃຫ້ລູກສາວຂອງລາວເປັນຄົນປະເພດໃດ. ຄຸນລັກສະນະຫຍັງແດ່ທີ່ລາວຄິດວ່າມີຄວາມສຳຄັນທີ່ເຮັມມາຄວນມີ?

- ໃນບັນດາຄຸນລັກສະນະທີ່ລາວກ່າວເຖິງ, ແນ່ນອນ, ບາງຢ່າງນັ້ນ, ຈະຕ້ອງຂຶ້ນຢູ່ນຳຄຸນລັກສະນະທາງທັມວ່າ: ຄຸນລັກສະນະທາງທັມປະເພດໃດຈະເປັນຫົວຂໍ້ທີ່ຈະນຳສະເໜີໃນຄັ້ງຕໍ່ໄປ. ມີຄຸນລັກສະນະບາງຢ່າງທີ່ຄົນໆໜຶ່ງຄວນມີ, ເຊິ່ງຂ້າພະເຈົ້າຈະບອກວ່ານັ້ນແມ່ນເປັນພື້ນຖານຂອງການດຳລົງຢູ່ຂອງມະນຸດ. ພວກເຂົາເປັນຂອງຈິດວິນຍານຂອງມະນຸດ. ພວກເຮົາພັດທະນາພວກເຂົາໄດ້ໂດຍການພັດແວ່ນແຍງແຫ່ງຫົວໃຈຂອງພວກເຮົາ ເພື່ອທີ່ຈະສາມາດສ່ອງສະທ້ອນເຖິງຄຸນລັກສະນະຂອງພຣະຜູ້ເປັນເຈົ້າໄດ້. ຕໍ່ກັບຄຸນລັກສະນະທາງທັມເລົ່ານີ້ ທີ່ພວກເຮົາໄດ້ກ່າວອ້າງວ່າເປັນຄຸນສົມບັດທາງທັມ ແລະ ບົດຮຽນທີ່ພວກເຮົາສອນໃນຊັ້ນຮຽນສຳລັບລະດັບທີ 1, ສ່ວນໃຫຍ່ແມ່ນເນັ້ນໃສ່ຄຸນລັກສະນະເລົ່ານີ້.

- ຂ້າພະເຈົ້າຄິດວ່າ ຂ້າພະເຈົ້າຈະອະທິບາຍເຖິງຄຸນລັກສະນະທາງທັມບາງຢ່າງທີ່ກ່າວໄວ້ໃນບົດຮຽນສຳລັບເດັກນ້ອຍລະດັບທີ 1 ທີ່ຢູ່ໃນເຫຼັ້ມ 3 ແລະ ແບ່ງປັນພຣະວັດຈະນະທີ່ກ່ຽວຂ້ອງໃຫ້ກັບລາວ. ຂ້າພະເຈົ້າອະທິບາຍວ່າ ເອັມມາຈະທ່ອງຈຳພຣະວັດຈະນະເລົ່ານີ້ ແລະ ລາວສາມາດບອກລູກສາວຂອງລາວໃຫ້ທ່ອງສູ່ລາວຟັງ, ເຊັ່ນດຽວກັບບົດອະທິຖານທີ່ລາວຈະໄດ້ຮຽນ:

  - ຄວາມຮັກ:

  **"ໂອ ມິດສະຫາຍ! ໃນອຸດທະຍານແຫ່ງຫົວໃຈຂອງເຈົ້ານັ້ນ, ຈົ່ງຢ່າໄດ້ປູກສິ່ງອື່ນໃດນອກຈາກກຸຫຼາບແຫ່ງຄວາມຮັກ."[38]**

  - ຄວາມຍຸຕິທັມ:

  **"ຈົ່ງຍ່າງໄປໃນວິຖີທາງແຫ່ງຄວາມຍຸຕິທັມເພາະວິຖີທາງນີ້ ຄືທາງຊື່ຢ່າງແທ້ຈິງ."[39]**

  - ວາຈາສັດຊື່:

  **"ວາຈາທີ່ສັດຊື່ເປັນຮາກຖານຂອງຄຸນນະທັມຂອງມະນຸດ."[40]**

  - ຄວາມສຸກ:

  **"ໂອບຸດແຫ່ງມະນຸດ! ຈົ່ງຊື່ນຊົມຍິນດີໃນຄວາມຍິນດີແຫ່ງຫົວໃຈຂອງເຈົ້າ, ເພື່ອເຈົ້າຈະໄດ້ຄູ່ຄວນທີ່ຈະໄດ້ພົບກັບເຮົາ ແລະ ສະທ້ອນຄວາມງາມຂອງເຮົາອອກມາ."[41]**

ທັງ ມາຣິເບລ ແລະ ບີທຣິດຊ໌ ຕັດສິນໃຈຕໍ່ກັບແນວຄິດຂ້າງເທິງວ່າເໝາະສົມສຳລັບການຢ້ຽມຢາມໃນຄັ້ງ ໜຶ່ງ. ບໍ່ດົນເຈົ້າເອງກໍຈະສຶກສາຕໍ່ໄປໃນເຫຼັ້ມ 3 ແລະ ຈະໄດ້ມີໂອກາດໄຕ່ຕອງກ່ຽວກັບ ຫຼັກສີລະທັມບາງປະການ ທີ່ກຳນົດຮູບແບບໃນຫຼັກສູດຣູຮີຕໍ່ໃນໂຄງການທົກປີ ສຳລັບການສຶກສາທາງຈິດວິນຍານຂອງເດັກ. ກ່ອນໜ້ານັ້ນ, ຫາກເຈົ້າໄດ້ມີໂອກາດໄປຢ້ຽມຢາມພໍ່ແມ່ຂອງສອງສາມຄົນຮ່ວມກັບຄູປະຈຳຊັ້ນຮຽນເດັກ ນ້ອຍ, ແນວຄວາມຄິດທີ່ລະບຸໄວ້ນີ້ອາດຈະຊ່ວຍເຈົ້າໄດ້ ແລະ ເຈົ້າຄວນປຶກສາຫາລືໃນເທື່ອລະປະເດັນໃນກຸ່ມສຶກສາຂອງເຈົ້າ.

## ຕອນທີ 16

ຕອນທີ່ຜ່ານມາ, ພວກເຮົາໄດ້ອ່ານບົດຄວາມຂອງພຣະອັບດຸລບາຮາທີ່ກ່າວໄວ້ວ່າ: "ສາຍພົວພັນທີ່ແໜ້ນແຟ້ນຫຼາຍຂຶ້ນເທົ່າໃດ; ກໍຈະເພີ່ມຄວາມສາມັກຄີ, ຄວາມເປັນອັນໜຶ່ງອັນດຽວໃນໝູ່ມະນຸດ, ກໍຈະເປັນພະລັງແຫ່ງການສ້າງສັນ ແລະ ຄວາມສຳເລັດໃນທຸກກິດຈະກຳຂອງມະນຸດ." ສະພາຍຸຕິທັມແຫ່ງສາກົນບອກພວກເຮົາວ່າ, ນັ້ນຄືການທີ່ໄດ້ລົງຢ້ຽມຢາມບ້ານຕ່າງໆ ແລະ ການສົ່ງຄຳເຊື້ອເຊີນໄປຫາພວກເຂົາຈະຂະຫຍາຍຂຶ້ນເທົ່ານັ້ນ: "ການສ້າງຄວາມສຳພັນທາງຈິດວິນຍານໃນບັນດາຍາດພີ່ນ້ອງນັ້ນ ຈະປະ

ຄັບປະຄອງຄວາມຮູ້ສຶກທີ່ດີຂອງຊຸມຊົນ."  ດັ່ງນັ້ນ, ພວກເຮົາຈຶ່ງບໍ່ຄວນປະໝາດ, ຜົນຂອງການປະຕິບັດນີ້ຕໍ່ກັບວັດທະນະທັມຂອງຊຸມຊົນທີ່ກຳລັງເຕີບໂຕຂຶ້ນຂອງພວກເຮົາ.

ໃນຫຼາຍຕອນກ່ອນໜ້ານີ້ພວກເຮົາໄດ້ເຫັນເຖິງ ບົດສົນທະນາທີ່ຫຼາກຫຼາຍຢ່າງຊັດເຈນ ທີ່ສາມາດເກີດຂຶ້ນລະຫວ່າງການຢ້ຽມຢາມບ້ານຂອງກັນແລະກັນ. ພວກເຮົາທຸກຄົນ, ໃນຂະນະທີ່ພວກເຮົາຍ່າງໄປໃນຫົນທາງແຫ່ງການຮັບໃຊ້, ຈະມີສ່ວນຮ່ວມໃນການຂະຫຍາຍການສົນທະນາໃນບ້ານ, ໃນເມືອງ ຫຼື ແຖວບ້ານໃກ້ຄຽງ ກ່ຽວກັບການປະຍຸກໃຊ້ຄຳສອນຂອງພຣະບາຮາອຸລລາຫ໌ ເຂົ້າໃນຊີວິດຂອງທັງສ່ວນບຸກຄົນ ແລະ ສ່ວນລວມ. ບາງຄັ້ງສິ່ງນີ້ຈະເກີດຂຶ້ນ, ໃນການລົງຢ້ຽມຢາມທີ່ເປັນທາງການ ເພື່ອສາມາດເພີ່ມພູນຄວາມຮູ້ກ່ຽວກັບຄຳສອນເລົ່ານີ້. ໃນຫຼາຍໆໂອກາດທີ່ໂຄງການສຶກສາຂອງສະຖາບັນ, ມີຈຸດມຸ່ງໝາຍ ແລະ ມີເນື້ອຫາ, ທີ່ຈະເປັນຫົວຂໍ້ຂອງການປຶກສາຫາລື. ຄຳເຊີນໃຫ້ມີສ່ວນຮ່ວມໃນຂະບວນການສ້າງຊຸມຊົນໄດ້ມີຈຳນວນຂອງຊາວບ້ານໃກ້ຄຽງ ແລະ ເພື່ອນໆຂະຫຍາຍອອກໄປຫຼາຍຂຶ້ນເລື້ອຍໆ. ເມື່ອເຈົ້າເບິ່ງໄປໃນອະນາຄົດ ແລະ ເສັ້ນທາງການຮັບໃຊ້ທີ່ຍາວນານ, ເຈົ້າຄວນທຸ້ມເທຄວາມພະຍາຍາມຂອງເຈົ້າຢ່າງເຕັມທີ່ເພື່ອຮຽນຮູ້ເນື້ອຫາທີ່ນຳສະເໜີໃນພາກນີ້ເປັນຢ່າງດີ, ເພື່ອຮັບເອົາປະສົບການໃນການສົນທະນາໃນແຕ່ລະຫົວຂໍ້ ແລະ ແນ່ນອນວ່າເຈົ້າຈະໄດ້ຮັບປະສົບການທີ່ເລິກເຊິ່ງຍິ່ງຂຶ້ນໃນຄວາມຮູ້ກ່ຽວກັບຄຳສອນຂອງ ພຣະບາຮາອຸລລາຫ໌. ດັ່ງນັ້ນ, ຈະເປັນຄວາມສຸກຂອງການແບ່ງປັນພຣະວັດຈະນະຂອງພຣະຜູ້ເປັນເຈົ້າກັບຜູ້ອື່ນ , ຈະເປັນຄວາມສຸກທີ່ບໍ່ມີວັນໝົດສິ້ນຂອງເຈົ້າ.

## ເອກະສານອ້າງອີງ:


1. ພຣະບາຮາອຸລລາຫ໌, ພຣະວັດຈະນະລີ້ລັບ (ວິລເມັດ: ໂຮງພິມບາຮາຍ, 2003, 2012 ການພິມ), ໃນພາສາອາຫຣັບເລກທີ 4, ໜ້າ 4.
2. ພຣະບາຮາອຸລລາຫ໌, ຢູ່ໃນບົດອະທິຖານບາຍ: ບົດອະທິຖານທີ່ຄັດເລືອກຊຶ່ງໄດ້ຮັບການເປີດເຜີຍໂດຍ ພຣະບາຮາອຸລລາຫ໌, ພຣະບ໊ອບ, ແລະ ພຣະອັບດຸລບາຮາ (ວິລເມັດ: ໂຮງພິມບາຮາຍ, 2002, 2017 ການພິມ), ໜ້າ 4.
3. ປະມວນພຣະທັມຂອງພຣະບາຮາອຸລລາຫ໌ (ວິລເມັດ: ໂຮງພິມບາຮາຍ, 1983, 2017 ການພິມ), IV, ວັກທີ 1, ໜ້າ 5.
4. ເອກະສານດຽວກັນ, V, ວັກທີ 2, ໜ້າ 6–7.
5. ພຣະອັບດຸລບາຮາ, ໃນບົດອະທິຖານບາຮາຍ, ໜ້າ 81.
6. ເອກະສານດຽວກັນ, ໜ້າ 111.
7. ເອກະສານດຽວກັນ.
8. ຈາກສູນທອນພົດໃນມື້ວັນທີ 16 ສິງຫາ 1912, ຈັດພິມໄວ້ໃນປຶ້ມການປະກາດໃຊ້ສັນຕິພາບສາກົນ: ສູນທອນພົດຂອງພຣະອັບດຸລບາຮາ ໃນລະຫວ່າງທີ່ທ່ານຢ້ຽມຢາມສະຫະລັດອາເມຣິກາ ແລະ ການາດາ ປີ 1912 (ວິລເມັດ: ໂຮງພິມບາຮາຍ, 2012), ວັກທີ 23, ໜ້າ 364.
9. ພຣະອັບດຸລບາຮາ, ໃນບົດອະທິຖານບາຮາຍ, ໜ້າ 130.
10. ປະມວນພຣະທັມຂອງພຣະບາຮາອຸລລາຫ໌, XLV, ວັກທີ 1, ໜ້າ 111–12.
11. ພຣະອັບດຸລບາຮາ, ປະກາດໂດຍທ່ານໂຊເກ ເອັຟເຟັນດີ, ລະບຽບໂລກຂອງພຣະບາຮາອຸລລາຫ໌: ຈົດ ໝາຍທີ່ຖືກຄັດເລືອກ (ວິລເມັດ: ໂຮງພິມບາຮາຍ, 1991, 2012 ການພິມ), ໜ້າ 139.
12. ປະມວນພຣະທັມຂອງພຣະບາຮາອຸລລາຫ໌, V, ວັກທີ 5, ໜ້າ 8.
13. ຈາກສູນທອນພົດຂອງພຣະອັບດຸລບາຮາໃນມື້ວັນທີ 5 ພຶດສະພາ 1912, ຈັດພິມໄວ້ໃນການປະກາດໃຊ້ສັນຕິພາບສາກົນ, ວັກທີ 4, ໜ້າ 128.
14. ຈາກສູນທອນພົດໃນມື້ວັນທີ 21 ຕຸລາ 1911, ຈັດພິມໄວ້ໃນສູນທອນພົດຢູ່ປາຣີດສ໌ຂອງພຣະອັບດຸລບາຮາໃນປີ 1911, (ວິລເມັດ: ໂຮງພິມບາຮາຍ, 2006, 2016 ການພິມ), ເລກທີ 6,7-8, ໜ້າ 22.
15. ປະມວນພຣະທັມຂອງພຣະບາຮາອຸລລາຫ໌, CXLVI, ວັກທີ 1, ໜ້າ 357.
16. ຈາກສູນທອນພົດຂອງພຣະອັບດຸລບາຮາໃນມື້ວັນທີ 5 ພຶດສະພາ 1912, ຈັດພິມໄວ້ໃນການປະກາດໃຊ້ສັນຕິພາບສາກົນ, ວັກທີ 4, ໜ້າ 128.
17. ພຣະວັດຈະນະລີ້ລັບ, ໃນພາສາເປີເຊຍ, ເລກທີ 44, ໜ້າ 37.
18. ເອກະສານດຽວກັນ, ໃນພາສາເປີເຊຍ, ເລກທີ 66, ໜ້າ 45.

19. ຈາກພຣະທັມມະຈາລຶກຂອງພຣະອັບດຸລບາຮາ (ການແປພາສາທີ່ໄດ້ຮັບອະນຸຍາດ) ຫົວຂໍ້ຫຼັກສຳລັບການສຶກສາທັມມະເລີກເຊິ່ງ - 75
20. ຈາກສູນທອນພົດຂອງພຣະອັບດຸລບາຮາໃນມື້ວັນທີ 25 ກັນຍາ 1912, ຈັດພິມໄວ້ໃນການປະກາດໃຊ້ສັນຕິພາບສາກົນ, ວັກທີ 2, ໜ້າ 478-479.
21. ຄັດເລືອກຈາກທັມມະລິຂິດຂອງພຣະອັບດຸລບາຮາ (ວິລເມັດ: ໂຮງພິມບາຮາຍ, 2010, 2015 ການພິມ), ເລກທີ 43.1, ໜ້າ 125.
22. ເອກະສານດຽວກັນ, ເລກທີ 207.3, ໜ້າ 360.
23. ພຣະບາຮາອຸລລາຫ໌ໃນກອງປະຊຸມບາຮາຍ: ຄັດຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌, ພຣະອັບດຸລບາຮາ ແລະ ທ່ານໂຊເກ ເອັຟເຟັນດີ; ຮຽບຮຽງໂດຍພະແນກຄົ້ນຄວ້າວິໄຈຂອງສະພາຍຸຕິທັມສາກົນ (ວິລເມັດ: ໂຮງພິມບາຮາຍ, 1976, 1980, ການພິມ), ໜ້າ 3.
24. ເອກະສານດຽວກັນ.
25. ທັມມະຈາລຶກຂອງພຣະອັບດຸລບາຮາ-ອັບບາດສ໌ (ນິວຢອກ: ຄະນະຈັດພິມບາຮາຍ, 1916, 1930, ການພິມ) ຫົວທີ 3, ໜ້າ 631. (ການແປພາສາທີ່ໄດ້ຮັບອະນຸຍາດ).
26. ພຣະບາຮາອຸລລາຫ໌, ໃນພຣະຄຳພີເຄທໍເບ-ອັກດັດສ໌: ພຣະຄຳພີທີ່ສັກສິດທີ່ສຸດ (ວິລເມັດ: ໂຮງພິມບາຮາຍ, 1993, 2013, ການພິມ), ວັກທີ 57, ໜ້າ 41.
27. ຄັດເລືອກຈາກທັມມະລິຂິດຂອງພຣະອັບດຸລບາຮາ, ເລກທີ 48,1, ໜ້າ 130.
28. ຈາກຈົດໝາຍລົງວັນທີ 27 ສິງຫາ 1989, ຈັດພິມໄວ້ໃນສານຈາກສະພາຍຸຕິທັມສາກົນ, 1986-2001: ຍຸກທີສີ່ຂອງຍຸກແຫ່ງການພັດທະນາສ້າງສາ (ວິລເມັດ: ໂຮງພິມບາຮາຍ, 2010), ເລກທີ 69.2, ໜ້າ 132-133.
29. ເອກະສານດຽວກັນ, ເລກທີ 69.9-10, ໜ້າ 135.
30. ພຣະວັດຈະນະລີ້ລັບ, ໃນພາສາເປີເຊຍ, ເລກທີ 82, ໜ້າ 51.
31. ເອກະສານດຽວກັນ, ໃນພາສາເປີເຊຍ, ເລກທີ 80, ໜ້າ 51.
32. ພຣະອັບດຸລບາຮາ, ຄວາມລັບຂອງອາລະຍະທັມສະຫວັນ (ວິລເມັດ: ໂຮງພິມບາຮາຍ, 2007, 2016, ການພິມ), ວັກທີ 46, ໜ້າ 33.
33. ພຣະວັດຈະນະລີ້ລັບ, ໃນພາສາເປີເຊຍ, ເລກທີ 49, ໜ້າ 39.
34. ທ່ານໂຊເກ ເອັຟເຟັນດີ, ປະກາດໄວ້ໃນຂ່າວສານບາຮາຍ, ເລກທີ 13 (ກັນຍາ 1926), ໜ້າ 1.
35. ຈາກສູນທອນພົດຂອງພຣະອັບດຸລບາຮາໃນມື້ວັນທີ 17 ພະຈິກ 1912, ຈັດພິມໄວ້ໃນການປະກາດໃຊ້ສັນຕິພາບສາກົນ, ວັກທີ 3, ໜ້າ 617.

36. ຈາກສານລົງວັນທີ 21 ເມສາ 2010, ຈັດພິມໄວ້ໃນແຜນປະຕິບັດວຽກງານ: ສານທີ່ຖືກຄັດເລືອກຂອງສະພາຍຸຕິທັມສາກົນ ແລະ ເອກະສານເສີມ, 2006-2016 (ພາມບີດຊ໌ຕາເວັນຕົກ: ໂຮງພິມພາລາບຣາ, 2017), ເລກທີ 14.16, ໜ້າ 82.
37. ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌, CXXII, ວັກທີ 1, ໜ້າ 294.
38. ພຣະວັດຈະນະລີ້ລັບ, ໃນພາສາເປີເຊຍ, ເລກທີ 3, ໜ້າ 13.76 -ການລຸກຂຶ້ນມາຮັບໃຊ້ສາສະໜາ.
39. ປະມວນພຣະທັມຈາກພຣະທັມມະລິຂິດຂອງພຣະບາຮາອຸລລາຫ໌, CXVIII, ວັກທີ 1, ໜ້າ 283.
40. ພຣະອັບດຸລບາຮາ, ປະກາດໂດຍທ່ານໂຊເກ ເອັຟເຟັນດີ, ການມາເຖິງຂອງຄວາມຍຸຕິທັມສະຫວັນ (ວິລເມັດ: ໂຮງພິມບາຮາຍ, 2006, 2018, ການພິມ), ວັກທີ 40, ໜ້າ 39.
41. ພຣະວັດຈະນະລີ້ລັບ, ໃນພາສາອາຫຣັບ, ເລກທີ 36, ໜ້າ 12.